UNITED NATIONS
LAO PDR

UNITED NATIONS
FOOD SYSTEMS
SUMMIT 2021

# ບົດລາຍງານການວິໄຈ

## ເສັ້ນທາງສູ່ລະບົບສະບຽງອາຫານທີ່ຍືນຍົງ

### ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານ 2021:
### ກອງປະຊຸມປຶກສາຫາລືລະດັບຊາດ ໃນ ສປປ ລາວ



ມິຖຸນາ 2021



# ສາລະບານ


ຄຳຫຍໍ້ ..... ii

ບົດສະເໜີ ..... 1

ລະບົບສະບຽງອາຫານທີ່ຍືນຍົງ ໃນ ສປປ ລາວ: ສິ່ງທ້າທາຍ ແລະ ໂອກາດ ..... 2

ລະບົບສະບຽງອາຫານທີ່ຍືນຍົງໃນ ສປປ ລາວ: ການເຮັດວຽກຮ່ວມກັນ ແລະ ຜົນໄດ້ຜົນເສຍ ..... 6

ລະບົບສະບຽງອາຫານທີ່ຍືນຍົງໃນ ສປປ ລາວ: ເສັ້ນທາງ ແລະ ພັນທະຂອງຄູ່ຮ່ວມງານ ..... 10

- 'ການຮັບປະກັນອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ..... 10
- ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ..... 11
- ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ ..... 11
- ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ..... 12
- 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ' ..... 12
- ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ ..... 14
- ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ..... 15

ສະຫຼຸບ ..... 17

ເອກະສານຊ້ອນທ້າຍ 1: ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ ..... 18

ເອກະສານຊ້ອນທ້າຍ 2: ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທາມະຊາດໃນລະດັບທີ່ພຽງພໍ ..... 26

ເອກະສານຊ້ອນທ້າຍ 3: ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸ້ນຄ່າຢ່າງເທົ່າທຽມ ..... 31

ເອກະສານຊ້ອນທ້າຍ 4: ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ ..... 36

ເອກະສານອ້າງອີງ ..... 42

# ຄຳຫຍໍ້

| | |
|---|---|
| **ADB** | ທະນາຄານພັດທະນາອາຊີ |
| **AIFS** | ຂອບວຽກຄວາມໝັ້ນຄົງດ້ານສະບຽງອາຫານອັນຮອບດ້ານຂອງອາຊຽນ |
| **ASEAN** | ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ |
| **CSO** | ອົງການຈັດຕັ້ງທາງສັງຄົມ |
| **DRM** | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ |
| **FAO** | ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ |
| **GAFSP** | ໂຄງການກະສິກຳ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານໂລກ |
| **GAP** | ການກະສິກຳທີ່ດີ |
| **GDP** | ລວມຍອດຜະລິດຕະພັນພາຍໃນ |
| **IFAD** | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| **ITC** | ສູນການຄ້າສາກົນ |
| **LNOB** | ພວກເຮົາພ້ອມກັນກ້າວໄປ |
| **MAF** | ກະຊວງກະສິກຳ ແລະ ປ່າໄມ້ |
| **MLSW** | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| **MoF** | ກະຊວງການເງິນ |
| **MoH** | ກະຊວງສາທາລະນະສຸກ |
| **MoIC** | ກະຊວງອຸດສາຫະກຳ ແລະ ການຄ້າ |
| **MoNRE** | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| **MPI** | ກະຊວງແຜນການ ແລະ ການລົງທຶນ |
| **MSD** | ກອງປະຊຸມສົນທະນາຂອງລັດສະມາຊິກ |
| **LNCCI** | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| **NGO** | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ |
| **NIER** | ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ |
| **NSEDP** | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| **NTFP** | ຜະລິດຕະພັນທີ່ບໍ່ແມ່ນໄມ້ |
| **PPP** | ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ |
| **SDC** | ການຮ່ວມມືເພື່ອການພັດທະນາສະວິດ |
| **SDG** | ເປົ້າໝາຍການພັດທະນາແບບຍືນຍົງ |
| **SPA-FS** | ແຜນຍຸດທະສາດການດຳເນີນງານກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານໃນພາກພື້ນອາຊຽນ |
| **UNCTAD** | ອົງການສະຫະປະຊາຊາດກ່ຽວກັບການຄ້າ ແລະ ການພັດທະນາ |
| **UNDP** | ອົງການສະຫະປະຊາຊາດເພື່ອການພັດທະນາ |
| **UNDRR** | ອົງການສະຫະປະຊາຊາດເພື່ອຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ |
| **UNEP** | ອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ |
| **UN-Habitat** | ອົງການສະຫະປະຊາຊາດດ້ານເຄຫະສະຖານ |
| **UNICEF** | ອົງການສະຫະປະຊາຊາດກອງທຶນສຳລັບເດັກ |
| **UNIDO** | ອົງການສະຫະປະຊາຊາດເພື່ອການພັດທະນາອຸດສາຫະກຳ |
| **VRA** | ການປະເມີນຄວາມອ່ອນໄຫວ ແລະ ຄວາມສ່ຽງ |
| **WFP** | ອົງການອາຫານໂລກ |
| **WHO** | ອົງການອະນາໄມໂລກ |

# ບົດສະເໜີ

ເພື່ອເປັນສ່ວນໜຶ່ງຂອງ ແຜນງານ 10 ປີ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ໃນປີ 2030, ເລຂາທິການໃຫຍ່ແຫ່ງສະຫະປະຊາຊາດ ຈະຈັດ ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານ ຂຶ້ນໃນປີ 2021 ເພື່ອຊ່ວຍສ້າງທິດທາງໃນອະນາຄົດໃຫ້ແກ່ລະບົບສະບຽງອາຫານໃນໂລກຂອງພວກເຮົາ ແລະ ສ້າງແຮງບັນດານໃຈໃນການກ້າວໄປສູ່ເປົ້າໝາຍດັ່ງກ່າວ. ກອງປະຊຸມສຸດຍອດ ໃນຄັ້ງນີ້ຈະລວບລວມເອົາບັນດາຜູ້ນຳຈາກວົງການວິທະຍາສາດ, ທຸລະກິດ, ນະໂຍບາຍ, ສາທາລະນະສຸກ ແລະ ການສຶກສາ, ພ້ອມທັງຊາວກະສິກອນ, ຄົນພື້ນເມືອງ, ອົງການຊາວໜຸ່ມ, ກຸ່ມຜູ້ບໍລິໂພກ, ນັກເຄື່ອນໄຫວດ້ານສິ່ງແວດລ້ອມ, ແລະ ບັນດາບັນດາຄູ່ຮ່ວມງານອື່ນໆ. ຜູ້ເຂົ້າຮ່ວມຈະໄດ້ສຳຫຼວດວ່າເຮັດແນວໃດຈຶ່ງຈະເຮັດໃຫ້ການປ່ຽນແປງຂອງລະບົບສະບຽງອາຫານສອດຄ່ອງກັບຫຼັກການ ແລະ ເປົ້າໝາຍຂອງວາລະປີ 2030 ໄດ້ດີຂຶ້ນກວ່າເກົ່າ ແລະ ລະບຸເສັ້ນທາງ ເພື່ອໃຊ້ປະໂຫຍດຈາກການປ່ຽນແປງເຫຼົ່ານີ້ ເຂົ້າໃນການເລັ່ງລັດຄວາມຄືບໜ້າໂດຍລວມ.

ບັນດາປະເທດສະມາຊິກໄດ້ຖືກເຊີນໃຫ້ຈັດ ກອງປະຊຸມລະດັບຊາດດ້ານລະບົບສະບຽງອາຫານໂດຍຮ່ວມມືໃນຫຼາຍພາກສ່ວນທີ່ກ່ຽວຂ້ອງ (ກອງປະຊຸມສົນທະນາຂອງລັດສະມາຊິກ ຫຼື MSD) ເພື່ອເປັນການກະກຽມໃຫ້ແກ່ ກອງປະຊຸມສຸດຍອດລະດັບໂລກ ໃນເດືອນກັນຍາ 2021. ອີງຕາມແນວທາງການດຳເນີນງານທີ່ສະເໜີໂດຍ ເລຂາທະການໃຫຍ່, ທີມງານວິຊາການພາຍໃຕ້ ກອງປະຊຸມສົນທະນາຂອງລັດສະມາຊິກ ໃນ ສປປ ລາວ ຈຶ່ງໄດ້ລະບຸ 4 ຫົວຂໍ້ສຳຄັນດັ່ງຕໍ່ໄປນີ້: ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ,

i) ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ;
ii) ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸ້ມຄ່າຢ່າງເທົ່າທຽມ; ແລະ
iii) ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ, ແລະ ຄວາມກົດດັນຕ່າງໆ.

ເອກະສານສະບັບນີ້ຂຽນຂຶ້ນດ້ວຍຄວາມຮ່ວມມືລະຫວ່າງລັດຖະບານແຫ່ງ ສປປ ລາວ, ທີມງານຂອງອົງການສະຫະປະຊາຊາດປະຈຳ ສປປ ລາວ ແລະ ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງໃນທຸກລະດັບຂອງລະບົບອາຫານຂອງລາວ. ຈາກການປຶກສາຫາລືກັນຢ່າງກວ້າງຂວາງລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ເຊິ່ງນຳໄປສູ່ ກອງປະຊຸມລະດັບຊາດ ໃນຄັ້ງນີ້, ເອກະສານສະບັບນີ້ ຈະສຳຫຼວດກ່ຽວກັບລະບົບສະບຽງອາຫານໂດຍລວມ, ລະບຸໂອກາດ ແລະ ສິ່ງທ້າທາຍອັນສະເພາະຂອງລາວ, ສົນທະນາກ່ຽວກັບການເຮັດວຽກຮ່ວມກັນ ແລະ ຜົນໄດ້ຜົນເສຍລະຫວ່າງຫົວຂໍ້ສຳຄັນ ແລະ ອົງປະກອບຂອງລະບົບສະບຽງອາຫານ ແລະ ແນໃສ່ກຳນົດເສັ້ນທາງສູ່ລະບົບສະບຽງອາຫານທີ່ຍືນຍົງ ໃນ ສປປ ລາວ.

ໝາຍເຫດ: ເອກະສານສະບັບນີ້ເປັນພຽງບົດລາຍງານລວມ, ຂໍ້ມູນກ່ຽວກັບຄວາມເປັນມາອັນລະອຽດ ແລະ ສະເພາະກ່ຽວກັບແຕ່ລະຫົວຂໍ້ແມ່ນຕິດຄັດມາພ້ອມໃນພາກເອກະສານຊ້ອນທ້າຍ.



# ລະບົບສະບຽງອາຫານທີ່ຍືນຍົງ ໃນ ສປປ ລາວ: ສິ່ງທ້າທາຍ ແລະ ໂອກາດ

ສປປ ລາວ ຢູ່ໃນຊ່ວງໄລຍະທີ່ສໍາຄັນຂອງຂະບວນການພັດທະນາ ໃນຂະນະທີ່ພວມລິເລີ່ມຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 (NSEDP). ໃນຖານະທີ່ເປັນໜຶ່ງໃນປະເທດທີ່ເສດຖະກິດຂະຫຍາຍໂຕໄວທີ່ສຸດ, ສປປ ລາວ ໄດ້ປະສົບຜົນສໍາເລັດໃນການຫຼຸດຜ່ອນຄວາມທຸກຍາກ ແລະ ປັບປຸງສະພາບການເປັນຢູ່ໃຫ້ດີຂຶ້ນ. ເຖິງຢ່າງໃດກໍ່ຕາມ, ຮູບແບບການຂະຫຍາຍໂຕນີ້ຍັງບໍ່ທັນມີຄວາມຍືນຍົງຕໍ່ສິ່ງແວດລ້ອມ – ທີ່ເອື່ອຍອີງການນໍາໃຊ້ຊັບພະຍາກອນທໍາມະຊາດເປັນຫຼັກ ໂດຍບໍ່ຄໍານຶງເຖິງການປົກປັກຮັກສາ, ແລະ ຍັງບໍ່ທັນມີຄວາມກວມລວມເທື່ອ – ພ້ອມທັງຍັງເປັນການຂະຫຍາຍໂຕທີ່ຂັບເຄື່ອນດ້ວຍເງິນທຶນຈາກຕ່າງປະເທດ ເຊິ່ງໄດ້ສະແດງໃຫ້ເຫັນເຖິງການເຊື່ອມໂຍງອັນຈໍາກັດຕໍ່ທຸລະກິດພາຍໃນປະເທດ ແລະ ການສ້າງໂອກາດໃນການຈ້າງງານທີ່ໜ້ອຍເກີນໄປ. ການລະບຸສິ່ງທ້າທາຍ ແລະ ໂອກາດຕົ້ນຕໍ ເພື່ອສ້າງລະບົບສະບຽງອາຫານທີ່ຍືນຍົງ ໃນ ສປປ ລາວ ຈະຊ່ວຍສົ່ງເສີມຂະບວນການພັດທະນາຂອງປະເທດໂດຍລວມ – ຮັບປະກັນໃຫ້ຮູບແບບການຂະຫຍາຍໂຕມີຄວາມກວມລວມ ແລະ ຍືນຍົງຫຼາຍຂຶ້ນໃນອະນາຄົດ ແລະ ຊ່ວຍບັນລຸທັງເປົ້າໝາຍຂອງ NSEDP ຄັ້ງທີ 9 ແລະ ເປົ້າໝາຍການພັດທະນາແບບຍືນຍົງ.

ໃນຖານະທີ່ເປັນໜຶ່ງໃນສິ່ງທ້າທາຍຫຼັກຕໍ່ການພັດທະນາໃນ ສປປ ລາວ, ຈຶ່ງໄດ້ມີການກໍານົດຫົວຂໍ້ທີ 1 ພາຍໃຕ້ MSD ຂຶ້ນຄື **'ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ'** ເຊິ່ງແນ່ໃສ່ປັບປຸງຄວາມໝັ້ນຄົງ, ຄວາມປອດໄພ ແລະ ໂພຊະນາການ, ໂດຍສະເພາະໃຫ້ແກ່ເດັກ, ເຍົາວະຊົນ, ແລະ ແມ່ຍິງ – ຜູ້ທີ່ມີຄວາມສ່ຽງຕໍ່ການຂາດໂພຊະນາການຫຼາຍທີ່ສຸດ. ປະເດັນສໍາຄັນຂອງຫົວຂໍ້ນີ້ກໍຄືການລຶບລ້າງຄວາມອຶດຫິວ ແລະ ພາວະການຂາດໂພຊະນາການໃນທຸກຮູບແບບ ເນື່ອງຈາກວ່າຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານທີ່ແຜ່ລາມ ແລະ ພາວະການຂາດສານອາຫານຢ່າງຮຸນແຮງ ແລະ ຊໍ້າເຮື້ອໃນລະດັບສູງ ແມ່ນສິ່ງຜົນກະທົບຕໍ່ການພັດທະນາທາງສັງຄົມ, ມະນຸດ ແລະ ເສດຖະກິດ. ໄດ້ມີການປະເມີນວ່າພາວະການຂາດໂພຊະນາການໄດ້ສົ່ງຜົນໃຫ້ ສປປ ລາວ ເກີດຄວາມສູນເສຍເປັນຈໍານວນ 2.4% ຂອງ GDP ຕໍ່ປີ (NIPN 2020). ໃນປີ 2017, ໃນເດັກອາຍຸຕໍ່າກວ່າ 5 ປີ, ມີອັດຕາເດັກເຕ້ຍ 33%, ນໍ້າໜັກຕໍ່າກວ່າເກນ 21%, ແລະ ພາວະເລືອດຈາງ 44% (LSIS 2017), ໂດຍມີອັດຕາທີ່ແຕກໂຕນກັນໃນແຕ່ລະແຂວງ ແລະ ພາຍໃຕ້ສະຖານະທາງດ້ານເສດຖະກິດ-ສັງຄົມທີ່ແຕກຕ່າງກັນ. ສປປ ລາວ ຍັງຕ້ອງປະເຊີນກັບ "ສາມວິກິດການ" ດ້ານພາວະການຂາດໂພຊະນາການຢ່າງຕໍ່ເນື່ອງ, ໂດຍມີພາວະການຂາດໂພຊະນາການໃນອັດຕາທີ່ສູງ, ພາວະຂາດສານອາຫານຮອງ ("ຄວາມອຶດຫິວບໍ່ມຊ້ອນ") ແລະ ພາວະນໍ້າໜັກເກີນ ແລະ ໂລກຕຸ້ຍ.

ຄວາມທຸກຍາກ, ຄວາມບໍ່ເທົ່າທຽມ ແລະ ຄວາມເສຍປຽບທາງສະຖານທີ່ ແມ່ນປັດໄຈຫຼັກທີ່ມີອິດທິພົນຕໍ່ພາວະການຂາດສານອາຫານ, ຄຸນນະພາບຂອງອາຫານ ແລະ ສະຖານະດ້ານໂພຊະນາການຂອງປະຊາກອນ. ຍົກຕົວຢ່າງ, ເຖິງວ່າຫຼາຍຄົວເຮືອນຍັງຄົງເຮັດການກະສິກໍາແບບກຸ້ມກິນຢູ່ກໍ່ຕາມ, ແຕ່ກໍ່ຍັງມີການຊື້ອາຫານໃນອັດຕາທີ່ເພີ່ມສູງຂຶ້ນ. ຕະຫຼາດນອກລະບົບຍັງເປັນແຫຼ່ງອາຫານທີ່ສໍາຄັນໃນ ສປປ ລາວ ເຊິ່ງສະໜອງອາຫານທີ່ມີຄຸນຄ່າທາງໂພຊະນາການ ທີ່ປະກອບມີໝາກໄມ້ ແລະ ຜັກ. ເຖິງຢ່າງໃດກໍຕາມ, ຕະຫຼາດນອກລະບົບນັບມື້ນັບສະໜອງອາຫານແປຮູບສູງທີ່ມີໄຂມັນ, ນໍ້າຕານ ແລະ ໂຊດຽມສູງ. ດ້ວຍເຫດນີ້, ຈຶ່ງສົ່ງຜົນໃຫ້ມີການບໍລິໂພກອາຫານທີ່ມີລາຄາຖືກ, ອາຫານແປຮູບສູງ, ເຊັ່ນ: ໝີ່ກຶ່ງສໍາເລັດຮູບ, ເຂົ້າຕົ້ມກຶ່ງສໍາເລັດຮູບ, ແລະ ເຄື່ອງດື່ມທີ່ມີລົດຊາດຫວານ ເຊິ່ງເປັນອັນຕະລາຍຕໍ່ໂພຊະນາການ (ອີງການສຸພະນິມິດ 2020).

ຍັງມີສະຖານທີ່ຫຼາຍແຫ່ງໃນ ສປປ ລາວ ທີ່ນໍາໃຊ້ລະບົບສະບຽງອາຫານ "ແບບດັ້ງເດີມ". ໃນບາງບ້ານທີ່ຢູ່ເຂດຫ່າງໄກສອກຫຼີກ, ແຕ່ລະຄົວເຮືອນແມ່ນຈັດຫາອາຫານຕາມລະດູການຈາກແຫຼ່ງຕ່າງໆ ໂດຍຜ່ານການຜະລິດກະສິກໍາແບບປະສົມປະສານ, ການຫາອາຫານ, ແຫຼ່ງອາຫານໃນປ່າ ແລະ ຕະຫຼາດໃນທ້ອງຖິ່ນ. ເນື່ອງຈາກອັດຕາການປົກຫຸ້ມຂອງປ່າທີ່ຫຼຸດລົງ ແລະ ປະຊາກອນມີຈໍານວນເພີ່ມຂຶ້ນ ຈຶ່ງເຮັດໃຫ້ລະບົບສະບຽງອາຫານແບບດັ້ງເດີມມີການປ່ຽນແປງ ອັນເປັນສາເຫດມາຈາກການເຂົ້າເຖິງແຫຼ່ງສະບຽງອາຫານໃນປ່າທີ່ຫຼຸດລົງ, ເຊິ່ງມັກຈະຖືກທົດແທນດ້ວຍຜະລິດຕະພັນອາຫານທີ່ມີຄຸນຄ່າທາງໂພຊະນາການຕໍ່າ. ການຮັກສາລະບົບສະບຽງອາຫານແບບດັ້ງເດີມ ທີ່ເປັນແຫຼ່ງສະໜອງອາຫານຕົ້ນຕໍໃຫ້ແກ່ຊຸມຊົນທີ່ມີຄວາມອ່ອນໄຫວໃນ ສປປ ລາວ ຄວນຖືເປັນຂໍ້ພິຈາລະນາຫຼັກໃນການຫັນປ່ຽນໄປສູ່ແນວທາງທີ່ເນັ້ນໜັກການເຂົ້າເຖິງອາຫານທີ່ມີຄຸນຄ່າທາງໂພຊະນາການ, ໂດຍເນັ້ນໜັກເປັນພິເສດໃສ່ການເຊື່ອມໂຍງລະຫວ່າງການເຂົ້າເຖິງສະບຽງອາຫານ ແລະ ຄວາມສ່ຽງທີ່ເພີ່ມຂຶ້ນ ຂອງໂລກຕິດຕໍ່ຈາກສັດສູ່ຄົນ.

ມີຫຼາຍຢ່າງທີ່ຕ້ອງໄດ້ດໍາເນີນການ ເພື່ອຮັບປະກັນປະຊາຊົນມີກໍາລັງຊື້ ແລະ ສາມາດເຂົ້າເຖິງອາຫານທີ່ມີໂພຊະນາການໄດ້ຢ່າງເທົ່າທຽມ, ແຕ່ຮູບແບບການບໍລິໂພກ ແລະ ສະພາບແວດລ້ອມດ້ານສະບຽງອາຫານສ່ວນບຸກຄົນ ກໍມີບົດບາດສໍາຄັນໃນການກໍານົດຜົນໄດ້ຮັບທາງດ້ານໂພຊະນາການຂອງປະຊາກອນເຊັ່ນກັນ. ບັນທັດຖານທາງສັງຄົມ ແລະ ການປະຕິບັດ ແມ່ນປັດໄຈສໍາຄັນ. ຍົກຕົວຢ່າງ, ຄວາມເຊື່ອທາງສັງຄົມກ່ຽວກັບອາຫານບາງປະເພດ ລວມເຖິງອາຫານທີ່ມີຄຸນຄ່າທາງໂພຊະນາການອາດສ້າງຂໍ້ຈໍາກັດໃຫ້ພວກເຂົາໃນການສະໜອງອາຫານໃຫ້ແກ່ເດັກ (ເຊັ່ນ: ໄຂ່, ຕັບ) ໃນຂະນະທີ່ຄວາມຮູ້, ທັກສະ, ປະສົບການ, ລາຍໄດ້, ແລະ ເວລາຂອງຜູ້ປົກຄອງ ກໍ່ສ້າງຂໍ້ຈໍາກັດເຊັ່ນກັນ ກ່ຽວກັບອາຫານປະເພດໃດທີ່ຕ້ອງຊື້, ກະກຽມ ແລະ ສະໜອງໃຫ້ແກ່ເດັກ. ການສ້າງຄວາມຕ້ອງການໃນການບໍລິໂພກອາຫານເພື່ອສຸຂະພາບ ໂດຍສະເພາະໃນກຸ່ມເດັກ ແລະ ເຍົາວະຊົນ ແມ່ນເປັນສິ່ງຈໍາເປັນ, ເນື່ອງຈາກວ່ານີ້ເປັນຊ່ວງໄລຍະສໍາຄັນໃນການກໍານົດຄຸນຄ່າຂອງອາຫານ. ການໃຫ້ຄວາມຮູ້ທາງດ້ານໂພຊະນາການ, ການກະຕຸ້ນ, ການຝຶກອົບຮົມ, ການລົນນະລົງຜ່ານສື່ສັງຄົມ, ເຕັກນິກທາງດ້ານການຕະຫຼາດ, ຕະຫຼອດຈົນເຖິງແຮງຈູງໃຈ ແລະ ແຮງກະຕຸ້ນທາງເສດຖະກິດ ກໍ່ສາມາດຊ່ວຍປ່ຽນແປງຄວາມຕ້ອງການໃນການບໍລິໂພກອາຫານໄດ້.

**“ສປປ ລາວ ສາມາດເສີມສ້າງຊື່ສຽງດ້ານການເປັນສູນລວມຂອງຊີວະນາໆພັນ ບ່ອນທີ່ປະຊາຊົນໃນທ້ອງຖິ່ນບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍສູງ ທີ່ເປັນຜະລິດຕະພັນກະສິກຳທີ່ມີຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ທັງເປັນການເນັ້ນໜັກໃຫ້ເຫັນເຖິງຕະຫຼາດດ້ານນີ້ຂອງ ສປປ ລາວ.”**

ເຖິງວ່າຈະມີການຮ່ວມມື ແລະ ເຮັດວຽກຮ່ວມກັນກັບຫຼາຍຂະແໜງການ ເພື່ອແກ້ໄຂສິ່ງທ້າທາຍຕ່າງໆທີ່ກ່ຽວຂ້ອງກັບພາວະການຂາດສານອາຫານ ແລະ ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານກໍ່ຕາມ, ແຕ່ຈົນເຖິງປະຈຸບັນ, ຍັງບໍ່ທັນມີການພິຈາລະນາເຖິງບົດບາດຂອງລະບົບສະບຽງອາຫານເທົ່າທີ່ຄວນໃນການແກ້ໄຂບັນຫາເຫຼົ່ານີ້. ນີ້ເປັນໂອກາດທີ່ດີສໍາລັບ MSD ໃນການຕໍ່ຍອດຈາກແນວຄິດລິເລີ່ມທີ່ມີຢູ່ແລ້ວ, ພ້ອມດຽວກັນກໍ່ເນັ້ນໜັກໃສ່ການປະເມີນຜົນກະທົບຂອງລະບົບສະບຽງອາຫານຕໍ່ສະບຽງອາຫານທີ່ມີຄວາມປອດໄພ ແລະ ໂພຊະນາການໃຫ້ແກ່ທຸກຄົນຢ່າງກວ້າງຂວາງ ແລະ ຮອບດ້ານຂຶ້ນຕື່ມ. ນອກນັ້ນຍັງມີບາງໂອກາດໃນການສະໜັບສະໜູນ ແລະ ເພີ່ມທະວີຄວາມໝັ້ນຄົງດ້ານສະບຽງອາຫານ, ທີ່ຄໍານຶງເຖິງຜົນກະທົບຂອງ ພະຍາດໂຄວິດ19, ທີ່ລວມມີ, ການສະໜອງການສຶກສາດ້ານການຜະລິດອາຫານທີ່ມີໂພສະນາການທີ່ແນໃສ່ຊາວກະສິກອນ; ການສະໜອງການຊ່ວຍເຫຼືອດ້ານວັດຖຸ ຫຼື ເງິນທຶນໃຫ້ແກ່ເມືອງ, ບ້ານ ແລະ ຄົວເຮືອນໃດໜຶ່ງ ທີ່ບໍ່ສາມາດເຂົ້າເຖິງສະບຽງອາຫານໄດ້ຢ່າງພຽງພໍ; **ອານຸຍາດ**ໃຫ້ຊາວຄ້າຂາຍສິນຄ້າກະສິກໍາບາງກຸ່ມມີການເຄື່ອນໄຫວຫຼາຍຂຶ້ນ; ແລະ ສືບຕໍ່ແນ່ໃສ່ສ້າງຄວາມຕື່ນໂຕໃຫ້ແກ່ຄົວເຮືອນຕ່າງໆກ່ຽວກັບອາຫານທີ່ມີໂພຊະນາການ (WFP 2020).

ສໍາລັບບັນຫາທ້າທາຍ ແລະ ໂອກາດຕົ້ນຕໍທີ່ກ່ຽວພັນກັບຫົວຂໍ້ມີ 2 ຂອງ MSD ແມ່ນ **‘ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດໃນລະດັບທີ່ພຽງພໍ’**, ເຊິ່ງກ່ຽວຂ້ອງກັບການສ້າງຄວາມດຸ່ນດ່ຽງລະຫວ່າງການເຮັດກະສິກໍາແບບຍືນຍົງ, ຄວາມເປັນຢູ່ຂອງປະຊາຊົນ ແລະ ການແຂ່ງຂັນດ້ານເສດຖະກິດກັບບັນດາປະເທດໃກ້ຄຽງກໍຄ: ປະເທດຈີນ, ໄທ ແລະ ຫວຽດນາມ ໃນຂະແໜງການກະສິກໍາ. ການຜະລິດກະສິກໍາກວມເອົາ 16.6% ຂອງ GDP ຂອງປະເທດ, ແຕ່ຄິດເປັນເກືອບ 70% ຂອງການຈ້າງງານທັງໝົດ ແລະ ຫຼາຍກວ່າ 60% ຂອງລາຍໄດ້ ແລະ ລາຍຈ່າຍຂອງກຸ່ມທີ່ມີລາຍໄດ້ຕໍ່າ.

ໃນອະນາຄົດອັນໃກ້ນີ້, ກະສິກໍາຈະຍັງຄົງເປັນແຫຼ່ງລາຍໄດ້ຫຼັກ ແລະ ວິຖີການດໍາລົງຊີວິດຂອງປະຊາກອນສ່ວນໃຫຍ່. ບັນດາທຸລະກິດກະສິກໍາຂະໜາດໃຫຍ່ ຈະກາຍເປັນຜູ້ມີບົດບາດຫຼັກໃນຂະແໜງການກະສິກໍາ ແລະ ເຖິງແມ່ນວ່າພວກເຂົາຈະສາມາດປະກອບສ່ວນເຂົ້າໃນການສ້າງລາຍໄດ້ ແລະ ໂອກາດໃນການຈ້າງງານຫຼາຍຂຶ້ນນັ້ນ, ພວກເຂົາຍັງໄດ້ສະແດງໃຫ້ເຫັນເຖິງຂໍ້ເສຍຫຼາຍປະການທີ່ລວມມີ:(i) ໃຫ້ສິດນໍາໃຊ້ທີ່ດິນ ເພື່ອປູກພືດຊະນິດດຽວໃນພື້ນທີ່ຂະໜາດໃຫຍ່; (ii) ສູນເສຍຄວາມຍືດຍຸ່ນໃນຂະແໜງການກະສິກໍາ; ແລະ (iii) ສູນເສຍການຄວບຄຸມດ້ານການຄຸ້ມຄອງທີ່ດິນ.

ຍົກຕົວຢ່າງ, ການສົ່ງເສີມການຜະລິດສິນຄ້າຈາກກະສິກໍາແບບປະສົມປະສານ ແລະ ການຂະຫຍາຍພະລັງງານນໍ້າ, ໄດ້ມີການຕົກລົງກ່ຽວກັບການສໍາປະທານທີ່ດິນຮ່ວມກັບນັກລົງທຶນ ເພື່ອໂຄງການພັດທະນາ ຂະໜາດໃຫຍ່, ເຊັ່ນ: ການກໍ່ສ້າງເຂື່ອນໄຟຟ້າພະລັງງານນໍ້າ. ດ້ວຍເຫດນີ້, ຈຶ່ງມີລາຍງານການຍົກຍ້າຍຖິ່ນຖານຂອງຊຸມຊົນ ໂດຍບໍ່ມີການປຶກສາຫາລືຢ່າງເໝາະສົມ ແລະ ໃຫ້ຄ່າຕອບແທນທີ່ພຽງພໍ. ປະຊາຊົນຜູ້ທຸກຍາກ ແລະ ຜູ້ທີ່ຕ້ອງໄດ້ເອົາໃຈໃສ່ຕື່ມແມ່ນກຸ່ມທີ່ໄດ້ຮັບຜົນກະທົບດ້ານລົບຫຼາຍທີ່ສຸດຈາກໂຄງການພັດທະນາດັ່ງກ່າວ, ລວມທັງຜູ້ທີ່ມີສິດນໍາໃຊ້ທີ່ດິນຕາມປະເພນີ, ແຕ່ບໍ່ມີໃບຕາດິນທີ່ຖືກຕ້ອງຕາມກົດໝາຍ ກໍ່ແມ່ນກຸ່ມທີ່ມີຄວາມອ່ອນໄຫວຫຼາຍທີ່ສຸດ. ບັນຫານີ້ໄດ້ສົ່ງຜົນກະທົບດ້ານລົບຫຼາຍປະການ, ລວມທັງການພັດຖິ່ນຂອງປະຊາກອນ, ອັນເປັນຜົນເຮັດໃຫ້ເກີດມີຜູ້ເຄື່ອນຍ້າຍພາຍໃນປະເທດ. ເນື່ອງຈາກບໍ່ສາມາດເຂົ້າເຖິງທີ່ດິນໄດ້, ທາງເລືອກໜຶ່ງຂອງຜູ້ທີ່ພັດຖິ່ນສ່ວນໃຫຍ່ກໍ່ຄືເຮັດວຽກໃນສວນກະສິກໍາການຄ້າຂະໜາດໃຫຍ່, ບ່ອນທີ່ພວກເຂົາຕ້ອງປະເຊີນກັບສະພາບຄວາມເປັນຢູ່ ແລະ ການເຮັດວຽກທີ່ມີຄວາມໝັ້ນຄົງ ເຊິ່ງມີຄວາມອ່ອນໄຫວສູງຕໍ່ຜົນກະທົບ ແລະ ຄວາມກົດດັນຕ່າງໆ, ລວມເຖິງໄດ້ຮັບຄ່າແຮງງານທີ່ຕໍ່າ ແລະ ບໍ່ສະໜໍ່າສະເໝີ, ສັນຍາແຮງງານທີ່ບໍ່ເປັນທາງການ ຫຼື ບໍ່ຊັດເຈນ, ການເຂົ້າເຖິງການປິ່ນປົວທີ່ຈໍາກັດ ແລະ ມີຕ້ອງໄດ້ສໍາຜັດກັບຢາປາບສັດຕູພືດໃນລະດັບທີ່ບໍ່ປອດໄພ.

ນອກຈາກນີ້, ຍັງຕ້ອງຄໍານຶງເຖິງຜົນກະທົບດ້ານສິ່ງແວດລ້ອມ ແລະ ສາທາລະນະສຸກຂອງໂຄງການຂະໜາດໃຫຍ່, ເຊິ່ງມັກສົ່ງຜົນກະທົບໃນຮູບແບບການເຜົາໄໝ້ອາຍພິດທີ່ເພີ່ມຂຶ້ນ ທີ່ກ່ຽວຂ້ອງກັບການນໍາໃຊ້ຊັບພະຍາກອນທໍາມະຊາດ, ການຕັດໄມ້ທໍາລາຍປ່າ[1] ແລະ ການນໍາໃຊ້ຢາປາບສັດຕູພືດ ແລະ ປຸ໋ຍເຄມີທີ່ເພີ່ມຂຶ້ນ ແລະ ບໍ່ປອດໄພ. ການນໍາໃຊ້ຢາປາບສັດຕູພືດ ແລະ ຢາຂ້າພືດທີ່ເພີ່ມຂຶ້ນແມ່ນຍ້ອນມາຈາກການສົ່ງເສີມການຜະລິດເປັນສິນຄ້າ ເຊິ່ງໄດ້ກໍໃຫ້ເກີດໄພຄຸກຄາມຕໍ່ຊາວກະສິກອນ, ຜູ້ບໍລິໂພກ ແລະ ມີຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ.

ຍົກຕົວຢ່າງ, ກໍລະນີສຶກສາໃນປີ 2018 ໂດຍ ໂຄງການບໍລິການ-ສົ່ງເສີມກະສິກໍາຮອບດ້ານ (LURAS), 52.4% ຂອງຕົວຢ່າງໝາກໄມ້ ແລະ ຜັກສົດທີ່ຄັດກອງ ເພື່ອເອົາມາທົດສອບໃນຊ່ວງໄລຍະເວລາສອງປີ ໄດ້ສະແດງຜົນອອກມາເປັນບວກ ເຊິ່ງມີສານຕົກຄ້າງຂອງຢາປາບສັດຕູພືດປະເພດອໍກາໂນຟໍສະເຟດ ແລະ ຄູາບາເມດ, ເຊິ່ງເປັນຢາຂ້າແມງໄມ້ແບບທົ່ວໄປ ທີ່ເຊື່ອມໂຍງກັບພາວະຄວາມບົກພ່ອງທາງລະບົບປະສາດ ແລະ ການພັດທະນາດ້ານສະຕິປັນຍາໃນເດັກ[2]. ນອກຈາກນີ້, ອະຟລາທອກຊິນ – ເຊື້ອລາທີ່ເປັນອັນຕະລາຍ – ອາດປົນເປື້ອນໃນອາຫານ ເຊິ່ງເປັນຜົນມາຈາກຂະບວນການຕາກແຫ້ງ ແລະ ການເກັບຮັກສາທີ່ບໍ່ມີປະສິດທິພາບ ແລະ ບັນຫານີ້ອາດສົ່ງຜົນຕໍ່ຄຸນນະພາບ, ຄວາມປອດໄພແລະ ຄວາມສາມາດທາງການຕະຫຼາດຂອງອາຫານ, ແຕ່ໂດຍທົ່ວໄປແລ້ວ, ຊາວກະສິກອນແມ່ນບໍ່ຮັບຮູ້ເຖິງບັນຫາດັ່ງກ່າວ. ຄວາມທ້າທາຍເຫຼົ່ານີ້ໄດ້ເຮັດໃຫ້ເຫັນເຖິງໂອກາດອັນຈະແຈ້ງໃນການຮັບຮອງເອົາວາລະ 2030 ເພື່ອ

---

[1] ການຕັດໄມ້ທໍາລາຍປ່າກໍາລັງຢູ່ໃນໄລຍະວິກິດ, ທັງຍັງເປັນປັດໄຈເລັ່ງລັດໄລຍະເວລາຂອງໄພແຫ້ງແລ້ງ. ຄວາມປົກຫຸ້ມຂອງປ່າໄມ້ໂດຍລວມແມ່ນຫຼຸດລົງຈາກ 70% ໃນປີ 1940 ເຫຼືອ 40% ໃນປີ 2018 (ຫຼື 58% ຖ້ານັບເອົານິຍາມຂອງພື້ນທີ່ປ່າທີ່ໄດ້ຮັບການທົບທວນໃໝ່ ທີ່ ລວມມີການກະສິກໍາແບບປະສົມປະສານ ແລະພື້ນທີ່ປ່າເພື່ອານກະສິກໍາ ເຂົ້ານໍາ ). UN-Habitat, *ການປະເມີນຄວາມອ່ອນໄຫວຕໍ່ການປ່ຽນແປງສະພາບດິນຟ້າອາກາດ ເພື່ອການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ໃນສປປ ລາວ: ຜົນການສຶກສາເບື້ອງຕົ້ນ* (2020)

[2] ຈາກຜົນການກວດເລືອດຂອງເດັກນັກຮຽນ, ຊາວກະສິກອນ ແລະ ຜູ້ບໍລິໂພກເກືອບ 1,000 ຄົນ, ພົບວ່າມີພຽງ 4% ທີ່ບໍ່ມີການປົນເປື້ອນຂອງສານພິດໃນຮ່າງກາຍ - 35% ມີສານພິດຈາກຢາປາບສັດຕູພືດໃນເລືອດໃນລະດັບທີ່ “ສ່ຽງ” ຫຼື “ບໍ່ປອດໄພ”.

ການພັດທະນາແບບຍືນຍົງ ແລະ ຫຼັກການພວກເຮົາພ້ອມກັນກ້າວໄປ ໄປພ້ອມໆກັບການບັນລຸແຕ່ລະຫົວຂໍ້ສຳຄັນ, ໂດຍສະເພາະແມ່ນຫົວຂໍ້ທີ 1, 2 ແລະ 3.

ການເຮັດກະສິກຳທີ່ຍືນຍົງ, ໂດຍທົ່ວໄປແລ້ວ, ຈຳເປັນຕ້ອງໃຊ້ຄວາມພະຍາຍາມ, ແຮງງານ ແລະ ທັກສະຫຼາຍກວ່າການເຮັດກະສິກຳໃນຮູບແບບອຸດສາຫະກຳທີ່ໃຊ້ສານເຄມີ, ເຊິ່ງນອກຈາກຕົ້ນທຶນທີ່ເພີ່ມຂຶ້ນແລ້ວ, ຍັງເປັນວຽກງານທີ່ຫຍຸ້ງຍາກສຳລັບປະເທດທີ່ມີຄວາມໜາແໜ້ນຂອງ
ປະຊາກອນຕ່ຳ, ໂຄງລ່າງພື້ນຖານ ແລະ ລະບົບການສຶກສາດ້ານວິຊາການທີ່ບໍ່ເຂັ້ມແຂງ. ເຖິງວ່າທຸລະກິດກະສິກຳຂະໜາດໃຫຍ່ຈະສາມາດສະໜອງໂອກາດໃນການຈ້າງງານ ແລະ ຜົນປະໂຫຍດດ້ານເສດຖະກິດໃຫ້ໄດ້, ແຕ່ການສ້າງຄວາມດຸ່ນດ່ຽວດ້ານຜົນກະທົບຍັງເປັນສ່ວນສຳຄັນໃນການສົ່ງເສີມການຜະລິດທີ່ເປັນມິດຕໍ່ທຳມະຊາດ ແລະ ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ທີ່ເທົ່າທຽມ, ໂດຍສະເພາະການນຳໃຊ້ພື້ນທີ່ທີ່ມີຄວາມເປັນມິດ ແລະ ຄວາມໝັ້ນຄົງດ້ານລະບົບນິເວດ, ດັ່ງທີ່ໄດ້ກ່າວມາຂ້າງເທິງ.
ສິ່ງທ້າທາຍອື່ນໆພາຍໃຕ້ຫົວຂໍ້ນີ້ແມ່ນກ່ຽວຂ້ອງກັບໄພພິບັດທຳມະຊາດ,
ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ສັດຕູພືດ ແລະ ພະຍາດສັດ, ຄວາມປອດໄພຂອງອາຫານ, ກຳລັງການຜະລິດຕ່ຳ, ຫຼັກການປະຕິບັດຫຼັງການເກັບກ່ຽວ ແລະ ການເກັບຮັກສາທີ່ບໍ່ມີປະສິດທິພາບ, ແລະ ການຕະຫຼາດ ແລະ ລະບົບການກະຈາຍຜົນຜະລິດທີ່ບໍ່ພຽງພໍ.

ເຖິງຢ່າງໃດກໍຕາມ, ການສົ່ງເສີມການຜະລິດທີ່ເປັນມິດຕໍ່ທຳມະຊາດໃນ ສປປ ລາວ ແມ່ນແມ່ນມີຄວາມຄືບໜ້າທີ່ດີ, ໂດຍສະເພາະແມ່ນການຮັບຮູ້ວ່າການເພີ່ມມູນຄ່າຂອງຜະລິດຕະພັນກະສິກຳດ້ວຍນະວັດຕະກຳ
ສາມາດປັບປຸງຄວາມໝັ້ນຄົງ ແລະ ຄວາມປອດໄພຂອງອາຫານ, ໂພຊະນາການ, ການຈ້າງງານ ແລະ ຫຼຸດການເພິ່ງພາຜະລິດຕະພັນທີ່ນຳເຂົ້າ. MSD ສາມາດຊ່ວຍ ສປປ ລາວ ເສີມສ້າງຊື່ສຽງດ້ານການເປັນສູນລວມຂອງຊີວະນາໆພັນ ບ່ອນທີ່ປະຊາຊົນໃນທ້ອງຖິ່ນບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍສູງ ທີ່ເປັນຜະລິດຕະພັນກະສິກຳທີ່ມີຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ທັງເປັນການເນັ້ນໜັກໃຫ້ເຫັນເຖິງຕະຫຼາດດ້ານນີ້ຂອງ ສປປ ລາວ. ການເພີ່ມຂຶ້ນຂອງລາຍໄດ້ ຍັງຊ່ວຍເພີ່ມຄວາມຕ້ອງການໃນການບໍລິໂພກອາຫານທີ່ປອດໄພ ແລະ ມີໂພຊະນາການ ແລະ ຄວນເນັ້ນໜັກຕື່ມ, ໂດຍແນ່ໃສ່ການເຊື່ອມໂຍງເພີ່ມເຕີມລະຫວ່າງຫົວຂໍ້ 1, 2 ແລະ 3.

ໃນຫົວຂໍ້ທີ 3 ຂອງ MSD, '**ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸ້ນຄ່າຢ່າງເທົ່າທຽມ**' ສະແດງໃຫ້ເຫັນໂອກາດ ແລະ ສິ່ງທ້າທາຍໃນ 3 ຂົງເຂດຫຼັກ. ຂົງເຂດທຳອິດແມ່ນການສ້າງ ແລະ ປັບປຸງໂອກາດ ເພື່ອໃຫ້ມີວຽກເຮັດງານທຳທີ່ດີ, ລາຍໄດ້ ແລະ ການສະໜັບສະໜູນດ້ານຄວາມປອດໄພທາງສັງຄົມ. ໃນຂົງເຂດນີ້, ມີໂອກາດໃນການເພີ່ມກຳລັງການຜະລິດ, ການສົ່ງເສີມການຜະລິດເປັນສິນຄ້າ, ການດຳເນີນທຸລະກິດ ແລະ ທຸລະກິດການກະເສດສຳລັບພືດຕາມຄວາມຕ້ອງການ, ການລ້ຽງສັດ ແລະ ການປະມົງ; ການປັບປຸງຄວາມຊຳນິຊຳນານ ໂດຍຜ່ານການພັດທະນາທັກສະ ແລະ ຂີດຄວາມສາມາດ. ນະວັດຕະກຳ, ການບໍລິການໃຫ້ຄຳປຶກສາ ແລະ ການສ້າງມາດຕະຖານດ້ານຄຸນນະພາບ ສາມາດຍົກສູງຄວາມສາມາດໃນການແຂ່ງຂັນໃຫ້ແກ່ບໍລິສັດໄດ້. ການຫັນປ່ຽນສະພາບແວດລ້ອມທາງທຸລະກິດໄປສູ່ຂົງເຂດເຫຼົ່ານີ້ ຈະສາມາດຊ່ວຍດຶງດູດການລົງທຶນຈາກພາກສ່ວນເອກະຊົນ; ສ້າງວຽກເຮັດງານທຳຜ່ານໂຄງລ່າງພື້ນຖານຊົນນະບົດທີ່ຍືນຍົງ; ແລະ ປັບປຸງວັດທະນະທຳທຸລະກິດ ໂດຜ່ານກົດໝາຍຄຸ້ມຄອງແຮງງານ ແລະ ຂໍ້ບັນຍັດດ້ານສະຫວັດດີການສັງຄົມ.

ໂດຍຄວບຄູ່ກັນໄປ, ມີສິ່ງທ້າທາຍ, ແລະ ມີໂອກາດທີ່ດີ, ໃນການຮັບປະກັນການເຂົ້າເຖິງລາຍໄດ້ທີ່ມີຄຸນນະພາບ, ການສະໜັບສະໜູນທາງສັງຄົມ ແລະ ການເປັນຢູ່ທີ່ດີໃຫ້ແກ່ທຸກຄົນໃນທົ່ວທຸກບ່ອນ; ໂດຍສະເພາະ, ກຸ່ມຄົນທີ່ມີຄວາມອ່ອນໄຫວ, ເຊັ່ນ: ແມ່ຍິງ, ຊາວໜຸ່ມ, ກຸ່ມຊົນເຜົ່າ ແລະ ຄົນພິການ. ເວົ້າສະເພາະແລ້ວ, ຍັງມີພື້ນທີ່ໃນການປັບປຸງຄວາມກວມລວມໂດຍຜ່ານ: ການຮັບປະກັນໃຫ້ປະຊາຊົນທີ່ຢູ່ໃນເຂດຊົນນະບົດມີລາຍຮັບທີ່ສູງຂຶ້ນ; ຍົກສູງບົດບາດໃຫ້ແກ່ແມ່ຍິງ, ແລະ ຮັບປະກັນໃຫ້ພວກເຂົາເຂົ້າເຖິງສິດໃນການຄອບຄອງທີ່ດິນ, ການເງິນ, ການບໍລິການຕ່າງໆ ພ້ອມທັງບົດບາດໃນການຕັດສິນໃຈ; ແນໃສ່ບັນຫາຊ່ອງຫວ່າງດ້ານການຈ້າງງານ ແລະ ຊ່ອງຫວ່າງດ້ານສະຫວັດດີການສັງຄົມສຳລັບຄົນພິການ ແລະ ການຂະຫຍາຍໂຕຂອງປະຊາກອນໄວໜຸ່ມ; ແລະ ລຶບລ້າງທຸກຮູບແບບໃນການໃຊ້ແຮງງານເດັກຢ່າງເດັດຂາດ.

ທ້າຍສຸດນີ້, ມີສິ່ງທ້າທາຍໃນການຫຼຸດຜ່ອນຄວາມສ່ຽງ ແລະ ໂອກາດໃນການເພີ່ມຄວາມທົນທານໃຫ້ແກ່ທຸກການດຳລົງຊີວິດ. ສາມາດນຳໃຊ້ມາດຕະການຕ່າງໆ ເພື່ອແກ້ໄຂບັນດາຜົນກະທົບທີ່ໄດ້ຮັບຈາກພະຍາດໂຄວິດ-19; ກຽມຄວາມພ້ອມໃນການຮັບມືກັບຜົນກະທົບທີ່ບໍ່ຄາດຄິດໃນອະນາຄົດ, ກຽມຄວາມພ້ອມຮັບມືກັບໄພພິບັດທຳມະຊາດ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບສະພາບດິນຟ້າອາກາດ ໂດຍຜ່ານເຕັກນິກ ແລະ ໂຄງລ່າງພື້ນຖານດ້ານການຜະລິດກະສິກຳທີ່ມີຄວາມທົນທານ; ຫຼຸດຜ່ອນການເພິ່ງພາຂະແໜງການຂຸດຄົ້ນຊັບພະຍາກອນ; ແລະ ຍົກສູງການເພິ່ງພາພະລັງງານທົດແທນ.

ຫົວຂໍ້ທີ 4 ຂອງ MSD, '**ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ, ແລະ ຄວາມກົດດັນຕ່າງໆ**', ແມ່ນພື້ນຖານໃນການປັບປຸງຄວາມຍືນຍົງຂອງ ລະບົບສະບຽງອາຫານໃນ ສປປ ລາວ ເນື່ອງຈາກວ່າປະເທດລາວຍັງມີຄວາມອ່ອນໄຫວຕໍ່ສະພາບດິນຟ້າອາກາດທີ່
ຮ້າຍແຮງ, ໃນຂະນະທີ່ພື້ນທີ່ສ່ວນໃຫຍ່ຂອງປະເທດກໍ່ຍັງຄົງມີລະເບີດທີ່ບໍ່ທັນແຕກຢູ່. ໃນບັນດາໄພພິບັດເຫຼົ່ານີ້, ໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ພາຍຸ ແມ່ນມີຜົນກະທົບສູງສຸດຕໍ່ຄວາມໝັ້ນຄົງດ້ານການກະສິກຳ ແລະ ສະບຽງອາຫານ ແລະ ມັກກໍໃຫ້ເກີດໄພອັນຕະລາຍອື່ນໆຕາມມາ, ເຊັ່ນ: ດິນເຈື່ອນ, ໄຟໄໝ້ປ່າ ແລະ ຊຸມຊົນ, ການແຜ່ລາມຂອງສັດຕູພືດ ແລະ ໝູ ແລະ ການລະບາດພະຍາດສັດ. ໄພພິບັດເຫຼົ່ານີ້ ຍິ່ງທະວີຄວາມຮຸນແຮງເພີ່ມຂຶ້ນ ອັນເປັນເຫດມາຈາກຄວາມເສື່ອມໂຊມທາງດ້ານຊັບພະຍາກອນທຳມະຊາດ, ຄວາມສູນເສຍດ້ານຊີວະນາໆພັນ ແລະ ຄວາມເສຍຫາຍຈາກການປ່ຽນແປງຂອງສະພາບດິນຟ້າອາກາດ. ເນື່ອງຈາກປະເທດມີການເພິ່ງພາອາໄສຊັບພະຍາກອນທຳມະຊາດໃນລະດັບສູງ ເພື່ອເຮັດການກະສິກຳ, , ຜະລິດສິນຄ້າປະເພດໄມ້, ສ້າງເຂື່ອນໄຟຟ້າ ແລະ ຂຸດຄົ້ນບໍ່ແຮ່, ສປປ ລາວ ຈຶ່ງມີຄວາມອ່ອນໄຫວສູງຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.
ສິ່ງສຳຄັນທີ່ຕ້ອງຄຳນຶງເຖິງແມ່ນ ການປ່ຽນແປງຂອງສະພາບດິນຟ້າອາກາດແມ່ນບັນຫາດ້ານມະນຸດສະທຳ ແລະ ບັນຫາດ້ານການພັດທະນາ – ບໍ່ແມ່ນພຽງແຕ່ເປັນບັນຫາດ້ານສິ່ງແວດລ້ອມເທົ່ານັ້ນ. ນອກຈາກນັ້ນ, ການປ່ຽນແປງຂອງສະພາບດິນຟ້າອາກາດ ຍັງແມ່ນໜຶ່ງໃນໂຕຂັບເຄື່ອນ

ຫຼັກຂອງບັນຫາຄວາມອຶດຫິວທົ່ວໂລກ. ອຸນຫະພູມທີ່ເພີ່ມຂຶ້ນໄດ້ສົ່ງຜົນກະທົບທີ່ຮ້າຍແຮງຕໍ່ການຜະລິດກະສິກຳໃນ ສປປ ລາວ. ປະຊາຊົນທີ່ບໍ່ໄດ້ຮັບຄວາມໝັ້ນຄົງດ້ານສະບຽງອາຫານກຳລັງໄດ້ຮັບຜົນກະທົບຈາກສະພາບດິນຟ້າອາກາດທີ່ຮຸນແຮງ, ເຊັ່ນ: ໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມ, ຕະຫຼອດຈົນເຖິງຄວາມກົດດັນອື່ນໆ, ເຊັ່ນ: ການລະບາດຂອງສັດຕູພືດ ແລະ ການເສື່ອມໂຊມຂອງສະພາບດິນ. ການປ່ຽນແປງຂອງສະພາບດິນຟ້າອາກາດກຳລັງສົ່ງຜົນກະທົບຕໍ່ການຜະລິດສະບຽງອາຫານ ແລະ ພືດທີ່ມີໂພຊະນາການ. ສະຖານະການນີ້ຈະຍິ່ງຮ້າຍແຮງຂຶ້ນ ເມື່ອອຸນຫະພູມເພີ່ມຂຶ້ນ ແລະ ຮຸນແຮງຍິ່ງຂຶ້ນ, ແລະ ການຄາດຄະເນ ຝົນມີຄວາມຫຍຸ້ງຍາກຍິ່ງຂຶ້ນ.

ນອກຈາກນີ້, ລະບົບການຜະລິດສະບຽງອາຫານໃນ ສປປ ລາວ ແມ່ນຢູ່ໃນລະດັບກຸ້ມກິນເທົ່ານັ້ນ, ເຊິ່ງສົ່ງຜົນໃຫ້ມີຄວາມອ່ອນໄຫວສູງຕໍ່ສະພາບດິນຟ້າອາກາດທີ່ຮ້າຍແຮງ ແລະ ການເສື່ອມໂຊມຂອງສະພາບດິນ. ການປະມົງ, ການເພາະລ້ຽງສັດນໍ້າ, ແລະ ການລ້ຽງສັດກໍ່ໄດ້ຮັບຄວາມເສຍຫາຍຈາກຜົນກະທົບ ແລະ ຄວາມກົດດັນຕ່າງໆ, ທີ່ສົ່ງຜົນເສຍຫາຍອັນຮຸນແຮງຕໍ່ສັງຄົມ ແລະ ເສດຖະກິດ[3]. ຜົນກະທົບ ແລະ ຄວາມກົດດັນທາງສັງຄົມຕໍ່ລະບົບສະບຽງອາຫານ ທີ່ລວມມີຄວາມໝັ້ນຄົງດ້ານສະບຽງອາຫານໃນຄົວເຮືອນ, ຍຸດທະສາດການຮັບມືທີ່ບໍ່ມີປະສິດທິພາບ ທີ່ສົ່ງຜົນກະທົບຕໍ່ໂພສະນາການ ແລະ ການເຂົ້າເຖິງການບໍລິການ, ບັນຫາໜີ້ສິນຄົວເຮືອນທີ່ເພີ່ມຂຶ້ນ ແລະ ຜົນກະທົບທາງລົບຕໍ່ຄວາມປອງດອງໃນຊຸມຊົນ.

ການແຜ່ລະບາດຂອງ ພະຍາດໂຄວິດ-19 ໄດ້ກີດຂວາງຕ່ອງໂສ້ການສະໜອງ ສົ່ງຜົນໃຫ້ລາຄາອາຫານໃນທ້ອງຖິ່ນສູງຂຶ້ນ, ມີສ່ວນເຮັດໃຫ້ອັດຕາການຫວ່າງງານເພີ່ມຂຶ້ນ ແລະ ຄາດຄະເນວ່າ ຈະເຮັດໃຫ້ຫຼາຍກວ່າ 200,000 ຄົນຕົກຢູ່ໃນສະພາບຄວາມທຸກຍາກ. ນອກຈາກນີ້, ແຮງງານເຄື່ອນຍ້າຍທີ່ເດີນທາງກັບຄືນສູ່ປະເທດຢ່າງຫຼວງຫຼາຍ ພາເຮັດໃຫ້ອັດຕາການສົ່ງເງິນກັບຄືນສູ່ປະເທດຕໍ່າລົງ. ການແຜ່ລະບາດດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການຜະລິດທ້ອງຖິ່ນ ແລະ ລະບົບສະບຽງອາຫານພາຍໃນປະເທດກໍມີຄວາມສຳຄັນເຊັ່ນດຽວກັນ ເພື່ອຊ່ວຍຫຼຸດຜ່ອນຜົນກະທົບໃຫ້ໄດ້ຫຼາຍທີ່ສຸດໃນເວລາເກີດອຸປະສັກດ້ານການຄ້າລະຫວ່າງປະເທດ.

**"ການປ່ຽນແປງຂອງສະພາບດິນຟ້າອາກາດແມ່ນບັນຫາດ້ານມະນຸດສະທຳ ແລະ ບັນຫາດ້ານການພັດທະນາ – ບໍ່ແມ່ນພຽງແຕ່ບັນຫາດ້ານສິ່ງແວດລ້ອມເທົ່ານັ້ນ"**

ເຖິງຈະມີສິ່ງທ້າຍທາຍພາຍໃຕ້ຫົວຂໍ້ນີ້ກໍ່ຕາມ, ແຕ່ກໍ່ຍັງມີໂອກາດຫຼາກຫຼາຍທີ່ຈະຫຼຸດຜ່ອນຜົນກະທົບຈາກວິກິດການ ແລະ ຄວາມກົດດັນຕ່າງໆຕໍ່ລະບົບສະບຽງອາຫານຂອງລາວ. MSD ເປັນໂອກາດ ໃນການສ້າງລະບົບສະບຽງອາຫານໃຫ້ມີຄວາມທົນທານ, ສາມາດຕອບສະໜອງຕໍ່ວິກິດການໄດ້, ມີຄວາມເທົ່າທຽມ, ມີຄວາມກວມລວມ, ມີຄຸນຄ່າທາງໂພຊະນາການ ແລະ ມີການຈັດຕັ້ງປະຕິບັດຢ່າງເປັນລະບົບ ຍ້ອນສິ່ງເຫຼົ່ານີ້ແມ່ນມີຄວາມສຳຄັນຕໍ່ຄວາມສາມາດຂອງຊຸມຊົນໃນ ສປປ ລາວ ເພື່ອຕ້ານທານ ແລະ ຟື້ນຟູຄືນຈາກຄວາມທ້າທາຍຕ່າງໆຂອງສະພາບດິນຟ້າອາກາດ, ການແຜ່ລະບາດ, ແລະ ວິກິດທາງດ້ານເສດຖະກິດ, ເຊິ່ງວິກິດການທັງໝົດນີ້ແມ່ນປັດໄຈທີ່ກໍ່ໃຫ້ເກີດຄວາມອຶດຫິວ.

ນອກຈາກນີ້, ລັດຖະບານໄດ້ນຳໃຊ້ແບບແຜນການກະກຽມລ່ວງໜ້າ, ໂດຍເຊື່ອມໂຍງການຄຸ້ມຄອງຄວາມສ່ຽງຈາກໄພພິບັດ (DRM) ແລະ ການປັບໂຕຕໍ່ການປ່ຽນສະພາບດິນຟ້າອາກາດອາກາດ (CCA), ໂດຍສຸມໃສ່ບັນດາມາດຕະການຫຼຸດຜ່ອນຄວາມສ່ຽງ ທີ່ເຊື່ອມໂຍງກັບການຫຼຸດຜ່ອນຄວາມທຸກຍາກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ. ສປປ ລາວ ກຳລັງສຸມໃສ່ການລົງທຶນເຂົ້າໃນບັນດາມາດຕະການຫຼຸດຜ່ອນຄວາມສ່ຽງເພີ່ມຂຶ້ນ ທີ່ລວມມີການຜັນຂະຫຍາຍບັນດາວຽກງານທີ່ມີການຄາດຄະເນໄວ້ລ່ວງໜ້າ ແລະ ການບໍລິການຂໍ້ມູນດ້ານສະພາບດິນຟ້າອາກາດ, ຕະຫຼອດຈົນເຖິງຜະລິດຕະພັນດ້ານປະກັນໄພ ແລະ ສິນເຊື່ອໃຫ້ແກ່ຊາວກະສິກອນ.

ສປປ ລາວ ຍັງເປັນປະທານຮ່ວມຂອງກຸ່ມປະຕິບັດງານພາຍໃຕ້ ຄະນະກຳມະການຄຸ້ມຄອງໄພພິບັດແຫ່ງອາຊຽນ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດ ແລະ ທັງຍັງເປັນສະມາຊິກທີ່ຫ້າວຫັນຂອງເຄືອຂ່າຍອາຊຽນດ້ານຄວາມທົນທານຂອງຂະແໜງການກະສິກຳຕໍ່ສະພາບດິນຟ້າອາກາດ

[3] ໄພນໍ້າຖ້ວມໃນປີ 2018 ໄດ້ສ້າງຄວາມເສຍຫາຍຕໍ່ການປະມົງ ໂດຍໄດ້ພັດເອົາພັນປາ ແລະ ພັນໄມ້ໃຫ້ໄຫຼໄປຕາມນໍ້າ ແລະ ທັງຍັງສ້າງຄວາມເສຍຫາຍຕໍ່ລາຍໄດ້ຈາກການຂາຍປາທີ່ຫຼຸດລົງທີ່ມີມູນຄ່າປະມານ 38,3 ຕື້ກີບ. ການຄິດໄລ່ ໂດຍອີງໃສ່ການຄາດຄະເນອັດຕາການຕາຍທີ່ເພີ່ມຂຶ້ນປະມານ 2% ຂອງສັດທີ່ໄດ້ຮັບຜົນກະທົບຈາກນໍ້າຖ້ວມຄາດວ່າມີມູນຄ່າຄວາມເສຍຫາຍຢູ່ປະມານ 16 ຕື້ກີບ. https://www.gfdrr.org/en/publication/post-disaster-needs-assessment-2018-floods-lao-pdr



# ລະບົບສະບຽງອາຫານທີ່ຍືນຍົງໃນ ສປປ ລາວ: ການເຮັດວຽກຮ່ວມກັນ ແລະ ຜົນໄດ້ຜົນເສຍ

ພາກນີ້ໄດ້ວິເຄາະການເຮັດວຽກນຮ່ວມກັນ ແລະ ຜົນໄດ້ຜົນເສຍລະຫວ່າງຫົວຂໍ້ສໍາຄັນ ແລະ ອົງປະກອບອື່ນໆຂອງລະບົບສະບຽງອາຫານໃນ ສປປ ລາວ ເພື່ອຫຼີກລ້ຽງແບບແຜນການດໍາເນີນງານແບບໂດດດ່ຽວຂອງແຕ່ລະຂະແໜງການ ແລະ ຮັບປະກັນໃຫ້ມີຄວາມຮ່ວມມືຕື່ມອີກເຂົ້າໃນການສ້າງເສັ້ນທາງແຫ່ງຊາດສູ່ລະບົບສະບຽງອາຫານທີ່ຍືນຍົງໃນ ສປປ ລາວ. ນອກຈາກຈະຕ້ອງລະບຸການເຮັດວຽກຮ່ວມກັນກັນລະຫວ່າງຂົງເຂດວຽກງານຕ່າງໆແລ້ວ, ສິ່ງທີ່ສໍາຄັນແມ່ນຕ້ອງໄດ້ກວດສອບຜົນໄດ້ຜົນເສຍ ເພື່ອດັດປັບບັນດາບຸລິມະສິດທີ່ມີຄວາມສໍາຄັນຄ້າຍຄືກັນໃຫ້ມີຄວາມດຸ່ນດ່ຽງ.

**ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ** ໄດ້ສະໜອງໂອກາດໃນການຮ່ວມມືກັນພາຍໃຕ້ຫົວຂໍ້ສໍາຄັນ ແລະ ຫຼາກຫຼາຍອົງປະກອບຂອງລະບົບສະບຽງອາຫານ. ໃນດ້ານຕ່ອງໂສ້ການສະໜອງອາຫານແມ່ນມີຄວາມເຊື່ອມໂຍງທີ່ຊັດເຈນກັບການຜະລິດກະສິກໍາ, ຂະບວນການແປຮູບພາຍຫຼັງການເກັບກ່ຽວ ແລະ ການແຈກຢາຍ, ການຄຸ້ມຄອງຊັບພະຍາກອນທໍາມະຊາດ, ແລະ ການຄົ້ນຄວ້າ ແລະ ພັດທະນາກະສິກໍາ. ດ້ານສະພາບແວດລ້ອມຂອງສະບຽງອາຫານພາຍນອກ, ຄວນໃຫ້ຄວາມສໍາຄັນຕໍ່ການຮ່ວມມືກັບຕະຫຼາດ ແລະ ໂຮງຮຽນ, ປັບປຸງ ແລະ ຮັກສາຄວາມປອດໄພຂອງອາຫານ ແລະ ປັບປຸງຄວາມພ້ອມ ແລະ ຊຸກຍູ້ໃຫ້ມີການເລືອກບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການ. ດ້ານອົງປະກອບການບໍລິໂພກຂອງລະບົບສະບຽງອາຫານ ແມ່ນໄດ້ແນ່ໃສ່ສະພາບແວດລ້ອມ ແລະ ພຶດຕິກໍາດ້ານສະບຽງອາຫານສ່ວນບຸກຄົນ, ລວມເຖິງການກະກຽມອາຫານ ແລະ ພຶດຕິກໍາການກິນ. ການຄຸ້ມຄອງສິ່ງເສດເຫຼືອຫຼັງການບໍລິໂພກ ໄດ້ສົ່ງຜົນກະທົບຕໍ່ສິ່ງແວດລ້ອມທ້ອງຖິ່ນ ແລະ ຄວາມທົນທານໃນລະດັບທ້ອງຖິ່ນ.

ສິ່ງທີ່ສໍາຄັນສໍາລັບ ສປປ ລາວ ແມ່ນການຊັ່ງຊາຜົນປະໂຫຍດຂອງການພັດທະນາເສດຖະກິດກັບຜົນກະທົບຕໍ່ສາທາລະນະສຸກ, ສິ່ງແວດລ້ອມ, ແລະ ຄວາມສະເໝີພາບທາງສັງຄົມ. ຄວນໃຫ້ຄວາມສໍາຄັນເປັນພິເສດຕໍ່ສຸຂະພາບຂອງແມ່, ເດັກ ແລະ ເຍົາວະຊົນ, ແລະ ກຸ່ມຄົນທີ່ມີຄວາມອ່ອນໄຫວ, ລວມເຖິງກຸ່ມຄົນທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ, ເຂດຊົນນະບົດ, ແລະ ກຸ່ມຊົນເຜົ່າ. ນອກຈາກນີ້, ຄວນໃຫ້ຄວາມສໍາຄັນຢ່າງເຂັ້ມແຂງແກ່ເລື່ອງບົດບາດຍິງຊາຍ – ແມ່ຍິງແມ່ນສ່ວນສໍາຄັນໃນຂະແໜງກະສິກໍາ. ເຖິງແມ່ນວ່າຈະກວມເອົາຫຼາຍກວ່າເຄິ່ງໜຶ່ງຂອງກໍາລັງແຮງງານໃນຂະແໜງການກະສິກໍາກໍ່ຕາມ, ແຕ່ພວກເຂົາຍັງຄົງຕ້ອງປະເຊີນກັບອຸປະສັກທີ່ສໍາຄັນ ແລະ ຕໍ່ເນື່ອງທີ່ກີດຂວາງບໍ່ໃຫ້ສາມາດມີສ່ວນຮ່ວມໄດ້ຢ່າງເຕັມທີ່ເຂົ້າໃນບັນດາສະຖາບັນທີ່ກ່ຽວຂ້ອງກັບລະບົບສະບຽງອາຫານດ້ານການເຂົ້າເຖິງຂໍ້ມູນ ແລະ ຊັບພະຍາກອນ ພ້ອມທັງຕໍາແໜ່ງຂັ້ນນໍາຕ່າງໆ.

ໜຶ່ງໃນຜົນໄດ້ຜົນເສຍຫຼັກທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ແລະ ອາຫານທີ່ປອດໄພ ແລະ ມີໂພຊະນາການ ແມ່ນກ່ຽວຂ້ອງກັບການລ້ຽງດູເດັກ. ແມ່ຍິງເປັນຜູ້ລ້ຽງດູເດັກເປັນຈໍານວນຫຼາຍ ແຕ່ເມື່ອຕ້ອງເລືອກລະຫວ່າງການຜະລິດອາຫານໃຫ້ຄົວເຮືອນ ແລະ ການລ້ຽງດູເດັກອ່ອນ ແລະ ລູກນ້ອຍ, ພວກເຂົາມີແນວໂນ້ມທີ່ຈະເລືອກຜະລິດອາຫານຫຼາຍກວ່າ. ສະນັ້ນ, ບໍ່ພຽງແຕ່ການບໍລິການດ້ານສຸຂະພາບເທົ່ານັ້ນ, ແຕ່ຍັງລວມເຖິງການບໍລິການດ້ານການສົ່ງເສີມກະສິກໍາ, ທີ່ຕ້ອງຖືກອອກແບບໃຫ້ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຄອບຄົວໄດ້. ຄອບຄົວທີ່ມີລູກນ້ອຍຕ້ອງການຄໍາແນະນໍາກ່ຽວກັບການເຮັດສວນຢູ່ບ້ານ ແລະ ລ້ຽງສັດຂະໜາດນ້ອຍ (ໄກ່, ເປັດ), ເພື່ອໃຫ້ແມ່ຍິງສາມາດຜະລິດອາຫານ ແລະ ໃນເວລາດຽວກັນກໍ່ສາມາດໃຫ້ການເບິ່ງແຍງເດັກໄດ້ນໍາ. ນອກຈາກນີ້, ທັງການບໍລິການດ້ານສຸຂະພາບ ແລະ ກະສິກໍາ ຕ້ອງຊຸກຍູ້ໃຫ້ຜູ້ຊາຍເຂົ້າມາມີສ່ວນຮ່ວມ ເພື່ອສົ່ງເສີມແຮງງານທີ່ມີຄວາມເທົ່າທຽມເພີ່ມຂຶ້ນໃນການຜະລິດສະບຽງອາຫານ ແລະ ການລ້ຽງດູເດັກ

ດັ່ງນັ້ນ, ການສະໜັບສະໜູນທຸກຫົວຂໍ້ສໍາຄັນ ຈຶ່ງແມ່ນພັນທະທີ່ຕ້ອງປະຕິບັດພາຍໃຕ້ຫຼັກການ **'ພວກເຮົາພ້ອມກັນກ້າວໄປ'** (LNOB) ໂດຍຮັບປະກັນໃຫ້ກຸ່ມຄົນທີ່ມີຄວາມອ່ອນໄຫວສູງສຸດມີສ່ວນຮ່ວມເຂົ້າໃນລະບົບສະບຽງອາຫານ ແລະ ແນໃສ່ເຮັດໃຫ້ສະມາຊິກໃນສັງຄົມທຸກຄົນສາມາດເຂົ້າເຖິງຊັບພະຍາກອນ, ຂໍ້ມູນ, ອາຫານ ແລະ ໂອກາດໃນການດໍາລົງຊີວິດຢ່າງເທົ່າທຽມ. ບຸລິມະສິດພາຍໃຕ້ຫຼັກການ **LNOB** ບໍ່ໄດ້ສອດຄ່ອງໂດຍອັດຕະໂນມັດກັບການພັດທະນາຕະຫຼາດທີ່ກວ້າງຂວາງ ຫຼື ການພັດທະນາກະສິກໍາທີ່ເພີ່ມຂຶ້ນ, ແຕ່ສາມາດນໍາໃຊ້ມາດຕະການຕ່າງໆ ເພື່ອເຮັດໃຫ້ສອງບຸລິມະສິດເຫຼົ່ານີ້ສະໜັບສະໜູນເຊິ່ງກັນ ແລະ ກັນ ແລະ ສິ່ງນັ້ນຈະຊ່ວຍປະກອບສ່ວນເຂົ້າໃນການສ້າງລະບົບສະບຽງອາຫານທີ່ຍືນຍົງຫຼາຍຂຶ້ນ.

ຍົກຕົວຢ່າງ, ການເພີ່ມຂຶ້ນຂອງການຜະລິດພືດເສດຖະກິດ ເພື່ອຕອບສະໜອງຕໍ່ຕະຫຼາດທັງພາຍໃນ ແລະ ພາກພື້ນ ສາມາດປະກອບສ່ວນເຮັດໃຫ້ລະດັບຂອງລາຍຮັບສູງຂຶ້ນກວ່າເກົ່າໃນຂັ້ນບ້ານ ແລະ ຂັ້ນຄົວເຮືອນ ແຕ່ນີ້ອາດບໍ່ໝາຍຄວາມວ່າຈະສາມາດເພີ່ມທະວີ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫແກ່ທຸກຄົນ' ໄດ້. ເມື່ອຄົວເຮືອນຕ່າງໆໃນເຂດຊົນນະບົດຕ້ອງເພິ່ງພາອາຫານທີ່ຊື້ຢູ່ຕະຫຼາດ, ຄົນທຸກອາດຕ້ອງໄດ້ປະເຊີນກັບຄວາມບໍ່ໝັ້ນຄົງດ້ານອາຫານ ແລະ ໂພຊະນາການທີ່ບໍ່ພຽງພໍໃນລະດັບສູງ – ແລະ ແມ້ກະທັ້ງຄອບຄົວທີ່ມີກໍາລັງຊື້ອາຫານໄດ້ ກໍ່ອາດເລືອກທີ່ຈະບໍລິໂພກອາຫານທີ່ມີໂພຊະນາການຕໍ່າ. ສະນັ້ນ, ລະບົບສະບຽງອາຫານທີ່ຍືນຍົງ ແລະ ມີປະສິດທິພາບບົນພື້ນຖານຂອງຫຼັກການພວກເຮົາພ້ອມກັນກ້າວໄປ ນັ້ນຈະຕ້ອງເນັ້ນໜັກໃສ່ເກີນກວ່າມາດຕະການແຊກແຊງໃນລະດັບການສະໜອງ, ທັງຍັງຕ້ອງໄດ້ແນໃສ່ການປ່ຽນແປງດ້ານພຶດຕິກໍາການບໍລິໂພກອາຫານ ຂອງຄອບຄົວ, ການຊຸກຍູ້ໃຫ້ເກີດຄວາມຕ້ອງການອາຫານທີ່ດີຕໍ່ສຸຂະພາບ.

ເຖິງຢ່າງໃດກໍຕາມ, ລາຍຮັບຂອງຜູ້ບໍລິໂພກທີ່ເພີ່ມຂຶ້ນ, ໂດຍສະເພາະກຸ່ມຄົນຊົນຊັ້ນກາງທີ່ມີຈໍານວນເພີ່ມຂຶ້ນ, ທັງໃນພາກພື້ນ ແລະ ໃນປະເທດ, ໄດ້ສ້າງຄວາມຕ້ອງການດ້ານຜະລິດຕະພັນອາຫານທີ່ສະອາດ ແລະ ປອດໄພ. ຕະຫຼາດລະດັບພາກພື້ນ ແລະ ພາຍໃນປະເທດທີ່ມີໝາກໄມ້ເຂດຮ້ອນ, ຜັກ ແລະ ສະໝຸນໄພທີ່ມີຄຸນນະພາບ ແລະ ຄວາມປອດໄພສູງ ໄດ້ສະໜອງໂອກາດໃນການຄ້າຂາຍທີ່ດີແກ່ຊາວກະສິກອນ

**"ການສະໜັບສະໜູນທຸກຫົວຂໍ້ ແມ່ນພັນທະທີ່ຕ້ອງປະຕິບັດພາຍໃຕ້ຫຼັກການ 'ພວກເຮົາພ້ອມກັນກ້າວໄປ' ເພື່ອຮັບປະກັນໃຫ້ກຸ່ມຄົນທີ່ມີຄວາມອ່ອນໄຫວສູງສຸດມີສ່ວນຮ່ວມເຂົ້າໃນລະບົບສະບຽງອາຫານ ແລະ ແນໃສ່ເຮັດໃຫ້ສະມາຊິກໃນສັງຄົມທຸກຄົນສາມາດເຂົ້າເຖິງຊັບພະຍາກອນ, ຂໍ້ມູນ, ອາຫານ ແລະ ໂອກາດໃນການດໍາລົງຊີວິດຢ່າງເທົ່າທຽມ."**

ເພື່ອໃຫ້ພວກເຂົາມີການເປັນຢູ່ທີ່ດີຂຶ້ນ. ເຖິງວ່າການຜະລິດກະສິກໍາ 'ສີຂຽວ' ຈະມີຕົ້ນທຶນທີ່ສູງກວ່າ, ສິ່ງນີ້ໄດ້ສະແດງໃຫ້ເຫັນໂອກາດທີ່ປະເທດລາວ ຈະໄດ້ຮັບຜົນປະໂຫຍດໃນການຄ້າລະດັບພາກພື້ນ ໂດຍນໍາໃຊ້ປະໂຫຍດຈາກຄວາມອຸດົມສົມບູນທາງດ້ານຊີວະນາໆພັນ ໃນຮູບແບບທີ່ຍືນຍົງ, ໂດຍເນັ້ນໜັກໃສ່ການເຮັດວຽກຮ່ວມກັນລະຫວ່າງການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ ແລະ ການສ້າງຄວາມກ້າວໜ້າດ້ານຊີວິດການເປັນຢູ່ທີ່ເທົ່າທຽມ. ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກສິ່ງນີ້, ສປປ ລາວ ຕ້ອງພະຍາຍາມ **ສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດໃນລະດັບທີ່ພຽງພໍ**, ແລະ ພະຍາຍາມດັດປັບຍຸດທະສາດສົ່ງເສີມການສົ່ງອອກສິນຄ້າໃຫ້ສອດຄ່ອງກັບການສົ່ງເສີມກະສິກໍາທາງລະບົບນິເວດ.

ເຕັກນິກການຜະລິດທີ່ເປັນມິດຕໍ່ທໍາມະຊາດ ສາມາດສ້າງມູນຄ່າເພີ່ມໂດຍຜ່ານການສ້າງ ແລະ ເສີມຂະຫຍາຍຕະຫຼາດລະບົບ ທີ່ມີຄວາມກວມລວມ ແລະ ຜູ້ຜະລິດຂະໜາດນ້ອຍສາມາດເຂົ້າເຖິງໄດ້ ເພື່ອຮັບປະກັນໂອກາດໃນການສ້າງລາຍຮັບເພີ່ມຂຶ້ນ ແລະ ໃຫ້ສາມາດຂ້າມຜ່ານການຜະລິດແບບກຸ້ມກິນ. ຕາມທີ່ໄດ້ເນັ້ນໜັກໄວ້ນັ້ນ, ຕະຫຼາດ ແລະ ຕ່ອງໂສ້ມູນຄ່າທີ່ກ່ຽວຂ້ອງໃນລະດັບທ້ອງຖິ່ນ, ແຫ່ງຊາດ, ແລະ ພາກພື້ນ ມີຄວາມຕ້ອງການຜະລິດຕະພັນທີ່ມີຄຸນນະພາບ, ປອດໄພ ແລະ ສະອາດເພີ່ມຂຶ້ນ ແລະ ນີ້ຈະເປັນສ່ວນໜຶ່ງໃນການຂັບເຄື່ອນການປ່ຽນແປງໄປສູ່ລະບົບການຜະລິດທີ່ຍືນຍົງຍິ່ງຂຶ້ນ - ເຖິງວ່າຈະຍັງມີຫຼາກຫຼາຍຢ່າງທີ່ຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອສ້າງແຮງຈູງໃຈ, ເຊັ່ນ: ກົດລະບຽບທີ່ເຂັ້ມງວດຍິ່ງຂຶ້ນ ເພື່ອຄຸ້ມຄອງຜະລິດຕະພັນທີ່ບໍ່ແມ່ນອິນຊີ ແລະ ການນໍາໃຊ້ຢາປາບສັດຕູພືດທີ່ບໍ່ປອດໄພ. ຫົວຂໍ້ທີ 4 'ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ' ກໍ່ມີຄວາມທັບຊ້ອນກັບຂົງເຂດນີ້ ເນື່ອງຈາກວ່າສຸຂະພາບຂອງລະບົບທໍາມະຊາດ ແລະ ການຜະລິດກະສິກໍາ ຕ້ອງໄດ້ເພິ່ງພາເຊິ່ງກັນ ແລະ ກັນ ແລະ ຈະໄດ້ຮັບການປົກປັນຮັກສາທີ່ດີທີ່ສຸດໃນຮູບແບບໝູນວຽນ, ແລະ ສົ່ງເສີມໃຫ້ແກ່ກັນ.

ນອກຈາກນີ້, MSD ຍັງສາມາດສ້າງຄວາມຕື່ນໂຕກ່ຽວກັບຜົນປະໂຫຍດຂອງຄວາມຫຼາກຫຼາຍທາງດ້ານສະບຽງອາຫານ, ຜະລິດຕະພັນອາຫານທີ່ສະອາດ ແລະ ປອດໄພ, ແລະ ການດໍາເນີນການຜະລິດທີ່ມີປະສິດທິພາບ ທີ່ສາມາດດັດປັບໃຫ້ເຂົ້າກັບສະພາບແວດລ້ອມ ແລະ ເງື່ອນໄຂດ້ານເສດຖະກິດສັງຄົມທີ່ແຕກຕ່າງກັນໃນ ສປປ ລາວ. ສິ່ງນີ້ສະແດງໃຫ້ເຫັນເຖິງການເຊື່ອມໂຍງທີ່ຊັດເຈນໃນແຕ່ລະຫົວຂໍ້. ຍົກຕົວຢ່າງ, ແລະ ໂດຍສະເພາະອ້າງອີງເຖິງຫົວຂໍ້ທີ 1, 3 ແລະ 4, ມາດຕະການແຊກແຊງດ້ານສະພາບອາກາດທີ່ທັນສະໄໝ ຈະສາມາດຍົກສູງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ຄົວເຮືອນໄດ້; ສ້າງຄວາມທົນທານຕໍ່ການຜັນຜວນຂອງຕະຫຼາດ; ແລະ ປົກປ້ອງລະບົບນິເວດ ໂດຍຜ່ານການປົກປັກຮັກສາຊີວະນາໆພັນ, ຫຼຸດຜ່ອນສະພາວະດິນເຈື່ອນ, ແລະ ເພີ່ມທະວີການກັກເກັບອາຍກາກບອນໃນດິນ.

ສະຫຼຸບແລ້ວ, ສິ່ງທີ່ສໍາຄັນເປັນຢ່າງຍິ່ງແມ່ນຕ້ອງສ້າງຄວາມດຸ່ນດ່ຽງລະຫວ່າງຜົນປະໂຫຍດຂອງຮູບແບບເສດຖະກິດ ທີ່ອີງໃສ່ການຂຸດຄົ້ນ ແລະ ສົ່ງອອກຊັບພະຍາກອນທໍາມະຊາດ ທີ່ທຸລະກິດກະສິກໍາຂະໜາດໃຫຍ່ນໍາໃຊ້ເປັນຫຼັກ ແລະ ຄວາມຍືນຍົງຂອງລະບົບສະບຽງອາຫານ. ມີໂອກາດທີ່ຊັດເຈນສໍາລັບຫົວຂໍ້ທີ 1, 2 ແລະ 3 ໃນການຮ່ວມກັນສົ່ງເສີມວິໄສທັດທີ່ຍືນຍົງໃນການຜະລິດກະສິກໍາທີ່; 1) ຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ, ຍົກຕົວຢ່າງ, ຈໍາກັດການໃຊ້ຢາປາບສັດຕູພືດທີ່ບໍ່ປອດໄພ ແລະ ສ້າງແຮງຈູງໃຈໃຫ້ປະຊາຊົນເລືອກບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການ, 2) ຮັບປະກັນວ່າ ການຜະລິດກະສິກໍາຈະບໍ່ສ້າງຄວາມເສຍຫາຍທີ່ແກ້ໄຂບໍ່ໄດ້ຕໍ່ຊີວະນາໆພັນ ແລະ ລະບົບນິເວດຂອງປະເທດ ໃນຂະນະທີ່ກໍາລັງຕອບສະໜອງຕໍ່ຄວາມຕ້ອງການຂອງພາກພື້ນດ້ານສະບຽງອາຫານທີ່ປອດໄພ, ມີໂພຊະນາການ ແລະ ຍືນຍົງ ແລະ 3) ຮັບປະກັນໃຫ້ຜົນປະໂຫຍດຂອງ 'ການພັດທະນາ' ຖືກແຈກຢາຍຢ່າງເທົ່າທຽມກັນໃນກຸ່ມປະຊາກອນທັງໝົດ, ຍົກຕົວຢ່າງ, ຮັບປະກັນໃຫ້ມີການແຈກຢາຍທີ່ດິນຢ່າງເທົ່າທຽມກັນ ແລະ ສົ່ງເສີມທຸລະກິດ ແລະ ສະຫະກອນຂະໜາດນ້ອຍ.

ຫົວຂໍ້ທີ 4 ກໍ່ແມ່ນພາກສ່ວນທີ່ສໍາຄັນ ຍ້ອນວ່າການສ້າງຄວາມທົນທານຕໍ່ບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດທີ່ມີຢູ່ແລ້ວ, ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ຜົນກະທົບ ແລະ ຄວາມກົດດັນຕ່າງໆ, ຈະສາມາດສະໜັບສະໜູນແນວຄິດລິເລີ່ມເຫຼົ່ານີ້ ແລະ ຮັບປະກັນຄວາມຍືນຍົງຂອງລະບົບສະບຽງອາຫານໃນປະເທດໂດຍລວມ.

ເພື່ອເສີມຂະຫຍາຍຫົວຂໍ້ທີ 4, **'ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ'** ແມ່ນອົງປະກອບເສີມທີ່ມີບົດບາດສໍາຄັນຕໍ່ກັບລະບົບສະບຽງອາຫານທີ່ຍືນຍົງ. ຜົນກະທົບ, ທັງຂະໜາດໃຫຍ່, ຂະໜາດນ້ອຍ ແລະ ທີ່ເກີດຂຶ້ນເລື້ອຍໆ, ອາດສົ່ງຜົນກະທົບຕໍ່ຫຼາຍອົງປະກອບຂອງລະບົບສະບຽງອາຫານ, ເຮັດໃຫ້ສູນເສຍກໍາລັງຜະລິດ, ສ້າງອຸປະສັກໃຫ້ແກ່ຕະຫຼາດ, ເຮັດໃຫ້ລາຄາສິນຄ້າມີການຜັນຜວນສູງຂຶ້ນ, ສ້າງຄວາມເສື່ອມໂຊມຕໍ່ຊັບພະຍາກອນທໍາມະຊາດ ແລະ ຄວາມບໍ່ໝັ້ນຄົງຂອງລະບົບໂດຍລວມ ເຊິ່ງມີແນວໂນ້ມທີ່ຈະສົ່ງຜົນກະທົບຕໍ່ກຸ່ມຄົນທີ່ມີຄວາມອ່ອນໄຫວ, ບໍ່ມີຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຂາດສານອາຫານສູງທີ່ສຸດ ທີ່ມີຈໍານວນຫຼາຍ.

ດັ່ງນັ້ນ, ນະໂຍບາຍ, ເຕັກໂນໂລຊີ, ການປະຕິບັດ ແລະ ການຮ່ວມມື ທີ່ຊ່ວຍຍົກສູງຂີດຄວາມສາມາດຂອງລະບົບສະບຽງອາຫານ ເພື່ອຄາດຄະເນ, ປ້ອງກັນ, ຫຼຸດຜ່ອນ ແລະ ຄຸ້ມຄອງຫຼາກຫຼາຍຄວາມສ່ຽງຢ່າງມີປະສິດທິພາບ ແລະ ຊ່ວຍໃຫ້ສາມາດການຟື້ນຟູຄືນຈາກຜົນກະທົບໃຫ້ໄດ້ດີກວ່າເກົ່າ ແມ່ນມີຄວາມຈໍາເປັນໃນການສົ່ງເສີມລະບົບສະບຽງ

ອາຫານທີ່ຍືນຍົງ ແລະ ສະໜັບສະໜູນທຸກຫົວຂໍ້ສຳຄັນ. ຂັ້ນຕອນໃນການສ້າງຄວາມທົນທານສາມາດລົງມືປະຕິບັດໄດ້ໃນຫຼາຍລະດັບ ແລະ ຕ້ອງໃຊ້ມາດຕະການແບບຮອບດ້ານ ທີ່ລວມມີການປະເມີນຄວາມສ່ຽງ, ການປົກຄອງ, DRR ແລະ CCA ທີ່ອີງໃສ່ລະບົບນິເວດ, ແບບແຜນທີ່ຄຳນຶງເຖິງຄວາມກວມລວມ ແລະ ບົດບດຍິງຊາຍ, ການປົກປ້ອງທາງສັງຄົມທີ່ຄຳນຶງເຖິງໂພຊະນາການ ແລະ ການຕອບສະໜອງຕໍ່ຄວາມກົດດັນຕ່າງໆ ແລະ ອື່ນໆ[4].

ການສ້າງຄວາມທົນທານເປັນສິ່ງຈຳເປັນໃນທຸກອົງປະກອບຂອງລະບົບສະບຽງອາຫານ (ສິ່ງແວດລ້ອມ, ຄົນ, ວັດຖຸດິບ, ຂັ້ນຕອນຕ່າງໆ, ໂຄງສ້າງພື້ນຖານ ແລະ ສະຖາບັນ) ແລະ ທຸກກິດຈະກຳ (ຈາກການຜະລິດ, ການແປຮູບ, ການແຈກຢາຍໄປຈົນເຖິງການກະກຽມ ແລະ ການບໍລິໂພກອາຫານ ແລະ ການຄຸ້ມຄອງສິ່ງເສດເຫຼືອ) ໂດຍຄຳນຶງເຖິງການເຊື່ອມໂຍງກັນຂອງອົງປະກອບເຫຼົ່ານີ້. ດ້ວຍອົງປະກອບທັງໝົດນີ້ຈະຊ່ວຍໃຫ້ສາມາດບັນລຸຜົນໄດ້ຮັບດ້ານເສດຖະກິດ ແລະ ສິ່ງແວດລ້ອມ, ເຊັ່ນ: ການຫຼຸດຜ່ອນຄວາມທຸກຍາກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການທີ່ດີຂຶ້ນ.

ທ້າຍສຸດນີ້, ວຽກງານຂອງທຸລະກິດກະສິກຳຂະໜາດນ້ອຍ ແມ່ນສ່ວນໜຶ່ງຂອງຍຸດທະສາດໃນການສົ່ງເສີມຊາວກະສິກອນ ຫຼື ຜູ້ຜະລິດໄວໜຸ່ມເພື່ອໃຫ້ສືບຕໍ່ປະກອບອາຊີບດ້ານການຜະລິດກະສິກຳ-ອາຫານຕໍ່ໄປ. ການເຮັດວຽກຮ່ວມກັບຊາວກະສິກອນໄວໜຸ່ມ ເພື່ອເພີ່ມທະວີການນຳໃຊ້ຊ່ອງທາງດິຈິຕອນ ແລະ ສື່ສັງຄົມອອນລາຍໃຫ້ເກີດປະໂຫຍດສູງສຸດ ເພື່ອສົ່ງເສີມ ແລະ ສ້າງຄວາມຕື່ນໂຕດ້ານການຜະລິດຕະພັນສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ. ວຽກງານນີ້ອາດລວມມີການນຳສະເໜີກົນໄກ ແລະ ຂັ້ນຕອນການປະຕິບັດຕົວຈິງ ເພື່ອສົ່ງເສີມ ແລະ ແນ່ໃສ່ຜູ້ປະກອບການ/ຊາວກະສິກອນໄວໜຸ່ມ ດ້ວຍການສ້າງໂອກາດດ້ານການຕະຫຼາດ ແລະ ການສ້າງລາຍໄດ້.

ການສ້າງຄວາມທົນທານໃນລະບົບສະບຽງອາຫານຕ້ອງໄດ້ຄຳນຶງເຖິງການເຮັດວຽກຮ່ວມກັນ ແແລະ ຜົນໄດ້ຜົນເສຍ ລະຫວ່າງຜົນກະທົບທາງເສດຖະກິດ (ເຊັ່ນ: ລາຍໄດ້, ກຳໄລ, ອາກອນ ແລະ ການສະໜອງອາຫານ), ຜົນກະທົບທາງສັງຄົມ (ເຊັ່ນ: ຄວາມເທົ່າທຽມລະຫວ່າງຍິງຊາຍ, ໂພຊະນາການ, ແລະ ສະຫວັດດີພາບຂອງສັດ), ແລະ ຜົນກະທົບທາງສິ່ງແວດລ້ອມ (ເຊັ່ນ: ການອະນຸລັກລະບົບນິເວດ, ຊີວະນາໆພັນ, ດິນ ແລະ ນໍ້າ). ຍົກຕົວຢ່າງ, ບາງໂຄງການພັດທະນາຕ່ອງໂສ້ມູນຄ່າອາດສະໜອງຜົນປະໂຫຍດທາງເສດຖະກິດ, ເຊັ່ນ: ຜົນກຳໄລທີ່ດີ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຄູ່ຮ່ວມງານໃດໜຶ່ງທີ່ກ່ຽວຂ້ອງໃນລະບົບສະບຽງອາຫານ, ແຕ່ກໍ່ຍັງສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ເຊັ່ນ: ການປ່ຽນແປງດ້ານການນຳໃຊ້ທີ່ດິນ ທີ່ເກີດຈາກການຫັນປ່ຽນພື້ນທີ່ປ່າໃຫ້ກາຍເປັນດິນປູກຝັງ. ບາງມາດຕະການແຊກແຊງ - ຖ້າພວກເຂົາອີງໃສ່ລະບົບການປູກພືດຊະນິດດຽວ - ອາດມີສິ່ງຜົນດີທາງດ້ານເສດຖະກິດໃຫ້ແກ່ຄູ່ຮ່ວມງານໃດໜຶ່ງທີ່ກ່ຽວຂ້ອງ ແຕ່ກໍ່ອາດສ້າງຄວາມເສຍຫາຍຕໍ່ຊີວະນາໆພັນ ແລະ ເຮັດໃຫ້ລະບົບດັ່ງກ່າວມີຄວາມສ່ຽງສູງຂຶ້ນຕໍ່ການປ່ຽນແປງສະພາບດິນຟ້າອາກາດ. ມາດຕະການແຊກແຊງອື່ນໆອາດສົ່ງຜົນກະທົບທາງລົບຕໍ່ສັງຄົມ, ເຊັ່ນ: ການຫຼຸດລົງຂອງໂພຊະນາການ, ຖ້າພວກເຂົາສົ່ງເສີມອາຫານທີ່ອຸດົມສົມບູນດ້ວຍແຄໂລລີ ແຕ່ມີໂພຊະນາການຕໍ່າ,

**"ຂັ້ນຕອນໃນການສ້າງຄວາມທົນທານສາມາດລົງມືປະຕິບັດໄດ້ໃນຫຼາຍລະດັບ ແລະ ຕ້ອງໃຊ້ມາດຕະການແບບຮອບດ້ານ ທີ່ລວມມີການປະເມີນຄວາມສ່ຽງ, ການປົກຄອງ, DRR ແລະ CCA ທີ່ອີງໃສ່ລະບົບນິເວດ, ແບບແຜນທີ່ຄຳນຶງເຖິງຄວາມກວມລວມ ແລະ ບົດບາດຍິງຊາຍ, ການປົກປ້ອງທາງສັງຄົມທີ່ມີຄຳນຶງເຖິງໂພຊະນາການ ແລະ ການ ຕອບສະໜອງຕໍ່ຜົນກະທົບ ແລະ ອື່ນໆ."**

ອາຫານທີ່ມີການແປຮູບສູງ ຫຼາຍກວ່າອາຫານສົດ ຫຼື ອາຫານທີ່ບໍ່ມີສານກັນບູດ. ໃນຂະນະດຽວກັນ, ມາດຕະການແຊກແຊງດ້ານຕ່ອງໂສ້ມູນຄ່າທີ່ໃຫ້ຄວາມສຳຄັນແຕ່ອົງປະກອບດ້ານສິ່ງແວດລ້ອມພຽງຢ່າງດຽວ, ເຊັ່ນ: ການຫຼຸດຜ່ອນການເຜົາໄໝ້ອາຍພິດກາກບອນ ໂດຍຜ່ານການຫຼຸດຜ່ອນການນຳໃຊ້ປຸ໋ຍ ຫຼື ການນຳສະເໜີເຕັກໂນໂລຊີໃໝ່, ອາດນຳໄປສູ່ຜົນກະທົບທາງລົບຕໍ່ເສດຖະກິດ ດ້ານຜົນກຳໄລທີ່ຫຼຸດລົງ ແລະ ຄວາມເປັນໄປໄດ້ໃນການສູນເສຍວຽກເຮັດງານທຳ ຖ້າບໍ່ມີການຄຸ້ມຄອງຢ່າງເໝາະສົມ ຫຼື ມີປະສິດທິພາບ. ສິ່ງສຳຄັນທີ່ຕ້ອງຄຳນຶງເຖິງໃນການຈັດຕັ້ງປະຕິບັດວຽກງານທັງໝົດນີ້ກໍຄື ໃນຂະນະທີ່ພວມສົ່ງເສີມຜົນໄດ້ຮັບໃນໄລຍະສັ້ນຢູ່ນັ້ນ, ວຽກງານເຫຼົ່ານີ້ໄດ້ສົ່ງຜົນເສຍຕໍ່ກຳລັງການຜະລິດໃນໄລຍະຍາວ ເຊິ່ງໄດ້ທຳລາຍຄວາມຍືນຍົງ ແລະ ເປັນອັນຕະລາຍຕໍ່ອະນາຄົດຂອງຄົນລຸ້ນໃໝ່.

ເມື່ອພິຈາລະນາຫົວຂໍ້ທີ 3, **'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ',** ຜົນໄດ້ຜົນເສຍຫຼັກໆແລ້ວແມ່ນກ່ຽວຂ້ອງກັບບັນຫາທາງດ້ານເສດຖະກິດ ແລະ ການເງິນ. ຍົກຕົວຢ່າງ, ການເພີ່ມເຕັກນິກໃນການຜະລິດກະສິກຳທີ່ມີປະສິດທິພາບ, ວິຊາການ, ນະວັດຕະກຳ ແລະ ການບໍລິການ ເພື່ອຍົກສູງຂີດຄວາມສາມາດໃນການແຂ່ງຂັນໃຫ້ແກ່ວິສາຫະກິດ, ໂຄງສ້າງພື້ນຖານໃນຊົນນະບົດທີ່ຍືນຍົງ, ແລະ ການປົກປ້ອງທາງສັງຄົມ ຈະຕ້ອງໄດ້ອາໄສການລົງທຶນຈາກທັງພາກລັດ ແລະ ເອກະຊົນ, ໂດຍສະເພາະໃນໄລຍະສັ້ນ. ກໍລະນີນີ້ຍັງລວມໄປເຖິງການລົງທຶນດ້ານວິຊາການ, ວັດຖຸດິບການຜະລິດ, ທຶນທີ່ກຸ່ມທີ່ມີຄວາມອ່ອນໄຫວສາມາດເຂົ້າເຖິງໄດ້, ແລະ ການຕອບໂຕ້ ແລະ ການປ້ອງກັນຜົນກະທົບລ່ວງໜ້າ, ເຊັ່ນ: ພະຍາດໂຄວິດ-19 ແລະ ໄພທຳມະຊາດຕ່າງໆ.

ເຖິງແມ່ນວ່າຜົນປະໂຫຍດ ແລະ ຜົນຕອບແທນຈາກການລົງທຶນເຫຼົ່ານີ້ຈະສະແດງອອກໃນໄລຍະສັ້ນ, ກາງ, ແລະ ຍາວກໍ່ຕາມ, ມັນອາດຊ່ວຍຫຼຸດຊ່ອງຫວ່າງດ້ານລາຍຮັບໃຫ້ແກ່ປະຊາກອນທີ່ອາໄສຢູ່ເຂດຊົນນະບົດ ແລະ ກຸ່ມຄົນທີ່ມີຄວາມອ່ອນໄຫວ, ເພີ່ມກຳລັງແຮງງານ, ຫຼຸດອັດຕາການຫວ່າງງານໃຫ້ຕໍ່າກວ່າເປົ້າໝາຍກໍ່ຄື 5%, ຊຸກຍູ້ການຜະລິດເປັນສິນຄ້າເພື່ອຂາຍອອກສູ່ຕະຫຼາດທັງພາຍໃນປະເທດ ແລະ ຕ່າງປະເທດ, ເພີ່ມກຳລັງການຜະລິດໃນເສດຖະກິດທ້ອງຖິ່ນ ແລະ ແຫ່ງຊາດ, ຫຼຸດຜ່ອນອຸປະສັກກີດຂວາງໃນລະບົບສາທາລະນະສຸກ ແລະ ສະຫວັດດີການ, ແລະ ໂດຍສະເພາະ, ຫຼຸດຜ່ອນຕົ້ນທຶນໃນການຕອບສະໜອງຕໍ່ຜົນກະທົບທີ່ເກີດຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ໄພພິບັດທຳມະຊາດຕ່າງໆ.

[4] http://www.fao.org/3/nb842en/nb842en.pdf

ຈາກການຊັ່ງຊາຜົນໄດ້ຜົນເສຍດ້ານສັງຄົມ ແລະ ສິ່ງແວດລ້ອມເຮັດໃຫ້ເຫັນເຖິງຜົນກະທົບ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ, ແຕ່ພວກເຮົາກໍ່ສາມາດຫຼຸດຜ່ອນຜົນກະທົບເຫຼົ່ານີ້ໄດ້. ການສ້າງຄວາມເປັນຢູ່ທີ່ດີອາດສົ່ງຜົນໃຫ້ສິ່ງແວດລ້ອມຊຸດໂຊມລົງ, ເຊັ່ນ: ການປັບປ່ຽນພື້ນທີ່ດິນ ເພື່ອຈຸດປະສົງໃນການເຮັດກະສິກຳ ແລະ ປູກປ່າ, ຍັງສືບຕໍ່ດຳເນີນການແປຮູບ ຫຼື ການຂົນສົ່ງທີ່ບໍ່ຍືນຍົງ, ແລະ ວິທີການກຳຈັດສິ່ງເສດເຫຼືອທີ່ບໍ່ເໝາະສົມ ເຊິ່ງກໍ່ໃຫ້ເກີດການເຜົາ ໄໝ້ອາຍພິດທີ່ເປັນອັນຕະລາຍ.

ນອກຈາກນີ້, ຍັງອາດມີຄວາມສ່ຽງທີ່ກ່ຽວຂ້ອງກັບການຍົກສູງບົດບາດໃຫ້ແກ່ກຸ່ມໃດໜຶ່ງ, ເຊິ່ງອາດເຮັດໃຫ້ເກີດຄວາມບໍ່ພໍໃຈ ຫຼື ບັນຫາດ້ານຄວາມປອງດອງໃນສັງຄົມ ຖ້າມີກຸ່ມໃດໜຶ່ງຖືກລະເລີຍຈາກຄວາມພະຍາຍາມໃນການສ້າງລາຍຮັບທີ່ເພີ່ມຂຶ້ນ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ. ນີ້ອາດເປັນກໍລະກີໜຶ່ງຂອງສະຖານະການທີ່ຕະຫຼາດເກີດຄວາມອີ່ມໂຕ ເຊິ່ງອາດເຮັດໃຫ້ຄູ່ຮ່ວມງານທີ່ກ່ຽວຂ້ອງໃນປັດຈຸບັນມີກຳລັງໃນການຂັບເຄື່ອນຕະຫຼາດຫຼຸດໜ້ອຍລົງ. ສິ່ງເຫຼົ່ານີ້ເປັນພຽງຜົນໄດ້ຜົນເສຍທີ່ອາດເກີດຂຶ້ນເທົ່ານັ້ນ, ຢ່າງໃດກໍ່ຕາມ, ມັນສາມາດບັນເທົາໄດ້ ໂດຍຜ່ານການນຳໃຊ້ແບບແຜນທີ່ເປັນລະບົບ ແລະ ມີຄວາມຮັດກຸມ ທີ່ຄຳນຶງເຖິງສັງຄົມ ແລະ ສິ່ງແວດລ້ອມ ພາຍໃຕ້ຫຼັກການທີ່ບໍ່ສ້າງຄວາມເສຍຫາຍ, ໂດຍສະເພາະໃນຫົວຂໍ້ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແລະ ການຍົກສູງຄວາມທົນທານຕໍ່ຄວາມສ່ຽງ ແລະ ຜົນກະທົບຕ່າງໆ.



# ລະບົບສະບຽງອາຫານທີ່ຍືນຍົງໃນ ສປປ ລາວ: ເສັ້ນທາງ ແລະ ພັນທະຂອງຄູ່ຮ່ວມງານ

## 'ການຮັບປະກັນອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ'[5]

ເສັ້ນທາງສໍາລັບ ສປປ ລາວ ເພື່ອຮັບປະກັນ 'ສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ຈະຕ້ອງມີການປຶກສາຫາລືກັນໃນວົງກວ້າງ. ປະຊາຄົມພັດທະນາສາກົນໄດ້ສະແດງຄວາມສົນໃຈມາຢ່າງຍາວນານ ໃນການເຊື່ອມໂຍງການກະສິກໍາເຂົ້າກັບໂພຊະນາການ, ແລະ ເພື່ອພັດທະນາເສັ້ນທາງສໍາລັບປະເທດຕ່າງໆ, ເຊັ່ນ: ສປປ ລາວ ໃນການປັບປຸງລະບົບສະບຽງອາຫານ ເພື່ອ 'ຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ.' ເຖິງຢ່າງໃດກໍຕາມ, ເສັ້ນທາງໂດຍກົງໃນ ສປປ ລາວ ຍັງຕ້ອງໄດ້ຮັບການປຶກສາຫາລືກັນຕື່ມ. ລຸ່ມນີ້ແມ່ນປະເດັນທີ່ສະເໜີເຂົ້າໃນການປຶກສາຫາລື ແລະ ການຈັດລຽງບຸລິມະສິດ.

ອົງປະກອບຫຼັກຂອງເສັ້ນທາງດັ່ງກ່າວ ຄວນປະກອບມີ (ໃຫ້ຂໍ້ມູນໂດຍ Hawkes et al. 2020):

- ຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບບັນຫາດ້ານໂພຊະນາການ, ພຶດຕິກໍາດ້ານການບໍລິໂພກອາຫານ ລວມເຖິງມຸມມອງຂອງຜູ້ບໍລິໂພກ ແລະ ມັນມີການພົວພັນກັບສະພາບແວດລ້ອມດ້ານອາຫານ ແລະ ສັງຄົມຄືແນວໃດ ເພື່ອໃຫ້ມີອິດທິພົນຕໍ່ພຶດຕິກໍາ ແລະ ລົດຊະນິຍົມ (ລາຄາ/**ການ**ຕະຫຼາດ, ຜະລິດຕະພັນທີ່ພ້ອມຈໍາໜ່າຍ, ອື່ນໆ) ແລະ ການກໍານົດບຸລິມະສິດການຄົ້ນຄວ້າທີ່ຊັດເຈນ;
- ການພັດທະນາຄູ່ມືແຫ່ງຊາດດ້ານການບໍລິໂພກອາຫານທີ່ອີງໃສ່ຫຼັກຖານ ທີ່ຊ່ວຍໄຈ້ແຍກອຸປະສັກຕ່າງໆຂອງພາວະການຂາດສານອາຫານ ໃນແຕ່ລະສະພາບການທີ່ແຕກຕ່າງກັນ;
- ການພັດທະນາມາດຕະຖານດ້ານໂພຊະນາການໃຫ້ແກ່ໂຄງການສະໜອງອາຫານໃນໂຮງຮຽນ ແລະ ໂຄງການປົກປ້ອງທາງສັງຄົມ;
- ການປັບປຸງໃນສະພາບແວດລ້ອມດ້ານອາຫານ ທີ່ສົ່ງເສີມໂພຊະນາການ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ, ລວມເຖິງການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ການສະໜອງໃນທ້ອງຖິ່ນ;
- ຊຸກຍູ້ນະວັດຕະນະກໍາ ໂດຍພາກເອກະຊົນ ເພື່ອເຮັດໃຫ້ມີອາຫານທີ່ອຸດົມສົມບູນດ້ວຍໂພຊະນາການມີລາຄາທີ່ສາມາດຈັບຕ້ອງໄດ້, ເຂົ້າເຖິງໄດ້, ແລະ ປອດໄພຕໍ່ຜູ້ບໍລິໂພກ, ເຊິ່ງໃນຂະນະດຽວກັນກໍ່ສະໜັບສະໜູນຊີດວິການເປັນຢູ່ຂອງຜູ້ຜະລິດນໍາ, ຍົກຕົວຢ່າງ, ການປັບປຸງສູດຂອງຜະລິດຕະພັນ ຫຼື ການນໍາໃຊ້ເຕັກໂນໂລຊີທີ່ເປັນນະວັດຕະກໍາໃໝ່ ໂດຍຊາວຜູ້ຜະລິດຂະໜາດນ້ອຍ ທີ່ຊ່ວຍປັບປຸງກໍາລັງການຜະລິດ ແລະ ຄວາມປອດໄພຂອງອາຫານທີ່ມີປະໂຫຍດຕໍ່ສຸຂະພາບ, ມີລາຄາທີ່ສາມາດຈັບຕ້ອງໄດ້. ການລະບຸແຮງຈູງໃຈ, ແລະ ແຮງກະຕ້ອນ, ພ້ອມທັງສະໜັບສະໜູນນະວັດຕະກໍາໃໝ່ທີ່ຄໍານຶງເຖິງໂພຊະນາການ, ແລະ ຕ່ອງໂສ້ການສະໜອງທັງພາຍໃນ ແລະ ຕ່າງປະເທດ;
- ສຸມໃສ່ສະໜອງທຶນເພີ່ມຂຶ້ນເຂົ້າໃນວຽກງານດ້ານໂພສະນາການ ແລະ ນະໂຍບາຍລັດຕ່າງໆ, ໂດຍສະເພາະໃນຂະແໜງກະສິກໍາ. ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຕ້ອງການເຂົ້າເຖິງຊັບພະຍາກອນດເານເງິນທຶນ ແລະ ການສ້າງຂີດຄວາມສາມາດເພື່ອສະໜັບສະໜູນການປັບປຸງການຜະລິດສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການ;
- ການລົງທຶນຫຼາຍຂຶ້ນເຂົ້າໃນໂຄງລ່າງພື້ນຖານ ແລະ ຕ່ອງໂສ້ມູນຄ່າດ້ານກະສິກໍາ, ຈັດລຽງບຸລິມະສິດຂົງເຂດທີ່ບໍ່ມີຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ຍົກຕົວຢ່າງ, ຫົນທາງຈາກສວນໄປຫາຕະຫຼາດໃນເຂດຊົນນະບົດ;
- ການສ້າງຄວາມຕ້ອງການໃນການບໍລິໂພກອາຫານທີ່ດີຕໍ່ສຸຂະພາບ ໂດຍສະເພາະເດັກ ແລະ ເຍົາວະຊົນ ເນື່ອງຈາກວ່ານີ້ເປັນຊ່ວງໄລຍະສໍາຄັນໃນການກໍານົດຄຸນຄ່າຂອງອາຫານ. ການໃຫ້ຄວາມຮູ້ທາງດ້ານໂພຊະນາການ, ການກະຕຸ້ນ, ການຝຶກອົບຮົມ, ການລົນນະລົງຜ່ານສື່ສັງຄົມອອນລາຍ, ເຕັກນິກທາງດ້ານການຕະຫຼາດ, ຕະຫຼອດຈົນເຖິງແຮງຈູງໃຈ ແລະ ແຮງກະຕຸ້ນທາງເສດຖະກິດ ກໍ່ສາມາດຊ່ວຍປ່ຽນແປງຄວາມຕ້ອງການໃນການບໍລິໂພກອາຫານໄດ້.

ອົງປະກອບອື່ນໆຂອງເສັ້ນທາງໃນການເຊື່ອມໂຍງການກະສິກໍາເຂົ້າກັບໂພຊະນາການ, ເຊິ່ງແມ່ນຂົງເຂດທີ່ເປັນໄປໄດ້ໃນການແຊກແຊງ, ອາດລວມມີ (Hoberg et al. 2013):

- ລາຍໄດ້ທີ່ສູງຂຶ້ນ – ສິ່ງເຫຼົ່ານີ້ໄດ້ປັບປຸງການເປັນຢູ່ຂອງຄົວເຮືອນໃຫ້ດີຂຶ້ນ ແລະ ສະໜອງທາງເລືອກທີ່ຫຼາກຫຼາຍ ແລະ ດີກວ່າເກົ່າໃຫ້ແກ່ຄົວເຮືອນ, ຢ່າງໃດກໍ່ຕາມ, ຈະຕ້ອງໄດ້ຄໍານຶງວ່າລາຍຮັບທີ່ສູງຂຶ້ນອາດສົ່ງຜົນກະທົບພຽງເລັກນ້ອຍຕໍ່ຜົນໄດ້ຮັບດ້ານໂພຊຊະນາການ;
- ສະໜອງການສະໜັບສະໜູນໂດຍສະເພາະໃຫ້ກຸ່ມທີ່ມີຄວາມອ່ອນໄຫວ ຜູ້ທີ່ບໍ່ໄດ້ຮັບຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ບໍ່ມີກໍາລັງຊື້ອາຫານທີ່ມີຄຸນຄ່າທາງໂພຊະນາການໂດຍຜ່ານການລິເລີ່ມເຄືອຂ່າຍຄວາມປອດໄພທາງສັງຄົມທີ່ຄໍານຶງເຖິງໂພຊະນາການ;
- ຍົກສູງການເຂົ້າເຖິງ ແລະ ການບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການ ໂດຍຜ່ານການຜະລິດກະສິກໍາທີ່ເພີ່ມຂຶ້ນ ແລະ ລາຄາອາຫານທີ່ຫຼຸດຕໍ່າລົງ;
- ຍົກສູງລາຍຮັບ ແລະ ສົ່ງເສີມບົດບາດທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ;
- ປົກປ້ອງຂີດຄວາມສາມາດ ແລະ ການປະຕິບັດງານຂອງຜູ້ລ້ຽງດູເດັກ, ຍົກຕົວຢ່າງ, ເຖິງວ່າແມ່ຍິງຈະມີສ່ວນຮ່ວມຫຼາຍກວ່າໃນການຜະລິດກະສິກໍາ, ການແປຮູບອາຫານ ແລະ ການຕະຫຼາດກໍ່ຕາມ, ໃຫ້ສືບຕໍ່ສະໜັບສະໜູນແມ່ຍິງທີ່ໃຫ້ການລ້ຽງ ແລະ ໃຫ້ອາຫານແກ່ເດັກອ່ອນ ແລະ ລູກນ້ອຍ;
- ປັບປຸງສຸຂະພາບ ແລະ ໂພຊະນາການຂອງແມ່ຍິງ.

ອົງປະກອບດ້ານສະຖາບັນຂອງເສັ້ນທາງດັ່ງກ່າວອາດລວມມີ:

[5] ຮ່ວມນໍາພາໂດຍ MPI, MoH, WFP ແລະ UNICEF ໂດຍການປະກອບສ່ວນຈາກອົງການ FAO ແລະ WHO

- ການສ້າງສະພາບແວດລ້ອມດ້ານນະໂຍບາຍທີ່ເອື້ອອຳນວຍ ທີ່ສາມາດປົກປ້ອງຄວາມຕ້ອງການດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ທຸກຄົນ, ໂດຍສະເພາະປະຊາກອນທີ່ມີຄວາມອ່ອນໄຫວ. ວຽກງານນີ້ຄວນລວມມີມາດຕະການແຊກແຊງ ທີ່ຊ່ວຍແກ້ໄຂບັນຫາທີ່ກ່ຽວຂ້ອງກັບຫຼາຍຂົງເຂດ, ເຊັ່ນ: ການປົກປັກຮັກສາສິ່ງແວດລ້ອມ, ການປັບໂຕ ແລະ ຄວາມທົນທານຕໍ່ສະພາບດິນຟ້າອາກາດ, ການປົກປ້ອງທາງສັງຄົມ, ແລະ ຄວາມສະເໝີພາບຍິງຊາຍ;
- ການສ້າງກົນໄກຮ່ວມຫຼາຍຂະແໜງການ, ເຊັ່ນ: ໜ່ວຍງານວິຊາການ ເຊິ່ງພັນທະໃນການສ້າງຄວາມກ້າວໜ້າໃຫ້ແກ່ ກອງປະຊຸມລະດັບຊາດ, ວາງແຜນ ແລະ ປະສານງານວຽກງານໃນການພັດທະນາລະບົບສະບຽງອາຫານທີ່ມີຄວາມຄຸ່ມຄ່ຽງ ແລະ ກວມລວມໃນ ສປປ ລາວ. ໜ່ວຍງານວິຊາການນີ້ຕ້ອງຢ່າງໜ້ອຍໃຫ້ຄູ່ຮ່ວມງານຫຼັກ ແລະ ບັນດາກະຊວງທີ່ກ່ຽວຂ້ອງເຂົ້າມາມີສ່ວນຮ່ວມໃນການສ້າງຄວາມກ້າວໜ້າໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ;
- ລະບຸ ແລະ ບັງຄັບໃຊ້ນະໂຍບາຍການເງິນ ເພື່ອກຳນົດອົງປະກອບຂອງລະບົບສະບຽງອາຫານ ທີ່ຊ່ວຍເພີ່ມໂອກາດໃນການສະໜອງ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ໃຫ້ໄດ້ສູງທີ່ສຸດ;
- ເສີມຂະຫຍາຍສຽງ ແລະ ການເບິ່ງເຫັນປະຊາຊົນທີ່ຢູ່ໃນເຂດຊົນນະບົດ ຜູ້ທີ່ມີຄວາມອ່ອນໄຫວສູງຕໍ່ຜົນກະທົບ ແລະ ການປ່ຽນແປງເສດຖະກິດໃນພາກພື້ນ ທີ່ສົ່ງຜົນກະທົບຕໍ່ລະບົບສະບຽງອາຫານ, ເພື່ອໃຫ້ພວກເຂົາສາມາດປະກອບສ່ວນເຂົ້າໃນການວາງແຜນ ແລະ ໂຄງການໃນລະດັບຊາດ, ແຂວງ, ແລະ ເມືອງໄດ້. ໜຶ່ງໃນວິທີທີ່ສາມາດຈັດຕັ້ງປະຕິບັດໄດ້ກໍ່ຄືດຳເນີນການຄົ້ນຄວ້າເພື່ອບັນທຶກ ແລະ ວິເຄາະປະສົບໃຊ້ຊີວິດການຂອງປະຊາຊົນທີ່ປະສົບກັບຜົນກະທົບຈາກການປ່ຽນແປງຂອງລະບົບສະບຽງອາຫານ, ບັນທຶກຕົວຢ່າງເພີ່ມເຕີມກ່ຽວກັບການປັບໂຕໃນທ້ອງຖິ່ນ ແລະ ການແກ້ໄຂບັນຫາຂອງຄົນພື້ນເມືອງ ໂດຍການຊ່ອງທາງການສື່ສານສອງດ້ານ ແລະ ການການຮຽນຮູ້ຮ່ວມກັນ;
- ສືບຕໍ່ລົງທຶນໃນບັນດາເມືອງ ແລະ ບ້ານ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດແຜນກະສິກຳທີ່ດີ ທີ່ມີການພິຈາລະນາຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພຂອງອາຫານ, ແລະ ໂພຊະນາການ ເຂົ້ານຳ;
- ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ຄວນໃຫ້ ສະພາແຫ່ງຊາດ ເຂົ້າມາມີສ່ວນຮ່ວມນຳ, ເຊິ່ງສາມາດມີສ່ວນຮ່ວມໃນຮູບແບບຂອງການເປັນຕົວແທນ, ການອອກກົດໝາຍ, ການຈັດສັນງົບປະມານ, ແລະ ການຄຸ້ມຄອງ (IPU ແລະ FAO 2021).

ນອກຈາກບັນດາຂະແໜງການຂອງກະຊວງທີ່ກ່ຽວຂ້ອງ, ເຊັ່ນ: ກະຊວງກະສິກຳ ແລະ ປ່າໄມ້ (MAF) ແລະ ກະຊວງສາທາລະນະສຸກ (MoH) ແລ້ວ, ບັດາກະຊວງ, ເຊັ່ນ: ກະຊວງແຜນການ ແລະ ການລົງທຶນ (MPI), ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MLSW) ແລະ ກະຊວງການເງິນ (MoF) ກໍ່ມີບົດບາດສຳຄັນເຊັ່ນກັນ.

## ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ

ຄູ່ຮ່ວມງານທີ່ກ່ຽວຂ້ອງທັງໝົດໄດ້ລະບຸຄວາມຕ້ອງການໃນການຮ່ວມມືກັນ ເພື່ອວາງແຜນ ແລະ ຈັດຕັ້ງປະຕິບັດລະບົບສະບຽງອາຫານ ແລະ ໂຄງການດ້ານໂພຊະນາການ. ອາຫານແມ່ນປັດໃຈພື້ນຖານໃນການປັບປຸງສະຖານະດ້ານໂພຊະນາການໃນ ສປປ ລາວ ແລະ ຄວາມຍືນຍົງຂອງການລົງທຶນທີ່ມີຢູ່ໃນປັດຈຸບັນ.

ເປັນທີ່ຮັບຮູ້ຢ່າງເຂັ້ມແຂງວ່າການປັບປຸງດ້ານການຜະລິດອາຫານ ແລະ ຕ່ອງໂສ້ມູນຄ່າຍັງບໍ່ພຽງພໍໃນການບັນລຸຜົນໄດ້ຮັບດ້ານໂພຊະນາການ ແລະ ຮັບປະກັນວ່າອາຫານທີ່ຜະລິດໃນ ສປປ ລາວ ຈະໄປເຖິງພາກສ່ວນຕ່າງໆຂອງຊຸມຊົນໃນລາວ, ໂດຍສະເພາະເດັກ ແລະ ເຍົາວະຊົນ. ສິ່ງສຳຄັນທີ່ບໍ່ແພ້ກັນກໍ່ຄືພັນທະດ້ານການສຶກສາ ແລະ ການສ້າງລະບົບສະບຽງອາຫານ ແລະ ສະພາບແວດລ້ອມທີ່ບໍ່ກ່ຽວຂ້ອງກັບສະບຽງອາຫານ ທີ່ສ້າງແຮງຈູງໃຈໃຫ້ແກ່ຮູບແບບ ແລະ ພຶດຕິກຳການບໍລິໂພກ ທີ່ສົ່ງຜົນດີດ້ານການເລືອກບໍລິໂພກອາຫານທີ່ມີໂພຊະນາການ ແລະ ດີຕໍ່ສຸຂະພາບ. ສິ່ງນີ້ຈຳເປັນຕ້ອງໄດ້ອາໄສຄວາມມຸ່ງໝັ້ນຈາກຫຼາຍຂະແໜງການ ແລະ ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ເພື່ອຢຸດຢັ້ງຮູບແບບການຜະລິດສະບຽງອາຫານທີ່ເນັ້ນຄວາມສຳຄັນສະເພາະແຕ່ທາງດ້ານເສດຖະກິດ ໃນ ສປປ ລາວ.

ໃນການປຶກສາຫາລືເບື້ອງຕົ້ນຍັງໄດ້ລະບຸວ່າການຈະປ່ຽນແປງລະບົບສະບຽງອາຫານຄືນໃໝ່ ເພື່ອໃຫ້ສາມາດສະໜອງ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ໄດ້ນັ້ນ, ແຕ່ລະວຽກງານຈະຕ້ອງຖືກສ້າງຂຶ້ນບົນພື້ນຖານຂອງຫຼັກການພວກເຮົາພ້ອມກັນກ້າວໄປ. ສິ່ງນີ້ຈະຊ່ວຍຮັບປະກັນວ່າການຕັດສິນໃຈດ້ານນະໂຍບາຍແມ່ນຄຳນຶງເຖິງຜົນກະທົບຕໍ່ຊາວກະສິກອນຂະໜາດນ້ອຍ, ກຸ່ມຄົນທີ່ມີຄວາມອ່ອນໄຫວ, ທີ່ລວມມີ: ແມ່ຍິງ, ເດັກ, ຄົນພິການ, ກຸ່ມຊົນເຜົ່າ ແລະ ຄົວເຮືອນທີ່ທຸກຍາກທັງໃນຊຸມຊົນຕົວເມືອງ ແລະ ເຂດຊົນນະບົດ. ໃນກໍລະນີທີ່ມາດຕະການແຊກແຊງທາງດ້ານນະໂຍບາຍ ອາດສົ່ງຜົນກະທົບຕໍ່ການດຳລົງຊີວິດ ແລະ ຄວາມທົນທານຂອງກຸ່ມຄົນທີ່ມີຄວາມອ່ອນໄຫວ, ຄວນດຳເນີນໂຄງການເສີມຄວບຄູ່ກັນໄປ ເພີ່ມເສີມຂະຫຍາຍຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ທຸກຄົນ ໃຫ້ໄດ້ຫຼາຍທີ່ສຸດ.

## ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ[6]

ໂດຍອ້າງອີງເຖິງ ຂອບວຽກດ້ານການກະສິກຳສີຂຽວ ແລະ ຍືນຍົງ ເຊິ່ງສ້າງຂຶ້ນໂດຍ MAF, ແບບແຜນ ການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແມ່ນໄດ້ເນັ້ນໜັກໃສ່ກະສິກຳອິນຊີ, ການເຮັດກະສິກຳແບບປະສົມປະສານ, ນິເວດກະເສດ, ການກະສິກຳແບບຕົ້ນທຶນຕ່ຳ, ປອດຢາປາບສັດຕູພືດ. ຮູບແບບການກະສິກຳເຫຼົ່ານີ້ປະກອບມີ 5 ຂະແໜງການຍ່ອຍຄື: ຂະແໜງການປູກຝັງ (ໂດຍໃຊ້ລະບົບຊົນລະປະທານ ແລະ ນ້ຳຝົນຕາມທຳມະຊາດ), ລ້ຽງສັດ, ປະມົງ, ກະສິກຳແບບປະສົມປະສານ, ແລະ ການຜະລິດສິນຄ້າທີ່ບໍ່ແມ່ນໄມ້ (NTFPs). ກະສິກຳແບບປະສົມປະສານ ແລະ NTFP ແມ່ນນອນຢູ່ໃນພື້ນທີ່ທີ່ມີຄວາມເຊື່ອມໂຍງກັບການຜະລິດພືດກະສິກຳເປັນສິນຄ້າ, , ການລ້ຽງສັດ, ການປະມົງ, ແລະ ພື້ນທີ່ປ່າ ແລະ ທົ່ງກວ້າງ. ທັງ 5 ຂະແໜງການຍ່ອຍນີ້ນີ້ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ລວມເຖິງການລຶບລ້າງຄວາມທຸກຍາກໃນ ສປປ ລາວ ນຳອີກ.

[6] ຮ່ວມນຳພາໂດຍ MAF ແລະ FAO ດ້ວຍການປະກອບສ່ວນຈາກ MoIC, MPI, NIER, MoNRE, ITC, UNDP, UNEP, SDC, ແລະ UNIDO.

ເພື່ອໃຫ້ສອດຄ່ອງກັບມາດຕະຖານສາກົນ, ສປປ ລາວ ກຳລັງສົ່ງເສີມໃຫ້ຫຼັກການດ້ານ ການກະສິກຳທີ່ດີ (GAP) ກາຍເປັນເປັນມາດຕະຖານຂັ້ນຕ່ຳໃນລະບົບການຜະລິດທັງໝົດ ເພື່ອໃຫ້ຜູ້ຜະລິດຂະນາດນ້ອຍ ແລະ ຜູ້ປະກອບການພາກເອະຊົນປະຕິບັດຕາມ. ບໍ່ວ່າຈະແມ່ນການຜະລິດພືດອຸດສະຫະກຳ ຫຼື ສິນຄ້າທີ່ມີເອກະລັກສະເພາະຕາມຄວາມຕ້ອງການໃນພາກພື້ນ, ມາດຕະຖານ GAP ແມ່ນຖືເປັນພື້ນຖານທີ່ສຳຄັນໃນຍຸກປັດຈຸບັນສຳລັບການຜະລິດສິນຄ້າເພື່ອຄ້າຂາຍ ພ້ອມຄວາມເປັນໄປໄດ້ໃນການເສີມຂະຫຍາຍເພີ່ມຕື່ມ ເພື່ອໃຫ້ກາຍເປັນລະບົບການຜະລິດທີ່ຍືນຍົງຍິ່ງຂຶ້ນ ເຊິ່ງສົ່ງເສີມແນວຄິດໃນການຫຼຸດຜ່ອນວັດຖຸດິບປັດໃຈພາຍນອກ, ການນຳໃຊ້ວັດຖຸດິບ ແລະ ພະລັງງານແບບໝູນວຽນ (ເສດຖະກິດໝູນວຽນ), ແລະ ກະສິກຳອິນຊີ.

ລັດຖະບານຄາດໝາຍໃຫ້ຫຼັກການ GAP ຖືກຈັດຕັ້ງປະຕິບັດໃນທົ່ວປະເທດ ແລະ ພວມລະບຸໂອກາດໃນການທົດລອງລິເລີ່ມການຈັດຕັ້ງປະຕິບັດດັ່ງກ່າວໃນພື້ນທີ່ທີ່ກຳນົດໃນອະນາຄົດ. ອາດມີການສົ່ງເສີມວິທີການຮັບຮອງແບບສະໝັກໃຈອື່ນໆອີກ, ເຊັ່ນ: ລະບົບການຮັບປະກັນແບບມີສ່ວນຮ່ວມ (PGS), ໂຕຊີ້ວັດທາງພູມສາດ (GI) ແລະ ເຂົ້າ/ກາເຟພັນພິເສດ.

ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຈຳເປັນຕ້ອງໃຫ້ຜູ້ທີ່ເຄື່ອນໄຫວໃນລະບົບສະບຽງອາຫານທັງໝົດໄດ້ຮັບການປັບປຸງດ້ານຄວາມຮູ້ໂດຍລວມ ແລະ ຄວາມເຂົ້າໃຈໃນແນວຄິດ, ຂັ້ນຕອນ, ໂອກາດ ແລະ ສິ່ງທ້າທາຍຕ່າງໆ. ເພື່ອຈະປະຕິບັດໄດ້ດັ່ງນີ້, ຈະຕ້ອງໄດ້ຄຳນຶງເຖິງຄວາມຕ້ອງການ ແລະ ການສະໜອງນຳ. ການພັດທະນາຂີດຄວາມສາມາດຂອງຜູ້ຜະລິດ ເພື່ອເສີມສ້າງຄວາມພະຍາຍາມ ແລະ ການປະຕິບັດທີ່ດີ, ແລະ ການປັບປຸງສະພາບແວດລ້ອມດ້ານນະໂຍບາຍ (ຍົກຕົວຢ່າງ, ການເຂົ້າເຖິງສິນເຊື່ອ, ການນຳໃຊ້ສິ່ງຈູງໃຈຢ່າງມີປະສິດທິພາບ ແລະ ປະສິດທິຜົນ) ຈະປກອບສ່ວນຊ່ວຍໃນການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແລະ ຊ່ວຍຂັບເຄື່ອນການປ່ຽນແປງຂອງລະບົບການຜະລິດອາຫານນຳອີກ.

ເພື່ອເລັ່ງລັດການປ່ຽນແປງລະບົບສະບຽງອາຫານໄປສູ່ການຜະລິດອາຫານທີ່ເປັນມິດຕໍ່ສິ່ງແວດລ້ອມ, ມີສາມຂົງເຂດການລົງທຶນທີ່ຕ້ອງຄູ່ຮ່ວມມືຕ້ອງໄດ້ເອົາໃຈໃສ່ຄື: (1) ນະວັດຕະກຳດ້ານກະສິກຳສີຂຽວ, ການຄົ້ນຄວ້າ ແລະ ເຕັກໂນໂລຊີ; (2) ການເສີມຂະຫຍາຍສີຂຽວ; (3) ຕະຫຼາດສີຂຽວ ແລະ ຕ່ອງໂສ້ມູນຄ່າ. ໃນຂະນະທີ່ຕ້ອງໄດ້ສຸມໃສ່ມີຄວາມພະຍາຍາມເຂົ້າໃນການເສີມຂະຫຍາຍການລົງທຶນ ຫຼື ສະໜອງທຶນເຂົ້າໃນການຄົ້ນຄວ້າ ແລະ ການພັດທະນາ ແລະ ການເສີມຂະຫຍາຍເພື່ອສະໜັບສະໜຸນນະວັດຕະກຳດ້ານການກະສິກຳ, ຊາວກະສິກອນ ແລະ ຜູ້ຜະລິດເອງກໍ່ມີຄວາມຈຳເປັນຕ້ອງໄດ້ເພີ່ມທັກສະໃນຫຼາກຫຼາຍຮູບແບບດ້ານການຈັດຕັ້ງປະຕິບັດກົດລະບຽບ, ມາດຕະຖານ, ຄວາມປອດໄພດ້ານການເກັບຮັກສາວັດຖຸດິບ, ການໃຊ້ເຄື່ອງຈັກ, ເຕັກນິກດ້ານການນຳໃຊ້ລະບົບຊົນລະປະທານ ແລະ ເຕັກໂນໂລຊີທີ່ທັນສະໄໝ, ຂະບວນການແປຮູບຫຼັງການເກັບກ່ຽວ ແລະ ການບັນຈຸຫີບຫໍ່, ໂລຈິສຕິກ, ການຂົນສົ່ງ ແລະ ການຕະຫຼາດ. ການເສີມສ້າງທັກສະສາມາດເຮັດຜ່ານແບບແຜນການເສີມຂະຫຍາຍສີຂຽວ ແລະ ທິດຊີ້ນຳດ້ານນະວັດຕະກຳການກະສິກຳ.

## ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ

ສປປ ລາວ ມີທ່າແຮງສູງໃນການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ. ການເຮັດວຽກຮ່ວມກັນກັບຄູ່ຮ່ວມຍຸດທະສາດຈະສາມາດຂັບເຄື່ອນລະບົບການຜະລິດສະບຽງອາຫານສີຂຽວທີ່ມີຄວາມຍືນຍົງ ດ້ວຍວາລະການຫັນປ່ຽນ ໂດຍຮ່ວມມືກັບບັນດາພາກສ່ວນຫຼັກ ລວມທັງລັດຖະບານໃນທຸກລະດັບ, ຄູ່ຮ່ວມພັດທະນາ, ວິສາຫະກິດເອກະຊົນ, ຜູ້ຜະລິດ, ພາກສັງຄົມ, ແລະ ຜູ້ບໍລິໂພກ ເພື່ອຮັບປະກັນອາຫານທີ່ມີໂພຊະນາການ, ສັງຄົມທີ່ມີຄວາມກວມລວມ, ແລະ ສະພາບແວດລ້ອມທີ່ມີຄວາມທົນທານ. ເປົ້າໝາຍແມ່ນເພື່ອສົ່ງເສີມຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ເພື່ອຍົກສູງຂີດຄວາມສາມາດ ແລະ ຄວາມຊຳນິຊຳນານຂອງທ້ອງຖິ່ນ, ຊຸກຍູ້ໃຫ້ມີການແຂ່ງຂັນເພີ່ມຂຶ້ນ, ແລະ ສ້າງໂອກາດ ເພື່ອສົ່ງເສີມການຂະຫຍາຍໂຕທາງເສດຖະກິດ. ສິ່ງນີ້ລວມມີການສ້າງຄວາມເຊື່ອມໂຍງກັບພາກເອກະຊົນເພື່ອຮັບປະກັນການເຂົ້າເຖິງຕະຫຼາດ.

ການສ້າງພື້ນທີ່ໃຫ້ແກ່ຄູ່ຮ່ວມງານ ແລະ ພາກສ່ວນທີ່ກ່ຽວຂ້ອງໃນລະບົບນະວັດຕະກຳດ້ານກະສິກຳ (AIS) ເພື່ອແລກປ່ຽນ, ຮຽນຮູ້ ແລະ ແບ່ງປັນລະຫວ່າງກັນ ແມ່ນມີຄວາມສຳຄັນຕໍ່ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ. ຍົກຕົວຢ່າງ, ການສ້າງເວທີເພື່ອປ່ຽນແປງລະບົບຜະລິດສະບຽງອາຫານທີ່ລວມມີ 2-3 ກະຊວງໃນເບື້ອງຕົ້ນ ກ່ອນຈະເສີມຂະຫຍາຍການປະສານງານ ແລະ ການຮ່ວມມືອອກຕື່ມ. ໃນເວລາດຽວກັນ, ການນຳໃຊ້ເວທີການຮ່ວມມືທີ່ມີຢູ່ແລ້ວ, ເຊັ່ນ: ກອງປະຊຸມໂຕະມົນ, ກອງປະຊຸມໜ່ວຍງານວິຊາການດ້ານການພັດທະນາກະສິກຳ ແລະ ຊົນນະບົດ ແລະ ໜ່ວຍງານວິຊາການຍ່ອຍອື່ນໆ, ແລະ ເຄືອຂ່າຍຊາວກະສິກອນລາວ ຈະຊ່ວຍແກ້ໄຂບັນຫາພື້ນຖານ ແລະ ຕິດຕາມຄວາມຄືບກ່ຽວກັບເຈດຈຳນົງ ແລະ ພັນທະດ້ານການຜະລິດສະບຽງອາຫານສີຂຽວທີ່ມີຄວາມຍືນຍົງ ເຊິ່ງອາດນຳໄປສູ່ການປັບປຸງນະໂຍບາຍ. ບັນດາເວທີການຮ່ວມມືເຫຼົ່ານີ້ຄວນຖືກນຳໃຊ້ເຂົ້າໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ນະໂຍບາຍ ພ້ອມທັງລະບຸບັນຫາ ແລະ ຂໍ້ແນະນຳຕ່າງໆ.

ລັດຖະບານ ແລະ ຄູ່ຮ່ວມພັດທະນາມີຄວາມມຸ້ງໝັ້ນທີ່ຈະສະໜັບສະໜູນ ແລະ ສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແລະ ຈະຊຸກຍູ້ລະບົບດັ່ງກ່າວ ຜ່ານການປຶກສາຫາລືໃນລະດັບຊາດ ແລະ ສະໜັບສະໜູນຄວາມພະຍາຍາມທີ່ພຽງພໍໃນລະດັບພາກພື້ນ ແລະ ສາກົນ.

## 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ'[7]

ເສັ້ນທາງສຳລັບ ສປປ ລາວ ເພື່ອສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸ້ນຄ່າຢ່າງເທົ່າທຽມ ຈະສາມາດຊ່ວຍແກ້ໄຂສິ່ງທ້າທາຍ ແລະ ໂອກາດສາມປະການທີ່ແຕກຕ່າງກັນຢ່າງເປັນລະບົບ. ໝາຍຄວາມວ່າ ຈຳເປັນຈະຕ້ອງມີຄວາມພະຍາຍາມໃນການປະສານງານ ເພື່ອສ້າງ ແລະ ປັບປຸງໂອກາດດ້ານການມີວຽກເຮັດງານທຳ, ລາຍໄດ້ ແລະ ການສະໜັບສະໜູນດ້ານຄວາມປອດໄພທາງສັງຄົມທີ່ດີ ພ້ອມທັງແນ່ໃສ່ການເຂົ້າເຖິງລາຍຮັບທີ່ມີຄຸນນະພາບ, ການສະໜັບສະໜູນທາງ

---

7 ຮ່ວມ ນຳ ພາໂດຍ MAF ແລະ IFAD ດ້ວຍການປະກອບສ່ວນຈາກ FAO, UNDP, ITC, WFP ແລະ ADB.

ສັງຄົມ ແລະ ການເປັນຢູ່ທີ່ດີໃນທົ່ວທຸກບ່ອນ, ແລະ ທ້າຍທີ່ສຸດ, ພ້ອມດ້ວຍຄວາມຄາດຫວັງໃນການຫຼຸດຜ່ອນຄວາມສ່ຽງ ແລະ ໂອກາດໃນການເສີມສ້າງຄວາມທົນທານດ້ານການດຳລົງຊີວິດໃຫ້ແກ່ທຸກຄົນ.

ໃນທາງປະຕິບັດ, ນີ້ໝາຍຄວາມເຖິງຄວາມພະຍາຍາມແບບລວມສູນຂອງລັດຖະບານ, ຜູ້ເຄື່ອນໄຫວດ້ານການພັດທະນາ, ສະຖາບັນ, ພາກສັງຄົມ, ພາກເອກະຊົນ, ແລະ ອື່ນໆ, ທີ່ຕ້ອງໄດ້ອີງໃສ່ຄຳເຫັນທີ່ໄດ້ຮັບຈາກບັນດາຄູ່ຮ່ວມງານ, ແລະ ໂດຍສະເພາະກຸ່ມຄົນທີ່ມີຄວາມອ່ອນໄຫວສູງ, ເຊັ່ນ: ແມ່ຍິງ, ຊາວໜຸ່ມ, ແລະ ຄົນພິການ. ວຽກງານນີ້ຕ້ອງໄດ້ມີການປະສານງານກັນ ເພື່ອສ້າງຄວາມເຂົ້າໃຈ ແລະ ການຕິດຕາມລະຫວ່າງບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ເພື່ອຫຼີກລ້ຽງຄວາມພະຍາຍາມທີ່ຊ້ຳຊ້ອນ - ໃນດ້ານພູມສາດ, ຄວາມກ່ຽວພັນກັບຫວົຂໍ້ ແລະ ດ້ານການເງິນ – ແລະ ໃຫ້ມີການແບ່ງປັນຄວາມຮູ້ ຫຼື ເສີມສ້າງການເຮັດວຽກຮ່ວມກັນໃນທຸກວຽກງານເຫຼົ່ານີ້.

ສິ່ງນີ້ຈະຮັບປະກັນໃຫ້ການສ້າງການດຳລົງຊີວິດທີ່ດີ, ການສ້າງຄວາມທົນທານ ແລະ ການສະໜອງສະຫວັດດີການສັງຄົມທີ່ຍອມຮັບໄດ້ ແນ່ໃສ່ສະຖານທີ່ທີ່ມີຄວາມຕ້ອງການຫຼາຍທີ່ສຸດ, ໃນຮູບແບບທີ່ມີຄວາມຍຸຕິທຳ, ມີຍຸດທະສາດ ແລະ ສາມາດເຂົ້າເຖິງໄດ້ຫຼາຍຂຶ້ນ. ສິ່ງທີ່ຕ້ອງຄຳນຶງເຖິງພາຍໃຕ້ເສັ້ນທາງນີ້ລວມມີວິທີການເຮັດວຽກຮ່ວມຜູ້ລົງທຶນຈາກທັງພາກລັດ ແລະ ເອກະຊົນ, ຜູ້ເຄື່ອນໄຫວໃດທີ່ມີທ່າແຮງໃນມາດຕະການເຂົ້າແຊກແຊງ, ແລະ ຂົງເຂດທີ່ກ່ຽວພັນກັບຫຼາຍພາກສ່ວນຈະສາມາດສົ່ງເສີມວຽກງານອື່ນໆໄດ້ຄືແນວໃດ.

ສຸດທ້າຍນີ້, ສິ່ງສຳຄັນແມ່ນຄຳເຫັນທີ່ໄດ້ຮັບຈາກບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ແລະ ການແກ້ຫຼັກປະຕິບັດງານໃນກໍລະນີຈຳເປັນ. ເນື່ອງຈາກວ່າແນວທາງນີ້ໄດ້ແນ່ໃສ່ປະຊາຊົນເປັນຫຼັກ, ຈຶ່ງຈຳເປັນຕ້ອງມີຄວາມເຂົ້າໃຈກ່ຽວກັບການປ່ຽນແປງສຳລັບປະຊາຊົນ ແລະ ທັງຍັງມີຄວາມສຳຄັນຕໍ່ຜົນໄດ້ຮັບດ້ານການພັດທະນາຂອງ ສປປ ລາວ.

ເສັ້ນທາງດ້ານການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ ຈະສາມາດນຳໄປສູ່ຜົນກະທົບທີ່ເປັນເອກະລັກສະເພາະຕໍ່ການບັນລຸເປົ້າໝາຍຕ່າງໆຂອງ ສປປ ລາວ ດ້ານການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ປາກົດຜົນເປັນຈິງ. ໂດຍສະເພາະແມ່ນເສັ້ນທາງຂອງ ສປປ ລາວ ເພື່ອສ້າງຄວາມຄືບໜ້າໃນບັາດາເປົ້າໝາຍທີ່ຂັບເຄື່ອນດ້ວຍປະຊາຊົນ, ເຊັ່ນ: ປພຍ 1 (ລຶບລ້າງຄວາມທຸກຍາກ), ປພຍ 5 (ມີຄວາມສະເໝີພາບລະຫວ່າງຍິງຊາຍ), ປພຍ 8 (ມີວຽກເຮັດງານທຳທີ່ດີ ແລະ ເສດຖະກິດມີການຂະຫຍາຍໂຕ), ແລະ ປພຍ 10 (ຫຼຸດຜ່ອນຄວາມບໍ່ສະເໝີພາບ), ພ້ອມກັບເປົ້າໝາຍອື່ນໆທີ່ກ່ຽວພັນກັບທຸກວຽກງານດ້ານລະບົບສະບຽງອາຫານກໍຄື ປພຍ 2 (ລຶບລ້າງຄວາມອຶດຫິວ) ແລະ ປພຍ 13 (ມີການຮັບມືກັບການປ່ຽນແປງຂອງສະພາບດິນຟ້າອາກາດ)



## ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ

ສປປ ລາວ ມີທ່າແຮງໃນການສະໜອງໂອກາດ ແລະ ແກ້ໄຂຄວາມສ່ຽງອັນສະເພາະໃຫ້ແກ່ປະຊາຊົນ ຜູ້ທີ່ເຮັດວຽກໃນຕ່ອງໂສ້ຂອງລະບົບສະບຽງອາຫານທີ່ຍືນຍົງທັງໝົດ ເພື່ອຮັບປະກັນ 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ.' ສິ່ງເຫຼົ່ານີ້ສາມາດບັນລຸໄດ້ໂດຍຜ່ານການເຮັດວຽກຮ່ວມກັນລະຫວ່າງຄູ່ຮ່ວມມືຕ່າງໆ ດ້ວຍວາລະການປ່ຽນແປງດ້ານການຮ່ວມມືກັບບັນດາຄູ່ຮ່ວມງານທັງໝົດທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ລວມມີລັດຖະບານໃນທຸກລະດັບ, ຄູ່ຮ່ວມພັດທະນາ, ວິສາຫະກິດເອກະຊົນ, ຜູ້ຜະລິດ, ຊາວກະສິກອນ, ພາກສັງຄົມ, ແລະ ຜູ້ບໍລິໂພກ. ເມື່ອຄຳນຶງເຖິງບົດບາດຫຼັກເຫຼົ່ານີ້, ຈຶ່ງສາມາດກຳນົດຂອບເຂດການເຄື່ອນໄຫວໄດ້ດັ່ງຕໍ່ໄປນີ້:

**ສ້າງແບບແຜນທີ່ສອດຄ່ອງກັນ ແລະ ມີການປະສານງານກັບຫຼາຍຂະແໜງການທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ຍຶດໝັ້ນຕໍ່ຫຼັກການປ່ຽນແປງລະບົບອາການໃນການຜະລິດຂະໜາດນ້ອຍ.**

- IFAD ມີພັນທະຕໍ່ວຽກງານນີ້ ໂດຍຜ່ານໃນການວາງແຜນໂຄງການຂອງຕົນໃນລະຫວ່າງ IFAD12, ລວມເຖິງການຈັດຫາແຫຼ່ງທຶນທີ່ເປັນໄປໄດ້ຈາກ GAFSP ໂດຍຜ່ານບົດສະເໜີໂຄງການທີ່ໄດ້ຮັບການພັດທະນາຮ່ວມກັບ WFP, ສຳລັບໄລຍະທີສອງຂອງການສະໜັບສະໜູນດ້ານຍຸດທະສາດໃຫ້ແກ່ໂຄງການສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ.

**ສະໜັບສະໜູນການພັດທະນາ, ການສ້າງຂີດຄວາມສາມາດ, ການສ້າງນະວັດຕະກຳ/ໂຄງລ່າງພື້ນຖານ ແລະ ຄວາມຮ່ວມມືໃນທຸລະກິດກະສິກຳ ແລະ ວິສາຫະກິດຈຸນລະພາກ ແລະ ຂະໜາດນ້ອຍ.**

- ທະນາຄານພັດທະນາອາຊີ (ADB) ຈະສືບຕໍ່ປະຕິບັດພັນທະດ້ານການປ່ຽນແປງລະບົບສະບຽງອາຫານໃນ ສປປ ລາວ. ພວກເຂົາຍັງຈະສະໜັບສະໜູນຄວາມພະຍາຍາມໃນການປັບປຸງສະພາບແວດລ້ອມທາງທຸລະກິດ, ລວມເຖິງວິສາຫະກິດກະສິກຳຈຸນລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງນຳອີກ.

**ສ້າງຄວາມເຂັ້ມແຂງໃຫ້ພາກເອກະຊົນ ແລະ ສ້າງສະພາບແວດລ້ອມທາງທຸລະກິດທີ່ເອື້ອອຳນວຍ ເພື່ອດຶງດູດການລົງທຶນຈາກພາກເອກະຊົນ**

- ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ (NCCI) ຈະຊ່ວຍແກ້ໄຂບັນຫາທີ່ກ່ຽວຂ້ອງກັບຄວາມຮູ້ ແລະ ວິທີການໃນການດຳເນີນທຸລະກິດ ແລະ ສະໜັບສະໜູນວິສາຫະກິດໃນການເສີມຂະຫຍາຍທຸລະກິດກະສິກຳຂອງຕົນ.
- NCCI ມີຄວາມຕ້ອງການສ້າງຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ແລະ ສ້າງຕັ້ງສະຫະກອນຂຶ້ນເພື່ອວຽກງານນີ້ ພ້ອມທັງສຸມໃສ່ກຳລັງການຜະລິດພາຍໃນປະເທດ ແລ້ວຈຶ່ງເຊື່ອມໂຍງເຂົ້າສູ່ຕະຫຼາດ.

**ແກ້ໄຂອຸປະສັກອັນສະເພາະທີ່ກີດຂວາງການການພັດທະນາຊີວິດການເປັນຢູ່ທີ່ກອມລວມ ແລະ ສະເໝີພາບ**

- IFAD ໂດຍຜ່ານບັນດາໂຄງການທີ່ກຳລັງດຳເນີນ ແລະ ທີ່ກຳລັງພິຈາລະນາ ຈະທົບທວນຄືນການເຂົ້າເຖິງການບໍລິການເສີມຂະຫຍາຍໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ ແລະ ວາງແຜນ ເພື່ອກຳນົດໂອກາດດ້ານຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP) ໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ.

**ສ້າງຄວາມເຂັ້ມແຂງໃຫ້ແກ່ນະໂຍບາຍ ແລະ ຫຼັກປະຕິບັດຕ່າງໆ ເພື່ອໃຫ້ສາມາດຄຳນຶງເຖິງ ແລະ ຕອບສະໜອງຕໍ່ການອັດຊ່ອງຫວ່າງດ້ານບົດບາດຍິງຊາຍ ໂດຍແກ້ໄຂຂໍ້ຈຳກັດອັນສະເພາະທີ່ແມ່ຍິງໃນເຂດຊົນນະບົດຕ້ອງພົບພໍ້**

- IFAD, FAO, ແລະ ກະຊວງກະສິກຳ ແລະ ປ່າໄມ້ ມີພັນທະຕໍ່ບັນຫານີ້ ເນື່ອງພວກເຂົາໄດ້ສືບຕໍ່ໃຫ້ຄວາມສຳຄັນຕໍ່ບົດບາດຍິງຍິງຊາຍ, ໂດຍຮັບປະກັນຄວາມສະເໝີພາບ ແລະ/ຫຼື ການສົ່ງເສີມບົດບາດແມ່ຍິງເຂົ້າໃນມາດຕະການແຊກແຊງ ເພື່ອແກ້ໄຂຊ່ອງຫວ່າງເຫຼົ່ານີ້. ພວກເຂົາຍັງມີພັນທະທີ່ຈະສະແຫວງຫາຄຳເຫັນຈາກແມ່ຍິງ ແລະ ຄົວເຮືອນ ແລະ ສະໜັບສະໜູນໃຫ້ແມ່ຍິງກຸ່ມດັ່ງກ່າວມີໂອກາດໄດ້ເຂົ້າຮ່ວມໃນການຕັດສິນໃຈ.

**ແກ້ໄຂຂໍ້ຈຳກັດທາງດ້ານກົດໝາຍ, ສະຖາບັນ ແລະ ຕະຫຼາດ ເພື່ອໃຫ້ເກີດຄວາມສະເໝີພາບໃນລະບົບສະບຽງອາຫານ ແລະ ວິທີແກ້ໄຂບັນຫາອັນກອມລວມທີ່ແນໃສ່ຜູ້ທຸກຍາກ ແລະ ອີງໃສ່ທຳມະຊາດ ແລະ ນະໂຍບາຍດ້ານການປ່ຽນແປງຂອງສະພາບດິນຟ້າອາກາດ ເພື່ອປັບປຸງຂີດຄວາມສາມາດຂອງຊຸມຊົນທີ່ທຸກຍາກ ໃຫ້ສາມາດຄຸ້ມຄອງຄວາມສ່ຽງດ້ານສະພາບດິນຟ້າອາກາດທີ່ກ່ຽວພັນກັບການດຳລົງຊີວິດໄດ້.**

## ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ[8]

ຫຼາຍວຽກງານທີ່ຈັດຕັ້ງປະຕິບັດແມ່ນມີຄວາມເໝາະສົມ ເພື່ອໃຫ້ສາມາດບັນລຸລະບົບສະບຽງອາຫານທີ່ມີຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ. MSD ໄດ້ລະບຸຄວາມຕ້ອງການໃນການເສີມຂະຫຍາຍກະສິກຳທັນສະໄໝທີ່ຍືນຍົງ ແລະ ຄຳນຶງເຖິງບັນຫາສະພາບດິນຟ້າອາກາດ ລວມເຖິງຜ່ານບັນດາມາດຕະການທີ່ລະບຸໄວ້ດັ່ງລຸ່ມນີ້:

- ກະກຽມ **ແຜນວຽກແຫ່ງຊາດວ່າດ້ວຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການປັບໂຕຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດໃນຂະແໜງກະສິກຳ ຄັ້ງໃໝ່**, ໂດຍອີງໃສ່ປະສົບການຈາກແຜນລ່າສຸດທີ່ດຳເນີນໃນປີ 2014-2018.
- ດຳເນີນ ການປະເມີນຄວາມອ່ອນໄຫວ ແລະ ຄວາມສ່ຽງ (VRA) ຢ່າງຮອບດ້ານໃຫ້ແກ່ຂະແໜງການກະສິກຳ (ລວມເຖິງຜົນລະປູກ, ການລ້ຽງສັດ, ການປະມົງ ແລະ ປ່າໄມ້) ແລະ ການດຳລົງຊີວິດແບບເພິ່ງພາອາໄສ ເພື່ອເປັນແນວທາງໃນການວາງແຜນສ້າງຄວາມທົນທານໃນອົງປະກອບ ແລະ ກິດຈະກຳຂອງລະບົບສະບຽງອາຫານ.
- ສະໜັບສະໜູນ**ບົດບາດຂອງຂະແໜງການກະສິກຳ ແລະ ແບບແຜນສ້າງຄວາມທົນທານໃຫ້ແກ່ລະບົບສະບຽງອາຫານພາຍໃຕ້ວາລະແຫ່ງຊາດວ່າດ້ວຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການປ່ຽນແປງສະພາບດິນຟ້າອາກາດ** ຂອງ ສປປ ລາວ, ໃຫ້ຄວາມສຳຄັນຕໍ່ບັນດາມາດຕະການລວມສູນຂະແໜງການພາຍໃນ ແລະ ຮູບແບບການຫັນປ່ຽນ

---

[8] ຮ່ວມນຳພາໂດຍ MAF, MoLSW, UNEP ແລະ FAO ດ້ວຍການປະກອບສ່ວນຈາກ MoNRE, MoH, WFP, IFAD, UNDRR, UNDP, ແລະ UNHABITAT.

ຈາກການຕອບໂຕ້ຕໍ່ໄພພິບັດໄປສູ່ແບບແຜນການປ້ອງກັນ ແລະ ຄຸ້ມຄອງຄວາມສ່ຽງແທນ.

- ໃຫ້ການສະໜັບສະໜູນພາຍໃນ ອາຊຽນ ສໍາລັບ **ຂອບວຽກຄວາມໝັ້ນຄົງດ້ານສະບຽງອາຫານອັນຮອບດ້ານຂອງອາຊຽນ (AIFS) ແລະ** ແຜນຍຸດທະສາດການດໍາເນີນງານກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານໃນພາກພື້ນອາຊຽນ **(SPA-FS) ໂດຍສອດຄ່ອງກັບ ວິໄສທັດ ອາຊຽນຮອດປີ 2025 ແລະ ເປົ້າໝາຍການພັດທະນາແບບຍືນຍົງ.**
- ສະໜັບສະໜູນການສ້າງລະບົບສະບຽງອາຫານທີ່ມີຄວາມທົນທານ ແລະ ວຽກງານຮ່ວມມືຫຼາຍຂະແໜງການພາຍໃຕ້ **ຂໍ້ຕົກລົງຂອງອາຊຽນວ່າດ້ວຍການຄຸ້ມຄອງໄພພິບັດ ແລະ ແຜນງານການຕອບສະໜອງຕໍ່ສະຖານະການສຸກເສີນ ແລະ ຂອບວຽກອື່ນໆທີ່ກ່ຽວຂ້ອງ, ເຊັ່ນ: ຖະແຫຼງການອາຊຽນວ່າດ້ວຍການປັບໂຕຕໍ່ໄພແຫ້ງແລ້ງ.**
- ສປປ ລາວ ອາດພິຈາລະນາເຂົ້າຮ່ວມລະບົບເວທີສົ່ງເສີມການປູກເຂົ້າແບບຍືນຍົງຜ່ານ ກະຊວງກະສິກໍາ ແລະ ປ່າໄມ້ ແລະ / ຫຼື ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (MoN-RE) ໃນຖານະຂອງສະມາຊິກລັດຖະບານ, ເຂົ້າຮ່ວມເຄືອຂ່າຍລະດັບໂລກທີ່ມີສະມາຊິກຫຼາຍກວ່າ 100 ສະຖາບັນຈາກເຄືອຂ່າຍຄູ່ຮ່ວມງານທັງໝົດ. ເວທີສົ່ງເສີມການປູກເຂົ້າແບບຍືນຍົງ ແມ່ນກຸ່ມພັນທະມິດຂອງຄູ່ຮ່ວມງານຈາກທົ່ວໂລກ ເພື່ອສົ່ງເສີມປະສິດທິພາບຂອງການນໍາໃຊ້ຊັບພະຍາກອນ ແລະ ການສ້າງຄວາມທົນທານຕໍ່ການປ່ຽນແປງສະພາບດິນຟ້າອາກາດໃນລະບົບເຂົ້າ – ທັງໃນລະດັບປູກຝັງ ແລະ ຕ່ອງໂສ້ມູນຄ່າ. ເປົ້າໝາຍຄື ກ) ປັບປຸງການດໍາລົງຊີວິດຂອງຜູ້ຜະລິດຂະໜາດນ້ອຍໃນປະເທດທີ່ກໍາລັງພັດທະນາ; ຂ) ຫຼຸດຜ່ອນການນໍາໃຊ້ນໍ້າຈືດ ແລະ ການສ້າງອາຍພິດກາກບອນຈາກການຜະລິດເຂົ້າ; ແລະ ຄ) ສະສະໜອງທີ່ເຂົ້າປູກຢ່າງມີຄວາມຮັບຜິດຊອບຕໍ່ຕະຫຼາດໂລກ.
- ຜັນຂະຫຍາຍວິທີໃນການຫຼຸດຜ່ອນຄວາມສ່ຽງ ທີ່ລວມມີຂໍ້ມູນ ແລະ ການບໍລິການດ້ານສະພາບດິນຟ້າອາກາດ, ການເຕືອນໄພທີ່ຄາດຄະເນໄວ້ ແລະ ກົນໄກການການສະໜອງທຶນແບບໃໝ່, ເຊັ່ນ: ປະກັນໄພ/ການກູ້ຢືມ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ສະໜອງ ໂດຍຊຸກຍູ້ການລົງທຶນໃນຕ່ອງໂສ້ມູນຄ່າ ໂດຍຜ່ານບັນດາຕະຫຼາດທີ່ມີຄວາມໝັ້ນຄົງ
- ສະໜັບສະໜູນຊາວກະສິກອນຂະໜາດນ້ອຍ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຄົມຊາວກະສິກອນ, ເຊື່ອມໂຍງຊາວກະສິກອນເຂົ້າສູ່ຕະຫຼາດ, ແກ້ໄຂຄວາມບໍ່ເທົ່າທຽມກັນໃນການເຂົ້າເຖິງຊັບພະຍາກອນ ແລະ ຄວາມຮູ້, ເຊື່ອມໂຍງເຂົ້າກັບມາດຕະການແຊກແຊງເສີມຕ່າງໆ (ການປົກປ້ອງທາງສັງຄົມ, ໂພຊະນາການ ແລະ ການສະໜອງອາຫານໃນໂຮງຮຽນ) ແລະ ໃຫ້ຄວາມສໍາຄັນແກ່ກຸ່ມຄົນທີ່ມີຄວາມອ່ອນໄຫວທີ່ສຸດ.
- ມີຄວາມຈໍາເປັນຕ້ອງປັບປຸງຄວາມເຂົ້າໃຈຕໍ່ຄວາມອ່ອນໄຫວ ແລະ ຄວາມສ່ຽງທີ່ກ່ຽວພັນກັບລະບົບສະບຽງອາຫານ ແລະ ການນໍາໃຊ້ຄວາມເຂົ້າໃຈດັ່ງກ່າວເຂົ້າໃນການກໍານົດນະໂຍບາຍ. ວຽກງານນີ້ສາມາດປະຕິບັດໄດ້ໂດຍ (ກ) ປັບປຸງການຄຸ້ມຄອງຂໍ້ມູນທີ່ກ່ຽວຂ້ອງກັບຄວາມສ່ຽງ, ລວມເຖິງການດໍາເນີນການຄົ້ນຄວ້າ ເພື່ອລະບຸປັດໄຈທີ່ເອື້ອອໍານວຍ ແລະ ປັດໄຈຢຸດຢັ້ງ ທີ່ສົ່ງຜົນກະທົບຕໍ່ລະບົບສະບຽງອາຫານ ເຊິ່ງເປັນຜົນມາຈາກໄພພິບັດທໍາມະຊາດ ຫຼື ການເຄື່ອນໄຫວຂອງມະນຸດ/ໂຄງການພັດທະນາ, ລວມທັງປັດໄຈຕ່າງໆທີ່ສົ່ງຜົນກະທົບຕໍ່ກຸ່ມຄົນທີ່ມີຄວາມອ່ອນໄຫວທີ່ສຸດ; (ຂ) ການລະບຸ ແລະ ຫຼຸດຜ່ອນຄວາມສ່ຽງໃນນະໂຍບາຍ ແລະ ຍຸດທະສາດ ທີ່ພາຍຫຼັງອາດຖືກຈັດຕັ້ງປະຕິບັດເປັນແຜນງານ ແລະ ໂຄງການ; (ຄ) ການສ້າງຂີດຄວາມສາມາດໃຫ້ກັບຊຸມຊົນໃນທ້ອງຖິ່ນກ່ຽວກັບຄວາມສ່ຽງ ແລະ ຄວາມອ່ອນໄຫວທີ່ສອດຄ່ອງກັບການດໍາລົງຊີວິດ ແລະ ລະບົບສະບຽງອາຫານຂອງພວກເຂົາ ເພື່ອໃຫ້ພວກເຂົາມີຄວາມພ້ອມໃນການຮັບມືກັບວິກິດການ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ.

- ເພື່ອຊ່ວຍຊາວກະສິກອນລາວໃນການຮັບມືກັບຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ, ຈໍາເປັນທີ່ຕ້ອງໄດ້ປັບປຸງທັງ 'ລະບົບພະຍາກອນອາກາດ' ແລະ 'ລະບົບເຕືອນໄພລ່ວງໜ້າ' ໂດຍຜ່ານການສະໜອງຂໍ້ມູນທີ່ເປັນປະໂຫຍດໃຫ້ແກ່ພວກເຂົາ
- ມີຄວາມຈໍາເປັນທີ່ຕ້ອງໄດ້ສຸມໃສ່ການຄົ້ນຄວ້າ ແລະ ພັດທະນາເມັດພືດ ແລະ ສາຍພັນທີ່ມີຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດພາຍໃຕ້ສະພາບການໃດໜຶ່ງ.
- ການຮັບປະກັນລະບົບສະບຽງອາຫານທີ່ຍືນຍົງຈໍາເປັນຕ້ອງໄດ້ໃຫ້ຄູ່ຮ່ວມງານ/ສະຖາບັນຕ່າງໆເຂົ້າມາມີສ່ວນຮ່ວມນໍາ. ສະນັ້ນ, ຂະແໜງການທັງໝົດ – ພາກລັດ, ເອກະຊົນ, ອົງການຈັດຕັ້ງທາງສັງຄົມ (CSO) ແລະ ຊຸມຊົນ – ຕ້ອງລວມຕົວກັນ ແລະ ຮ່ວມມືກັນ.
- ການສົ່ງເສີມ SME ໃນຂະແໜງການກະສິກໍາ, ແລະ ຫາກເປັນໄປໄດ້ໃຫ້ສ້າງຮູບແບບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP).
- ໃນ ສປປ ລາວ, ເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າມີຄວາມທົນທານຍິ່ງຂຶ້ນ ພວກເຮົາບໍ່ພຽງແຕ່ຕ້ອງການນະໂຍບາຍທີ່ແນ່ໃສ່ຕ່ອງໂສ້ມູນຄ່າເທົ່ານັ້ນ, ແຕ່ຍັງຕ້ອງມີມາດຕະການ ຫຼື ນະໂຍບາຍທີ່ສາມາດສະໜັບສະນູນການປ່ຽນແປງໃນສະພາບແວດລ້ອມດ້ານສະບຽງອາຫານ, ເຊັ່ນວ່າການສະໜັບສະໜູນຕະຫຼາດທ້ອງຖິ່ນ ແລະ ຕະຫຼາດອາຫານອິນຊີ.

## ຖະແຫຼງການສະແດງເຈດຈໍານົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ

- UNEP, ໃນຖານະທີ່ເປັນຄູ່ຮ່ວມຈັດຕັ້ງ ເວທີສົ່ງເສີມການປູກເຂົ້າແບບຍືນຍົງ, ມີພັນທະໃນການສະໜອງລາຍງານໃຫ້ແກ່ລັດຖະບານ ແລະ ບັນດາຄູ່ຮ່ວມງານອື່ນໆ ກ່ຽວກັບເວທີດັ່ງກ່າວ ແລະ ອໍານວຍຄວາມສະດວກການເຂົ້າເປັນສະມາຊິກຂອງ ສປປ ລາວ ແລະ ການມີສ່ວນຮ່ວມໃນເວທີດັ່ງກ່າວ.
- FAO ໃນຖານະທີ່ເປັນໜ່ວຍງານນໍາພາດ້ານການປ່ຽນແປງລະບົບສະບຽງອາຫານ ແລະ ປພຍ 2 ຈະ 1) ສົ່ງເສີມການຫັນປ່ຽນໄປສູ່ລະບົບສະບຽງອາຫານທີ່ຍືນຍົງ ແລະ ມີຄວາມທົນທານໃນ ສປປ ລາວ ໂດຍສອດຄ່ອງກັບບູລິມະສິດຂອງ FAO ໃນທົ່ວໂລກ ແລະ ໃນພາກພື້ນອາຊີ ແລະ ປາຊີຟິກ; 2) ສະໜັບສະໜູນການພັດທະນາແຜນວຽກແຫ່ງຊາດວ່າດ້ວຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການປັບໂຕຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດໃນຂະແໜງການກະສິກໍາ ຄັ້ງໃໝ່; 3) ສ້າງຂີດຄວາມສາມາດສໍາລັບ VRA, ການປະເມີນຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການວາງແຜນໄລຍະຍາວ ເພື່ອສ້າງຂະແໜງການກະສິກໍາທີ່ມີຄວາມສາມາດໃນການປັບໂຕ ແລະ 4) ສ້າງຄວາມເຂັ້ມແຂງໃຫ້ແກ່ຂີດຄວາມສາມາດແຫ່ງຊາດໃນການອອກແບບ,

ເຂົ້າເຖິງສະພາບດິນຟ້າອາກາດ ແລະ ຈັດຕັ້ງປະຕິບັດແຜນລິເລີ່ມດ້ານການສ້າງລະບົບອາຫານທີ່ມີຄວາມທົນທານ.

- WFP ໃນຖານະທີ່ເປັນໜ່ວຍງານຄູ່ຮ່ວມ ໄດ້ມີເປົ້າໝາຍທີ່ຈະໃຫ້ການຊ່ວຍເຫຼືອ[9] ແລະ ການສະໜັບສະໜູນດ້ານວິຊາການໃຫ້ແກ່ຊຸມຊົນ ແລະ ໜ່ວຍງານລັດຖະບານທີ່ເປັນເປົ້າໝາຍ ເພື່ອສ້າງຄວາມທົນທານໃຫ້ແກ່ພວກເຂົາຕໍ່ກັບສະພາບດິນຟ້າອາກາດ ແລະ ຜົນກະທົບອື່ນໆ ໂດຍຜ່ານຂີດຄວາມສາມາດທີ່ໄດ້ຮັບການປັບປຸງໃນການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ສະພາບດິນຟ້າອາກາດ ແລະ ການປົກປ້ອງທາງສັງຄົມ.
- ສະຖາບັນສຶກສາຂອງລາວສາມາດມີບົດບາດສໍາຄັນໃນການສ້າງຂີດຄວາມສາມາດຂອງຊັບພະຍາກອນມະນຸດ ເພື່ອສົ່ງເສີມລະບົບສະບຽງອາຫານທີ່ຍືນຍົງໃນປະເທດ. ບົດຄົ້ນຄວ້າ, ນະວັດຕະກໍາ ແລະ ການບໍລິການຂອງພວກເຂົາອາດຊ່ວຍປັບປຸງການສ້າງນະໂຍບາຍໄດ້.
- CSO ແລະ ບໍລິສັດເອກະຊົນ ສາມາດມີບົດບາດສໍາຄັນໃນການຊ່ວຍສ້າງຄວາມທົນທານ ແລະ ປັບປຸງລະບົບສະບຽງອາຫານໃນປະເທດ ໂດຍຜ່ານການຝຶກອົບຮົມ, ການເຮັດວຽກ ແລະ ການສະໜັບສະໜູນຊາວກະສິກອນ, ການໃຫ້ຄໍາແນະນໍາ ແລະ ຄວາມຮູ້ດ້ານວິຊາການແກ່ພວກເຂົາ, ແລະ ຊຸກຍູ້ໃຫ້ພວກເຂົາມີສ່ວນຮ່ວມເຂົ້າໃນຕະຫຼາດທ້ອງຖິ່ນ ແລະ ພາກພື້ນໂດຍຜ່ານຕ່ອງໂສ້ມູນຄ່າ.

9 ຈາກບົດຮ່າງຂອງ WFP CSP 2022-2026



# ສະຫຼຸບ

ບົດລາຍງານການວິໄຈ ສະບັບນີ້ໄດ້ສັງລວມການປຶກສາຫາລືຢ່າງເລິກເຊິ່ງລະຫວ່າງບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ຈົນໄປເຖິງ ກອງປະຊຸມປຶກສາຫາລືລະດັບຊາດ ໃນ ສປປ ລາວ ເຊິ່ງຖືກຈັດຂຶ້ນໃນວັນທີ 2 ມິຖຸນາ 2021. ມັນຈະຊ່ວຍສ້າງພື້ນຖານໃຫ້ແກ່ ສປປ ລາວ ໃນການປະກອບສ່ວນເຂົ້າໃນ ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານ ທີ່ຈະຈັດຂຶ້ນໃນເດືອນກັນຍາປີ 2021. ກອງປະຊຸມປຶກສາຫາລືລະດັບຊາດ ແລະ ການປຶກສາຫາລືຢ່າງເລິກເຊິ່ງ ທີ່ຖືກຈັດຂຶ້ນ ເພື່ອກະກຽມໃຫ້ແກ່ກອງປະຊຸມສຸດຍອດດັ່ງກ່າວ, ໄດ້ສະໜອງຂໍ້ມູນເລິກທີ່ມີຄຸນຄ່າຈາກຫຼາກຫຼາຍມຸມມອງ, ລວມທັງຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຕົວແທນຈາກພາກສ່ວນເອກະຊົນ, ໜ່ວຍງານ ສປຊ ພ້ອມທັງກະຊວງຕ່າງໆຂອງລັດຖະບານແຫ່ງ ສປປ ລາວ.

ຈຸດປະສົງຂອງເອກະສານສະບັບນີ້ແມ່ນເພື່ອລວບລວມເອກະສານພື້ນຖານຂອງສີ່ໜ່ວຍງານວິຊາການໃຫ້ເຂົ້າເປັນ ບົດລາຍງານການວິໄຈ ສະບັບດຽວ, ໂດຍເນັ້ນໜັກໃສ່ລັກສະນະການເຊື່ອມໂຍງຂອງຫົວຂໍ້ຕ່າງໆ; i) ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ, ii) ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ; iii) ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ; ແລະ iv) ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ. ເອກະສານພື້ນຖານທັງ 4 ສະບັບແມ່ນຖືກຄັດຄັດມາພ້ອມພາກເອກະສານຊ້ອນທ້າຍ.

ບົດລາຍງານສະບັບນີ້ແນ່ໃສ່ການລະບຸສິ່ງທ້າທາຍ ແລະ ໂອກາດທີ່ ສປປ ລາວ ກຳລັງປະເຊີນຢູ່ ທີ່ກ່ຽວຂ້ອງກັບການບັນລຸຈຸດປະສົງເຫຼົ່ານີ້, ພ້ອມທັງວິເຄາະການເຮັດວຽກຮ່ວມກັນຂອງທັງສີ່ຫົວຂໍ້ ແລະ ອົງປະກອບອື່ນໆຂອງລະບົບສະບຽງອາຫານ. ໃນຫຼາກຫຼາຍດ້ານ, ທັງສີ່ຫົວຂໍ້ແມ່ນສົ່ງເສີມເຊິ່ງກັນ ແລະ ກັນ , ແຕ່ໃນທາງກັບກັນກໍເປັນສິ່ງຈຳເປັນທີ່ຕ້ອງລະບຸຄວາມບໍ່ສອດຄ່ອງ ແລະ ຜົນໄດ້ຜົນເສຍຂອງແຕ່ລະຫົວຂໍ້, ເພື່ອຊອກຫາວິທີທີ່ເປັນໄປໄດ້ຫຼາຍທີ່ສຸດໃນການສ້າງລະບົບສະບຽງອາຫານທີ່ຍືນຍົງ ໃນ ສປປ ລາວ.

ໜຶ່ງຈຸດປະສົງຫຼັກຂອງ NSEDP ຄັ້ງທີ 9 ຂອງລັດຖະບານແຫ່ງ ສປປ ລາວ ກໍຄືການກ້າວໄປສູ່ຮູບແບບການຂະຫຍາຍໂຕທີ່ມີຄວາມກວມລວມ, ຍືນຍົງ, ແລະ ສະເໝີພາບ. ລະບົບສະບຽງອາຫານທີ່ມີຄວາມຍືນຍົງຫຼາຍຂຶ້ນ, ທີ່ຊ່ວຍຮັບປະກັນໃຫ້ພວກເຮົາຈະພ້ອມກັນກ້າວໄປ, ເປັນສ່ວນສຳຄັນໃນການບັນລຸເປົ້າໝາຍເຫຼົ່ານີ້ ແລະ ທັງຍັງຊ່ວຍເລັ່ງລັດຄວາມຄືບໜ້າຂອງການບັນລຸ ເປົ້າໝາຍການພັດທະນາແບບຍືນຍົງ ນຳອີກ.

# ເອກະສານຊ້ອນທ້າຍ 1: ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ

**ນຳພາໂດຍ:** ກະຊວງສາທາລະນະສຸກ (**MoH**), ກະຊວງແຜນການ ແລະ ການລົງທຶນ (**MPI**), ອົງການອາຫານໂລກ (**WFP**), ອົງການສະຫະປະຊາຊາດກອງທຶນສຳລັບເດັກ (**UNICEF**).

**ໜ່ວຍງານ ແລະ ກົມກອງສະໜັບສະໜູນ**: ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ (**FAO**), ອົງການອະນາໄມໂລກ (**WHO**).

## ໂອກາດ ແລະ ສິ່ງທ້າທາຍ (ສປປ ລາວ ກຳລັງປະເຊີນຢູ່) ທີ່ກ່ຽວຂ້ອງກັບ 'ການຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ'

**ຄຳວ່າ** "ລະບົບສະບຽງອາຫານ" ໝາຍເຖິງຕົວແທນ ແລະ ຂະບວນການທັງໝົດທີ່ກ່ຽວຂ້ອງກັບອາຫານ, ຈາກສວນກະສິກ□າໄປຈົນເຖິງຜູ້ບໍລິໂພກ -- ການຜະລິດ, ການແປຮູບ, ການແຈກຢາຍ, ການຕະຫຼາດ, ແລະ ການບໍລິໂພກ. ອົງຕາມ ອົງການອາຫານ ແລະ ການກະເສດ ແຫ່ງ ສປຊ (FAO), ໂຄງການແບບດັ້ງເດີມທີ່ແນ່ໃສ່ພຽງແຕ່ການເພີ່ມພູນການຜະລິດ ແລະ ການສະໜອງອາຫານ ໄດ້ສະແດງໃຫ້ເຫັນວ່າບໍ່ພຽງພໍຕໍ່ການຫຼຸດຜ່ອນຄວາມສ່ຽງດ້ານສະບຽງອາຫານ ແລະ ໂພຊະນາການ, ເຊິ່ງໃນຂະນະທີ່ແບບແຜນດ້ານລະບົບສະບຽງອາຫານແມ່ນສາມາດຊ່ວຍໃຫ້ບັນລຸຜົນໄດ້ຮັບດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມໄດ້ດີຂຶ້ນ ພ້ອມທັງຍັງຊ່ວຍປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພດ້ານສະບຽງອາຫານ, ແລະ ໂພຊະນາການ (FAO 2018). ຄວາມຮັບຜິດຊອບໃນການປັບປຸງລະບົບສະບຽງອາຫານບໍ່ໄດ້ຂຶ້ນຢູ່ກັບຂະແໜງການກະສິກຳພຽງບ່ອນດຽວ, ແຕ່ຍັງລວມມີຂະແໜງການສາທາລະນະສຸກ, ສຶກສາທິການ, ພ້ອມທັງອີກຫຼາກຫຼາຍຄູ່ຮ່ວມງານທີ່ກ່ຽວຂ້ອງ ນອກເໜືອໜ່ວຍງານລັດຖະບານ ທີ່ລວມມີ: ພາກສັງຄົມ, ສະຖາບັນການສຶກສາ, ຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອື່ນໆ. ເພື່ອ 'ຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ,' ທຸກໆອົງປະກອບຂອງລະບົບສະບຽງອາຫານ -- ການຜະລິດ, ການແປຮູບ, ການແຈກຢາຍ, ການຕະຫຼາດ ແລະ ການບໍລິໂພກ -- ຈະຕ້ອງຍົກສູງດ້ານຄວາມປອດໄພ, ສຸຂະພາບ, ແລະ ໂພຊະນາການໃຫ້ໄດ້ຫຼາຍທີ່ສຸດ. ສປປ ລາວ ຕ້ອງປະເຊີນກັບສິ່ງທ້າທາຍທີ່ຮ້າຍແຮງ ທີ່ກ່ຽວຂ້ອງກັບ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ,' ແຕ່ໃນຂະນະດຽວກັນ, ກໍ່ມີຫຼາກຫຼາຍໂອກາດໃນການວາງແຜນທີ່ດີ ແລະ ການເຄື່ອນໄຫວຢ່າງມີປະສິດທິພາບ.

**ສິ່ງທ້າທາຍ**:

- ການຂາດໂພຊະນາການເປັນສິ່ງທ້າທາຍດ້ານການພັດທະນາອັນຕໍ່ເນື່ອງຢູ່ ສປປ ລາວ ທີ່ກຳລັງປະເຊີນກັບ "3 ວິກິດການ" ດ້ານພາວະການຂາດໂພຊະນາການຢ່າງຕໍ່ເນື່ອງ, ພາວະການຂາດສານອາຫານຮອງ ("ຄວາມອຶດຫິວບໍ່ມຊ້ອນ") ແລະ ພາວະນ້ຳໜັກເກີນ ແລະ ໂລກຕຸ້ຍ. ເຖິງວ່າໃນຊ່ວງຊຸມປີທີ່ຜ່ານມາຈະສາມາດບັນລຸການຫຼຸດຜ່ອນພາວະການຂາດໂພຊະນາການແບບຊ້ຳເຮື້ອ, ພາວະເດັກເຕ້ຍໄດ້ກໍ່ຕາມ, ສປປ ລາວ ຍັງຄົງຕ້ອງໄດ້ພະຍາຍາມຢ່າງໜັກໃນການບັນລຸບັນດາໂຕຊີ້ວັດດ້ານໂພຊະນາການທີ່ສຳຄັນຫຼາຍອັນ, ເຊິ່ງບາງໂຕຊີ້ວັດຂອງລາວແມ່ນມີສະຖິຕິທີ່ຕໍ່າທີ່ສຸດໃນພາກພື້ນ. ພາວະການຂາດໂພຊະນາການທີ່ຮຸນແຮງ, ທີ່ສະແດງໃຫ້ເຫັນຢ່າງຊັດເຈນຜ່ານໂລກຈ່ອຍໃນເດັກ, ແມ່ນກຳລັງເພີ່ມຂຶ້ນໃນ ສປປ ລາວ (LSIS 2017). ພາວະເດັກເຕ້ຍ ແລະ ໂລກຈ່ອຍຍັງຄົງພົບເຫັນໄດ້ຢ່າງຕໍ່ເນື່ອງໃນເຂດຫ່າງໄກສອກຫຼີກ, ເຂດຊົນນະບົດຂອງປະເທດ, , ໃນຂະນະທີ່ພາວະນ້ຳໜັກເກີນ ແລະ ໂລກຕຸ້ຍແມ່ນກຳລັງເກີດຂຶ້ນໃນ ນະຄອນຫຼວງວຽງຈັນ. ຄາດຄະເນວ່າພາວະການຂາດສານອາຫານໄດ້ສົ່ງຜົນເສຍຫາຍເປັນຈຳນວນ 2.4% ຂອງ GDP ຕໍ່ປີ (UNCIEF 2013).
- ຫຼາຍພາກຂອງ ສປປ ລາວ ແມ່ນມີຄວາມອ່ອນໄຫວສູງຕໍ່ກັບຄວາມບໍ່ໝັ້ນຄົງດ້ານສະບຽງອາຫານທີ່ຊ້ຳເຮື້ອ ແລະ ຮ້າຍແຮງ, ແລະ ຍິ່ງທະວີຄູນຂຶ້ນດ້ວຍຜົນກະທົບຈາກ ພະຍາດໂຄວິດ-19 ທີ່ລະບາດໃນຊ່ວງບໍ່ດົນມານີ້. ການສຳຫຼວດໃນປີ 2020 ພົບວ່າມີການເຮັດກະສິກຳ, ການຄ້າຂາຍຜະລິດຕະພັນກະສິກຳໃນຕະຫຼາດ, ຄວາມພ້ອມໃນການສະໜອງອາຫານ, ແລະ ການຈ້າງງານ ແລະ ການສົ່ງເງິນຫຼຸດລົງ, ໃນຫຼາຍແຂວງ (WFP 2020). ການຜະລິດອາຫານພາຍໃນປະເທດຂອງ ສປປ ລາວ ແມ່ນມີຄວາມອ່ອນໄຫວຫຼາຍຂຶ້ນຕໍ່ຜົນກະທົບຂອງການປ່ຽນແປງສະພາດິນຟ້າອາກາດ, ທີ່ລວມມີໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ, ເຊິ່ງອາດສົ່ງຜົນກະທົບຕໍ່ລາຄາຕສິນຄ້າໃນະຫຼາດ ແລະ ສົ່ງຜົນກະທົບຢ່າງໄວວາຕໍ່ການບໍລິໂພກອາຫານທີ່ມີໂພຊະນາການ ແລະ ປອດໄພ ໃນພາກພື້ນທີ່ບໍ່ມີຄວາມໝັ້ນຄົງດ້ານສະບຽງອາຫານ ທີ່ອາໄສພຽງແຕ່ອາຫານທີ່ໄດ້ຈາກການຜະລິດແບບກຸ້ມຕົນເອງເທົ່ານັ້ນ. ໃນຫຼາຍຄັ້ງ, ຜົນກະທົບເຫຼົ່ານີ້ແມ່ນຮ້າຍແຮງຂຶ້ນຍ້ອນຄວາມກົດດັນອື່ນໆ, ເຊັ່ນ: ການລະບາດຂອງສັດຕູພືດ ແລະ ຄວາມເສື່ອມໂຊມຂອງສະພາບດິນ ທີ່ລ້ວນແລ້ວແຕ່ສົ່ງຜົນກະທົບຕໍ່ການຜະລິດ ແລະ ການບໍລິໂພກອາຫານທີ່ມີໂພຊະນາການ ແລະ ປອດໄພ.

- ຍັງມີສະຖານທີ່ຫຼາຍແຫ່ງໃນ ສປປ ລາວ ທີ່ນໍາໃຊ້ລະບົບສະບຽງອາຫານ “ແບບດັ້ງເດີມ”. ໃນບາງບ້ານທີ່ຢູ່ເຂດຫ່າງໄກສອກຫຼີກ, ແຕ່ລະຄົວເຮືອນແມ່ນຈັດຫາອາຫານຕາມລະດູການຈາກແຫຼ່ງຕ່າງໆ ໂດຍຜ່ານການຜະລິດກະສິກໍາແບບປະສົມປະສານ, ການຫາອາຫານຈາກແຫຼ່ງອາຫານໃນປ່າ ແລະ ຕະຫຼາດໃນທ້ອງຖິ່ນ. ເນື່ອງຈາກອັດຕາການປົກຫຸ້ມຂອງປ່າທີ່ຫຼຸດລົງ ແລະ ປະຊາກອນມີຈໍານວນເພີ່ມຂຶ້ນ ຈຶ່ງເຮັດໃຫ້ລະບົບສະບຽງອາຫານແບບດັ້ງເດີມມີການປ່ຽນແປງ ອັນເປັນສາເຫດມາຈາກການເຂົ້າເຖິງແຫຼ່ງສະບຽງອາຫານໃນປ່າທີ່ຫຼຸດລົງ, ເຊິ່ງມັກຈະຖືກທົດແທນດ້ວຍຜະລິດຕະພັນອາຫານທີ່ມີຄຸນຄ່າທາງໂພຊະນາການຕໍ່າ. ການຮັກສາລະບົບສະບຽງອາຫານແບບດັ້ງເດີມ ທີ່ເປັນແຫຼ່ງສະໜອງອາຫານຕົ້ນຕໍໃຫ້ແກ່ຊຸມຊົນທີ່ມີຄວາມອ່ອນໄຫວໃນ ສປປ ລາວ ຄວນຖືເປັນຂໍ້ພິຈາລະນາຫຼັກໃນການຫັນປ່ຽນໄປສູ່ແນວທາງທີ່ເນັ້ນໜັກການເຂົ້າເຖິງອາຫານທີ່ມີຄຸນຄ່າທາງໂພຊະນາການ, ໂດຍເນັ້ນໜັກເປັນພິເສດໃສ່ການເຊື່ອມໂຍງລະຫວ່າງການເຂົ້າເຖິງສະບຽງອາຫານ ແລະ ຄວາມສ່ຽງທີ່ເພີ່ມຂຶ້ນ ຂອງໂລກຕິດຕໍ່ຈາກສັດສູ່ຄົນ.
- ຄົວເຮືອນສ່ວນໃຫຍ່ຍັງຄົງດໍາເນີນການຜະລິດກະສິກໍາແບບກຸ້ມກິນ, ເຊິ່ງຜະລິດເພື່ອບໍລິໂພກເປັນຫຼັກ. ແຕ່ເຖິງວ່າຈະຢູ່ໃນເຂດຊົນນະບົດ, ຫຼາຍຄົວເຮືອນນັບມື້ນັບຕ້ອງໄດ້ອາໄສອາຫານທີ່ຊື້ຈາກຕະຫຼາດຫຼາຍຂຶ້ນ, ແລະ ຍັງມີການບໍລິໂພກອາຫານທີ່ມີລາຄາຖືກເພີ່ມຂຶ້ນ, ອາຫານທີ່ມີການແປຮູບສູງ, ເຊັ່ນວ່າ: ໝີ່ກຶ່ງສໍາເລັດຮູບ, ເຂົ້າຕົ້ມກຶ່ງສໍາເລັດຮູບ, ແລະ ເຄື່ອງດື່ມທີ່ມີລົດຊາດຫວານ, ເຊິ່ງເປັນອັນຕະລາຍຕໍ່ໂພຊະນາການ (ອົງການສຸພະນິມິດ ປີ 2020). ດ້ວຍການປ່ຽນແປງດ້ານການບໍລິໂພກທີ່ກ□າລັງເກີດຂຶ້ນນີ້, ສປປ ລາວ ຈໍາເປັນຈະຕ້ອງໄດ້ແກ້ໄຂປັດໄຈດ້ານມະນຸດສໍາພັນ ແລະ ວັດທະນະທໍາ-ສັງຄົມ ທີ່ມີອິດທິພົນຕໍ່ທາງເລືອກ ແລະ ພຶດຕິກໍາໃນການບໍລິໂພກອາຫານຂອງພວກເຮົາ. ນີ້ແມ່ນສິ່ງທີ່ມີຄວາມສໍາຄັນເປັນຢ່າງຍິ່ງ, ໂດຍສະເພາະຕໍ່ເດັກ ແລະ ເຍົາວະຊົນ ຍ້ອນວ່າອາຫານການກິນຂອງພວກເຂົາແມ່ນມີຄວາມກ່ຽວຂ້ອງກັບບຸກຄົນອື່ນໆ (ເຊັ່ນ: ພໍ່ແມ່, ພໍ່ຕູ້ແມ່ຕູ້, ອ້າຍເອື້ອຍ, ໝູ່ເພື່ອນ, ມິດສະຫາຍ, ແລະ ອື່ນໆ), ທີ່ສ່ວນໃຫຍ່ແລ້ວຈະແມ່ນຜູ້ປົກຄອງເອງທີ່ມັກຈະຕັດສິນໃຈແທນໄວໜຸ່ມວ່າພວກເຂົາຈະຕ້ອງກິນຫຍັງ. ໃນຂະນະທີ່ເດັກພວມເຕີບໃຫຍ່ຂຶ້ນເປັນໄວໜຸ່ມ, ພວກເຂົາມີອິດສະລະຫຼາຍຂຶ້ນ, ເຊິ່ງອິດທິພົນຈາກພະນັກງານໃນໂຮງຮຽນ, ໝູ່ເພື່ອນ, ແລະ ບຸກຄົນແບບຢ່າງອື່ນໆ, ພ້ອມທັງແຮງບັນດານໃຈທີ່ໄດ້ຮັບຈາກສັງຄົມໃນວົງກວ້າງ ໄດ້ສົ່ງຜົນກະທົບຕໍ່ພຶດຕິກໍາການບໍລິໂພກຂອງພວກເຂົາ.
- ຄວາມທຸກຍາກແມ່ນໜຶ່ງໃນສາເຫດຂອງການເລືອກບໍລິໂພກອາຫານຄຸນນະພາບຕໍ່າ ແລະ ສະຖານະດ້ານໂພຊະນາການຕໍ່າຂອງເດັກ ແລະ ເຍົາວະຊົນ. ແຫຼ່ງ ແລະ ຮູບແບບການສ້າງລາຍຮັບທີ່ບໍ່ປົກກະຕິໄດ້ສົ່ງອິດທິພົນຕໍ່ປະເພດອາຫານທີ່ສາມາດຊື້ໃຫ້ ແລະ ຊື້ໂດຍເດັກ ແລະ ເຍົາວະຊົນ. ຄວາມສາມາດໃນການຊື້ອາຫານແມ່ນປັດໄຈສໍາຄັນຕໍ່ປະເພດອາຫານ ທີ່ລວມຢູ່ໃນໝວດໝູ່ອາຫານທີ່ມີໂພຊະນາການ. ຍົກຕົວຢ່າງ, ແຄໂລລີຈາກໄຂ່ມີລາຄາທີ່ແພງກ່ວາ 6-10 ເທົ່າຂອງແຄໂລລີທີ່ໄດ້ຮັບຈາກທັນຍາຫານທີ່ມີລາຄາຖືກທີ່ສຸດໃນຫຼາຍປະເທດທີ່ມີລາຍໄດ້ຕໍ່າ (GAIN ແລະ UNICEF, 2018). ຖ້າຄາດໝາຍຈະໃຫ້ບຸກຄົນໃດໜຶ່ງຮັບຜິດຊອບຄ່າໃຊ້ຈ່າຍດ້ານການຈັດຫາອາຫານທີ່ມີໂພຊະນາການສູງນັ້ນ, ພວກເຂົາຕ້ອງມີກໍາລັງຊື້ທີ່ພຽງພໍ, ໂດຍສະເພາະສໍາລັບຄອບຄົວທີ່ມີສະຖານະທາງເສດຖະກິດ-ສັງຄົມທີ່ຕໍ່າ.
- ຄວາມບໍ່ສະເໝີພາບ ແລະ ຄວາມເສຍປຽບດ້ານສະຖານທີ່ກໍ່ແມ່ນໜຶ່ງໃນອິດທິພົນທີ່ສົ່ງຜົນກະທົບຕໍ່ສະພາບການຂາດສານອາຫານໃນ ສປປ ລາວ. ຍົກຕົວຢ່າງ, ເດັກນ້ອຍທີ່ອາໄສຢູ່ເຂດຊົນນະບົດທີ່ບໍ່ມີຖະໜົນ, ເດັກທີ່ແມ່ຂອງພວກເຂົາບໍ່ໄດ້ຮັບການສຶກສາ ຫຼື ຜູ້ທີ່ມາຈາກກຸ່ມຊົນເຜົ່າຕ່າງໆ ຫຼື ຜູ້ທີ່ຕົກຢູ່ໃນກຸ່ມ 1/5 ຂອງປະຊາກອນທີ່ທຸກຍາກທີ່ສຸດ ແມ່ນມີຄວາມສ່ຽງທີ່ຈະເປັນເກີດພາວະເຕ້ຍ **2-3** ເທົ່າຫຼາຍກ່ວາເດັກທີ່ຢູ່ໃນເຂດຕົວເມືອງ, ຜູ້ທີ່ມີແມ່ທີ່ໄດ້ຮັບການສຶກສາ, ແລະ ຜູ້ທີ່ຕົກຢູ່ໃນກຸ່ມ 1/5 ຂອງປະຊາກອນທີ່ຮັ່ງມີທີ່ສຸດ. ມາດຕະການການແຊກແຊງດ້ານລະບົບສະບຽງອາຫານທີ່ໃຫ້ຄວາມສໍາຄັນຕໍ່ບັນຫາດ້ານໂພຊະນາການຈະຕ້ອງລວມມີຂໍ້ມູນກ່ຽວກັບຄວາມອ່ອນໄຫວ, ເພື່ອຮັບປະກັນໃຫ້ທຸກຄົນສາມາດບໍລິໂພກອາຫານທີ່ມີໂພຊະນາການ, ປອດໄພ, ລາຄາບໍ່ແພງ ແລະ ຍືນຍົງໄດ້.
- ເຖິງແມ່ນວ່າຈະມີການເຮັດວຽກຢ່າງຕໍ່ເນື່ອງ ເພື່ອແກ້ໄຂບັນຫາການຂາດສານອາຫານ ແລະ ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານຢູ່ກໍ່ຕາມ, ແຕ່ມາຮອດປະຈຸບັນ, ບົດບາດຂອງລະບົບສະບຽງອາຫານໃນການແກ້ໄຂບັນຫາເຫຼົ່ານີ້ຍັງຄົງໄດ້ຮັບຄວາມໃສ່ໃຈໜ້ອຍຢູ່. ຍັງຄົງມີຄວາມຈໍາເປັນຫຼາຍປະການ, ເຊັ່ນ: ເພີ່ມການຜະລິດ ແລະ ປະສິດທິຜົນ; ສົ່ງເສີມການນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ ແລະ ການຜະລິດອາຫານທີ່ດີຕໍ່ສຸຂະພາບ ແລະ ມີໂພຊະນາການ; ສ້າງແຮງຈູງໃຈຢ່າງຕໍ່ເນື່ອງໃຫ້ແກ່ແມ່ຍິງໄດ້ມີສ່ວນຮ່ວມ; ປັບປຸງການເຂົ້າເຖິງຕະຫຼາດ ແລະ ທ່າແຮງດ້ານການຂາຍພືດທີ່ມີໂພຊະນາການ; ແລະ ປັບປຸງພຶດຕິກໍາການບໍລິໂພກອາຫານ ລວມທັງການແກ້ໄຂປັດໄຈທາງລົບດ້ານມະນຸດສໍາພັນ ແລະ ວັດທະນະທໍາ-ສັງຄົມ.
- ຍັງຄົງຂາດຂໍ້ມູນທີ່ມີຄຸນະພາບ ແລະ ຫຼັກຖານທີ່ພຽງພໍກ່ຽວກັບເສັ້ນທາງ ນັບຕັ້ງອົງປະກອບຕ່າງໆຂອງລະບົບສະບຽງອາຫານໄປຈົນເຖິງຜົນກະທົບດ້ານຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ. ຖ້າບໍ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບປັດໄຈຂັບເຄື່ອນເສດຖະກິດ-ສັງຄົມ ແລະ ລະບົບສະບຽງອາຫານ ທີ່ມີອິດທິພົນຕໍ່ທາງເລືອກໃນການບໍລິໂພກອາຫານຂອງຄົວເຮືອນໃນ ສປປ ລາວ ແລ້ວ, ມາດຕະການແຊກແຊງກໍ່ຈະມີປະສິດທິພາບທີ່ຈໍາກັດ ໃນການຫຼຸດຜ່ອນສາມວິກິດດ້ານພາວະການຂາດສານອາຫານໃນທົ່ວປະເທດ.

**ໂອກາດ**:

- ຮ່າງແຜນວຽກວ່າດ້ວຍໂພຊະນາການແຫ່ງຊາດ (NPAN) 2021-2025 ໄດ້ເນັ້ນໜັກເຖິງບົດບາດຂອງຂະແໜງການກະສິກໍາໃນການເພີ່ມຄວາມພ້ອມຂອງການສະໜອງ ແລະ ການເຂົ້າເຖິງອາຫານທີ່ມີໂພຊະນາການ. ສິ່ງນີ້ລວມມີການເພີ່ມທະວີການຜະລິດພືດ, ຜັກ, ໝາກໄມ້, ສັດລ້ຽງຂະໜາດນ້ອຍ, ແລະ ສັດອື່ນໆທີ່ມີຄວາມປອດໄພ ແລະ ມີໂພຊະນາການ ເພື່ອບໍລິໂພກພາຍໃນຄົວເຮືອນ.
- ໄດ້ມີການກໍານົດຂໍ້ແນະນໍາຂຶ້ນກ່ຽວກັບວິທີໃນການສະໜັບສະໜູນ ແລະ ຍົກສູງຄວາມໝັ້ນຄົງດ້ານສະບຽງອາຫານ ໃນ ສປປ ລາວ, ໂດຍຄໍານຶງເຖິງຜົນກະທົບໃນທັງໄລຍະສັ້ນ ແລະ ໄລຍະຍາວຂອງ ພະຍາດໂຄວິດ-19. ຂໍ້ແນະນໍາເຫຼົ່ານີ້ລວມມີການໃຫ້ຄວາມຮູ້ແກ່ຊາວກະສິກອນທີ່ເປັນເປົ້າໝາຍກ່ຽວກັບການຜະລິດອາຫານທີ່ມີໂພຊະນາການ; ການສະໜອງວັດຖຸດິບ ຫຼື ເງິນທຶນໃຫ້ບັນດາເມືອງ, ບ້ານ ແລະ ຄົວເຮືອນທີ່ມີການເຂົ້າເຖິງສະບຽງອາຫານທີ່ບໍ່ພຽງພໍ; ອານຸຍາດໃຫ້ພໍ່ຄ້າສິນຄ້າກະສິກໍາບາງຄົນມີການເຄື່ອນໄຫວໄດ້ຫຼາຍຂຶ້ນ; ແລະ ສືບຕໍ່ສຸມໃສ່ສ້າງຄວາມຕື່ນໂຕໃຫ້ແກ່ຄົວເຮືອນກ່ຽວກັບອາຫານທີ່ມີໂພຊະນາການ (WFP 2020).

- ການຄົ້ນຄວ້າທີ່ເປັນຮູບປະທຳ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບບັນຖັດຖານທາງສັງຄົມ ແລະ ປັດໄຈອື່ນໆ ທີ່ມີອິດທິພົນຕໍ່ການສະໜອງ ແລະ ບໍລິໂພກອາຫານຂອງເດັກ ແລະ ແມ່ຍິງຖືພາ ແມ່ນໄດ້ຖືກດຳເນີນການໄປແລ້ວຮ່ວມກັບຫຼາຍກຸ່ມປະຊາກອນ ໂດຍຄູ່ຮ່ວມພັດທະນາຕ່າງໆ.
- ວຽກງານສົ່ງເສີມຄວາມໝັ້ນຄົງດ້ານໂພຊະນາການ ແລະ ສະບຽງອາຫານສ່ວນໃຫຍ່ແມ່ນວຽກງານທີ່ປະຕິບັດໂດຍຮ່ວມມືກັນກັບຫຼາຍຂະແໜງການ. ກອງປະຊຸມຫຼາຍຂະແໜງການຂອງ ຄະນະກຳມະການດ້ານໂພຊະນາການແຫ່ງຊາດ (NNC) ທີ່ເປັນປະທານໂດຍ ທ່ານຮອງນາຍົກລັດຖະມົນຕີ ແມ່ນຖືກຈັດຂຶ້ນ 2 ຄັ້ງຕໍ່ປີ ແລະ ມີການສ່ອງແສງເຖິງໃນລະດັບທ້ອງຖິ່ນ ເພື່ອຊ່ວຍເຂົ້າໃນການຈັດຕັ້ງປະຕິບັດແຜນວຽກດ້ານໂພຊະນາການແຫ່ງຊາດໃນລະດັບທ້ອງຖິ່ນ. ສະພາແຫ່ງຊາດ, ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສູນກາງສະຫະພັນແມ່ຍິງລາວ, ແລະ ອຳ ນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ, ລ້ວນແຕ່ມີສ່ວນຮ່ວມໃນຄວາມພະຍາຍາມໃນການສົ່ງເສີມໂພຊະນາການ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ. ນອກຈາກນີ້, ເຄືອຂ່າຍອົງການຈັດຕັ້ງທາງສັງຄົມເພື່ອໂພຊະນາການ (SUN CSA) ມີສະມາຊິກຫຼາຍກວ່າ 70 ໜ່ວຍງານທີ່ເປັນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານສາກົນ ແລະ ທ້ອງຖິ່ນ. ເຄືອຂ່າຍເຫຼົ່ານີ້ຂອງບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ແລະ ຂອບວຽກລະດັບຊາດທີ່ຖືກສ້າງຂຶ້ນມາກ່ອນແລ້ວ ທີ່ເນັ້ນໃສ່ບັນຫາໂພຊະນາການເປັນຫຼັກສາມາດສະໜອງຊ່ອງທາງ ຫຼື ຈຸດເລີ່ມຕົ້ນ ເພື່ອພັດທະນາເສັ້ນທາງທີ່ເໝາະສົມສຳລັບການປ່ຽນແປງລະບົບສະບຽງອາຫານເພີ່ມຕື່ມ.
- ພາກເອກະຊົນໄດ້ສະແດງຄວາມສົນໃຈເພີ່ມຂຶ້ນໃນການປະກອບສ່ວນຕໍ່ການປັບປຸງການບໍລິໂພກອາຫານທີ່ມີໂພຊະນາການ ແລະ ປອດໄພໃນ ສປປ ລາວ. ເຄືອຂ່າຍທຸລະກິດດ້ານໂພຊະນາການ (SUN BN) ໃນປະຈຸບັນມີ 34 ສະມາຊິກ ແລະ ໄດ້ພັດທະນາຍຸດທະສາດ (2018-2022) ເຊິ່ງໄດ້ກຳນົດໂອກາດດ້ານການມີສ່ວນຮ່ວມ ແລະ ການລົງທຶນໃຫ້ແກ່ພາກເອກະຊົນ, ລວມທັງແຜນງານດ້ານກຳລັງແຮງງານໃນວຽກງານໂພຊະນາການ, ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະບຽງອາຫານເປົ້າໝາຍ, ຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນທີ່ເປັນໄປໄດ້ໃນການການຜະລິດອາຫານທີ່ອຸດົມໄປດ້ວຍໂພຊະນາການ, ການຕິດສະຫຼາກອາຫານ ແລະ ການປົກປ້ອງຜູ້ບໍລິໂພກ ພ້ອມທັງປະກອບສ່ວນຕໍ່ຄວາມພະຍາຍາມໃນການປ່ຽນແປງພຶດຕິກຳຂອງສັງຄົມ ເພື່ອປັບປຸງການບໍລິໂພກອາຫານທີ່ມີໂພຊະນາການ ແລະ ປອດໄພ.
- ການປັບປຸງນິໄສການບໍລິໂພກອາຫານຂອງໄວໜຸ່ມ ໂດຍຜ່ານມາດຕະການແຊກແຊງໃນລະບົບການສຶກສາອາດເປັນໂອກາດໃນການປ່ຽນແປງພຶດຕິກຳການກິນຂອງໄວໜຸ່ມໃນລະດັບຊາດ, ໂດຍພ້ອມກັນກ້າວໄປສູ່ຍຸກໃໝ່ທີ່ປະຊາຊົນມີຄວາມຮູ້ດ້ານໂພຊະນາການ ແລະ ມີແນວໂນ້ມທີ່ຈະເລືອກບໍລິໂພກອາຫານທີ່ດີຕໍ່ສຸຂະພາບ, ມີໂພຊະນາການ.
- ເພື່ອຍົກສູງຄວາມສາມາດໃນການເຂົ້າເຖິງສະບຽງອາຫານທີ່ມີໂພຊະນາການໃຫ້ແກ່ຄົວເຮືອນທັງໝົດໃນ ສປປ ລາວ, ລວມທັງຜູ້ທີ່ມີຄວາມອ່ອນໄຫວຫຼາຍທີ່ສຸດ, ມີໂອກາດທີ່ຈະພັດທະນາກົນໄກການປົກປ້ອງສັງຄົມທີ່ມີຄຳນຶງເຖິງໂພຊະນາການ, ໂດຍຕໍ່ຍອດຈາກແຜນງານການປົກປ້ອງທາງຄຸ້ມຄອງສັງຄົມ ທີ່ໃນປະຈຸບັນ, ລັດຖະບານລາວ ກຳລັງດຳເນີນການທົດລອງຢູ່. ແຜນງານການປົກປ້ອງສັງຄົມ ແລະ ເຄືອຂ່າຍຄວາມປອດໄພທາງສັງຄົມມັກແນ່ໃສ່ຄວາມສາມາດໃນການຈັດຫາອາຫານໃຫ້ແກ່ຄອບຄົວ. ເຖິງຢ່າງໃດກໍຕາມ, ແຜນງານເຫຼົ່ານີ້ມັກຈະຂາດການເຊື່ອມໂຍງກັບຄວາມຕ້ອງການດ້ານໂພຊະນາການໂຕຈິງ. ພວກເຮົາສາມາດລວມເອົາການສື່ສານ ແລະ ການສຶກສາເພື່ອປ່ຽນແປງພຶດຕິກຳເຂົ້າກັບແຜນງານປົກປ້ອງທາງສັງຄົມ ເພື່ອຊ່ວຍປັບປຸງຈຸດປະສົງດ້ານໂພຊະນາການ. ຍົກຕົວຢ່າງ, ຜູ້ປົກຄອງສາມາດຮັບຂໍ້ມູນກ່ຽວກັບຄວາມຫຼາກຫຼາຍດ້ານອາຫານໃນລະຫວ່າງຢ້ຽມຢາມສຸກສາລາ ທີ່ຈຳເປັນຕໍ່ການໂອນເງິນ. ສິ່ງນີ້ສາມາດນຳໄປສົມທົບກັບແຮງຈູງໃຈດ້ານລາຄາ ເພື່ອຊຸກຍູ້ໃຫ້ມີການເລືອກຊື້ອາຫານທີ່ດີຕໍ່ສຸຂະພາບ ໃຫ້ໄດ້ຫຼາຍທີ່ສຸດໃນຕະຫຼາດທ້ອງຖິ່ນ ເຊິ່ງຈະໄດ້ຮັບການອຸດໜູນພາຍໃຕ້ແຜນງານດັ່ງກ່າວ.
- ມີໂອກາດທີ່ຈະເພີ່ມການລົງທຶນໃຫ້ຫຼາກຫຼາຍເຂົ້າໃນການຜະລິດຂອງຊາວກະສິກອນຂະໜາດນ້ອຍ, ສ້າງຄວາມດຸ່ນດ່ຽງລະຫວ່າງການປູກຝັງຂອງຊາວກະສິກອນຂະໜາດນ້ອຍ ແລະ ການຜະລິດພືດເສດຖະກິດອັນສະເພາະໃຫ້ແກ່ຕະຫຼາດ, ໂດຍສະເພາະໃນຊ່ວງເວລາທີ່ຕະຫຼາດສາກົນຖືກຜົນກະທົບເນື່ອງຈາກ ພະຍາດໂຄວິດ-19. ໂດຍສອດຄ່ອງກັບສິ່ງນີ້, ຍັງມີໂອກາດທີ່ຈະໄດ້ປົກປັກຮັກສາອາຫານຈາກປ່າ, ແລະ ອາດມີການເພາະພັນ ແລະ ຄຸ້ມຄອງສະບຽງອາຫານດັ່ງກ່າວພາຍໃຕ້ໃນສະພາບແວດລ້ອມທາງທຳມະຊາດຂອງພວກມັນເອງ, ລວມທັງຮັບປະກັນທາງເລືອກດ້ານສະບຽງອາຫານທີ່ປອດໄພ ແລະ ຫຼາກຫຼາຍໃຫ້ແກ່ບັນດາຄົວເຮືອນທີ່ມີຄວາມອ່ອນໄຫວສູງ.

## ການດຳເນີນງານ ແລະ ນະໂຍບາຍທີ່ມີຜົນກະທົບຫຼາຍທີ່ສຸດຕໍ່ການບັນລຸການຮັບປະກັນ "ສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ" (ໃນ ສປປ ລາວ)

**ນະໂຍບາຍ**:

- ນະໂຍບາຍຫຼັກທີ່ມີອິດທິພົນຕໍ່ການພັດທະນາຂະແໜງການກະສິກຳ ແລະ ການບັນລຸການຮັບປະກັນ 'ສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ແມ່ນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 (NSEDP) 2021-2025 ແລະ ຍຸດທະສາດການພັດທະນາກະສິກຳ (ADS) ຮອດປີ 2025 ແລະ ວິໄສທັດຮອດປີ 2030. NSEDP 2021-2025 ຄັ້ງທີ 9 **ໄດ້ລວມເອົາ**ບັນຫາດ້ານຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ເປັນໜຶ່ງໃນເປົ້າໝາຍຫຼັກ, ໃນຂະນະທີ່ ADS ຮອດປີ 2025 ແມ່ນແນ່ໃສ່ການຜະລິດກະສິກຳ ເພື່ອສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ.

- ຖະແຫຼງການຂອງຜູ້ນຳອາຊຽນວ່າດ້ວຍການຢຸດຕິການຂາດໂພຊະນາການທຸກຮູບການ ແມ່ນໄດ້ຖືກຮັບຮອງໂດຍບັນດາຜູ້ນຳຂອງປະເທດສະມາຊິກອາຊຽນໃນປີ 2017. ຖະແຫຼງການດັ່ງກ່າວປະກອບມີພັນທະດ້ານການເມືອງໃນລະດັບສູງສຸດໃນການປະຕິບັດແບບແຜນການຮ່ວມມືຫຼາຍພາກສ່ວນ ເພື່ອສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ລະຫວ່າງຂະແໜງການຕ່າງໆ, ເຊັ່ນ: ຂະແໜງການກະສິກຳ, ສາທາລະນະສຸກ, ສຶກສາທິການ, ສະຫວັດດີການສັງຄົມ, ແລະ ອື່ນໆ.

- ເຖິງຢ່າງໃດກໍຕາມ, ນະໂຍບາຍທີ່ສຸມໃສ່ການປັບປຸງຕ່ອງໂສ້ມູນຄ່າອາດຈະຕ້ອງໄດ້ຮັບການເສີມຄວາມເຂັ້ມແຂງ ແລະ ດັດປັບໃຫ້ສົມດຸນກັບການເອົາໃຈໃສ່ຕໍ່ຜົນລະປູກທີ່ບໍ່ແມ່ນພືດເສດຖະກິດ ທີ່ມີໄວ້ສຳລັບການບໍລິໂພກພາຍໃນທ້ອງຖິ່ນ ແລະ ຄົວເຮືອນ, ເພື່ອສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ. ນະໂຍບາຍເຫຼົ່ານີ້ຈະຕ້ອງໄດ້ຖືກຜົນຂະຫຍາຍເຂົ້າສູ່ແຜນວຽກອັນສະເພາະຂອງແຕ່ລະຂະແໜງການ ເຊິ່ງສະທ້ອນໃຫ້ເຫັນເຖິງພັນທະ ແລະ ຄວາມຮັບຮູ້ຮ່ວມກັນດ້ານການປະກອບສ່ວນຂອງເຂົາເຈົ້າຕໍ່ຜົນໄດ້ຮັບດ້ານໂພຊະນາການ. ໃນຂະແໜງການອື່ນໆທີ່ກ່ຽວຂ້ອງ, ຍຸດທະສາດໂພຊະນາການແຫ່ງຊາດຮອດປີ 2025 ແລະ ຮ່າງແຜນວຽກສຳລັບປີ 2021-2025 ມີຈຸດປະສົງອັນສະເພາະ ເພື່ອຍົກສູງຄວາມພ້ອມໃນການສະໜອງ ແລະ ການເຂົ້າເຖິງສະບຽງອາຫານທີ່ມີໂພຊະນາການ ແລະ ເພື່ອຍົກສູງການສື່ສານເພື່ອປ່ຽນແປງພຶດຕິກຳດ້ານໂພຊະນາການ.
- ດຳລັດແຫ່ງຊາດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນການໃຫ້ອາຫານເດັກອ່ອນ ແລະ ເດັກໄວຮຽນຍ່າງ (ເລກທີ 472 / ລບ) ປະກອບສ່ວນເຂົ້າໃນການໃຫ້ອາຫານເດັກຢ່າງປອດໄພ ແລະ ພຽງພໍ ໂດຍຜ່ານການຄວບຄຸມການສົ່ງເສີມ ແລະ ການຕະຫຼາດຂອງຜະລິດຕະພັນທົດແທນນ້ຳນົມແມ່ ເພື່ອຮັບປະກັນວ່າແມ່ຈະບໍ່ນຳໃຊ້ນົມຜົງປ້ອນລູກຂອງຕົນແທນ ໃນກໍລະນີທີ່ຍັງບໍ່ທັນສາມາດຮັບປະກັນຄວາມເປັນໄປໄດ້, ກຳລັງຊື້, ຄວາມຍືນຍົງ ແລະ ຄວາມປອດໄພໄດ້ເທື່ອ.

**ຫຼັກປະຕິບັດ**:

- ຫຼັກປະຕິບັດດ້ານການບໍລິໂພກອາຫານ ໃນ ສປປ ລາວ ແມ່ນຍັງຢູ່ໃນລະດັບທີ່ບໍ່ສາມາດຍອມຮັບໄດ້. ເດັກອ່ອນໜ້ອຍກວ່າເຄິ່ງໜຶ່ງແມ່ນໄດ້ຮັບອາຫານທີ່ດີທີ່ສຸດໃນຊ່ວງ 6 ເດືອນທຳອິດຂອງຊີວິດ, ໂດຍສະເພາະເຂດໃນຕົວເມືອງ ບ່ອນທີ່ແມ່ສາມາດເຂົ້າເຖິງການຕະຫຼາດ ແລະ ການສົ່ງເສີມໂຄສະນານົມຜົງຫຼຽມໂດຍພາກເອກະຊົນ. ເຖິງວ່າຈະມີການສຶກສາດ້ານໂພຊະນາການຢູ່ກໍ່ຕາມ, ຍ້ອນຄວາມເຊື່ອຕາມປະເພນີ ແລະ ບັນຖັດຖານທາງສັງຄົມ, ມີພຽງໜຶ່ງສ່ວນສີ່ຂອງເດັກອາຍຸ 6-8 ເດືອນເທົ່ານັ້ນທີ່ໄດ້ຮັບອາຫານທີ່ມີຄວາມຫຼາກຫຼາຍ ແລະ ເຖິງແມ່ນວ່າເດັກທີ່ມີອາຍຸສູງກວ່ານັ້ນຈະມີສະຖິຕິທີ່ດີກວ່າເລັກນ້ອຍ, ແຕ່ກໍ່ມີພຽງແຕ່ໜຶ່ງສ່ວນສາມຂອງເດັກອາຍຸ 6-24 ເດືອນເທົ່ານັ້ນທີ່ໄດ້ຮັບອາຫານທີ່ມີຄວາມຫຼາກຫຼາຍ (LSIS ປີ 2017).
- ເຖິງແມ່ນວ່າຈະມີຂໍ້ຈຳກັດດ້ານຂໍ້ມູນກ່ຽວກັບຄຸນະພາບຂອງການບໍລິໂພກອາຫານໃນຊ່ວງໄວໜຸ່ມ, ການຄົ້ນຄວ້າໃນເມືອງໜຶ່ງຂອງ ແຂວງວຽງຈັນ ພົບວ່າໜ້ອຍກວ່າໜຶ່ງສ່ວນສີ່ເດັກຂອງເຍົາວະຊົນບໍລິໂພກຜັກຫຼາຍກ່ວາໜຶ່ງເທື່ອຕໍ່ມື້, ໃນຂະນະທີ່ເກືອບເຄິ່ງໜຶ່ງດື່ມນ້ຳອັດລົມເປັນປະຈຳທຸກມື້ ແລະ ບໍລິໂພກອາຫານຫວ່າງແປຮູບຢ່າງໜ້ອຍອາທິດລະເທື່ອ (ກຸນນະວົງ ສ 2020).
- ໃນເຂດຊົນນະບົດທີ່ມີຖະໜົນ, ມີພຽງໜຶ່ງສ່ວນສາມຂອງແມ່ຍິງຖືພາ ທີ່ສາມາດບັນລຸການບໍລິໂພກອາຫານທີ່ມີຄວາມຫຼາກຫຼາຍໃນຂັ້ນຕ່ຳໄດ້, ໃນຂະນະທີ່ເຂດຊົນນະບົດທີ່ບໍ່ມີຖະໜົນແມ່ນມີຈຳນວນພຽງແຕ່ໜຶ່ງສ່ວນຫ້າເທົ່ານັ້ນ (LSIS 2017).
- ການເລືອກບໍລິໂພກອາຫານໃນ ສປປ ລາວ ສ່ວນໃຫຍ່ແມ່ນຂຶ້ນກັບກຳລັງຊື້ອາຫານເປັນຫຼັກ - ເຖິງແມ່ນວ່າອາຫານທີ່ມີໂພຊະນາການທີ່ຂາຍລາຄາບໍ່ແພງ, ເຊັ່ນ: ເລືອດ, ເຄື່ອງໃນ, ຜັກໃບຂຽວ, ແກ່ນ, ເມັດພືດຕ່າງໆ ແລະ ປານ້ອຍ ຈະມີຂາຍຢູ່ໃນຕະຫຼາດທ້ອງຖິ່ນຫຼາຍແຫ່ງກໍ່ຕາມ, ແຕ່ສິນຄ້າເຫຼົ່ານີ້ຍັງຄົງມີລາຄາແພງ ຫຼື ບໍ່ສາມາດເຂົ້າເຖິງໄດ້, ໂດຍສະເພາະສຳລັບປະຊາຊົນໃນເຂດພູດອຍຫ່າງໄກສອກຫຼີກ (WFP 2016).
- ໂດຍທົ່ວໄປແລ້ວ, ສຳລັບຄົວເຮືອນທີ່ອາໄສການເຮັດກະສິກຳຈາກນ້ຳຝົນ, ການເຂົ້າເຖິງອາຫານຕະຫຼອດປີແມ່ນມີຂໍ້ຈຳກັດ ເນື່ອງຈາກການຜັນຜວນຂອງປະລິມານນ້ຳຝົນ, ອາກາດ ແລະ ສະພາບດິນຟ້າອາກາດໃນແຕ່ລະລະດູການ, ສົ່ງຜົນກະທົບຕໍ່ປະລິມານ ແລະ ຄຸນນະພາບຂອງອາຫານ ແລະ ສິນຄ້າທ້ອງຖິ່ນ ທີ່ແນໃສ່ສົ່ງຂາຍຕາມຕະຫຼາດຕ່າງໆ. ອາຫານທີ່ມາຈາກສັດ, ທີ່ອຸດົມໄປດ້ວຍສານອາຫານ, ແມ່ນສາມາດເຂົ້າເຖິງໄດ້ໜ້ອຍ ຫຼື ອັດຕາສ່ວນທີ່ຕ່ຳໃນໝວດອາຫານຂອງລາວ, ແລະ ຍັງມີຄວາມຫຍຸ້ງຍາກໃນການບັນລຸຄວາມຕ້ອງການທາດແຄວຊ້ຽມ, ວິຕາມິນ B1, ອາຊິດໂຟລິກ, ທາດເຫຼັກ, ແລະ ສັງກະສີ ໂດຍສະເພາະຈາກອາຫານທີ່ບໍ່ແມ່ນສັດ (ລາດຊະວົງ ກ 2020).
- ລະບົບສະບຽງອາຫານ ແລະ ການກະສິກຳໃນ ສປປ ລາວ ໃນປະຈຸບັນໄດ້ສົ່ງຜົນກະທົບໃນທາງບວກຢ່າງຈຳກັດຕໍ່ອາຫານທີ່ດີຕໍ່ສຸຂະພາບ, ເພາະວ່າພື້ນທີ່ກະສິກຳສ່ວນໃຫຍ່ແມ່ນຖືກນຳໃຊ້ໃນການປູກເຂົ້າເປັນຫຼັກ ແລະ ຂອບເຂດໃນເສີມຂະຫຍາຍຄວາມຫຼາກຫຼາຍຂອງພືດແມ່ນຈຳກັດຢູ່ທີ່ອາຫານທີ່ບໍ່ແມ່ນເຂົ້າ ເຊິ່ງສ່ວນໃຫຍ່ແມ່ນສົ່ງອອກໄປຈຳໜ່າຍຢູ່ປະເທດເພື່ອນບ້ານ (WB 2017).
- ການວາງແຜນໂຄງການດ້ານໂພຊະນາການໃນ ສປປ ລາວ ແມ່ນມີເປົ້າໝາຍກ້າວສູ່ "ການລວມສູນ," ເຊິ່ງໝາຍເຖິງການຈັດຕັ້ງປະຕິບັດແບບພ້ອມພຽງກັນໃນທົ່ວທຸກຂະແໜງການ (ເຊັ່ນ: ຂະແໜງການກະສິກຳ, WASH, ສາທາລະນະສຸກ, ແລະ ສຶກສາທິການ) ໃນບັນດາເມືອງ ແລະ ບ້ານທີ່ເປັນເປົ້າໝາຍ. ບັນດາຄະນະກຳມະການດ້ານໂພຊະນາການທີ່ກວມເອົາຫຼາຍຂະແໜງໃນລະດັບຊາດ, ຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ສະໜັບສະໜູນການວາງແຜນ, ການຈັດງົບປະມານ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມບັນດາມາດການແຊກແຊງທີ່ຖືກສ້າງຂຶ້ນເພື່ອສົ່ງເສີມໂພສະນາການໂດຍສະເພາະ ແລະ ທີ່ຄຳນຶງເຖິງໂພຊະນາການ ແລະ ບົດຮຽນຕ່າງໆກ່ຽວກັບວິທີໃນການປັບປຸງການປະສານງານ ແລະ ການເຮັດວຽກຮ່ວມກັນ. ເຖິງຢ່າງໃດກໍຕາມ, ການຂາດແຄນຊັບພະຍາກອນໄດ້ສ້າງຂໍ້ຈຳກັດດ້ານຂອບເຂດຂອງແຜບບແຜນອັນຮອບດ້ານເຫຼົ່ານີ້.

## ການເຮັດວຽກຮ່ວມກັນອັນໃດທີ່ຫືອຂໍ້ດ້ານ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ໄດ້ສ້າງຂຶ້ນລະຫວ່າງອົງປະກອບ ແລະ ເສັ້ນທາງຂອງລະບົບສະບຽງອາຫານ?

ຄວາມພະຍາຍາມໃນການສົ່ງເສີມ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ໄດ້ສະທ້ອນໃຫ້ເຫັນເຖິງຄວາມຈຳເປັນໃນການປັບປຸງອາຫານໂດຍກົງ, ໂດຍສະເພາະໃຫ້ແກ່ເດັກນ້ອຍ, ເຍົາວະຊົນ, ແລະ ແມ່ຍິງທີ່ຢູ່ໃນກຸ່ມທີ່ມີຄວາມອ່ອນໄຫວດ້ານໂພຊະນາການຫຼາຍທີ່ສຸດ. ສິ່ງນີ້ປະກອບມີການພົວພັນກັນ ແລະ ການປັບປຸງອົງປະກອບຫຼັກທັງໝົດຂອງລະບົບສະບຽງອາຫານ ລວມທັງການຜະລິດ, ການແປຮູບ, ການແຈກຢາຍ, ການຕະຫຼາດ, ແລະ ຄວາມຕ້ອງການ (ການບໍລິໂພກ). ຍົກຕົວຢ່າງ, ຕ່ອງໂສ້ການສະໜອງອາຫານໄດ້ສະໜອງອາຫານທີ່ມີຢູ່ໃນສະພາບແວດລ້ອມດ້ານສະບຽງອາຫານເພື່ອໃຫ້ຜູ້ບໍລິໂພກສາມາດຊື້ໄດ້. ແຮງຈູງໃຈ ແລະ ແຮງກະຕຸ້ນຕ່າງໆໃນການຜະລິດອາຫານໃດໜຶ່ງເຂົ້າໃນຕ່ອງໂສ້ການສະໜອງແມ່ນໄດ້ສົ່ງຜົນກະທົບຕໍ່ປະລິມານ, ຄຸນນະພາບ ແລະ ລາຄາຂອງອາຫານທີ່ມີຢູ່ໃນສະພາບແວດລ້ອມດ້ານສະບຽງອາຫານພາຍນອກ.

ເຊັ່ນດຽວກັນ, ຄວາມຕ້ອງການ, ຄວາມຈຳເປັນ ແລະ ຄວາມມັກຂອງຜູ້ບໍລິໂພກໄດ້ຮັບອິດທິພົນ ແລະ ຜົນກະທົບຈາກສະພາບແວດລ້ອມດ້ານສະບຽງອາຫານ ແລະ ຕ່ອງໂສ້ການສະໜອງອາຫານພາຍນອກ. ການສ້າງຜະລິດຕະພັນສ່ວນໃຫຍ່ແມ່ນຈະຕ້ອງຕອບສະໜອງໄດ້ກັບຄວາມຕ້ອງການ ແລະ ຄວາມມັກຂອງຜູ້ບໍລິໂພກ, ເຊັ່ນ: ຄວາມສະດວກສະບາຍ, ລົກຊະນິຍົມ, ແລະ ອື່ນໆ. ໃນອີກທິດທາງໜຶ່ງ, ພຶດຕິກຳການຊື້ຂອງຜູ້ບໍລິໂພກແມ່ນໄດ້ຮັບອິດທິພົນຈາກການໂຄສະນາ ແລະ ການສົ່ງເສີມຢູ່ຈຸດຂາຍໂດຍຜູ້ຂາຍອາຫານລາຍຍ່ອຍ. ທຸກການເຄື່ອນໄຫວໃນລະບົບສະບຽງອາຫານແມ່ນມີຄວາມເຊື່ອມໂຍງກັນ - ຜົນກະທົບຕ່າງໆໃນພາກສ່ວນໜຶ່ງຂອງລະບົບຊ່ວຍສົ່ງເສີມ ຫຼື ຫຼຸດຜ່ອນຜົນກະທົບໃນພາກສ່ວນອື່ນ. ຍົກຕົວຢ່າງ, ລະບຽບການໃນການຫຼຸດຜ່ອນປະລິມານນ້ຳຕານໃນການຜະລິດອາຫານ, ເຊັ່ນ: ອາຫານຫວ່າງ ແລະ ເຄື່ອງດື່ມທີ່ມີລົດຫວານ, ອາດເຮັດໃຫ້ຄວາມຕ້ອງການຂອງຜູ້ບໍລິໂພກປ່ຽນໄປສູ່ການບໍລິໂພກອາຫານທົດແທນອື່ນໆອາດຈະທີ່ບໍ່ມີໂພຊະນາການຫຼາຍ, ເຊັ່ນ: ເຄື່ອງດື່ມທີ່ນຳໃຊ້ສານແຕ່ງລົດຫວານອື່ນໆ. ເນື່ອງຈາກລະບົບສະບຽງອາຫານມີລັກສະນະທີ່ບໍ່ໝັ້ນຄົງ ແລະ ສະພາບແວດລ້ອມທີ່ປ່ຽນແປງຢ່າງຕໍ່ເນື່ອງ, ສິ່ງສຳຄັນຈຶ່ງແມ່ນການສືບຕໍ່ພັດທະນາ ແລະ ປະເມີນຂີດຄວາມສາມາດຂອງລະບົບສະບຽງອາຫານ ເພື່ອໃຫ້ສາມາດສະໜອງອາຫານທີ່ມີໂພຊະນາການ, ປອດໄພ, ລາຄາບໍ່ແພງ ແລະ ຍືນຍົງ, ແລະ ເສີມຂະຫຍາຍຜົນກະທົບການເຄື່ອນໄຫວນີ້ໄປທົ່ວລະບົບສະບຽງອາຫານທັງໝົດ.

**<u>ການເຮັດວຽກຮ່ວມກັນທີ 1: ຕ່ອງໂສ້ອາຫານ.</u>** ກ່ຽວກັບຕ່ອງໂສ້ການສະໜອງອາຫານ, ຄວາມພະຍາຍາມໃນການສຸມໃສ່ 'ຮັບປະກັນອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ແມ່ນສາມາດ ແລະ ຄວນເຮັດວຽກໂດຍກ່ຽວພັນກັບການຜະລິດກະສິກຳ, ການປຸງແຕ່ງຫຼັງການເກັບກ່ຽວ ແລະ ການແຈກຢາຍ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ແລະ ການຄົ້ນຄວ້າ ແລະ ພັດທະນາກະສິກຳ. ອາດມີຄວາມເປັນໄປໄດ້ທີ່ຈະເພີ່ມປະສິດທິພາບ ແລະ ໃນຂະນະດຽວກັນກໍ່ປົກປັກຮັກສາ ແລະ ສະໜັບສະໜູນການຜະລິດທີ່ມີຄວາມຫຼາກຫຼາຍຂອງຊາວກະສິກອນຂະໜາດນ້ອຍ. ຕົວຢ່າງໜຶ່ງ ແມ່ນການສະໜັບສະໜູນການພັດທະນາສະຫະກອນຜະລິດໄຂ່ຂະໜາດນ້ອຍ, ເຊິ່ງຊ່ວຍເສີມຂະຫຍາຍການສະໜອງໄຂ່, ເຮັດໃຫ້ລາຄາໄຂ່ຫຼຸດລົງ, ແລະ ສະໜັບສະໜູນການລວມເອົາໄຂ່ເຂົ້າໃນໝວດໝູ່ອາຫານຂອງເດັກນ້ອຍ (GAIN ແລະ UNICEF 2018).

**<u>ການເຮັດວຽກຮ່ວມກັນທີ 2: ສະພາບແວດລ້ອມດ້ານສະບຽງອາຫານພາຍນອກ.</u>** ໃນແງ່ຂອງສະພາບແວດລ້ອມດ້ານສະບຽງອາຫານພາຍນອກ, ຄວາມພະຍາຍາມກ່ຽວກັບ 'ການຮັບປະກັນອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ຄວນເຮັດວຽກຮ່ວມກັນກັບ, ແລະ ພ້ອມກັນຈັດຕັ້ງປະຕິບັດມາດຕະການແຊກແຊງຕ່າງໆໃນ, ຕະຫຼາດ ແລະ ໂຮງຮຽນ, ປັບປຸງ ແລະ ຮັກສາຄວາມປອດໄພຂອງອາຫານ ແລະ ປັບປຸງຄວາມພ້ອມ ແລະ ຊຸກຍູ້ການເລືອກບໍລິໂພກອາຫານທີ່ມີໂພຊະນາການ. ເຖິງແມ່ນວ່າຊຸບເປີ້ມາເກັດຈະເຂົ້າມາມີບົດບາດຫຼາຍຂຶ້ນກໍ່ຕາມ, ຕະຫຼາດທີ່ບໍ່ເປັນທາງການຍັງຄົງເປັນແຫຼ່ງອາຫານຫຼັກໃນ ສປປ ລາວ ເຊິ່ງມັກຈະສະໜອງອາຫານທີ່ມີໂພຊະນາການຫຼາຍຢ່າງ ລວມທັງໝາກໄມ້ ແລະ ຜັກ. ເຖິງຢ່າງໃດກໍ່ຕາມ, ຕະຫລາດທີ່ບໍ່ເປັນທາງການກຳລັງສະໜອງອາຫານທີ່ມີການປຸງແຕ່ງຫຼາຍເກີນໄປ ແລະ ມີໄຂມັນ, ນ້ຳຕານ ແລະ ໂຊດຽມສູງ (ເຊັ່ນ: ໂຊດາ, ເຂົ້າໜົມຖຸກກີ້, ມັນທອດ, ນ້ຳອັດລົມ), ແລະ ຄວາມກັງວົນກ່ຽວກັບຄວາມປອດໄພຂອງອາຫານຍັງຄົງຕ້ອງໄດ້ຮັບການແກ້ໄຂ. ໃນຂະນະທີ່ມີກົດລະບຽບບາງຂໍ້ແມ່ນໄດ້ຖືກຈັດຕັ້ງປະຕິບັດແລ້ວໃນ ສປປ ລາວ, ເຊັ່ນ: ລະບຽບການວ່າດ້ວຍການສົ່ງເສີມຜະລິດຕະພັນທົດແທນນ້ຳນົມແມ່, ແຕ່ກົດລະບຽບອື່ນໆທີ່ຖືກນຳໃຊ້ຢູ່ໃນຕ່າງປະເທດ, ເຊັ່ນ: ການຫ້າມຈຳໜ່າຍເຄື່ອງດື່ມທີ່ມີນ້ຳຕານຢູ່ໃນເຂດ ຫຼື ໃກ້ສະຖານທີ່ສຶກສາ, ແມ່ນຍັງບໍ່ທັນມີ.

**<u>ການເຮັດວຽກຮ່ວມກັນທີ 3: ສະພາບແວດລ້ອມ ແລະ ພຶດຕິກຳດ້ານການບໍລິໂພກອາຫານສ່ວນບຸກຄົນ.</u>** 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ແມ່ນກ່ຽວຂ້ອງໂດຍກົງກັບອົງປະກອບການບໍລິໂພກຂອງລະບົບສະບຽງອາຫານ, ທີ່ເນັ້ນໜັກໃສ່ສະພາບແວດລ້ອມ ແລະ ພຶດຕິກຳດ້ານການບໍລິໂພກອາຫານສ່ວນບຸກຄົນ, ລວມທັງໂຕເລືອກດ້ານອາຫານ, ການກະກຽມອາຫານ, ແລະ ນິໄສການກິນ. ບັນຖັດຖານ ແລະ ຫຼັກປະຕິບັດທາງສັງຄົມແມ່ນປັດໄຈສຳຄັນ, ຍົກຕົວຢ່າງ, ຄວາມເຊື່ອທາງສັງຄົມກ່ຽວກັບອາຫານບາງຢ່າງ ລວມທັງອາຫານທີ່ມີໂພຊະນາການອາດເປັນປັດໄຈທີ່ເຮັດໃຫ້ເດັກນ້ອຍເຂົ້າເຖິງອາຫານດັ່ງກ່າວໄດ້ຢ່າງຈຳກັດ (ເຊັ່ນ: ໄຂ່, ຕັບ). ໃນຂະດຽວກັນ, ຄວາມຮູ້, ທັກສະ ແລະ ປະສົບການຂອງຜູ້ປົກຄອງເອງກໍ່ມີສ່ວນສ້າງຂໍ້ຈຳກັດກ່ຽວກັບອາຫານປະເພດໃດທີ່ຕ້ອງຈັດຊື້, ກະກຽມ ແລະ ຈັດຫາໃຫ້ເດັກນ້ອຍ. ໃນບາງສະຖານທີ່ອາດຕ້ອງໄດ້ເອົາໃຈໃສ່ ເພື່ອແກ້ໄຂບັນຖັດຖານ ແລະ ຫຼັກປະຕິບັດທາງສັງຄົມທີ່ເຮັດໃຫ້ກຸ່ມຄົນໃດໜຶ່ງເກີດຄວາມສ່ຽງ (ຍົກຕົວຢ່າງ: ເດັກຍິງໄວໜຸ່ມທີ່ແຕ່ງດອງ ແລະ / ຫຼືຖືພາ) ແລະ ຄວາມສາມາດໃນການບັນລຸການບໍລິໂພກອາຫານທີ່ດີຕໍ່ສຸຂະພາບ. ນອກຈາກນັ້ນ, ດ້ວຍສື່ສັງຄົມອອນລາຍ, ອິນເຕີເນັດ, ແລະ ໂທລະພາບ, ນອກເໜືອຈາກການຕະຫຼາດ ແລະ ການໂຄສະນາຜ່ານຊ່ອງທາງເຫຼົ່ານີ້ແລ້ວນັ້ນ, ຍັງຊ່ວຍເຮັດໃຫ້ແນວໂນ້ມ ແລະ ບັນຖັດຖານທາງສັງຄົມກາຍເປັນບັນຫາທີ່ເປັນທີ່ຮັບຮູ້ໃນທົ່ວໂລກຫຼາຍຂຶ້ນ. ເດັກນ້ອຍ ແລະ ໄວໜຸ່ມແມ່ນສາມາດເຂົ້າເຖິງສື່ ແລະ ສື່ສັງຄົມອອນລາຍໄດ້ຢ່າງຫຼວງຫຼາຍ, ແລະ ເຖິງວ່າການເຂົ້າເຖິງນີ້ຈະຍັງບໍ່ທັນສົ່ງຜົນກະທົບຫຍັງທີ່ແນ່ນອນຕໍ່ພຶດຕິກຳການບໍລິໂພກອາຫານເທື່ອ, ມັນອາດສົ່ງອິດທິພົນຕໍ່ຄວາມຕ້ອງການອື່ນໆທີ່ກ່ຽວຂ້ອງກັບສັງຄົມ ແລະ ອາຫານໄດ້. ຄວາມມັກ ແລະ ລົດນິຍົມສ່ວນບຸກຄົນກໍ່ແມ່ນປັດໄຈສຳຄັນທີ່ຈະຊ່ວຍໃຫ້ສາມາດຮູ້ໄດ້ວ່າ ເດັກນ້ອຍ ແລະ ເຍົາວະຊົນຈະໄດ້ບໍລິໂພກອາຫານປະເພດໃດໃນທ້າຍທີ່ສຸດ. ຄວາມມັກດ້ານອາຫານແມ່ນໄດ້ຮັບການພັດທະນາ ແລະ ເສີມສ້າງຕັ້ງແຕ່ອາຍຸຍັງນ້ອຍ. ການພົວພັນກັນລະຫວ່າງພໍ່ແມ່ ແລະ ລູກ,

ລວມທັງການຮ້ອງຂໍອາຫານປະເພດໃດໜຶ່ງຂອງເດັກນ້ອຍ, ຈະຊ່ວຍໃຫ້ຮູ້ວ່າທ້າຍທີ່ສຸດແລ້ວ ເດັກນ້ອຍຈະໄດ້ກິນຫຍັງ. ເດັກໃນໄວຮຽນ ແລະ ເຍົາວະຊົນມັກຈະຕັດສິນໃຈຕາມຄວາມມັກຂອງຕົນເອງ, ໂດຍສະເພາະການຕັດສິນໃຈດ້ານສະບຽງອາຫານຂອງພວກເຂົາມັກຕາມຄວາມມັກສ່ວນຕົວ, ລົດຊາດທີ່ຕ້ອງການ, ຄວາມສາມາດຂອງຕົນເອງ, ແລະ ຮູບຮ່າງຂອງຕົນ ຫຼາຍກວ່າຈະອີງໃສ່ຄວາມຮູ້ ແລະ ການສຶກສາກ່ຽວກັບສະບຽງອາຫານ ແລະ ໂພຊະນາການ.

## ຜົນໄດ້ຜົນເສຍທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບ 'ການຮັບປະກັນອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ'

ເຖິງແມ່ນວ່າຄວາມພະຍາຍາມໃນການສົ່ງເສີມ ‘ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ’ ຈະສາມາດສ້າງການເຮັດວຽກຮ່ວມກັນໃນທົ່ວທຸກອົງປະກອບຂອງລະບົບສະບຽງອາຫານກໍ່ຕາມ, ຄວາມພະຍາຍາມເຫຼົ່ານີ້ຍັງສາມາດກໍ່ໃຫ້ເກີດຜົນໄດ້ຜົນເສຍ ທີ່ຈຳເປັນຕ້ອງໄດ້ມີການການວິເຄາະ ແລະ ຈັດລຽງບຸລິມະສິດເພີ່ມຕື່ມ ໂດຍຄຳນຶ່ງເຖິງສະພາບການໂຕຈິງ. ສິ່ງສຳຄັນທີ່ ສປປ ລາວ ຈະຕ້ອງເຮັດແມ່ນການຊັ່ງຊາຜົນປະໂຫຍດຂອງການພັດທະນາເສດຖະກິດກັບຜົນກະທົບຕໍ່ສາທາລະນະສຸກ, ສິ່ງແວດລ້ອມ ແລະ ຄວາມສະເໝີພາບໃນສັງຄົມ. ຄວນເອົາໃຈໃສ່ເປັນພິເສດຕໍ່ແມ່ຍິງທີ່ອາໄສຢູ່ໃນຊົນນະບົດ ແລະ ສຸຂະພາບຂອງແມ່, ເດັກ ແລະ ເຍົາວະຊົນ, ພ້ອມທັງກຸ່ມທີ່ມີຄວາມທີ່ມີຄວາມອ່ອນໄຫວສູງ, ລວມທັງກຸ່ມຊົນເຜົ່າ, ຄົນພິການ ແລະ ຜູ້ສູງອາຍຸ.

**ຜົນໄດ້ຜົນເສຍທີ 1: ການຜະລິດອາຫານ - ການດູແລເດັກ.** ໃນກໍລະນີທີ່ແມ່ຍິງຕ້ອງເລືອກລະຫວ່າງການຜະລິດອາຫານໃຫ້ຄົວເຮືອນ ແລະ ການລ້ຽງດູເດັກອ່ອນ ແລະ ລູກນ້ອຍ, ພວກເຂົາມີແນວໂນ້ມທີ່ຈະເລືອກຜະລິດອາຫານຫຼາຍກວ່າ. ສະນັ້ນ, ບໍ່ພຽງແຕ່ການບໍລິການດ້ານສຸຂະພາບເທົ່ານັ້ນ, ແຕ່ຍັງລວມເຖິງການບໍລິການດ້ານການສົ່ງເສີມກະສິກຳ, ທີ່ຕ້ອງຖືກອອກແບບໃຫ້ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຄອບຄົວໄດ້. ຄອບຄົວທີ່ມີລູກນ້ອຍຕ້ອງການຄຳແນະນຳກ່ຽວກັບການເຮັດສວນຢູ່ບ້ານ ແລະ ລ້ຽງສັດຂະໜາດນ້ອຍ (ໄກ່, ເປັດ), ເພື່ອໃຫ້ແມ່ຍິງສາມາດຜະລິດອາຫານ ແລະ ໃນເວລາດຽວກັນກໍ່ສາມາດໃຫ້ການເບິ່ງແຍງເດັກໄດ້ນຳ. ນອກຈາກນີ້, ທັງການບໍລິການດ້ານສຸຂະພາບ ແລະ ກະສິກຳ ຕ້ອງຊຸກຍູ້ໃຫ້ຜູ້ຊາຍເຂົ້າມາມີສ່ວນຮ່ວມເພື່ອສົ່ງເສີມແຮງງານທີ່ມີຄວາມເທົ່າທຽມເພີ່ມຂຶ້ນໃນການຜະລິດສະບຽງອາຫານ ແລະ ການລ້ຽງດູເດັກ.

**ຜົນໄດ້ຜົນເສຍທີ 2: ການປູກພືດເສດຖະກິດ - ໂພຊະນາການ.** ຄວາມພະຍາຍາມທີ່ສຸມໃສ່ເປັນພິເສດເຂົ້າໃນການຍົກສູງການຜະລິດກະສິກຳອາດຈະບໍ່ສອດຄ່ອງກັບຄວາມພະຍາຍາມໃນການສົ່ງເສີມ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ.' ໃນຊ່ວງຊຸມປີທີ່ຜ່ານມາ, ຫຼາຍພາກສ່ວນພາຍໃຕ້ຂະແໜງການກະສິກຳແມ່ນໄດ້ຫັນມາເນັ້ນໜັກໃສ່ການຜະລິດພືດເສດຖະກິດຊະນິດດຽວ ເພື່ອສະໜອງໃຫ້ແກ່ຕະຫຼາດພາຍໃນປະເທດ ແລະ ພາກພື້ນ, ລວມທັງການສຳປະທານ ແລະ ການປູກຝັງ (WFP 2020). ເຖິງແມ່ນວ່າການກະສິກຳທີ່ຂັບເຄື່ອນໂດຍຕະຫຼາດຈະສາມາດເພີ່ມລະດັບຂອງລາຍຮັບໃຫ້ແກ່ບ້ານ ແລະ ຄົວເຮືອນໄດ້ກໍ່ຕາມ, ມັນອາດຈະບໍ່ຊ່ວຍຜັນຂະຫຍາຍເປົ້າໝາຍດ້ານ 'ອາຫານທີ່ປອດໄພ ແລະ ມີໂພຊະນາການ' ໄດ້ ຍ້ອນຜູ້ຜະລິດຂະໜາດນ້ອຍແບບດັ້ງເດີມ ທີ່ເປັນທີ່ຮັບຮູ້ກັນວ່າເປັນຜູ້ຜະລິດສະບຽງອາຫານທີ່ມີຄວາມຫຼາກຫຼາຍໃນອັດຕາສູງ ເພື່ອສະໜອງໃຫ້ແກ່ປະຊາກອນທ້ອງຖິ່ນ ແມ່ນມີຈຳນວນທີ່ຫຼຸດລົງ, ໃນຂະນະທີ່ພຶດຕິກຳດ້ານການບໍລິໂພກ ແລະ ການໃຊ້ຈ່າຍຂອງຄົວເຮືອນກໍ່ບໍ່ສາມາດສະທ້ອນໃຫ້ເຫັນເຖິງທາງເລືອກທີ່ດີດ້ານອາຫານທີ່ມີໂພຊະນາການ. ດ້ວຍເຫດນີ້, ສິ່ງສຳຄັນແມ່ນຕ້ອງໃຫ້ມາດຕະການແຊກແຊງ ຫຼື ໂອກາດດ້ານການຄ້າ ທີ່ແນໃສ່ເພີ່ມທະວີລາຍຮັບຂອງຄອບຄົວ ໄດ້ຮັບການສົ່ງເສີມໂດຍຫຼັກປະຕິບັດອື່ນໆດ້ານການປ່ຽນແປງພຶດຕະກຳ ເພື່ອຍົກສູງຜົນໄດ້ຮັບດ້ານໂພສະນາການໃຫ້ໄດ້ຫຼາຍທີ່ສຸດ. ບົດລາຍງານລ່າສຸດໄດ້ແນະນຳໃຫ້ທົບທວນຄືນຜົນກະທົບຂອງການປ່ຽນແປງຮູບແບບການນຳໃຊ້ທີ່ດິນ ທີ່ກ່ຽວຂ້ອງກັບການເຂົ້າເຖິງອາຫານທີ່ມີໂພຊະນາການໃນ ສປປ ລາວ (ອົງການສຸພະນິມິດ, ປີ 2020).

**ຜົນໄດ້ຜົນເສຍທີ 3: ຕະຫຼາດ - ຄວາມປອດໄພຂອງອາຫານ ແລະ ໂພຊະນາການ.** ກ່ຽວກັບສະພາບແວດລ້ອມດ້ານສະບຽງອາຫານພາຍນອກ, ຄວາມພະຍາຍາມໃນການສົ່ງເສີມການພັດທະນາຕະຫຼາດໃຫ້ຫຼາຍຂຶ້ນກວ່າເກົ່າອາດຈະບໍ່ສອດຄ່ອງກັບຄວາມພະຍາຍາມໃນການສົ່ງເສີມ ‘ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ.’ ຍ້ອນວ່າຫຼາຍຄົວເຮືອນຕ້ອງໄດ້ອາໄສອາຫານທີ່ຊື້ຈາກພາຍນອກຫຼາຍຂຶ້ນ, ຜູ້ທີ່ມີຄວາມຫຍຸ້ງຍາກດ້ານເສດຖະກິດ-ວັງຄົມ, ຫຼື ດຳລົງຊີວິດໂດຍປາສະຈາກເງິນສົດທີ່ສາມາດໃຊ້ຈ່າຍໄດ້ ອາດຈະຕ້ອງໄດ້ປະເຊີນກັບສິ່ງທ້າທາຍໃນການຄຸ້ມຄອງອຳນາດໃນການຈັດຫາສະບຽງອາຫານຂອງຕົນ ຍ້ອນວ່າລາຄາຈະເປັນໂຕກຳນົດສິ່ງທີ່ພວກເຂົາສາມາດ ແລະ ບໍ່ສາມາດບໍລິໂພກໄດ້. ບັນຫານີ້ແມ່ນພົບເຫັນໄດ້ຢ່າງຊັດເຈນໂດຍສະເພາະໃນເຂດຮອບນອກຂອງຕົວເມືອງ ຫຼື ໃນຊຸມຊົນທີ່ກຳລັງຟື້ນຟູຄືນຈາກໄພພິບັດທາງທຳມະຊາດ ຍ້ອນວ່າແຫຼ່ງອາຫານທີ່ບໍ່ເປັນທາງການ ແລະ ທີ່ໄດ້ຈາກຜະລິດເອງແມ່ນມີຈຳກັດ.

ນອກຈາກນັ້ນ, ແມ້ກະທັ້ງຄອບຄົວທີ່ມີລາຍຮັບສູງ, ກໍ່ອາດຈະບໍ່ເລືອກບໍລິໂພກອາຫານທີ່ມີໂພຊະນາການ ຍ້ອນຄວາມຫຼາກຫຼາຍຂອງໂຕເລືອກດ້ານສະບຽງອາຫານທີ່ເພີ່ມຂຶ້ນ ແລະ ມີພ້ອມສະໜອງໃຫ້ຢູ່ຕະຫຼາດ ໂດຍມີແຮງຈູງໃຈດ້ານສັງຄົມ ແລະ ວັດທະນະທຳເປັນປັດໄຈທີ່ສົ່ງອິດທິພົນຕໍ່ພຶດຕິກຳການບໍລິໂພກຂອງພວກເຮົາ (ອົງການສຸພະນິມິດ, ປີ 2020). ການສົ່ງເສີມ ‘ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ” ໃນສະພາບແວດລ້ອມດ້ານສະບຽງອາຫານພາຍນອກອາດຈຳເປັນຕ້ອງໄດ້ມີການຄວບຄຸມຕະຫຼາດ ແລະ ການນຳເຂົ້າອາຫານ, ລວມທັງເຮັດຕະຫຼາດໃຫ້ແກ່ຜະລິດຕະພັນອາຫານເສີມ, ເພື່ອເພີ່ມແຮງຈູງໃຈ ແລະ ຄວາມສາມາດໃນການເຂົ້າເຖິງໂຕເລືອກດ້ານສະບຽງອາຫານທີ່ດີຕໍ່ສຸຂະພາບ ໃຫ້ໄດ້ຫຼາຍທີ່ສຸດ. ວາລະສຳຄັນອື່ນໆທີ່ກ່ຽວຂ້ອງກັບ “ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ” ປະກອບມີການຫຼຸດຜ່ອນຄວາມທຸກຍາກ ແລະ ການປົກປ້ອງທາງສັງຄົມ, ເຊິ່ງຈຳເປັນຕ້ອງໄດ້ຮັບການຈັດຕັ້ງປະຕິບັດໄປພ້ອມໆກັບ, ແລະ ໃຫ້ມີຄວາມດຸ່ນດ່ຽງກັນກັບ, ການພັດທະນາຕະຫຼາດ. ການພັດທະນາຕະຫຼາດຄວນໄດ້ຮັບການອອກແບບ ເພື່ອເຮັດໃຫ້ທຸກຄົນສາມາດເຂົ້າເຖິງອາຫານທີ່ມີໂພຊະນາການ ແລະ ນະໂຍບາຍສົ່ງເສີມຕ່າງໆ ທີ່ຊ່ວຍຍົກສູງບົດບາດໃຫ້ແກ່ຜູ້ທີ່ມີຄວາມອ່ອນໄຫວທີ່ສຸດ ໃຫ້ສາມາດເລືອກບໍລິໂພກອາຫານທີ່ມີໂພຊະນາການໄດ້ດີຂຶ້ນ ກໍ່ຄວນໄດ້ຮັບການພິຈາລະນາ.

## ເສັ້ນທາງສຳລັບ ສປປ ລາວ ໃນການຮັບປະກັນ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ'.

ເສັ້ນທາງສຳລັບ ສປປ ລາວ ເພື່ອຮັບປະກັນ 'ສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ຈະຕ້ອງມີການປຶກສາຫາລືກັນໃນວົງກວ້າງ. ປະຊາຄົມພັດທະນາສາກົນໄດ້ສະແດງຄວາມສົນໃຈມາຢ່າງຍາວນານ ໃນການເຊື່ອມໂຍງການກະສິກຳເຂົ້າກັບໂພຊະນາການ, ແລະ ເພື່ອພັດທະນາເສັ້ນທາງສຳລັບປະເທດຕ່າງໆ, ເຊັ່ນ: ສປປ ລາວ ໃນການປັບປຸງລະບົບສະບຽງອາຫານ ເພື່ອ 'ຮັບປະກັນສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ.' ເຖິງຢ່າງໃດກໍຕາມ, ເສັ້ນທາງໂດຍກົງໃນ ສປປ ລາວ ຍັງຕ້ອງໄດ້ຮັບການປຶກສາຫາລືກັນຕື່ມ. ລຸ່ມນີ້ແມ່ນປະເດັນທີ່ສະເໜີເຂົ້າໃນການປຶກສາຫາລື ແລະ ການຈັດລຽງບຸລິມະສິດ.

ອົງປະກອບຫຼັກຂອງເສັ້ນທາງດັ່ງກ່າວ ຄວນປະກອບມີ (ໃຫ້ຂໍ້ມູນໂດຍ  Hawkes et al. 2020):

- ຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບບັນຫາດ້ານໂພຊະນາການ, ພຶດຕິກຳດ້ານການບໍລິໂພກອາຫານ ລວມເຖິງມຸມມອງຂອງຜູ້ບໍລິໂພກ ແລະ ມັນມີການພົວພັນກັບສະພາບແວດລ້ອມດ້ານອາຫານ ແລະ ສັງຄົມຄືແນວໃດ ເພື່ອໃຫ້ມີອິດທິພົນຕໍ່ພຶດຕິກຳ ແລະ ລົດຊະນິຍົມ (ລາຄາ/**ການ**ຕະຫຼາດ, ຜະລິດຕະພັນທີ່ພ້ອມຈຳໜ່າຍ, ອື່ນໆ) ແລະ ການກຳນົດບຸລິມະສິດການຄົ້ນຄວ້າທີ່ຊັດເຈນ;
- ການພັດທະນາຄູ່ມືແຫ່ງຊາດດ້ານການບໍລິໂພກອາຫານທີ່ອີງໃສ່ຫຼັກຖານ ທີ່ຊ່ວຍໄຈ້ແຍກອຸປະສັກຕ່າງໆຂອງພາວະການຂາດສານອາຫານ ໃນແຕ່ລະສະພາບການທີ່ແຕກຕ່າງກັນ;
- ການພັດທະນາມາດຕະຖານດ້ານໂພຊະນາການໃຫ້ແກ່ໂຄງການສະໜອງອາຫານໃນໂຮງຮຽນ ແລະ ໂຄງການປົກປ້ອງທາງສັງຄົມ;
- ການປັບປຸງໃນສະພາບແວດລ້ອມດ້ານອາຫານ ທີ່ສົ່ງເສີມໂພຊະນາການ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ, ລວມເຖິງການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ການສະໜອງໃນທ້ອງຖິ່ນ;
- ຊຸກຍູ້ນະວັດຕະນະກຳ ໂດຍພາກເອກະຊົນ ເພື່ອເຮັດໃຫ້ມີອາຫານທີ່ອຸດົມສົມບູນດ້ວຍໂພຊະນາການມີລາຄາທີ່ສາມາດຈັບຕ້ອງໄດ້, ເຂົ້າເຖິງໄດ້, ແລະ ປອດໄພຕໍ່ຜູ້ບໍລິໂພກ, ເຊິ່ງໃນຂະນະດຽວກັນກໍ່ສະໜັບສະໜູນຊີດວິການເປັນຢູ່ຂອງຜູ້ຜະລິດນຳ, ຍົກຕົວຢ່າງ, ການປັບປຸງສູດຂອງຜະລິດຕະພັນ ຫຼື ການນຳໃຊ້ເຕັກໂນໂລຊີທີ່ເປັນນະວັດຕະກຳໃໝ່ ໂດຍຊາວຜູ້ຜະລິດຂະໜາດນ້ອຍ ທີ່ຊ່ວຍປັບປຸງກຳລັງການຜະລິດ ແລະ ຄວາມປອດໄພຂອງອາຫານທີ່ມີປະໂຫຍດຕໍ່ສຸຂະພາບ, ມີລາຄາທີ່ສາມາດຈັບຕ້ອງໄດ້. ການລະບຸແຮງຈູງໃຈ, ແລະ ແຮງກະຕ້ອນ, ພ້ອມທັງສະໜັບສະໜຸນນະວັດຕະກຳໃໝ່ທີ່ຄຳນຶງເຖິງໂພຊະນາການ, ແລະ ຕ່ອງໂສ້ການສະໜອງທັງພາຍໃນ ແລະ ຕ່າງປະເທດ;
- ສຸມໃສ່ສະໜອງທຶນເພີ່ມຂຶ້ນເຂົ້າໃນວຽກງານດ້ານໂພສະນາການ ແລະ ນະໂຍບາຍລັດຕ່າງໆ, ໂດຍສະເພາະໃນຂະແໜງກະສິກຳ. ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຕ້ອງການເຂົ້າເຖິງຊັບພະຍາກອນດເານເງິນທຶນ ແລະ ການສ້າງຂີດຄວາມສາມາດ ເພື່ອສະໜັບສະໜູນການປັບປຸງການຜະລິດສະບຽງອາຫານທີ່ປອດໄພ ແລະ ມີໂພຊະນາການ;
- ການລົງທຶນຫຼາຍຂຶ້ນເຂົ້າໃນໂຄງລ່າງພື້ນຖານ ແລະ ຕ່ອງໂສ້ມູນຄ່າດ້ານກະສິກຳ, ຈັດລຽງບຸລິມະສິດຂົງເຂດທີ່ບໍ່ມີຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ຍົກຕົວຢ່າງ, ຫົນທາງຈາກສວນໄປຫາຕະຫຼາດໃນເຂດຊົນນະບົດ;
- ການສ້າງຄວາມຕ້ອງການໃນການບໍລິໂພກອາຫານທີ່ດີຕໍ່ສຸຂະພາບ ໂດຍສະເພາະເດັກ ແລະ ເຍົາວະຊົນ ເນື່ອງຈາກວ່ານີ້ເປັນຊ່ວງໄລຍະສຳຄັນໃນການກຳນົດຄຸນຄ່າຂອງອາຫານ. ການໃຫ້ຄວາມຮູ້ທາງດ້ານໂພຊະນາການ, ການກະຕຸ້ນ, ການຝຶກອົບຮົມ, ການລົນນະລົງຜ່ານສື່ສັງຄົມອອນລາຍ, ເຕັກນິກທາງດ້ານການຕະຫຼາດ, ຕະຫຼອດຈົນເຖິງແຮງຈູງໃຈ ແລະ ແຮງກະຕຸ້ນທາງເສດຖະກິດ ກໍ່ສາມາດຊ່ວຍປ່ຽນແປງຄວາມຕ້ອງການໃນການບໍລິໂພກອາຫານໄດ້. ຍົກຕົວຢ່າງ, ກັບເຍົາວະຊົນ, ໂພສະນາການບໍ່ແມ່ນແຮງຈູງໃຈທີ່ເປັນບຸລິມະສິດຕົ້ນຕໍ ໃນເວລາທີ່ພວກເຂົາເລືອກປະເພດອາຫານທີ່ຈະບໍລິໂພກ. ການໂອ້ລົມກັນກ່ຽວກັບສິ່ງໃດທີ່ກ່ຽວຂ້ອງກັບພວກເຂົາແມ່ນວຽກງານທີ່ສຳຄັນ ເພື່ອໃຫ້ເຂົ້າໃຈວ່າປັດໄຈໃດທີ່ສາມາດຊຸກຍູ້ການປ່ຽນແປງໄດ້ຢ່າງມີປະສິດທິພາບ.

ອົງປະກອບອື່ນໆຂອງເສັ້ນທາງໃນການເຊື່ອມໂຍງການກະສິກຳເຂົ້າກັບໂພຊະນາການ, ເຊິ່ງແມ່ນຂົງເຂດທີ່ເປັນໄປໄດ້ໃນການແຊກແຊງ, ອາດລວມມີ (Hoberg et al. 2013):

- ລາຍໄດ້ທີ່ສູງຂຶ້ນ – ສິ່ງເຫຼົ່ານີ້ໄດ້ປັບປຸງການເປັນຢູ່ຂອງຄົວເຮືອນໃຫ້ດີຂຶ້ນ ແລະ ສະໜອງທາງເລືອກທີ່ຫຼາກຫຼາຍ ແລະ ດີກວ່າເກົ່າໃຫ້ແກ່ຄົວເຮືອນ, ຢ່າງໃດກໍ່ຕາມ, ຈະຕ້ອງໄດ້ຄຳນຶງວ່າລາຍຮັບທີ່ສູງຂຶ້ນອາດສົ່ງຜົນກະທົບພຽງເລັກນ້ອຍຕໍ່ຜົນໄດ້ຮັບດ້ານໂພຊຊະນາການ;
- ສະໜອງການສະໜັບສະໜູນໂດຍສະເພາະໃຫ້ກຸ່ມທີ່ມີຄວາມອ່ອນໄຫວ ຜູ້ທີ່ບໍ່ໄດ້ຮັບຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ບໍ່ມີກຳລັງຊື້ອາຫານທີ່ມີຄຸນຄ່າທາງໂພຊະນາການ ໂດຍຜ່ານການລິເລີ່ມເຄືອຂ່າຍຄວາມປອດໄພທາງສັງຄົມທີ່ຄຳນຶງເຖິງໂພຊະນາການ;
- ຍົກສູງການເຂົ້າເຖິງ ແລະ ການບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການ ໂດຍຜ່ານການຜະລິດກະສິກຳທີ່ເພີ່ມຂຶ້ນ ແລະ ລາຄາອາຫານທີ່ຫຼຸດຕ່ຳລົງ;
- ຍົກສູງລາຍຮັບ ແລະ ສົ່ງເສີມບົດບາດທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ;
- ປົກປ້ອງຂີດຄວາມສາມາດ ແລະ ການປະຕິບັດງານຂອງຜູ້ລ້ຽງດູເດັກ, ຍົກຕົວຢ່າງ, ເຖິງວ່າແມ່ຍິງຈະມີສ່ວນຮ່ວມຫຼາຍກວ່າໃນການຜະລິດກະສິກຳ, ການແປຮູບອາຫານ ແລະ ການຕະຫຼາດກໍ່ຕາມ, ໃຫ້ສືບຕໍ່ສະໜັບສະໜູນແມ່ຍິງທີ່ໃຫ້ການລ້ຽງ ແລະ ໃຫ້ອາຫານແກ່ເດັກອ່ອນ ແລະ ລູກນ້ອຍ;
- ປັບປຸງສຸຂະພາບ ແລະ ໂພຊະນາການຂອງແມ່ຍິງ.

ອົງປະກອບດ້ານສະຖາບັນຂອງເສັ້ນທາງດັ່ງກ່າວອາດລວມມີ:

- ການສ້າງສະພາບແວດລ້ອມດ້ານນະໂຍບາຍທີ່ເອື້ອອຳນວຍ ທີ່ສາມາດປົກປ້ອງຄວາມຕ້ອງການດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ທຸກຄົນ, ໂດຍສະເພາະປະຊາກອນທີ່ມີຄວາມອ່ອນໄຫວ. ວຽກງານນີ້ຄວນລວມມີມາດຕະການແຊກແຊງ ທີ່ຊ່ວຍແກ້ໄຂບັນຫາທີ່ກ່ຽວຂ້ອງກັບຫຼາຍ

ຂົງເຂດ, ເຊັ່ນ: ການປົກປັກຮັກສາສິ່ງແວດລ້ອມ, ການປັບໂຕ ແລະ ຄວາມທົນທານຕໍ່ສະພາບດິນຟ້າອາກາດ, ການປົກປ້ອງທາງສັງຄົມ, ແລະ ຄວາມສະເໝີພາບຍິງຊາຍ;

- ການສ້າງກົນໄກຮ່ວມຫຼາຍຂະແໜງການ, ເຊັ່ນ: ໜ່ວຍງານວິຊາການ ເຊິ່ງພັນທະໃນການສ້າງຄວາມກ້າວໜ້າໃຫ້ແກ່ ກອງປະຊຸມລະດັບຊາດ, ວາງແຜນ ແລະ ປະສານງານວຽກງານໃນການພັດທະນາລະບົບສະບຽງອາຫານທີ່ມີຄວາມດຸ່ນດ່ຽງ ແລະ ກວມລວມໃນ ສປປ ລາວ. ໜ່ວຍງານວິຊາການນີ້ຕ້ອງຢ່າງໜ້ອຍໃຫ້ຄູ່ຮ່ວມງານຫຼັກ ແລະ ບັນດາກະຊວງທີ່ກ່ຽວຂ້ອງເຂົ້າມາມີສ່ວນຮ່ວມໃນການສ້າງຄວາມກ້າວໜ້າໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ;
- ລະບຸ ແລະ ບັງຄັບໃຊ້ນະໂຍບາຍການເງິນ ເພື່ອກຳນົດອົງປະກອບຂອງລະບົບສະບຽງອາຫານ ທີ່ຊ່ວຍເພີ່ມໂອກາດໃນການສະໜອງ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ໃຫ້ໄດ້ສູງທີ່ສຸດ;
- ເສີມຂະຫຍາຍສຽງ ແລະ ການເບິ່ງເຫັນປະຊາຊົນທີ່ຢູ່ໃນເຂດຊົນນະບົດ ຜູ້ທີ່ມີຄວາມອ່ອນໄຫວສູງຕໍ່ຜົນກະທົບ ແລະ ການປ່ຽນແປງເສດຖະກິດໃນພາກພື້ນ ທີ່ສົ່ງຜົນກະທົບຕໍ່ລະບົບສະບຽງອາຫານ, ເພື່ອໃຫ້ພວກເຂົາສາມາດປະກອບສ່ວນເຂົ້າໃນການວາງແຜນ ແລະ ໂຄງການໃນລະດັບຊາດ, ແຂວງ, ແລະ ເມືອງໄດ້. ໜຶ່ງໃນວິທີທີ່ສາມາດຈັດຕັ້ງປະຕິບັດໄດ້ກໍ່ຄືດຳເນີນການຄົ້ນຄວ້າເພື່ອບັນທຶກ ແລະ ວິເຄາະປະສົບໃຊ້ຊີວິດການຂອງປະຊາຊົນທີ່ປະສົບກັບຜົນກະທົບຈາກການປ່ຽນແປງຂອງລະບົບສະບຽງອາຫານ, ບັນທຶກຕົວຢ່າງເພີ່ມເຕີມກ່ຽວກັບການປັບໂຕໃນທ້ອງຖິ່ນ ແລະ ການແກ້ໄຂບັນຫາຂອງຄົນພື້ນເມືອງ ໂດຍການຊ່ອງທາງການສື່ສານສອງດ້ານ ແລະ ການການຮຽນຮູ້ຮ່ວມກັນ;
- ສືບຕໍ່ລົງທຶນໃນບັນດາເມືອງ ແລະ ບ້ານ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດແຜນກະສິກຳທີ່ດີ ທີ່ມີການພິຈາລະນາຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມປອດໄພຂອງອາຫານ, ແລະ ໂພຊະນາການ ເຂົ້ານຳ;
- ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວນໃຫ້ ສະພາແຫ່ງຊາດ ເຂົ້າມາມີສ່ວນຮ່ວມນຳ, ເຊິ່ງສາມາດມີສ່ວນຮ່ວມໃນຮູບແບບຂອງການເປັນຕົວແທນ, ການອອກກົດໝາຍ, ການຈັດສັນງົບປະມານ, ແລະ ການຄຸ້ມຄອງ (IPU ແລະ FAO 2021).

## ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ

ຄູ່ຮ່ວມງານທີ່ກ່ຽວຂ້ອງທັງໝົດໄດ້ລະບຸຄວາມຕ້ອງການໃນການຮ່ວມມືກັນ ເພື່ອວາງແຜນ ແລະ ຈັດຕັ້ງປະຕິບັດລະບົບສະບຽງອາຫານ ແລະ ໂຄງການດ້ານໂພຊະນາການ. ອາຫານແມ່ນປັດໄຈພື້ນຖານໃນການປັບປຸງສະຖານະດ້ານໂພຊະນາການໃນ ສປປ ລາວ ແລະ ຄວາມຍືນຍົງຂອງການລົງທຶນທີ່ມີຢູ່ໃນປັດຈຸບັນ.

ເປັນທີ່ຮັບຮູ້ຢ່າງເຂັ້ມແຂງວ່າການປັບປຸງດ້ານການຜະລິດອາຫານ ແລະ ຕ່ອງໂສ້ມູນຄ່າຍັງບໍ່ພຽງພໍໃນການບັນລຸຜົນໄດ້ຮັບດ້ານໂພຊະນາການ ແລະ ຮັບປະກັນວ່າອາຫານທີ່ຜະລິດໃນ ສປປ ລາວ ຈະໄປເຖິງພາກສ່ວນຕ່າງໆຂອງຊຸມຊົນໃນລາວ, ໂດຍສະເພາະເດັກ ແລະ ເຍົາວະຊົນ. ສິ່ງສຳຄັນທີ່ບໍ່ແພ້ກັນກໍ່ຄືພັນທະດ້ານການສຶກສາ ແລະ ການສ້າງລະບົບສະບຽງອາຫານ ແລະ ສະພາບແວດລ້ອມທີ່ບໍ່ກ່ຽວຂ້ອງກັບສະບຽງອາຫານ ທີ່ສ້າງແຮງຈູງໃຫ້ແກ່ຮູບແບບ ແລະ ພຶດຕິກຳການບໍລິໂພກ ທີ່ສົ່ງຜົນດີດ້ານການເລືອກບໍລິໂພກອາຫານທີ່ມີໂພຊະນາການ ແລະ ດີຕໍ່ສຸຂະພາບ. ສິ່ງນີ້ຈຳເປັນຕ້ອງໄດ້ອາໄສຄວາມມຸ່ງໝັ້ນຈາກຫຼາຍຂະແໜງການ ແລະ ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ເພື່ອຢຸດຢັ້ງຮູບແບບການຜະລິດສະບຽງອາຫານທີ່ເນັ້ນຄວາມສຳຄັນສະເພາະແຕ່ທາງດ້ານເສດຖະກິດ ໃນ ສປປ ລາວ.

ໃນການປຶກສາຫາລືເບື້ອງຕົ້ນຍັງໄດ້ລະບຸວ່າການຈະປ່ຽນແປງລະບົບສະບຽງອາຫານຄືນໃໝ່ ເພື່ອໃຫ້ສາມາດສະໜອງ 'ອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ' ໄດ້ນັ້ນ, ແຕ່ລະວຽກງານຈະຕ້ອງຖືກສ້າງຂຶ້ນບົນພື້ນຖານຂອງຫຼັກການພວກເຮົາພ້ອມກັນກ້າວໄປ. ສິ່ງນີ້ຈະຊ່ວຍຮັບປະກັນວ່າການຕັດສິນໃຈດ້ານນະໂຍບາຍແມ່ນຄຳນຶງເຖິງຜົນກະທົບຕໍ່ຊາວກະສິກອນຂະໜາດນ້ອຍ, ກຸ່ມຄົນທີ່ມີຄວາມອ່ອນໄຫວ, ທີ່ລວມມີ: ແມ່ຍິງ, ເດັກ, ຄົນພິການ, ກຸ່ມຊົນເຜົ່າ ແລະ ຄົວເຮືອນທີ່ທຸກຍາກທັງໃນຊຸມຊົນຕົວເມືອງ ແລະ ເຂດຊົນນະບົດ. ໃນກໍລະນີທີ່ມາດຕະການແຊກແຊງທາງດ້ານນະໂຍບາຍ ອາດສົ່ງຜົນກະທົບຕໍ່ການດຳລົງຊີວິດ ແລະ ຄວາມທົນທານຂອງກຸ່ມຄົນທີ່ມີຄວາມອ່ອນໄຫວ, ຄວນດຳເນີນໂຄງການເສີມຄວບຄູ່ກັນໄປ ເພີ່ມເສີມຂະຫຍາຍຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ທຸກຄົນ ໃຫ້ໄດ້ຫຼາຍທີ່ສຸດ.


### ສະແດງຄວາມຂອບໃຈ

ເອກະສານສະບັບນີ້ໄດ້ຖືກກະກຽມຂຶ້ນໂດຍທີມງານ UNICEF-WFP. ຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ບຸກຄົນຜູ້ທີ່ໄດ້ປະກອບສ່ວນເຂົ້າໃນການປຶກສາຫາລືຢ່າງວ່ອງໄວ ໃນການກະກຽມເອກະສານພື້ນຖານນີ້: ກະຊວງສາທາລະນະສຸກ - 2 ທ່ານ; ກະຊວງສຶກສາທິການ - 1 ທ່ານ; ສະພາການຄ້າແຫ່ງຊາດລາວ - 1 ທ່ານ; ChildFund, PSI, Save the Children - 1 ທ່ານຈາກແຕ່ລະອົງການ; SUN CSA - 7 ທ່ານ, ໂດຍຕາງໜ້າໃຫ້ແກ່ 2 NPA ຂອງລາວ ແລະ 3  INGO.

# ເອກະສານຊ້ອນທ້າຍ 2: ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ

**ນຳພາໂດຍ:** ກະຊວງກະສິກຳ ແລະ ປ່າໄມ້ (**MAF**) ແລະ ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ (**FAO**)

**ໜ່ວຍງານ ແລະ ກົມກອງຮ່ວມມື**: ກະຊວງອຸດສາຫະກຳ ແລະ ການຄ້າ (**MoIC**), ກະຊວງແຜນການ ແລະ ການລົງທຶນ (**MPI**), ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (**NIER**), ສູນການຄ້າສາກົນ (**ITC**), ອົງການສະຫະປະຊາຊາດເພື່ອການພັດທະນາ (**UNDP**), ອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ (**UNEP**), ອົງການການພັດທະນາ ແລະ ການຮ່ວມມືສະວິດ (**SDC**), ແລະ ອົງການສະຫະປະຊາຊາດເພື່ອການພັດທະນາອຸດສະຫະກຳ (**UNIDO**).

## ໂອກາດ ແລະ ສິ່ງທ້າທາຍອັນໃຫຍ່ຫຼວງ (ທີ່ ສປປ ລາວ ກຳລັງປະເຊີນຢູ່) ທີ່ກ່ຽວຂ້ອງກັບ 'ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ'

ຂະແໜງການກະສິກຳທີ່ເຂັ້ມແຂງ ແລະ ມີປະສິດທິພາບຈະຍັງມີຄວາມສຳຄັນໃນການຕອບສະໜອງຄວາມປາດຖະໜາຂອງປະເທດໃນການຫຼຸດຜ່ອນຄວາມທຸກຍາກ, ການຂະຫຍາຍໂຕແບບກວມລວມ ແລະ ການຫຼຸດພົ້ນອອກຈາກ ສະຖານະພາບດ້ອຍພັດທະນາ ໃນທີ່ສຸດ. ການຜະລິດກະສິກຳກວມເອົາ 16.6% ຂອງ GDP ແຫ່ງຊາດ, ທີ່ກວມເອົາເກືອບ 70 ສ່ວນຮ້ອຍຂອງການຈ້າງງານທັງໝົດ ແລະ ຫຼາຍກວ່າ 60 ສ່ວນຮ້ອຍຂອງລາຍຮັບ ແລະ ລາຍຈ່າຍໃນກຸ່ມທີ່ມີລາຍໄດ້ຕ່ຳ. ສຳລັບອະນາຄົດອັນໃກ້ນີ້, ການກະສິກຳຈະສືບຕໍ່ເປັນແຫຼ່ງລາຍຮັບ ແລະ ແຫຼ່ງສະໜັບສະໜຸນຊີວິດການເປັນຢູ່ຫຼັກໃຫ້ແກ່ປະຊາກອນສ່ວນໃຫຍ່ - ເຊິ່ງສ່ວນຫຼາຍຍັງດຳເນີນການຜະລິດຢູ່ໃນລະດັບກຸ້ມກິນຢູ່. ການຫຼຸດຜ່ອນຄວາມທຸກຍາກ ແລະ ການແຈກຢາຍຜົນປະໂຫຍດດ້ານການພັດທະນາໃຫ້ກວ້າງຂວາງຂຶ້ນຕື່ມຈຳເປັນຕ້ອງມີມາດຕະການ ເພື່ອຊ່ວຍໃຫ້ຊາວກະສິກອນ ແລະ ຜູ້ຜະລິດໃນລະບົບຕ່ອງໂສ້ການສະໜອງ ສາມາດເພີ່ມກຳລັງການຜະລິດ, ສຸມໃສ່ການຜະລິດເພື່ອການຄ້າຫຼາຍຂຶ້ນ, ແລະ ມີການເຊື່ອມຕໍ່ກັບຕະຫຼາດໄດ້ດີຂຶ້ນ.

ຄວາມພະຍາຍາມໃນການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນ ສປປ ລາວ ແມ່ນຢູ່ໃນໄລຍະສຳຄັນ ພ້ອມກັບການຮັບຮູ້ວ່າການເພີ່ມມູນຄ່າຂອງຜະລິດຕະພັນກະສິກຳ ໂດຍຜ່ານນະວັດຕະກຳດ້ານກະສິກຳ ຈະສາມາດປັບປຸງຄວາມໝັ້ນຄົງ ແລະ ຄວາມປອດໄພດ້ານສະບຽງອາຫານ, ໂພຊະນາການ, ການຈ້າງງານ ແລະ ຫຼຸດຜ່ອນການເອື່ອຍອີງໃສ່ຜະລິດຕະພັນນຳເຂົ້າ. ປະເທດລາວສາມາດສືບຕໍ່ເປັນສູນກາງດ້ານຊີວະນາໆພັນ ບ່ອນທີ່ປະຊາຊົນທ້ອງຖິ່ນບໍລິໂພກອາຫານທີ່ຫຼາກຫຼາຍສູງຂຶ້ນ ທີ່ມາຈາກຜົນຜະລິດກະສິກຳ ແລະ ຕ່ອງໂສ້ມູນຄ່າແບບຍືນຍົງດ້ານສິ່ງແວດລ້ອມ. ໃນວັດທະນະທຳລາວ, ການໃຫ້ຄຸນຄ່າຕໍ່ເຂົ້າ, ພືດພັນ ແລະ ໝາກໄມ້ຫຼາຍຮ້ອຍຊະນິດທີ່ແຕກຕ່າງກັນ, ຜະລິດຕະພັນທີ່ບໍ່ແມ່ນໄມ້ (NTFPs), ສັດນ້ຳ ແລະ ແມງໄມ້, ພ້ອມດ້ວຍການປາກົດໂຕຂອ
ຮູບແບບການກະສິກຳທີ່ເນັ້ນໜັກດ້ານການຄ້າຫຼາຍກວ່າເກົ່າ, ໄດ້ສະໜອງພື້ນຖານອັນເຂັ້ມແຂງໃນການສົ່ງເສີມລະບົບສະບຽງອາຫານທີ່ເປັນມິດກັບທຳມະຊາດ. ຜົນກະທົບຂອງການແຜ່ລະບາດຂອງ ພະຍາດໂຄວິດ-19 ຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານໄດ້ສະແດງໃຫ້ເຫັນເຖິງຄວາມຍືນຍົງ ແລະ ຄວາມທົນທານຂອງລະບົບສະບຽງອາຫານລາວ. ການຂາດແຄນສະບຽງອາຫານແບບຮຸນແຮງ, ທີ່ຄາດຄະເນໂດຍໜ່ວຍງານ ສປຊ ໃນປີກາຍນີ້, ແມ່ນບໍ່ເຄີຍເກີດຂຶ້ນມາກ່ອນ.

ສປປ ລາວ ຕ້ອງໄດ້ປະເຊີນກັບສິ່ງທ້າທາຍຫຼາຍຢ່າງໃນຂະແໜງການກະສິກຳ ລວມທັງບັນຫາຕ່າງໆທີ່ກ່ຽວຂ້ອງກັບໄພພິບັດທາງທຳມະຊາດ (ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ພາວະດິນເຊາະເຈື່ອນ), ການປ່ຽນແປງຂອງສະພາບດິນຟ້າອາກາດ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການແຜ່ລະບາດຂອງສັດຕູພືດ ແລະ ພະຍາດສັດ, ຄວາມກັງວົນກ່ຽວກັບຄວາມປອດໄພຂອງອາຫານ, ກຳລັງການຜະລິດທີ່ຕ່ຳ, ຫຼັກປະຕິບັດ ແລະ ການເກັບຮັກສາຜົນຜະລິດຫຼັງການເກັບກ່ຽວທີ່ບໍ່ມີປະສິດທິພາບ, ແລະ ລະບົບການຕະຫຼາດ ແລະ ການແຈກຢາຍອາຫານທີ່ບໍ່ພຽງພໍ. ນອກຈາກນັ້ນ, ຜູ້ຜະລິດກະສິກຳຍັງໄດ້ຮັບຜົນກະທົບຈາກມາດຕະຖານດ້ານຜະລິດຕະພັນທີ່ບໍ່ດີ ແລະ ໄພນາບຂູ່ຕໍ່ສາທາລະນະສຸກຈາກການນຳໃຊ້ຢາຂ້າພືດ ແລະ ຢາຂ້າແມງໄມ້ທີ່ບໍ່ປອດໄພ. ການລ້ຽງງົວທີ່ມີທ່າແຮງສູງ ແລະ ເພີ່ມຂຶ້ນຢູ່ຂົງເຂດເນີນສູງຂອງລາວ, ເຖິງແມ່ນວ່າຈະຊ່ວຍສ້າງຜົນປະໂຫຍດດ້ານສິ່ງແວດລ້ອມຫຼາຍກວ່າຜົນປະໂຫຍດທີ່ໄດ້ຮັບຈາກການປູກພືດຊະນິດດຽວແບບດັ້ງເດີມ, ເຊັ່ນ: ສາລີ ແລະ ມັນຕົ້ນ, ແຕ່ກໍ່ຈະສ້າງບັນຫາທ້າ

ຫາຍເພີ່ມເຕີມເນື່ອງຈາກການສັດລ້ຽງມີສ່ວນເຮັດໃຫ້ເກີດການເຜົາໄໝ້ **GHG** ເພີ່ມຂຶ້ນ ແລະ ໃນຂະນະດຽວກັນກໍ່ຄວາມຕ້ອງການດ້ານອາຫານສັດທີ່ໃຊ້ໃນການຜະລິດງົວ ເພີ່ມຂຶ້ນ. ການແກ້ໄຂຄວາມສ່ຽງ ແລະ ສິ່ງທ້າທາຍເຫຼົ່ານີ້ ແລະ ການປັບໂຕເຂົ້າກັບການປ່ຽນແປງທີ່ຕິດພັນກັບການຜະລິດກະສິກໍາຈະຕ້ອງມີການສະໜັບສະໜູນດ້ານນະໂຍບາຍຍຸດທະສາດ ແລະ ແບບແຜນດ້ານນະວັດຕະກໍາໃນທົ່ວຕ່ອງໂສ້ມູນຄ່າທັງໝົດ. ພ້ອມດຽວກັນນັ້ນ, ຄວນສຸມໃສ່ຄວາມພະຍາຍາມໃນການຍົກສູງການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ກົດໝາຍ ແລະ ນະໂຍບາຍທີ່ມີຢູ່ແລ້ວ ພ້ອມທັງເພີ່ມປະສິດທິພາບໃຫ້ແກ່ນະໂຍບາຍຕ່າງໆ.

### ຫຼັກປະຕິບັດ ແລະ ນະໂຍບາຍທີ່ມີຜົນກະທົບຫຼາຍທີ່ສຸດຕໍ່ການບັນລຸ "ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດໃນລະດັບທີ່ພຽງພໍ" (ໃນ ສປປ ລາວ)

ຈຸດປະສົງ ແລະ ທັດສະນະຂອງການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດແມ່ນຖືກສ່ອງແສງໄວ້ໃນ ແຜນພັດທະນາເສດຖະກິດ - ສະພາແຫ່ງຊາດ ຄັ້ງທີ 9 ຂອງ ສປປ ລາວ. ໝາກຜົນທີ່ກໍານົດໄວ້ໃນ NSEDP ລວມມີ "ການຂະຫຍາຍໂຕທາງເສດຖະກິດທີ່ເຂັ້ມແຂງ ແລະ ຍືນຍົງ" ພ້ອມທັງ "ການຂະຫຍາຍໂຕສີຂຽວ ແລະ ການເຄື່ອນໄຫວດ້ານສະພາບດິນຟ້າອາກາດ" ເຊິ່ງລວມມີບູລິມະສິດຕ່າງໆ, ເຊັ່ນ: ຫຼັກການເຮັດກະສິກໍາສີຂຽວ ແລະ ການຜະລິດທີ່ມີຄວາມຫຼາກຫຼາຍ ແລະ ຍືນຍົງ. ດັ່ງນັ້ນ, "ການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດ" ຈຶ່ງມີຄວາມສອດຄ່ອງຢ່າງຮອບດ້ານກັບ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ 9, ຍຸດທະສາດການຂະຫຍາຍໂຕສີຂຽວແຫ່ງຊາດ, ແລະ ຍຸດທະສາດການພັດທະນາກະສິກໍາຮອດປີ 2025 ແລະ ວິໄສທັດຮອດປີ 2030. ກົດໝາຍສົ່ງເສີມການລົງທຶນໄດ້ກໍານົດຂໍ້ບັນຍັດຕ່າງໆໃນການຊຸກຍູ້ການລົງທຶນ ທີ່ແນໃສ່ປົກປັກຮັກສາຊັບພະຍາກອນທໍາມະຊາດຕາມທິດສີຂຽວ ລວມທັງສົ່ງເສີມການຜະລິດກະສິກໍາ, ອຸດສະຫະກໍາແປຮູບທີ່ມີຄວາມຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ດ້ວຍວິທີນີ້, ແນວຄິດຂອງການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດຈະປະກອບສ່ວນເຂົ້າໃນທັງຂະບວນການ ແລະ ກົນໄກການສະໜັບສະໜູນໃນຂະແໜງການກະສິກໍາ ເພື່ອປູກຝັງ ແລະ ເຜີຍແຜ່ຫຼັກປະຕິບັດດ້ານການຜະລິດສະບຽງອາຫານແບບຍືນຍົງເພີ່ມຕື່ມ.

ຍຸດທະສາດການພັດທະນາກະສິກໍາ 2021-2025 (ADS) ສະໜອງທິດທາງໃນການປັບປຸງ ແລະ ພັດທະນາຂະແໜງການ ເພື່ອໃຫ້ສາມາດບັນລຸບາດກ້າວບຸກທະລຸຕ່າງໆໃນດ້ານ: (1) ການປັບປຸງທິດທາງຄຸນະພາບ; (2) ການປັບປຸງທິດທາງສີຂຽວ; (3) ຄວາມຍືນຍົງ; ແລະ (4) ທິດທາງການຂະຫຍາຍໂຕທີ່ທົນທານ. ອົງປະກອບທີ່ສໍາຄັນຂອງ ADS ແມ່ນ "ເພີ່ມປະສິດທິພາບການຜະລິດກະສິກໍາສີຂຽວ ແລະ ຍືນຍົງ ໂດຍຜ່ານການສົ່ງເສີມກະສິກໍາແບບຮອບດ້ານ, ການຜະລິດກະສິກໍາທີ່ດີ, ການກະເສດປອດສານເຄມີ, ແລະ ກະເສດອິນຊີ". ການກ້າວໄປສູ່ການພັດທະນາແບບຍືນຍົງຫຼາຍຂຶ້ນຈະຮັບປະກັນໃຫ້ມີການຜະລິດທີ່ພຽງພໍ ທີ່ສາມາດຕອບສະໜອງໄດ້ຕໍ່ຄວາມຕ້ອງການຂອງຜູ້ບໍລິໂພກ, ມີຄວາມສອດຄ່ອງຕໍ່ມາດຕະຖານດ້ານຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ແລະ ການຜະລິດສິນຄ້າກະສິກໍາ ທີ່ມີທັງຄວາມປອດໄພ ແລະ ດີຕໍ່ສຸຂະພາບ, ພ້ອມດຽວກັນນັ້ນກໍ່ປະກອບສ່ວນເຂົ້າໃນການຂະຫຍາຍໂຕທາງເສດຖະກິດ, ການຫຼຸດຜ່ອນຄວາມທຸກຍາກ, ການຫຼຸດຜ່ອນຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ, ການຮັບປະກັນໂພຊະນາການທີ່ດີ ແລະ ການຄຸ້ມຄອງ ແລະ ການອະນຸລັກສິ່ງແວດລ້ອມ ແລະ ຊັບພະຍາກອນ ທໍາມະຊາດ. ຂອບວຽກດ້ານກະສິກໍາສີຂຽວ ແລະ ຍືນຍົງ (GSAF) ໄດ້ສະໜອງອົງປະກອບຍຸດທະສາດ ເພື່ອຊີ້ນໍາການຕອບສະໜອງ ແລະ ການຈັດຕັ້ງປະຕິບັດຂອງ ຍຸດທະສາດການຂະຫຍາຍໂຕສີຂຽວແຫ່ງຊາດ (NGGS), ຍຸດທະສາດດ້ານໂພຊະນາການແຫ່ງຊາດ ແລະ ແຜນວຽກຮອດປີ 2025 ແລະ ແຜນງານແຫ່ງຊາດເພື່ອສົ່ງເສີມຊີວະນາໆພັນດ້ານການກະເສດ ແລະ ແຜນວຽກຮອດປີ 2025.

ໄດ້ມີການຈັດຕັ້ງປະຕິບັດຫຼາຍມາດຕະການແຊກແຊງ ແລະ ໂຄງການທີ່ດີໃນ ສປປ ລາວ ໄປແລ້ວ ທີ່ຊ່ວຍໃຫ້ສາມາດຖອດຖອນບົດຮຽນໄດ້ ແລະ ທັງຍັງສາມາດສົ່ງເສີມການຜະລິດທີ່ເປັນມິດຕໍ່ທໍາມະຊາດໄດ້. ພາກສ່ວນທີ່ປະສົບຜົນສໍາເລັດຂອງໂຄງການພັດທະນາທີ່ກ່າວມາຂ້າງເທິງສາມາດນໍາໄປຕໍ່ຍອດ ຫຼື ເສີມຂະຫຍາຍຕາມຄວາມເໝາະສົມໄດ້ດັ່ງຕໍ່ໄປນີ້:

ເພື່ອເປັນສ່ວນໜຶ່ງຂອງການຫັນປ່ຽນຮູບແບບການເຮັດກະສິກໍາ ທີ່ກໍາລັງເກີດຂຶ້ນໃນປະເທດລາວ, ຕະຫຼາດໃນພາກພື້ນໄດ້ສ້າງໂອກາດຕ່າງໆໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ ເພື່ອຍາດແຍ່ງເອົາ "ຜົນສໍາເລັດຢ່າງໄວວາ" ຈາກການໃຊ້ປະໂຫຍດຈາກຊັບພະຍາກອນທ□າມະຊາດທີ່ມີຄວາມຮັບຜິດຊອບ, ລວມທັງຊີວະນາໆພັນທາງທໍາມະຊາດ ແລະ ຄວາມອຸດົມສົມບູນຂອງດິນ. ໄດ້ມີການດໍາເນີນຫຼາຍຂັ້ນຕອນ ເພື່ອໃຫ້ມີການນໍາໃຊ້ຊັບພະຍາກອນເຫຼົ່ານີ້ແບບຍືນຍົງ, ໂດຍສະເພາະທີ່ກ່ຽວຂ້ອງກັບກະສິກໍາອິນຊີ, ສິນຄ້າທີ່ມີຄວາມຫຼາກຫຼາຍ ແລະ ມີການເພີ່ມມູນຄ່າ. ຫຼັກການປະຕິບັດໃນພື້ນທີ່ຕົວຈິງ, ເຊັ່ນ: ການກະເສດອິນຊີ, ການເຮັດກະສິກໍາທີ່ດີ, ການເຮັດກະສິກໍາແບບປະສົມປະສານ, ນິເວດກະເສດ, ການກະສິກໍາຕົ້ນທຶນຕໍ່າ, ປາສະຈາກຢາປາບສັດຕູພືດ, ການຜະລິດສັດນໍ້າ, ເຊັ່ນ: ການຜະລິດສັດນໍ້າ ໃນທົ່ງນາ, ຫຼັກການເພາະພັນສັດທີ່ດີ (**GAHP**) ໄດ້ພິສູດໃຫ້ເຫັນວ່າສິ່ງເຫຼົ່ານີ້ແມ່ນມາດຕະການແຊກແຊງ ທີ່ມະນຸດ ແລະ ໂລກຕ່າງກໍ່ໄດ້ຮັບຜົນປະໂຫຍດຢ່າງເທົ່າທຽມ ໂດຍຜ່ານການນໍາໃຊ້ແບບແຜນພາຍໃຕ້ລະບົບທີ່ມີຄວາມຮອບດ້ານ, ໂດຍສະເພາະໃນເວລາທີ່ເຮັດວຽກກັບຜູ້ປູກຊາ ແລະ ກາເຟ ແລະ, ອີກສ່ວນໜຶ່ງ, ກັບຜະລິດຕະພັນຈາກປ່າ, ເຊັ່ນ: ໝາກແໜ່ງ ແລະ ຕົ້ນຕານ. ໃນລະດັບສູນກາງ, ມາດຕະຖານກະສິກໍາອິນຊີແຫ່ງຊາດ ແລະ ລະບົບການຕິດສະຫຼາກໃຫ້ແກ່ຜະລິດຕະພັນອິນຊີແຫ່ງຊາດກໍ່ໄດ້ຖືກພັດທະນາຂຶ້ນ. ຕະຫຼາດກະສິກໍາອິນຊີໄດ້ຮັບການສົ່ງເສີມ ພ້ອມທັງຍັງສ້າງຕັ້ງ ໜ່ວຍງານຢັ້ງຢືນມາດຕະຖານແຫ່ງຊາດລາວ ແລະ ຂັ້ນຕອນຕ່າງໆໃນການຢັ້ງຢືນຜະລິດຕະພັນອິນຊີຂຶ້ນ.

### ການເຮັດວຽກຮ່ວມກັນອັນໃດທີ່ 'ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທໍາມະຊາດໃນລະດັບທີ່ພຽງພໍ' ໄດ້ສ້າງຂຶ້ນ ລະຫວ່າງອົງປະກອບ ແລະ ເສັ້ນທາງຂອງລະບົບສະບຽງອາຫານ?

ຍ້ອນການຂະຫຍາຍໂຕຢ່າງໄວວາຂອງເສດຖະກິດໃນພາກພື້ນ ແລະ ຂະບວນການຫັນເປັນຕົວເມືອງທີ່ຖືກເລັ່ງລັດຂຶ້ນໃນ ສປປ ລາວ ແລະ ບັນດາປະເທດໃກ້ຄຽງ, ຄວາມຕ້ອງການສິນຄ້າກະສິກໍາແບບດັ້ງເດີມ ແລະ ທີ່ຜະລິດຂຶ້ນສະເພາະເພື່ອການຄ້າແມ່ນເພີ່ມຂຶ້ນ, ໂດຍສະເພາະແມ່ນຈາກຜູ້

ບໍລິໂພກທີ່ມີລາຍຮັບໃນລະດັບປານກາງ ແລະ ສູງ. ດ້ວຍເຫດນັ້ນ, ການລົງທຶນໃສ່ບັນດາວິສາຫະກິດກະສິກຳຈຶ່ງມີຄວາມສຳຄັນທາງຍຸດທະສາດ ແລະ ພວມຂະຫຍາຍຕົວຢ່າງໄວວາ. ນັກລົງທຶນສ່ວນຫຼາຍແມ່ນບັນດາບໍລິສັດກະສິກຳຂ້າມຊາດໃນພາກພື້ນທີ່ເປັນຜູ້ຖືຄອງເພື່ອການກະສິກຳ ແລະ ເພື່ອຈຸດປະສົງອື່ນໆໃນທົ່ວປະເທດ. ນີ້ຍັງລວມໄປເຖິງບັນດາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແລະ ນັກລົງທຶນເອກະຊົນ ທີ່ສົ່ງເສີມການປູກພືດເສດຖະກິດ ພາຍໃຕ້ສັນຍາການຜະລິດກະສິກຳ ຫຼື ຜ່ານການເຊົ່າທີ່ດິນກະສິກຳຈາກຊາວກະສິກອນໃນໄລຍະສັ້ນ ຫຼື ການສຳປະທານທີ່ດິນໃນໄລຍະຍາວ.

ລາຍຮັບທີ່ເພີ່ມຂຶ້ນຂອງຜູ້ບໍລິໂພກໃນຊັ້ນກາງທີ່ກຳລັງຂະຫຍາຍໂຕ, ທັງໃນພາກພື້ນ ແລະ ພາຍໃນປະເທດ, ເຮັດໃຫ້ເກີດຄວາມຕ້ອງການທີ່ເພີ່ມຂຶ້ນຕໍ່ຜະລິດຕະພັນອາຫານທີ່ສະອາດ ແລະ ປອດໄພ. ຕະຫຼາດໃນພາກພື້ນ ແລະ ພາຍໃນປະເທດທີ່ຮອງຮັບໝາກໄມ້, ຜັກ ແລະ ພືດສະຫມຸນໄພເຂດຮ້ອນທີ່ມີຄຸນນະພາບ ແລະ ຄວາມປອດໄພສູງ ໄດ້ສະໜອງຄວາມຫວັງດ້ານການຄ້າຂາຍທີ່ດີໃຫ້ແກ່ຊາວກະສິກອນ ເພື່ອໃຫ້ພວກເຂົາມີຊີວິດການເປັນຢູ່ທີ່ດີຂຶ້ນ. ເຖິງແມ່ນວ່າປະເທດລາວຈະມີຄວາມໜາແໜ້ນດ້ານປະຊາກອນຕໍ່າກ່ວາປະເທດເພື່ອນບ້ານສ່ວນໃຫຍ່ກໍ່ຕາມ, ແຕ່ກໍ່ມີພື້ນທີ່ປູກຝັງທີ່ຈຳກັດ ແລະ ຕ້ອງໄດ້ອີງໃສ່ການນຳໃຊ້ພື້ນທີ່ໂນນສູງ ແລະ ເຂດປ່າໄມ້ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ. ຄວາມຕ້ອງການທີ່ເພີ່ມຂຶ້ນ (ຢ່າງຊ້າໆ) ດ້ານຜະລິດຕະພັນອິນຊີແມ່ນມີຄວາມສ□າຄັນຫຼາຍ, ແຕ່ຈະສາມາດບັນລຸໄດ້ຫຼາຍກວ່ານີ້ຖ້າມີລະບຽບການທີ່ເຂັ້ມງວດຕໍ່ຂະແໜງການທີ່ບໍ່ແມ່ນອິນຊີ. ຄວາມຫຍຸ້ງຍາກທີ່ເກີດຂຶ້ນໃນການດັດປັບຍຸດທະສາດກະສິກຳທີ່ເນັ້ນໜັກໃສ່ການສົ່ງອອກໃຫ້ເຂົ້າກັບການສົ່ງເສີມນິເວດກະເສດແມ່ນສາມາດເບິ່ງເຫັນໄດ້ຢ່າງຊັດເຈນ ແລະ ຈຳເປັນຕ້ອງມີການດັດປັບຄວາມສົມດຸນ, ເພາະວ່າສຸຂະພາບຂອງລະບົບທຳມະຊາດ ແລະ ການຜະລິດກະສິກຳແມ່ນຕ້ອງໄດ້ເພິ່ງພາອາໄສກັນ ແລະ ຈະໄດ້ຮັບການຮັກສາດີທີ່ສຸດໃນລັກສະນະທີ່ເປັນຮອບວຽນ, ສົ່ງເສີມເຊິ່ງກັນ ແລະ ກັນ. ດ້ວຍບາງມາດຕະການ, ສະພາບການດ້ານນິເວດກະເສດໃນ ສປປ ລາວ ແມ່ນຢູ່ໃນເກນທີ່ດີເມື່ອສົມທຽບໃສ່ກັບປະເທດອື່ນໆໃນອາຊີ. ເຖິງຢ່າງໃດກໍ່ຕາມ, ຂະແໜງການກະສິກຳຍັງມີຂໍ້ຈຳກັດ ດ້ານການລົງທຶນຈາກທັງພາກລັດ ແລະ ເອກະຊົນ, ແລະ ພື້ນຖານໂຄງລ່າງທີ່ບໍ່ພຽງພໍ. ຕະຫຼາດສະໜອງວັດຖຸດິບ ແລະ ຜົນຜະລິດຍັງຄົງກະແຈກກະຈາຍ ແລະ ຍັງບໍ່ທັນໄດ້ຮັບການພັດທະນາດີເທົ່າທີ່ຄວນ ໂດຍທີ່ຊາວກະສິກອນ ແລະ ຜູ້ຜະລິດສາມາດເຂົ້າເຖິງສິນເຊື່ອໄດ້ຢ່າງຈຳກັດ.

ວຽກງານດ້ານການກະສິກຳຂອງຜູ້ຜະລິດຂະໜາດນ້ອຍແມ່ນສ່ວນໜຶ່ງຂອງແນວທາງຍຸດທະສາດສຳລັບຊາວກະສິກອນ ຫຼື ຜູ້ຜະລິດໄວໜຸ່ມ ເພື່ອໃຫ້ສາມາດສືບຕໍ່ອາຊີບດ້ານການຜະລິດກະສິກຳໄດ້. ການເຮັດວຽກຮ່ວມກັບຊາວກະສິກອນໜຸ່ມ ເພື່ອຍົກສູງການນຳໃຊ້ຊ່ອງທາງດິຈິຕອນ ແລະ ສື່ສັງຄົມອອນລາຍໃຫ້ໄດ້ສູງສຸດຈະຊ່ວຍສົ່ງເສີມ ແລະ ສ້າງຄວາມຕື່ນໂຕໃຫ້ແກ່ຜູ້ບໍລິໂພກກ່ຽວກັບການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ. ສິ່ງນີ້ອາດລວມມີການນຳສະເໜີກົນໄກ ແລະ ຂັ້ນຕອນຕົວຈິງ ເພື່ອສົ່ງເສີມ ແລະ ສຸມໃສ່ຜູ້ປະກອບການໜຸ່ມດ້ານກະສິກຳ/ຊາວກະສິກອນ ໂດຍຜ່ານໂອກາດໃນການສ້າງຕະຫຼາດ ແລະ ການສ້າງລາຍໄດ້.

## ຜົນໄດ້ຜົນເສຍທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບການສົ່ງເສີມການຜະລິດທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ?

ຂະແໜງການກະສິກຳຂອງລາວສ່ວນໃຫຍ່ແມ່ນເຮັດຢູ່ເຂດໂນນສູງທີ່ມີຂະໜາດກ້ວາງ, ປະກອບດ້ວຍຫຼາຍຜູ້ຜະລິດຂະໜາດນ້ອຍທີ່ມີກຳລັງກາຜະລິດຕໍ່າ, ແລະ ບັນດາວິສາຫະກິດຜະລິດກະສິກຳຂະໜາດນ້ອຍ ແລະ ມີປະສົບການໜ້ອຍ. ເຖິງຢ່າງໃດກໍຕາມ, ການກະສິກຳແມ່ນຂະແໜງການທີ່ເປັນບຸລິມະສິດໃນດ້ານການຈ້າງງານກຳລັງແຮງງານ ແລະ ການພັດທະນາເສດຖະກິດ. ສະນັ້ນ, ລັດຖະບານຈຶ່ງສົ່ງເສີມການລົງທຶນເຂົ້າໃນສວນກະສິກຳ ແລະ ວິສາຫະກິດທີ່ມີຢູ່, ລະບົບຊົນລະປະທານ, ແລະ ພື້ນຖານໂຄງລ່າງ ເພື່ອປັບປຸງໃຫ້ມີປະສິດທິພາບ ແລະ ເນັ້ນໜັກໃສ່ດ້ານການຄ້າຫຼາຍຂຶ້ນ ພ້ອມທັງຍັງດຶງດູດນັກລົງທຶນດ້ານທຸລະກິດກະສິກຳ ເພື່ອເສີມສ້າງລະດັບການພັດທະນາໃນປະຈຸບັນ. ການຜະລິດກະສິກຳເປັນສິນຄ້າຍັງຕ້ອງປະເຊີນກັບການແຂ່ງຂັນທີ່ເຂັ້ມແຂງຈາກຕະຫຼາດໃນປະເທດໃກ້ຄຽງ, ໂດຍສະເພາະແມ່ນຈີນ, ໄທ, ແລະ ຫວຽດນາມ. ຍ້ອນແນວນັ້ນ, ສປປ ລາວ, ຈຶ່ງໄດ້ສືບຕໍ່ປະຕິບັດຕາມຈຸດປະສົງດ້ານນະໂຍບາຍ ທີ່ຈະຊ່ວຍໃຫ້ປະເທດຂະຫຍາຍໂຕກາຍໜຶ່ງໃນຄູ່ແຂ່ງທີ່ສຳຄັນພາຍໃຕ້ສະພາບແວດລ້ອມດ້ານການຄ້າກະສິກຳທີ່ມີການແຂ່ງຂັນສູງ.

ເພື່ອບັນລຸວາລະການພັດທະນາປະເທດຮອດປີ 2030, ສປປ ລາວ ຈະຕ້ອງໄດ້ປະເຊີນໜ້າກັບສິ່ງທ້າທາຍຕ່າງໆຕະຫຼອດທາງ ໂດຍສະເພາະດ້ານການລຶບລ້າງການຂາດສານອາຫານທຸກຮູບແບບ ໂດຍຮັບປະກັນໃຫ້ມີອາຫານທີ່ປອດໄພ, ມີໂພຊະນາການ ແລະ ມີລາຄາທີ່ບໍ່ສູງໃນປະລິມານທີ່ພຽງພໍສຳລັບທຸກຄົນ. ອີກດ້ານໜຶ່ງ, ສປປ ລາວ ຈຳເປັນຕ້ອງໄດ້ສ້າງໂອກາດດ້ານການຂະຫຍາຍໂຕ ແລະ ການຈ້າງງານທີ່ຈຳເປັນສຳລັບການລຶບລ້າງຄວາມທຸກຍາກ, ການປົກປັກຮັກສາຊີວະນາໆພັນ ແລະ ສະພາບແວດລ້ອມດ້ານຊັບພະຍາກອນທຳມະຊາດ, ແລະ ການປັບໂຕເຂົ້າກັບຄວາມກົດດັນທີ່ເພີ່ມຂຶ້ນຂອງການປ່ຽນແປງສະພາບດິນຟ້າອາກາດ.

ເຖິງແມ່ນວ່າທຸລະກິດກະສິກຳຂະໜາດໃຫຍ່ຈະປະກອບສ່ວນເຂົ້າໃນການສ້າງລາຍໄດ້ ແລະ ໂອກາດດ້ານການຈ້າງງານຫຼາຍຂຶ້ນ, ແຕ່ມັນກໍ່ຕ້ອງປະເຊີນກັບຂໍ້ເສຍປຽບຫຼາຍຢ່າງ, ທີ່ລວມມີ: (i) ການໃຫ້ສິດນຳໃຊ້ທີ່ດິນ ເພື່ອປູກພືດຊະນິດດຽວໃນທີ່ດິນຂະໜາດໃຫຍ່; (ii) ການສູນເສຍຄວາມຍືດຫຍຸ່ນໃນຂະແໜງກະສິກຳ; ແລະ, (iii) ການສູນເສຍການຄວບຄຸມດ້ານການຄຸ້ມຄອງທີ່ດິນ. ເມື່ອພິຈາລະນາເຖິງອັດຕາສ່ວນຂະໜາດໃຫຍ່ຂອງຊາວກະສິກອນລາວ ທີ່ເຮັດການກະສິກຳແບບປະສົມປະສານຢູ່ທີ່ດິນປູກຝັງ ແລະ ພື້ນທີ່ປ່າແລ້ວນັ້ນ, ຈຸດສຸມຫຼັກຂອງການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດສຳລັບ ສປປ ລາວ ຈະຂຶ້ນກັບຄວາມສົມດຸນຂອງການຮັກສາພື້ນທີ່ປ່າ ແລະ ນລະບົບນິເວດໄປພ້ອມໆກັບການຜະລິດກະສິກຳ. ບັນຫາທ້າທາຍທີ່ສະໜັບສະໜູນຄວາມຍືນຍົງໃຫ້ແກ່ຮູບແບບການຜະລິດທີ່ເປັນມິດຕໍ່ປ່າໄມ້ ແລະ ທຳມະຊາດເຫຼົ່ານີ້ລວມມີ

ບັນຫາດ້ານສະຖາບັນ, ໂດຍບັນຫາດ້ານຄວາມໝັ້ນຄົງຂອງສິດທີໃນຖືຄອງທີ່ແມ່ນສິ່ງທີ່ພົ້ນເດັ່ນກວ່າໝູ່. ຕົວຢ່າງຂອງການໃຫ້ສຳປະທານທີ່ດິນແກ່ນັກລົງທຶນຕ່າງປະເທດໄວ້ສຳລັບປູກຝັງ, ເຊັ່ນ: ກ້ວຍ, ມັນຕົ້ນ, ອາໂວກາໂດ ແລະ ອື່ນໆ; ໂດຍເປັນດິນຮ້າງທີ່ເອົາມາຈາກຊາວກະສິກອນຂະໜາດນ້ອຍ.

ການເຮັດກະສິກຳສີຂຽວ ແລະ ຍືນຍົງໂດຍທົ່ວໄປແລ້ວແມ່ນຕ້ອງການຄວາມພະຍາຍາມ, ແຮງງານ ແລະ ທັກສະຫຼາຍກວ່າການປູກພືດອຸດສາຫະກຳທີ່ໃຊ້ສານເຄມີສູງ. ນີ້ບັນຫາທ້າທາຍໃນປະເທດທີ່ມີຄວາມໜາແໜ້ນຂອງປະຊາກອນຕ່ຳ ແລະ ລະບົບການສຶກສາດ້ານວິຊາການທີ່ບໍ່ເຂັ້ມແຂງ, ໂດຍສະເພາະໃນມຸມມອງທີ່ຊາວໜຸ່ມສ່ວນໃຫຍ່ມີເປົ້າໝາຍໃນການປະລະຂະແໜງກະສິກຳ ແລະ ຫັນໄປຊອກຫາວຽກເຮັດງານທຳກັບວິສາຫະກິດການຜະລິດ ແລະ ການບໍລິການແທນ. ການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດອາດສາມາດສ້າງມູນຄ່າເພີ່ມ ໂດຍຜ່ານການສ້າງ ແລະ ຂະຫຍາຍຕະຫຼາດທີ່ມີຄວາມກວມລວມ ແລະ ຜູ້ຜະລິດຂະໜາດນ້ອຍສາມາດເຂົ້າເຖິງໄດ້ ເພື່ອຮັບປະກັນໂອກາດໃນການສ້າງລາຍຮັບທີ່ເພີ່ມຂຶ້ນ ແລະ ກ້າວອອກຈາກການຜະລິດແບບກຸ້ມກິນ. ຕະຫຼາດ ແລະ ຕ່ອງໂສ້ມູນຄ່າທີ່ກ່ຽວຂ້ອງໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບພາກພື້ນແມ່ນມີຄວາມຕ້ອງການຜະລິດຕະພັນທີ່ມີຄຸນນະພາບ, ປອດໄພ ແລະ ສະອາດ ແລະ, ໃນບາງສ່ວນ, ຈະຊ່ວຍຂັບເຄື່ອນການຫັນໄປສູ່ລະບົບການຜະລິດທີ່ຍືນຍົງກວ່າເກົ່າ. ພ້ອມດຽວກັນນັ້ນ, ຂໍ້ລິເລີ່ມດ້ານການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ອາດຊ່ວຍສ້າງຄວາມຕື່ນໂຕກ່ຽວກັບຜົນປະໂຫຍດຂອງສະບຽງອາຫານທີ່ຫຼາກຫຼາຍ, ຜະລິດຕະພັນອາຫານທີ່ສະອາດ ແລະ ປອດໄພ, ແລະ ຫຼັກການຜະລິດທີ່ມີປະສິດຕິພາບ ທີ່ມີການປັບໂຕໃຫ້ເໝາະສົມກັບສະພາບແວດລ້ອມ ແລະ ເງື່ອນໄຂດ້ານເສດຖະກິດ - ສັງຄົມທີ່ແຕກຕ່າງກັນໃນທົ່ວ ສປປ ລາວ. ເພື່ອໃຫ້ບັນລຸຈຸດປະສົງເຫຼົ່ານີ້ໄດ້, ສິ່ງທີ່ສຳຄັນແມ່ນຕ້ອງຈັດຕັ້ງນະໂຍບາຍກະສິກຳແຫ່ງຊາດ, ແລະ ການບໍລິການໃຫ້ຄຳປຶກສາຄືນໃໝ່ ແລະ ສົ່ງເສີມການການຜະລິດທີ່ມີຄວາມຍືນຍົງສູງໃຫ້ດີຂຶ້ນກວ່າເກົ່າ ເພື່ອເພີ່ມທາງເລືອກທີ່ມີຄວາມເໝາະສົມ ແລະ ເປັນມິດກັບສິ່ງແວດລ້ອມໃຫ້ແກ່ຜູ້ຜະລິດ ແລະ ຜູ້ແປຮູບ.

### ເສັ້ນທາງສຳລັບ ສປປ ລາວ ເພື່ອຮັບປະກັນ 'ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດໃນລະດັບທີ່ພຽງພໍ'

ໂດຍອ້າງອີງເຖິງ ຂອບວຽກດ້ານການກະສິກຳສີຂຽວ ແລະ ຍືນຍົງ ເຊິ່ງສ້າງຂຶ້ນໂດຍ MAF, ແບບແຜນ ການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດແມ່ນໄດ້ເນັ້ນໜັກໃສ່ກະສິກຳອິນຊີ, ການເຮັດກະສິກຳແບບປະສົມປະສານ, ນິເວດກະເສດ, ການກະສິກຳແບບຕົ້ນທຶນຕ່ຳ, ປອດຢາປາບສັດຕູພືດ. ຮູບແບບການກະສິກຳເຫຼົ່ານີ້ປະກອບມີ 5 ຂະແໜງການຍ່ອຍຄື: ຂະແໜງການປູກຝັງ (ໂດຍໃຊ້ລະບົບຊົນລະປະທານ ແລະ ນ້ຳຝົນຕາມທຳມະຊາດ), ລ້ຽງສັດ , ປະມົງ, ກະສິກຳແບບປະສົມປະສານ, ແລະ ການຜະລິດສິນຄ້າທີ່ບໍ່ແມ່ນໄມ້ (NTFPs). ກະສິກຳແບບປະສົມປະສານ ແລະ NTFP ແມ່ນນອນຢູ່ໃນພື້ນທີ່ທີ່ມີຄວາມເຊື່ອມໂຍງກັບການຜະລິດພືດກະສິກຳເປັນສິນຄ້າ, , ການລ້ຽງສັດ, ການປະມົງ, ແລະ ພື້ນທີ່ປ່າ ແລະ ທົ່ງກວ້າງ. ທັງ 5 ຂະແໜງການຍ່ອຍນີ້ນີ້ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ລວມເຖິງການລົບລ້າງຄວາມທຸກຍາກໃນ ສປປ ລາວ ນຳອີກ.

ເພື່ອໃຫ້ສອດຄ່ອງກັບມາດຕະຖານສາກົນ, ສປປ ລາວ ກຳລັງສົ່ງເສີມໃຫ້ຫຼັກການດ້ານ ການກະສິກຳທີ່ດີ (GAP) ກາຍເປັນເປັນມາດຕະຖານຂັ້ນຕ່ຳໃນລະບົບການຜະລິດທັງໝົດ ເພື່ອໃຫ້ຜູ້ຜະລິດຂະນາດນ້ອຍ ແລະ ຜູ້ປະກອບການພາກເອະຊົນປະຕິບັດຕາມ. ບໍ່ວ່າຈະແມ່ນການຜະລິດພືດອຸດສະຫະກຳ ຫຼື ສິນຄ້າທີ່ມີເອກະລັກສະເພາະຕາມຄວາມຕ້ອງການໃນພາກພື້ນ, ມາດຕະຖານ GAP ແມ່ນຖືເປັນພື້ນຖານທີ່ສ□າຄັນໃນຍຸກປັດຈຸບັນສຳລັບການຜະລິດສິນຄ້າເພື່ອຄ້າຂາຍ ພ້ອມຄວາມເປັນໄປໄດ້ໃນການເສີມຂະຫຍາຍເພີ່ມຕື່ມ ເພື່ອໃຫ້ກາຍເປັນລະບົບການຜະລິດທີ່ຍືນຍົງຍິ່ງຂຶ້ນ ເຊິ່ງສົ່ງເສີມແນວຄິດໃນການຫຼຸດຜ່ອນວັດຖຸດິບປັດໄຈພາຍນອກ, ການນຳໃຊ້ວັດຖຸດິບ ແລະ ພະລັງງານແບບໝູນວຽນ (ເສດຖະກິດໝູນວຽນ), ແລະ ກະສິກຳອິນຊີ. ລັດຖະບານຄາດໝາຍໃຫ້ຫຼັກການ GAP ຖືກຈັດຕັ້ງປະຕິບັດໃນທົ່ວປະເທດ ແລະ ພວມລະບຸໂອກາດໃນການທົດລອງລິເລີ່ມການຈັດຕັ້ງປະຕິບັດດັ່ງກ່າວໃນພື້ນທີ່ທີ່ກຳນົດໃນອະນາຄົດ. ອາດມີການສົ່ງເສີມວິທີການຮັບຮອງແບບສະໝັກໃຈອື່ນໆອີກ, ເຊັ່ນ: ລະບົບການຮັບປະກັນແບບມີສ່ວນຮ່ວມ (PGS), ໂຕຊີ້ວັດທາງພູມສາດ (GI) ແລະ ເຂົ້າ/ກາເຟພັນພິເສດ.

ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຈຳເປັນຕ້ອງໃຫ້ຜູ້ທີ່ເຄື່ອນໄຫວໃນລະບົບສະບຽງອາຫານທັງໝົດໄດ້ຮັບການປັບປຸງດ້ານຄວາມຮູ້ໂດຍລວມ ແລະ ຄວາມເຂົ້າໃຈໃນແນວຄິດ, ຂັ້ນຕອນ, ໂອກາດ ແລະ ສິ່ງທ້າທາຍຕ່າງໆ. ເພື່ອຈະປະຕິບັດໄດ້ດັ່ງນີ້, ຈະຕ້ອງໄດ້ຄຳນຶງເຖິງຄວາມຕ້ອງການ ແລະ ການສະໜອງນຳ. ການພັດທະນາຂີດຄວາມສາມາດຂອງຜູ້ຜະລິດ ເພື່ອເສີມສ້າງຄວາມພະຍາຍາມ ແລະ ການປະຕິບັດທີ່ດີ, ແລະ ການປັບປຸງສະພາບແວດລ້ອມດ້ານນະໂຍບາຍ (ຍົກຕົວຢ່າງ, ການເຂົ້າເຖິງສິນເຊື່ອ, ການນຳໃຊ້ສິ່ງຈູງໃຈຢ່າງມີປະສິດທິພາບ ແລະ ປະສິດທິຜົນ) ຈະປະກອບສ່ວນຊ່ວຍໃນການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແລະ ຊ່ວຍຂັບເຄື່ອນການປ່ຽນແປງຂອງລະບົບການຜະລິດອາຫານນຳອີກ.

ເພື່ອເລັ່ງລັດການປ່ຽນແປງລະບົບສະບຽງອາຫານໄປສູ່ການຜະລິດອາຫານທີ່ເປັນມິດຕໍ່ສິ່ງແວດລ້ອມ, ມີສາມຂົງເຂດການລົງທຶນທີ່ຕ້ອງຄູ່ຮ່ວມມືຕ້ອງໄດ້ເອົາໃຈໃສ່ຄື: (1) ນະວັດຕະກຳດ້ານກະສິກຳສີຂຽວ, ການຄົ້ນຄວ້າ ແລະ ເຕັກໂນໂລຊີ; (2) ການເສີມຂະຫຍາຍສີຂຽວ; (3) ຕະຫຼາດສີຂຽວ ແລະ ຕ່ອງໂສ້ມູນຄ່າ. ໃນຂະນະທີ່ຕ້ອງໄດ້ສຸມໃສ່ມີຄວາມພະຍາຍາມເຂົ້າໃນການເສີມຂະຫຍາຍການລົງທຶນ ຫຼື ສະໜອງທຶນເຂົ້າໃນການຄົ້ນຄວ້າ ແລະ ການພັດທະນາ ແລະ ການເສີມຂະຫຍາຍ ເພື່ອສະໜັບສະໜູນນະວັດຕະກຳດ້ານການກະສິກຳ, ຊາວກະສິກອນ ແລະ ຜູ້ຜະລິດເອງກໍ່ມີຄວາມຈຳເປັນຕ້ອງໄດ້ເພີ່ມທັກສະໃນຫຼາກຫຼາຍຮູບແບບດ້ານການຈັດຕັ້ງປະຕິບັດກົດລະບຽບ, ມາດຕະຖານ, ຄວາມປອດໄພດ້ານການເກັບຮັກສາວັດຖຸດິບ, ການໃຊ້ເຄື່ອງຈັກ, ເຕັກນິກດ້ານການນຳໃຊ້ລະບົບຊົນລະປະທານ ແລະ ເຕັກໂນໂລຊີທີ່ທັນສະໄໝ, ຂະບວນການແປຮູບຫຼັງການເກັບກ່ຽວ ແລະ ການບັນຈຸຫີບຫໍ່, ໂລຈິສຕິກ , ການຂົນສົ່ງ ແລະ ການຕະຫຼາດ. ການເສີມສ້າງທັກສະສາມາດເຮັດຜ່ານແບບແຜນການເສີມຂະຫຍາຍສີຂຽວ ແລະ ທົດຊື່ນ□າດ້ານນະວັດຕະກຳການກະສິກຳ.

**ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.**

ສປປ ລາວ ມີທ່າແຮງສູງໃນການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ. ການເຮັດວຽກຮ່ວມກັນກັບຄູ່ຮ່ວມຍຸດທະສາດຈະສາມາດຂັບເຄື່ອນລະບົບການຜະລິດສະບຽງອາຫານສີຂຽວທີ່ມີຄວາມຍືນຍົງ ດ້ວຍວາລະການຫັນປ່ຽນ ໂດຍຮ່ວມມືກັບບັນດາພາກສ່ວນຫຼັກ ລວມທັງລັດຖະບານໃນທຸກລະດັບ, ຄູ່ຮ່ວມພັດທະນາ, ວິສາຫະກິດເອກະຊົນ, ຜູ້ຜະລິດ, ພາກສັງຄົມ, ແລະ ຜູ້ບໍລິໂພກ ເພື່ອຮັບປະກັນອາຫານທີ່ມີໂພຊະນາການ, ສັງຄົມທີ່ມີຄວາມກອມລວມ, ແລະ ສະພາບແວດລ້ອມທີ່ມີຄວາມທົນທານ. ເປົ້າໝາຍແມ່ນເພື່ອສົ່ງເສີມຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ເພື່ອຍົກສູງຂີດຄວາມສາມາດ ແລະ ຄວາມຊຳນິຊຳນານຂອງທ້ອງຖິ່ນ, ຊຸກຍູ້ໃຫ້ມີການແຂ່ງຂັນເພີ່ມຂຶ້ນ, ແລະ ສ້າງໂອກາດ ເພື່ອສົ່ງເສີມການຂະຫຍາຍໂຕທາງເສດຖະກິດ. ສິ່ງນີ້ລວມມີການສ້າງຄວາມເຊື່ອມໂຍງກັບພາກເອກະຊົນ ເພື່ອຮັບປະກັນການເຂົ້າເຖິງຕະຫຼາດ.

ການສ້າງພື້ນທີ່ໃຫ້ແກ່ຄູ່ຮ່ວມງານ ແລະ ພາກສ່ວນທີ່ກ່ຽວຂ້ອງໃນ ລະບົບນະວັດຕະກຳດ້ານກະສິກຳ (AIS) ເພື່ອແລກປ່ຽນ, ຮຽນຮູ້ ແລະ ແບ່ງປັນລະຫວ່າງກັນ ແມ່ນມີຄວາມສຳຄັນຕໍ່ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ. ຍົກຕົວຢ່າງ, ການສ້າງເວທີເພື່ອປ່ຽນແປງລະບົບຜະລິດສະບຽງອາຫານທີ່ລວມມີ 2-3 ກະຊວງໃນເບື້ອງຕົ້ນ ກ່ອນຈະເສີມຂະຫຍາຍການປະສານງານ ແລະ ການຮ່ວມມືອອກຕື່ມ. ໃນເວລາດຽວກັນ, ການນຳໃຊ້ເວທີການຮ່ວມມືທີ່ມີຢູ່ແລ້ວ, ເຊັ່ນ: ກອງປະຊຸມໂຕະມົນ, ກອງປະຊຸມໜ່ວຍງານວິຊາການດ້ານການພັດທະນາກະສິກຳ ແລະ ຊົນນະບົດ ແລະ ໜ່ວຍງານວິຊາການຍ່ອຍອື່ນໆ, ແລະ ເຄືອຂ່າຍຊາວກະສິກອນລາວ ຈະຊ່ວຍແກ້ໄຂບັນຫາພື້ນຖານ ແລະ ຕິດຕາມຄວາມຄືບກ່ຽວກັບເຈດຈຳນົງ ແລະ ພັນທະດ້ານການຜະລິດສະບຽງອາຫານສີຂຽວທີ່ມີຄວາມຍືນຍົງ ເຊິ່ງອາດນຳໄປສູ່ການປັບປຸງນະໂຍບາຍ. ບັນດາເວທີການຮ່ວມມືເຫຼົ່ານີ້ຄວນຖືກນຳໃຊ້ເຂົ້າໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ນະໂຍບາຍ ພ້ອມທັງລະບຸບັນຫາ ແລະ ຂໍ້ແນະນຳຕ່າງໆ.

ລັດຖະບານ ແລະ ຄູ່ຮ່ວມພັດທະນາມີຄວາມມຸ້ງໝັ້ນທີ່ຈະສະໜັບສະໜູນ ແລະ ສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແລະ ຈະຊຸກຍູ້ລະບົບດັ່ງກ່າວ ຜ່ານການປຶກສາຫາລືໃນລະດັບຊາດ ແລະ ສະໜັບສະໜູນຄວາມພະຍາຍາມທີ່ພຽງພໍໃນລະດັບພາກພື້ນ ແລະ ສາກົນ.

Investing in rural people

# ເອກະສານຊ້ອນທ້າຍ 3: ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸ້ມຄ່າຢ່າງເທົ່າທຽມ

**ນໍາພາໂດຍ:** ກະຊວງກະສິກໍາ ແລະ ປ່າໄມ້ (**MAF**) ແລະ ກອງທຶນສາກົນເພື່ອພັດທະນາກະສິກໍາ (**IFAD**)

**ໜ່ວຍງານ ແລະ ກົມກອງຮ່ວມມື**: ອົງການອາຫານ ແລະ ການກະເສດ ແຫ່ງ ສປຊ (**FAO**), ອົງການສະຫະປະຊາຊາດເພື່ອການພັດທະນາ (**UNDP**), ສູນການຄ້າສາກົນ (**ITC**), ອົງການອາຫານໂລກ (**WFP**) ແລະທະນາຄານພັດທະນາອາຊີ (**ADB**)

## ໂອກາດ ແລະ ສິ່ງທ້າທາຍອັນໃຫຍ່ຫຼວງ (ທີ່ ສປປ ລາວ ກໍາລັງປະເຊີນຢູ່) ທີ່ກ່ຽວຂ້ອງກັບ 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ'

ດ້ວຍຂະແໜງການກະສິກໍາກວມເອົາ 80% ຂອງການຈ້າງງານ (ແລະ ເຄິ່ງໜຶ່ງຂອງ GDP), ແລະ ທັງຍັງເປັນຂະແໜງການທີ່ປະກອບສ່ວນໃຫຍ່ທີ່ສຸດ (36%) ຕໍ່ອັດຕາການຫວ່າງງານຂອງປະເທດ, ມີຄວາມເຊື່ອມໂຍງທີ່ຈະແຈ້ງລະຫວ່າງສິ່ງທ້າທາຍ ແລະ ໂອກາດໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສະບຽງອາຫານ ແລະ ການປັບປຸງຊີວິດການເປັນຢູ່. ສປປ ລາວ ໄດ້ປູພື້ນຖານອັນສໍາຄັນໃນການຫັນເປັນທັນສະໄໝ, ສົ່ງເສີມການຄ້າ, ສົ່ງເສີມຄວາມຍືນຍົງເພີ່ມຂຶ້ນ, ສົ່ງເສີມບັນດາກິດຈະການໃຫ້ມີລັກສະນະທຸລະກິດຫຼາຍຂຶ້ນ ແລະ ສ້າງໂອກາດໃໝ່ໆ ພ້ອມທັງພັດທະນາຊີວິດການເປັນຢູ່ທີ່ມີ ໂດຍຜ່ານການຜະລິດ, ການກັກເກັບ, ການປຸງແຕ່ງ, ການແຈກຢາຍ, ການບໍລິໂພກ, ແລະ ການກໍາຈັດສິ່ງເສດເຫຼືອ.

ໂອກາດ ແລະ ສິ່ງທ້າທາຍທີສໍາຄັນແມ່ນນອນຢູ່ໃນຢ່າງນ້ອຍສາມຂົງເຂດທີ່ແຕກຕ່າງກັນລຸ່ມນີ້:

**ທໍາອິດແມ່ນກໍາລັງສ້າງ ແລະ ການປັບປຸງໂອກາດດ້ານວຽກເຮັດງານທໍາ, ລາຍໄດ້ ແລະ ການສະໜັບສະໜູນດ້ານຄວາມປອດໄພທາງສັງຄົມທີ່ດີ.** ມີໂອກາດທີສໍາຄັນໃນການສ້າງວຽກເຮັດງານທໍາໃໝ່ ເພື່ອຫຼຸດຜ່ອນອັດຕາການຫວ່າງງານໃນປະຈຸບັນຢູ່ທີ່ 9.4%, ສົ່ງເສີມວຽກງານທີ່ດີ, ແລະ ທໍາລາຍຄວາມແຕກໂຕນທາງດ້ານເສດຖະກິດ - ສັງຄົມ ໂດຍຮັບປະກັນຄ່າແຮງທີ່ດີ ສໍາລັບການຈ້າງງານໃນທຸກວຽກງານພາຍໃຕ້ລະບົບສະບຽງອາຫານ. ຍັງຄົງມີພື້ນທີ່ ເພື່ອສົ່ງເສີມຫຼັກປະຕິບັດທີ່ດີຕໍ່ແຮງງານ ແລະ ພັດທະນາຕາໜ່າງຄວາມປອດໄພທາງສັງຄົມໃຫ້ແກ່ທຸກຄົນ. ໃນຂົງເຂດນີ້, ມີໂອກາດໃນການເພີ່ມກໍາລັງການຜະລິດ, ການເພີ່ມທະວີການພັດທະນາພື້ນຖານໂຄງລ່າງທີ່ຍືນຍົງ, ການສົ່ງເສີມການຄ້າໃນຕະຫຼາດທີ່ມີຢູ່ ແລະ ທີກໍາລັງເກີດຂຶ້ນໃໝ່, ການດໍາເນີນທຸລະກິດກະສິກໍາ ແລະ ການຜະລິດພືດ, ການລ້ຽງສັດ ແລະ ການປະມົງທີ່ເປັນທີ່ຕ້ອງການ. ໂອກາດທີ່ສໍາຄັນອີກຢ່າງໜຶ່ງແມ່ນການອັດຊ່ອງຫວ່າງດ້ານການຈ້າງງານດ້ວຍບຸກຄະລາກອນທີ່ມີຄຸນສົມບັດດ້ານວິຊາຊີບ ຫຼື ທັກສະວິຊາການ ໂດຍປັບປຸງຄວາມຊໍານິຊໍານານ ໂດຍຜ່ານການພັດທະນາຂີດຄວາມສາມາດ; ຂົງເຂດທີ່ປະກອບມີຂະແໜງການຜະລິດ ແລະ ທຸລະກິດກະສິກໍາທີ່ກ່ຽວຂ້ອງ (ເຊັ່ນ: ການປູກຝັງ/ການກະກຽມດິນເພາະປູກ , ການວິເຄາະດິນ, ພະຍາດພືດ ແລະ ການກັກກັນພືດ, ວິຊາການດ້ານສັດຕະວະແພດ ແລະ ການປະມົງ, ວິທີການປຸງແຕ່ງ, ການຂົນສົ່ງ, ແລະ ການກໍາຈັດສິ່ງເສດເຫຼືອທີ່ຍືນຍົງກວ່າເກົ່າ), ແລະ ອື່ນໆ. ອີກໜຶ່ງຂົງເຂດທີ່ສໍາຄັນແມ່ນການເພີ່ມທະວີວິທີໃນການເຮັດໃຫ້ຜູ້ປະກອບການ ແລະ ວິສາຫະກິດມີຄວາມສາມາດແຂ່ງຂັນໃນຕະຫຼາດ ໂດຍຜ່ານນະວັດຕະກໍາ, ເຕັກໂນໂລຊີ, ພື້ນຖານໂຄງລ່າງ, ບໍລິການໃຫ້ຄໍາປຶກສາ, ການສ້າງຄວາມສອດຄ່ອງຕໍ່ມາດຕະຖານດ້ານຄຸນນະພາບ ແລະ ນະໂຍບາຍ. ທີ່ຕິດພັນກັບສິ່ງດັ່ງກ່າວແມ່ນການຫັນປ່ຽນສະພາບແວດລ້ອມໃນການດໍາເນີນທຸລະກິດໃນຂົງເຂດເຫຼົ່ານີ້ ເພື່ອດຶງດູດການລົງທຶນຂອງພາກເອກະຊົນ ແລະ ພັດທະນາພາກເອກະຊົນໃຫ້ມີມີຄວາມຊໍານິຊໍານານຍິ່ງຂຶ້ນ. ສຸດທ້າຍ, ມີໂອກາດທີ່ຈະໄດ້ປັບປຸງກົດໝາຍວ່າດ້ວຍແຮງງານ ແລະ ຂໍ້ບັນຍັດດ້ານສະຫວັດດີການສັງຄົມ.

**ຄຽງຄູ່ກັນນີ້, ກໍຍັງມີສິ່ງທ້າທາຍ, ແລະ ເປັນໂອກາດອັນໃຫຍ່ຫຼວງໃນການຮັບປະກັນໃຫ້ທົ່ວທຸກບ່ອນສາມາດເຂົ້າເຖິງວັດຖຸດິບການຜະລິດ, ລາຍໄດ້ທີ່ມີຄຸນນະພາບ, ການສະໜັບສະໜູນທາງສັງຄົມ ແລະ ຄວາມເປັນຢູ່ທີ່ດີໃຫ້ແກ່ທຸກຄົນ.** ຈຸດສ□າຄັນຂອງຂົງເຂດນີ້ແມ່ນວິທີໃນການເຮັດໃຫ້ລະບົບສະບຽງອາຫານສາມາດໄປສູ່ປາຍທາງ ເພື່ອເຂົ້າເຖິງຜູ້ທີ່ມີຄວາມອ່ອນໄຫວຫຼາຍທີ່ສຸດໄດ້, ໂດຍສະເພາະແມ່ນການສົ່ງເສີມບົດບາດໃຫ້ແກ່ແມ່ຍິງ, ຊາວໜຸ່ມ, ຄົນພື້ນເມືອງ, ຄົນພິການ, ແລະ ຜູ້ທີ່ຖືກລະບຸວ່າເປັນຜູ້ດ້ອຍໂອກາດທີ່ສຸດໃນຕະຫຼາດແຮງງານ. ເວົ້າສະເພາະ, ຍັງມີພື້ນທີ່ໃນການປັບປຸງຄວາມກວມລວມໃນລະບົບສະບຽງອາຫານ ໂດຍຜ່ານການຮັບປະກັນໃຫ້ປະຊາຊົນໃນເຂດຊົນນະບົດມີລາຍໄດ້ທີ່ສູງຂຶ້ນ ແລະ ໂອກາດດ້ານການຈ້າງງານທີ່ດີຂຶ້ນກວ່າເກົ່າ. ນອກຈາກນັ້ນກໍ່ຍັງມີສິ່ງທ້າທາຍ ແລະ ໂອກາດທີ່ກ່ຽວຂ້ອງກັບການແກ້ໄຂຊ່ອງຫວ່າງດ້ານບົດບາດຍິງຊາຍ. ວຽກງານນີ້ລວມມີການສົ່ງເສີມຄວາມປອດໄພໃຫ້ແກ່ແມ່ຍິງໃນສະຖານທີ່ເຮັດວຽກ ໂດຍຜ່ານການລຶບລ້າງຄວາມຮຸນແຮງ ແລະ ການລ່ວງລະເມີດ, ແລະ ຮັບປະກັນໃຫ້ພວກເຂົາສາມາດເຂົ້າເຖິງສິດໃນການຄອບຄອງທີ່ດິນ, ວັດຖຸດິບ, ການເງິນ, ການບໍລິການ ແລະ ບົດບາດໃນການຕັດສິນໃຈ, ເຊິ່ງທັງໝົດຈະຊ່ວຍສະໜອງຊ່ອງທາງທີ່ເປັນໄປໄດ້ໃນການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ. ນອກນັ້ນຍັງມີໂອກາດໃນການແກ້ໄຂຊ່ອງຫວ່າງການຈ້າງງານ ແລະ ຊ່ອງ

ຫວ່າງດ້ານສະຫວັດດີການສັງຄົມສໍາລັບຄົນພິການ ແລະ ໄວໜຸ່ມຈໍານວນຫຼາຍ, ເພື່ອແກ້ໄຂບັນຫາທັງໃນປັດຈຸບັນ ແລະ ອະນາຄົດ. ພ້ອມດຽວກັນນັ້ນ, ຍັງມີໂອກາດໃນການເຮັດວຽກ ເພື່ອລຶບລ້າງການໃຊ້ແຮງງານເດັກທຸກຮູບການຢ່າງເດັດຂາດ.

**ສຸດທ້າຍ, ມີສິ່ງທ້າທາຍດ້ານການຫຼຸດຜ່ອນຄວາມສ່ຽງ ແລະ ໂອກາດໃນການເພີ່ມທະວີຄວາມທົນທານໃຫ້ແກ່ຊີວິດການເປັນຢູ່ທັງໝົດ.** ຂົງເຂດສຸດທ້າຍແມ່ນການແກ້ໄຂບັນດາສິ່ງທ້າທາຍຕ່າງໆທີ່ກ່ຽວກັບການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມໃນລັກສະນະທີ່ມີຄວາມທົນທານ; ຍ້ອນວ່າການໃຫ້ການສະໜັບສະໜູນໄລຍະສັ້ນ ຫຼື ການສະໜັບສະໜູນທີ່ບໍ່ເຂັ້ມ ເພື່ອສົ່ງເສີມຊີວິດການເປັນຢູ່ແມ່ນຍັງບໍ່ພຽງພໍ. ຈຶ່ງມີໂອກາດໃນການປັບປຸງຄວາມທົນທານ ໂດຍຜ່ານການນໍາໃຊ້ແບບແຜນຕ່າງໆ ທີ່ສົ່ງເສີມຄວາມເຊື່ອໝັ້ນທາງເສດຖະກິດ, ສະໜອງຄວາມໝັ້ນຄົງ ແລະ ກະຕຸ້ນໃຫ້ມີການຄິດໄລ່ ຫຼື ນະວັດຕະກໍາປະເມີນຄວາມສ່ຽງໃນລະບົບສະບຽງອາຫານ, ລວມທັງໃນລະດັບບຸກຄົນ, ຊຸມຊົນ ແລະ ລະດັບຊາດ. ນອກຈາກນັ້ນ, ຍັງມີໂອກາດໃນການປົກປ້ອງ ແລະ ສ້າງຄວາມກ້າວໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບດ້ານລົບ ໂດຍສະເພາະຈາກ ພະຍາດໂຄວິດ-19, ທີ່ລວມມີການເຂົ້າເຖິງວັດຖຸດິບ, ຕະຫຼາດ, ການແຈກຢາຍ ແລະ ອື່ນໆອີກ. ນອກເໜືອ ຈາກການດໍາລົງຊີວິດແລ້ວ , ຍັງມີໂອກາດໃນການສ້າງຕາໜ່າງຄວາມປອດໄພທາງສັງຄົມ ແລະ ການຕອບໂຕ້ຕໍ່ໂລກລະບາດທັງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ, ຮັບປະກັນບໍ່ໃຫ້ວຽກງານຖອຍຫຼັງໃນເວລາທີ່ຕ້ອງເຮັດວຽກທີ່ຫຍຸ້ງຍາກ. ພະຍາດລະບາດໄດ້ສະໜອງບົດຮຽນ ແລະ ໂອກາດເພີ່ມເຕີມໃນການກຽມຄວາມພ້ອມສໍາລັບຜົນກະທົບທີ່ບໍ່ໄດ້ຄາດຄິດທີ່ອາດເກີດຂຶ້ນໃນອະນາຄົດ. ນີ້ແມ່ນຄວາມຈິງໂດຍສະເພາະໃນການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ; ນອກນັ້ນຍັງມີໂອກາດໃນການແກ້ໄຂ ແລະ ກຽມຄວາມພ້ອມຮັບມືກັບໄພພິບັດທາງທໍາມະຊາດ ແລະ ຄວາມສ່ຽງທີ່ກ່ຽວຂ້ອງກັບສະພາບດິນຟ້າອາກາດ ໂດຍຜ່ານເຕັກນິກການຜະລິດກະສິກໍາ, ພື້ນຖານໂຄງລ່າງ ແລະ ຕ່ອງໂສ້ມູນຄ່າທີ່ມີຄວາມທົນທານ. ສຸດທ້າຍ, ມີໂອກາດທາງເສດຖະກິດອັນໃຫຍ່ຫຼວງ ທີ່ສົ່ງເສີມຄວາມເປັນມິດຕໍ່ທໍາມະຊາດ ໂດຍຜ່ານການຫຼຸດຜ່ອນການເອື່ອຍອີງຂະແໜງການຂຸດຄົ້ນຊັບພະຍາກອນ ແລະ ເພີ່ມທະວີການເພິ່ງພາອາໄສພະລັງງານທົດແທນໃຫ້ຫຼາຍຂຶ້ນ.

### ຫຼັກປະຕິບັດ ແລະ ນະໂຍບາຍທີ່ມີຜົນກະທົບຫຼາຍທີ່ສຸດຕໍ່ການບັນລຸ 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ' (ໃນ ສປປ ລາວ)

ໂດຍກ່ຽວຂ້ອງກັບນະໂຍບາຍ, ແນວທາງນີ້ອາດໄດ້ຮັບຜົນກະທົບສູງຈາກບຸລິມະສິດທີ່ໄດ້ກໍານົດໄວ້ໃນ ຍຸດທະສາດການພັດທະນາກະສິກໍາ ຂອງ ສປປ ລາວ ຮອດປີ 2025 ແລະ ວິໄສທັດຮອດປີ 2030; ໃນກໍລະນີການຍົກສູງຄວາມຊ່ຽວຊານ, ການຜະລິດ, ການຫັນເປັນທັນສະໄໝ, ການສົ່ງເສີມການຜະລິດເປັນສິນຄ້າ ແລະ ຄວາມຍືນຍົງຂອງຂະແໜງການກະສິກໍາ, ການລ້ຽງສັດ ແລະ ການປະມົງແມ່ນປັດໃຈທີ່ສໍາຄັນ, ເຊັ່ນດຽວກັນກັບການເຄື່ອນໄຫວຂອງຊາວກະສິກອນໄປຈົນເຖິງການເຄື່ອນໄຫວໃນລະດັບຂອງລັດຖະບານ. ຫຼັກປະຕິບັດທີ່ສໍາຄັນພາຍໃຕ້ຂົງເຂດເຫຼົ່ານີ້ຈະຮັບປະກັນໃຫ້ເຕັກນິກດ້ານສະພາບດິນຟ້າອາກາດທີ່ທັນສະໄໝຖືກນໍາໃຊ້, ເຊິ່ງຈະຊ່ວຍຫຼຸດຜ່ອນຜົນກະທົບຈາກການປ່ຽນແປງສະພາບດິນຟ້າອາກາດໄດ້, ພ້ອມທັງໃຫ້ມີການນໍາໃຊ້ຫຼັກປະຕິບັດທີ່ຍືນຍົງນັບຕັ້ງແຕ່ການຜະລິດໄປຈົນເຖິງການເກັບກ່ຽວ, ການປຸງແຕ່ງ, ການແຈກຢາຍ, ການບໍລິໂພກ ແລະ ການກໍາຈັດສິ່ງເສດເຫຼືອ - ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສະພາບດິນຟ້າອາກາດ. ການເຊື່ອມສານບົດບາດຍິງຊາຍ ແລະ ການສົ່ງເສີມບົດບາດໃຫ້ແກ່ແມ່ຍິງ ແລະ ພົນລະເມືອງທີ່ມີຄວາມອ່ອນໄຫວແມ່ນໄດ້ຖືກຈັດເຂົ້າເປັນໜຶ່ງໃນບັນດາຫຼັກການສໍາຄັນດ້ານການຈັດຕັ້ງປະຕິບັດຍຸດທະສາດ ແລະ ວິໄສທັດຂ້າງເທິງ.

ຍັງມີຄວາມເຊື່ອມໂຍງກັນຢ່າງຈະແຈ້ງກັບ ແຜນວຽກດ້ານໂພຊະນາການແຫ່ງຊາດ (NPAN) (2021-2025), ດ້ວຍຄວາມຄາດຫວັງທີ່ຈະປັບປຸງຕ່ອງໂສ້ມູນຄ່າ, ໂດຍສະເພາະໄດ້ສຸມໃສ່ການແກ້ໄຂບັນຫາຫຼັງການເກັບກ່ຽວ, ການປຸງແຕ່ງອາຫານ, ການປົກປ້ອງ ແລະ ການເກັບຮັກສາໂພຊະນາການ, ພ້ອມທັງເພີ່ມທະວີການລົງທຶນພາຍໃນປະເທດເຂົ້າໃນວຽກງານດ້ານໂພຊະນາການ ທີ່ແນໃສ່ສົ່ງເສີມຄວາມຍືນຍົງ - ເຊິ່ງທັງໝົດນີ້ອາດກາຍເປັນຈຸດເລີ່ມຕົ້ນທີ່ດີເລີດສໍາລັບຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ທັງຍັງຮຽກຮ້ອງໃຫ້ມີການຄົ້ນຄິດກ່ຽວກັບບັນຫາໃນຫຼາຍໆມິຕິ. ຫຼັກປະຕິບັດທີ່ສໍາຄັນໃນຂົງເຂດນີ້ປະກອບມີການຮັບປະກັນໂພຊະນາການໃນບ່ອນເຮັດວຽກ ແລະ ຄວາມສໍາຄັນຂອງການສົ່ງເສີມສະຖານທີ່ເຮັດວຽກ ທີ່ຄໍານຶງເຖິງຄວາມຕ້ອງການດ້ານໂພຊະນາການຂອງພະນັກງານ ແລະ ເຂົ້າໃຈເຖິງຜົນສະທ້ອນຂອງໂພຊະນາການທີ່ບໍ່ດີຕໍ່ກໍາລັງການຜະລິດພະນັກງານ.

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025) ເຊັ່ນດຽວກັນ, ກໍ່ມີຄວາມກ່ຽວຂ້ອງສູງຕໍ່ການບັນລຸຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ ໂດຍຜ່ານການສຸມໃສ່ການລວມເອົາການລົງທຶນຂອງພາກລັດ ແລະ ເອກະຊົນເຂົ້າໃນໂຄງລ່າງພື້ນຖານຊົນນະບົດ, ເຕັກໂນໂລຊີ, ແລະ ວິສາຫະກິດຈຸນລະພາກ ແລະ ຂະໜາດນ້ອຍ ລວມທັງບັນດາກິດຈະການທີ່ນອນຢູ່ໃນຕ່ອງໂສ້ມູນຄ່າກະສິກໍາ, ແລະ ທີ່ສໍາຄັນແມ່ນການຮັບປະກັນໃຫ້ກຸ່ມທີ່ມີຄວາມອ່ອນໄຫວສາມາດເຂົ້າເຖິງໂອກາດດ້ານຊີວິດການເປັນຢູ່ທີ່ດີ ແລະ ການສະໜັບສະໜູນທາງສັງຄົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ຫຼັກປະຕິບັດທີ່ສໍາຄັນໃນຂົງເຂດນີ້ລວມມີການຮັບປະກັນການປົກປ້ອງແບບກວມລວມ ທີ່ຮັບປະກັນໃຫ້ແມ່ຍິງ, ຊາວໜຸ່ມ, ຄົນພິການ, ແລະ ກຸ່ມທີ່ມີຄວາມອ່ອນໄຫວອື່ນໆໄດ້ມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຢ່າງເທົ່າທຽມຈາກການພັດທະນາເສດຖະກິດ-ສັງຄົມ; ໂດຍສະເພາະການສະໜອງວຽກງານທີ່ດີໃຫ້ແກ່ຊາວໜຸ່ມທີ່ມີຈໍານວນເພີ່ມຂຶ້ນ ກໍ່ແມ່ນສິ່ງທີ່ສໍາຄັນ.

### ການເຮັດວຽກຮ່ວມກັນອັນໃດ ທີ່ 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ' ໄດ້ສ້າງຫຍັງລະຫວ່າງອົງປະກອບຂອງລະບົບອາຫານ ແລະ ເສັ້ນທາງ?

ປະມານ 80%[10] ຂອງປະຊາກອນໂລກທີ່ທຸກຍາກທີ່ສຸດດໍາລົງຊີວິດຢູ່ໃນເຂດຊົນນະບົດ ແລະ ສ່ວນໃຫຍ່ແມ່ນອາໄສການລ້ຽງຊີບໂດຍອີງໃສ່ຊັບພະຍາກອນທໍາມະຊາດ ເພື່ອສະຫວັດດີການທາງເສດຖະກິດ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການຂອງຕົນ. ຜູ້ທີ່ທຸກຍາກທີ່ສຸດສ່ວນໃຫຍ່ແມ່ນມີສ່ວນຮ່ວມໃນລະບົບສະບຽງອາຫານໃນຖານະຜູ້ຜະລິດກະສິກໍາຂະໜາດນ້ອຍ, ຊາວປະມົງ, ຜູ້ລ້ຽງສັດ ຫຼື ຊຸມຊົນທີ່ອາໄສປ່າເພື່ອລ້ຽງຊີບ ພ້ອມທັງແຮງງານຊົ່ວຄາວໃນຂະແໜງການກະສິກໍາ, ແລະ ຜູ້ທີ່ດໍາເນີນວິສາຫະກິດຈຸນລະພາກ, ຂະໜາດນ້ອຍ ແລະ ກາງ ທີ່ສົ່ງເສີມທຸລະກິດໃນຕ່ອງໂສ້ມູນຄ່າອາຫານ. ຄວາມບໍ່ສະເໝີພາບໃນການເຂົ້າເຖິງ ແລະ ການເປັນເຈົ້າຂອງທີ່ດິນ, ຊັບສິນດ້ານກະສິກໍາ ແລະ ຊັບພະຍາກອນທໍາມະຊາດ ແລະ ລາຍໄດ້ແມ່ນຄວາມກັງວົນທີ່ຊັບຊ້ອນ ແລະ ກ່ຽວຂ້ອງກັບຄວາມທຸກຍາກ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ.

---

[10] https://www.un.org/sites/un2.un.org/files/at_4_discussion_starter.pdf

ເຊັ່ນດຽວກັນ, ສປປ ລາວ ກໍ່ຕ້ອງປະເຊີນກັບບັນຫາທີ່ຄ້າຍຄືກັນ. ປະຊາກອນຫຼາຍກວ່າ 70% ແມ່ນອາໄສຢູ່ໃນເຂດຊົນນະບົດ ແລະ ມີຫຼາຍກວ່າ 80% ທີ່ເຮັດວຽກໃນຂະແໜງການກະສິກໍາ. ເຖິງແມ່ນວ່າ ສປປ ລາວ ຈະມີຄວາມໜາແໜ້ນດ້ານປະຊາກອນຕ່ໍາ, ແຕ່ກໍ່ມີພື້ນທີ່ປູກຝັງທີ່ຈໍາກັດ ແລະ ຕ້ອງໄດ້ອາໄສການນໍາໃຊ້ບໍ່ພຽງພໍໃນພື້ນທີ່ຕ່ໍາ, ແຕ່ລວມໄປເຖິງເຂດເນີນສູງ ແລະ ພື້ນທີ່ປ່ານໍາອີກ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ. ຂະແໜງການກະສິກໍາຍັງຖືກຈໍາກັດໂດຍການລົງທຶນທີ່ຈໍາກັດຈາກທັງພາກລັດ ແລະ ເອກະຊົນ, ພື້ນຖານໂຄງລ່າງທີ່ບໍ່ພຽງພໍ ແລະ ການເກີດໄພພິບັດທາງທໍາມະຊາດຕ່າງໆ. ຕະຫຼາດຈໍາໜ່າຍວັດຖຸດິບ ແລະ ຜົນຜະລິດຍັງຄົງມີຄວາມກະແຈກກະຈາຍ ແລະ ບໍ່ທັນໄດ້ຮັບພັດທະນາເທົ່າທີ່ຄວນ ໂດຍທີ່ຊາວກະສິກອນ ແລະ ຜູ້ຜະລິດມີການເຂົ້າເຖິງສິນເຊື່ອທີ່ຈໍາກັດ.

ເຖິງແມ່ນວ່າຈະມີສິ່ງທ້າທາຍຕາມທີ່ກ່າວມາຂ້າງເທິງຕໍ່ກັບຂະແໜງການກະສິກໍາ, ທຸລະກິດກະສິກໍາ, ການລ້ຽງສັດ, ການປະມົງ ແລະ ຂະແໜງການປ່າໄມ້ອື່ນໆຢູ່ກໍ່ຕາມ, ໂດຍອີງໃສ່ທ່າແຮງທາງດ້ານຊັບພະຍາກອນທໍາມະຊາດ ແລະ ມູນເຊື້ອດ້ານການຜະລິດຂອງປະຊາຊົນໃນແຕ່ລະສະຖານທີ່, ສປປ ລາວ ຈຶ່ງມີທ່າແຮງຫຼາຍດ້ານໃນການຫັນເປັນທັນສະໄໝ, ສົ່ງເສີມການຜະລິດເປັນສິນຄ້າ, ແລະ ຫັນຂະແໜງການຜະລິດໃຫ້ມີຄວາມຍືນຍົງຂຶ້ນຕື່ມ, ພ້ອມທັງຍັງສາມາດສ້າງໂອກາດໃໝ່ໆ ແລະ ພັດທະນາຊີວິດການເປັນຢູ່ທີ່ມີຢູ່ໃຫ້ດີຂຶ້ນ ໂດຍຜ່ານການຜະລິດ, ການກັກເກັບ, ການປຸງແຕ່ງ, ການແຈກຢາຍ ແລະ ການບໍລິໂພກ ແລະ ການກໍາຈັດສິ່ງເສດເຫຼືອໃນຂົງເຂດເຫຼົ່ານີ້. ລຸ່ມນີ້ແມ່ນບາງການເຮັດວຽກຮ່ວມກັນທີ່ສໍາຄັນໃນລະບົບສະບຽງອາຫານ:

- ການສ້າງຄວາມທົນທານຜ່ານການປະສານງານ. ນະໂຍບາຍ, ເຕັກໂນໂລຊີ, ຫຼັກປະຕິບັດ ແລະ ການຮ່ວມມື ທີ່ເພີ່ມຂີດຄວາມສາມາດຂອງລະບົບສະບຽງອາຫານ ເພື່ອຄາດຄະເນ, ປ້ອງກັນ, ຫຼຸດຜ່ອນ ແລະ  ຄຸ້ມຄອງຄວາມສ່ຽງຕ່າງໆຢ່າງມີປະສິດຕິຜົນ ແລະ ສ້າງຄືນໃໝ່ໃຫ້ດີຂຶ້ນກວ່າເກົ່າໃນການຟື້ນຟູຄືນຈາກຜົນກະທົບຕ່າງໆແມ່ນມີຄວາມຈໍາເປັນ ເພື່ອສົ່ງເສີມລະບົບສະບຽງອາຫານທີ່ຍືນຍົງ. ຂັ້ນຕອນໃນການສ້າງຄວາມທົນທານສາມາດປະຕິບັດໄດ້ໃນຫລາຍລະດັບ ແລະ ຈໍາເປັນຕ້ອງໄດ້ມີມາດຕະການອັນຮອບດ້ານ ທີ່ກ່ຽວຂ້ອງກັບການປະເມີນຄວາມສ່ຽງ, ການປົກຄອງ, ການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດທີ່ອີງໃສ່ລະບົບນິເວດ ແລະ ການປັບໂຕຕໍ່ການປ່ຽນແປງສະພາບດິນຟ້າອາກາດ, ແບບແຜນທີ່ມີຄວາມກວມລວມ ແລະ ຄໍານຶງເຖິງບົດບາດຍິງຊາຍ, ການປົກປ້ອງສັງຄົມທີ່ຄໍານຶງເຖິງບັນຫາດ້ານໂພຊະນາການ ແລະ ຕອບສະໜອງໄດ້ຕໍ່ຜົນກະທົບ ແລະ ອື່ນໆ[11]; ສິ່ງນີ້ແມ່ນກ່ຽວຂ້ອງໂດຍສະເພາະກັບແນວທາງການດໍາເນີນງານທີ 5 ຂອງ MSD (ຫົວຂໍ້ທີສີ່): ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ, ແລະ ຄວາມກົດດັນຕ່າງໆ.
- ການສ້າງຄວາມທົນທານຢ່າງເປັນລະບົບ. ການສ້າງຄວາມທົນທານເປັນສິ່ງຈໍາເປັນໃນທຸກອົງປະກອບຂອງລະບົບສະບຽງອາຫານ (ສິ່ງແວດລ້ອມ, ຄົນ, ວັດຖຸດິບ, ຂັ້ນຕອນຕ່າງໆ, ໂຄງສ້າງພື້ນຖານ ແລະ ສະຖາບັນ) ແລະ ທຸກກິດຈະກໍາ (ຈາກການຜະລິດ, ການແປຮູບ, ການແຈກຢາຍໄປຈົນເຖິງການກະກຽມ ແລະ ການບໍລິໂພກອາຫານ ແລະ ການຄຸ້ມຄອງສິ່ງເສດເຫຼືອ) ໂດຍຄໍານຶງເຖິງການເຊື່ອມໂຍງກັນຂອງອົງປະກອບເຫຼົ່ານີ້ ແລະ ວິທີທີ່ອົງປະກອບດັ່ງກ່າວຈະສາມາດບັນລຸຜົນໄດ້ຮັບດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມໄດ້ ດ້ວຍການຫຼຸດຜ່ອນຄວາມທຸກຍາກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສະຖານະດ້ານໂພສະນາການທີ່ໄດ້ຮັບການປັບປຸງດີຂຶ້ນໃນຂັ້ນສູນກາງ. ສິ່ງນີ້ແມ່ນຈໍາເປັນຕໍ່ການກະສິກໍາ, ການລ້ຽງສັດ ແລະ ການປະມົງ, ລວມທັງທຸລະກິດກະສິກໍາ ແລະ ລັດວິສາຫະກິດຈຸນລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ເນັ້ນໜັກໃສ່ການະໜອງວັດຖຸດິບ, ການຂົນສົ່ງ, ຂັ້ນຕອນຕ່າງໆ, ການຂາຍ, ການຊື້, ແລະ ການປຸງແຕ່ງ/ການບໍລິການອາຫານໃນລະບົບສະບຽງອາຫານ.
- ໂພຊະນາການ. ການພັດທະນາຊີວິດການເປັນຢູ່ ແລະ ລະບົບສະບຽງອາຫານ ໂດຍຜ່ານການກະສິກໍາ, ການລ້ຽງສັດ ແລະ ການປະມົງໄດ້ສະໜອງໂອກາດ ເພື່ອຮັບປະກັນຄວາມຫຼາກຫຼາຍດ້ານສະບຽງອາຫານ ທີ່ສະໜັບສະໜູນສຸຂະພາບຂອງປະຊາກອນ. ອາດມີຄວາມເຊື່ອມໂຍງຢ່າງໃກ້ຊິດກັບແນວທາງການດໍາເນີນງານທີ 1 ພາຍໃຕ້ ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານ (ຫົວຂໍ້ທີ 1): ຮັບປະກັນການເຂົ້າເຖິງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ທຸກຄົນ;
- ຄວາມຍືນຍົງ ແລະ ລະບົບທີ່ເປັນມິດຕໍ່ທໍາມະຊາດ. ສປປ ລາວ ຍັງສືບຕໍ່ປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງໃນຂະແໜງການກະສິກໍາ ລວມທັງບັນຫາທີ່ກ່ຽວຂ້ອງກັບໄພພິບັດທາງທໍາມະຊາດ (ໄພນໍ້າຖ້ວມ, ໄພແຫ້ງແລ້ງ, ດິນເຊາະເຈື່ອນ), ການປ່ຽນແປງຂອງສະພາບດິນຟ້າອາກາດ, ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງ, ການເອື່ອຍອີງສູງຕໍ່ຂະແໜງການຂຸດຄົ້ນຊັບພະຍາກອນ (ເຊັ່ນ: ຂະແໜງການພະລັງງານນໍ້າ, ໄມ້ແປຮູບ ແລະ ບໍ່ແຮ່); ການແຜ່ລະບາດຂອງສັດຕູພືດ ແລະ ພະຍາດສັດ, ຄວາມກັງວົນກ່ຽວກັບຄວາມປອດໄພຂອງອາຫານ, ແລະ ລະບົບການການຕະລາດ ແລະ ການແຈກຢາຍອາຫານທີ່ບໍ່ພຽງພໍ. ມີຄວາມເຊື່ອມໂຍງກັນຢ່າງໃກ້ຊິດລະຫວ່າງການຮັບປະກັນໃຫ້ແກ່ ແນວທາງການດໍາເນີນງານທີສອງ ພາຍໃຕ້ ກອງປະຊຸມສຸດຍອດດ້ານລະບົບສະບຽງອາຫານ: ການຫັນປ່ຽນໄປສູ່ຮູບແບບການບໍລິໂພກທີ່ຍືນຍົງ ແລະ ແນວທາງການດໍາເນີນງານທີ 3 (ຫົວຂໍ້ທີສີ່) ການສົ່ງເສີມການຜະລິດທີ່ເປັນມິດຕໍ່ທໍາມະຊາດໃນລະດັບທີ່ພຽງພໍ.
- ຄວາມກວມລວມ. ການເຄື່ອນໄຫວທີ່ຮັບປະກັນໃຫ້ “ພວກເຮົາພ້ອມກັນກ້າວໄປ” ໂດຍຮັບປະກັນໃຫ້ກຸ່ມທີ່ມີຄວາມອ່ອນໄຫວຫຼາຍທີ່ສຸດມີສ່ວນຮ່ວມເຂົ້າໃນລະບົບສະບຽງອາຫານ ແລະ ໂດຍຮັບປະກັນວ່າສະມາຊິກທຸກຄົນໃນສັງຄົມມີໂອກາດເຂົ້າເຖິງຊັບພະຍາກອນ, ການບໍລິການ, ຂໍ້ມູນຂ່າວສານ, ອາຫານ ແລະ ໂອກາດດ້ານຊີວິດການເປັນຢູ່ທີ່ໄດ້ຢ່າງເທົ່າທຽມກັນ;
- ບົດບາດຍິງຊາຍ. ແມ່ຍິງມີບົດບາດສໍາຄັນ ແລະ ທັງຍັງເປັນສ່ວນສໍາຄັນຂອງຂະແໜງການກະສິກໍາໃນ ສປປ ລາວ, ທີ່ກວມເອົາຫຼາຍກວ່າ 50 ສ່ວນຮ້ອຍຂອງກໍາລັງແຮງງານໃນຂະແໜງການດັ່ງກ່າວ. ແມ່ຍິງຕ້ອງໄດ້ປະສົບກັບອຸປະສັກສໍາຄັນ ແລະ ຕໍ່ເນື່ອງໃນການມີສ່ວນຮ່ວມຢ່າງເຕັມທີ່ໃນລະບົບສະບຽງອາຫານ ທີ່ກ່ຽວຂ້ອງກັບສະຖາບັນດ້ານການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຊັບພະຍາກອນ ແລະ ຕໍາແໜ່ງຜູ້ນໍາ. ແມ່ຍິງ ແລະ ຜູ້ຊາຍຕ້ອງສາມາດເຂົ້າເຖິງວັດຖຸດິບ, ການບໍລິການ, ຕະຫລາດ ແລະ ໂອກາດຕ່າງໃນຕ່ອງໂສ້ມູນຄ່າທັງໝົດໄດ້ຢ່າງເທົ່າທຽມ ແລະ ໃຫ້ສາມາດຄຸ້ມຄອງລາຍໄດ້ ແລະ ຜົນປະໂຫຍດທີ່ໄດ້ຮັບຕ່າງໆໄດ້ຢ່າງເທົ່າທຽມ.

[11] http://www.fao.org/3/nb842en/nb842en.pdf

### ຜົນໄດ້ຜົນເສຍທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບ 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ

ຜົນໄດ້ຜົນເສຍອັນໃຫຍ່ຫຼວງຕໍ່ການເນັ້ນໜັກໃສ່ການສ້າງວຽກເຮັດງານທຳທີ່ດີ, ການສ້າງຄວາມກວມລວມໃຫ້ແກ່ປະຊາຊົນທຸກຄົນ ລວມທັງກຸ່ມຄົນທີ່ມີຄວາມອ່ອນໄຫວສູງ ໃຫ້ສາມາດມີສ່ວນຮ່ວມເຂົ້າໃນຕ່ອງໂສ້ມູນຄ່າ ແລະ ເຮັດວຽກຮ່ວມກັນໂດຍທັນທີ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບໃນອະນາຄົດຕໍ່ຊີວິດການເປັນຢູ່ພາຍໃຕ້ລະບົບສະບຽງອາຫານ ໂດຍຫຼັກແລ້ວແມ່ນມີຄວາມກ່ຽວຂ້ອງກັບເສດຖະກິດ ແລະ ການເງິນ. ຍົກຕົວຢ່າງ, ການເພີ່ມເຕັກນິກໃນການຜະລິດກະສິກຳທີ່ມີປະສິດທິພາບ, ວິຊາການ, ນະວັດຕະກຳ ແລະ ການບໍລິການ ເພື່ອຍົກສູງຂີດຄວາມສາມາດໃນການແຂ່ງຂັນໃຫ້ແກ່ວິສາຫະກິດ, ໂຄງສ້າງພື້ນຖານໃນຊົນນະບົດທີ່ຍືນຍົງ, ແລະ ການປົກປ້ອງທາງສັງຄົມ ຈະຕ້ອງໄດ້ອາໄສການລົງທຶນຈາກທັງພາກລັດ ແລະ ເອກະຊົນ, ໂດຍສະເພາະໃນໄລຍະສັ້ນ. ກໍລະນີນີ້ຍັງລວມໄປເຖິງການລົງທຶນດ້ານວິຊາການ, ວັດຖຸດິບການຜະລິດ, ທຶນທີ່ກຸ່ມທີ່ມີຄວາມອ່ອນໄຫວສາມາດເຂົ້າເຖິງໄດ້, ແລະ ການຕອບໂຕ້ ແລະ ການປ້ອງກັນຜົນກະທົບລ່ວງໜ້າ, ເຊັ່ນ: ພະຍາດໂຄວິດ-19 ແລະ ໄພທຳມະຊາດຕ່າງໆ.

ເຖິງແມ່ນວ່າຜົນປະໂຫຍດ ແລະ ຜົນຕອບແທນຈາກການລົງທຶນເຫຼົ່ານີ້ຈະສະແດງອອກໃນໄລຍະສັ້ນ, ກາງ, ແລະ ຍາວກໍ່ຕາມ, ມັນອາດຊ່ວຍຫຼຸດຊ່ອງຫວ່າງດ້ານລາຍຮັບໃຫ້ແກ່ປະຊາກອນທີ່ອາໄສຢູ່ເຂດຊົນນະບົດ ແລະ ກຸ່ມຄົນທີ່ມີຄວາມອ່ອນໄຫວ, ເພີ່ມກຳລັງແຮງງານ, ຫຼຸດອັດຕາການຫວ່າງງານໃຫ້ຕໍ່າກວ່າເປົ້າໝາຍກໍ່ຄື 5%, ຊຸກຍູ້ການຜະລິດເປັນສິນຄ້າເພື່ອຂາຍອອກສູ່ຕະຫຼາດທັງພາຍໃນປະເທດ ແລະ ຕ່າງປະເທດ, ເພີ່ມກຳລັງການຜະລິດໃນເສດຖະກິດທ້ອງຖິ່ນ ແລະ ແຫ່ງຊາດ, ຫຼຸດຜ່ອນອຸປະສັກກີດຂວາງໃນລະບົບສາທາລະນະສຸກ ແລະ ສະຫວັດດີການ, ແລະ ໂດຍສະເພາະ, ຫຼຸດຜ່ອນຕົ້ນທຶນໃນການຕອບສະໜອງຕໍ່ຜົນກະທົບທີ່ເກີດຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ໄພພິບັດທຳມະຊາດຕ່າງໆ.

ຈາກການຊັ່ງຊາຜົນໄດ້ຜົນເສຍດ້ານສັງຄົມ ແລະ ສິ່ງແວດລ້ອມເຮັດໃຫ້ເຫັນເຖິງຜົນກະທົບ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ, ແຕ່ພວກເຮົາກໍ່ສາມາດຫຼຸດຜ່ອນຜົນກະທົບເຫຼົ່ານີ້ໄດ້. ການສ້າງຄວາມເປັນຢູ່ທີ່ດີອາດສົ່ງຜົນໃຫ້ສິ່ງແວດລ້ອມຊຸດໂຊມລົງ, ເຊັ່ນ: ການປັບປ່ຽນພື້ນທີ່ດິນ ເພື່ອຈຸດປະສົງໃນການເຮັດກະສິກຳ ແລະ ປູກປ່າ, ຍັງສືບຕໍ່ດຳເນີນການແປຮູບ ຫຼື ການຂົນສົ່ງທີ່ບໍ່ຍືນຍົງ, ແລະ ວິທີການກຳຈັດສິ່ງເສດເຫຼືອທີ່ບໍ່ເໝາະສົມ ເຊິ່ງກໍ່ໃຫ້ເກີດການເຜົາໄໝ້ອາຍພິດທີ່ເປັນອັນຕະລາຍ. ນອກຈາກນີ້, ຍັງອາດມີຄວາມສ່ຽງທີ່ກ່ຽວຂ້ອງກັບການຍົກສູງບົດບາດໃຫ້ແກ່ກຸ່ມໃດໜຶ່ງ, ເຊິ່ງອາດເຮັດໃຫ້ເກີດຄວາມບໍ່ພໍໃຈ ຫຼື ບັນຫາດ້ານຄວາມປອງດອງໃນສັງຄົມ ຖ້າມີກຸ່ມໃດໜຶ່ງຖືກລະເລີຍຈາກຄວາມພະຍາຍາມໃນການສ້າງລາຍຮັບທີ່ເພີ່ມຂຶ້ນ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ. ນີ້ອາດເປັນກໍລະກີໜຶ່ງຂອງສະຖານະການທີ່ຕະຫຼາດເກີດຄວາມອີ່ມໂຕ ເຊິ່ງອາດເຮັດໃຫ້ຄູ່ຮ່ວມງານທີ່ກ່ຽວຂ້ອງໃນປັດຈຸບັນມີກຳລັງໃນການຂັບເຄື່ອນຕະຫຼາດຫຼຸດໜ້ອຍລົງ. ສິ່ງເຫຼົ່ານີ້ເປັນພຽງຜົນໄດ້ຜົນເສຍທີ່ອາດເກີດຂຶ້ນເທົ່ານັ້ນ, ຢ່າງໃດກໍ່ຕາມ, ມັນສາມາດບັນເທົາໄດ້ ໂດຍຜ່ານການນຳໃຊ້ແບບແຜນທີ່ເປັນລະບົບ ແລະ ມີຄວາມຮັດກຸມ ທີ່ຄຳນຶງເຖິງສັງຄົມ ແລະ ສິ່ງແວດລ້ອມ ພາຍໃຕ້ຫຼັກການທີ່ບໍ່ສ້າງຄວາມເສຍຫາຍ, ໂດຍສະເພາະໃນຫົວຂໍ້ການສົ່ງເສີມການຜະລິດສະບຽງອາຫານທີ່ເປັນມິດຕໍ່ທຳມະຊາດ ແລະ ການຍົກສູງຄວາມທົນທານຕໍ່ຄວາມສ່ຽງ ແລະ ຜົນກະທົບຕ່າງໆ.

### ເສັ້ນທາງສຳລັບ ສປປ ລາວ ເພື່ອ 'ສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ'.

ເສັ້ນທາງສຳລັບ ສປປ ລາວ ເພື່ອສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸ່ນຄ່າຢ່າງເທົ່າທຽມ ຈະສາມາດຊ່ວຍແກ້ໄຂສິ່ງທ້າທາຍ ແລະ ໂອກາດສາມປະການທີ່ແຕກຕ່າງກັນຢ່າງເປັນລະບົບ. ໝາຍຄວາມວ່າ ຈຳເປັນຈະຕ້ອງມີຄວາມພະຍາຍາມໃນການປະສານງານ ເພື່ອສ້າງ ແລະ ປັບປຸງໂອກາດດ້ານການມີວຽກເຮັດງານທຳ, ລາຍໄດ້ ແລະ ການສະໜັບສະໜູນດ້ານຄວາມປອດໄພທາງສັງຄົມທີ່ດີ ພ້ອມທັງແນ່ໃສ່ການເຂົ້າເຖິງລາຍຮັບທີ່ມີຄຸນນະພາບ, ການສະໜັບສະໜູນທາງສັງຄົມ ແລະ ການເປັນຢູ່ທີ່ດີໃນທົ່ວທຸກບ່ອນ, ແລະ ທ້າຍທີ່ສຸດ, ພ້ອມດ້ວຍຄວາມຄາດຫວັງໃນການຫຼຸດຜ່ອນຄວາມສ່ຽງ ແລະ ໂອກາດໃນການເສີມສ້າງຄວາມທົນທານດ້ານການດຳລົງຊີວິດໃຫ້ແກ່ທຸກຄົນ.

ໃນທາງປະຕິບັດ, ນີ້ໝາຍຄວາມເຖິງຄວາມພະຍາຍາມແບບລວມສູນຂອງລັດຖະບານ, ຜູ້ເຄື່ອນໄຫວດ້ານການພັດທະນາ, ສະຖາບັນ, ພາກສັງຄົມ, ພາກເອກະຊົນ, ແລະ ອື່ນໆ, ທີ່ຕ້ອງໄດ້ອີງໃສ່ຄຳເຫັນທີ່ໄດ້ຮັບຈາກບັນດາຄູ່ຮ່ວມງານ, ແລະ ໂດຍສະເພາະກຸ່ມຄົນທີ່ມີຄວາມອ່ອນໄຫວສູງ, ເຊັ່ນ: ແມ່ຍິງ, ຊາວໜຸ່ມ, ແລະ ຄົນພິການ. ວຽກງານນີ້ຕ້ອງໄດ້ມີການປະສານງານກັນ ເພື່ອສ້າງຄວາມເຂົ້າໃຈ ແລະ ການຕິດຕາມລະຫວ່າງບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ເພື່ອຫຼີກລ້ຽງຄວາມພະຍາຍາມທີ່ຊໍ້າຊ້ອນ - ໃນດ້ານພູມສາດ, ຄວາມກ່ຽວພັນກັບຫວົຂໍ້ ແລະ ດ້ານການເງິນ – ແລະ ໃຫ້ມີການແບ່ງປັນຄວາມຮູ້ ຫຼື ເສີມສ້າງການເຮັດວຽກຮ່ວມກັນໃນທຸກວຽກງານເຫຼົ່ານີ້. ສິ່ງນີ້ຈະຮັບປະກັນໃຫ້ການສ້າງການດຳລົງຊີວິດທີ່ດີ, ການສ້າງຄວາມທົນທານ ແລະ ການສະໜອງສະຫວັດດີການສັງຄົມທີ່ຍອມຮັບໄດ້ ແນ່ໃສ່ສະຖານທີ່ທີ່ມີຄວາມຕ້ອງການຫຼາຍທີ່ສຸດ, ໃນຮູບແບບທີ່ມີຄວາມຍຸຕິທຳ, ມີຍຸດທະສາດ ແລະ ສາມາດເຂົ້າເຖິງໄດ້ຫຼາຍຂຶ້ນ. ສິ່ງທີ່ຕ້ອງຄຳນຶງເຖິງພາຍໃຕ້ເສັ້ນທາງນີ້ລວມມີວິທີການເຮັດວຽກຮ່ວມຜູ້ລົງທຶນຈາກທັງພາກລັດ ແລະ ເອກະຊົນ, ຜູ້ເຄື່ອນໄຫວໃດທີ່ມີທ່າແຮງໃນມາດຕະການເຂົ້າແຊກແຊງ, ແລະ ຂົງເຂດທີ່ກ່ຽວພັນກັບຫຼາຍພາກສ່ວນຈະສາມາດສົ່ງເສີມວຽກງານອື່ນໆໄດ້ຄືແນວໃດ. ສຸດທ້າຍນີ້, ສິ່ງສຳຄັນແມ່ນຄຳເຫັນທີ່ໄດ້ຮັບຈາກບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ແລະ ການແກ້ຫຼັກປະຕິບັດງານໃນກໍລະນີຈຳເປັນ. ເນື່ອງຈາກວ່າແນວທາງນີ້ໄດ້ແນ່ໃສ່ປະຊາຊົນເປັນຫຼັກ, ຈຶ່ງຈຳເປັນຕ້ອງມີຄວາມເຂົ້າໃຈກ່ຽວກັບການປ່ຽນແປງສຳລັບປະຊາຊົນ ແລະ ທັງຍັງມີຄວາມສຳຄັນຕໍ່ຜົນໄດ້ຮັບດ້ານການພັດທະນາຂອງ ສປປ ລາວ.

ເສັ້ນທາງດ້ານການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ ຈະສາມາດນຳໄປສູ່ຜົນກະທົບທີ່ເປັນເອກະລັກສະເພາະຕໍ່ການບັນລຸເປົ້າໝາຍຕ່າງໆຂອງ ສປປ ລາວ ດ້ານການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ປາກົດຜົນເປັນຈິງ. ໂດຍສະເພາະແມ່ນເສັ້ນທາງຂອງ ສປປ ລາວ ເພື່ອສ້າງຄວາມຄືບໜ້າໃນບັາດາເປົ້າໝາຍທີ່ຂັບເຄື່ອນດ້ວຍປະຊາຊົນ, ເຊັ່ນ: ປພຍ 1 (ລຶບລ້າງຄວາມທຸກຍາກ), ປພຍ 5 (ມີຄວາມສະເໝີພາບລະຫວ່າງຍິງຊາຍ), ປພຍ 8 (ມີວຽກເຮັດງານທຳທີ່ດີ ແລະ ເສດຖະກິດມີການຂະຫຍາຍໂຕ), ແລະ ປພຍ 10 (ຫຼຸດຜ່ອນຄວາມບໍ່ສະເໝີພາບ), ພ້ອມກັບເປົ້າໝາຍອື່ນໆທີ່ກ່ຽວພັນກັບທຸກວຽກງານດ້ານລະບົບສະບຽງອາຫານກໍຄື ປພຍ 2 (ລຶບລ້າງຄວາມອຶດຫິວ) ແລະ ປພຍ 13 (ມີການຮັບມືກັບການປ່ຽນແປງຂອງສະພາບດິນຟ້າອາກາດ).

## ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.

ສປປ ລາວ ມີທ່າແຮງໃນການສະໜອງໂອກາດ ແລະ ແກ້ໄຂຄວາມສ່ຽງອັນສະເພາະໃຫ້ແກ່ປະຊາຊົນ ຜູ້ທີ່ເຮັດວຽກໃນຕ່ອງໂສ້ຂອງລະບົບສະບຽງອາຫານທີ່ຍືນຍົງທັງໝົດ ເພື່ອຮັບປະກັນ 'ການສ້າງຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ ແລະ ການແຈກຢາຍຄຸນຄ່າຢ່າງເທົ່າທຽມ.' ສິ່ງເຫຼົ່ານີ້ສາມາດບັນລຸໄດ້ໂດຍຜ່ານການເຮັດວຽກຮ່ວມກັນລະຫວ່າງຄູ່ຮ່ວມມືຕ່າງໆ ດ້ວຍວາລະການປ່ຽນແປງດ້ານການຮ່ວມມືກັບບັນດາຄູ່ຮ່ວມງານທັງໝົດທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ລວມມີລັດຖະບານໃນທຸກລະດັບ, ຄູ່ຮ່ວມພັດທະນາ, ວິສາຫະກິດເອກະຊົນ, ຜູ້ຜະລິດ, ຊາວກະສິກອນ, ພາກສັງຄົມ, ແລະ ຜູ້ບໍລິໂພກ. ເມື່ອຄຳນຶງເຖິງບົດບາດຫຼັກເຫຼົ່ານີ້, ຈຶ່ງສາມາດກຳນົດຂອບເຂດການເຄື່ອນໄຫວໄດ້ດັ່ງຕໍ່ໄປນີ້:

**ສ້າງແບບແຜນທີ່ສອດຄ່ອງກັນ ແລະ ມີການປະສານງານກັບຫຼາຍຂະແໜງການທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ຍຶດໝັ້ນຕໍ່ຫຼັກການປ່ຽນແປງລະບົບອາການໃນການຜະລິດຂະໜາດນ້ອຍ.**

- IFAD ມີພັນທະຕໍ່ວຽກງານນີ້ ໂດຍຜ່ານໃນການວາງແຜນໂຄງການຂອງຕົນໃນລະຫວ່າງ IFAD12, ລວມເຖິງການຈັດຫາແຫຼ່ງທຶນທີ່ເປັນໄປໄດ້ຈາກ GAFSP ໂດຍຜ່ານບົດສະເໜີໂຄງການທີ່ໄດ້ຮັບການພັດທະນາຮ່ວມກັບ WFP, ສຳລັບໄລຍະທີສອງຂອງການສະໜັບສະໜູນດ້ານຍຸດທະສາດໃຫ້ແກ່ໂຄງການສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ.

**ສະໜັບສະໜູນການພັດທະນາ, ການສ້າງຂີດຄວາມສາມາດ, ການສ້າງນະວັດຕະກຳ/ໂຄງລ່າງພື້ນຖານ ແລະ ຄວາມຮ່ວມມືໃນທຸລະກິດກະສິກຳ ແລະ ວິສາຫະກິດຈຸນລະພາກ ແລະ ຂະໜາດນ້ອຍ.**

- ທະນາຄານພັດທະນາອາຊີ (ADB) ຈະສືບຕໍ່ປະຕິບັດພັນທະດ້ານການປ່ຽນແປງລະບົບສະບຽງອາຫານໃນ ສປປ ລາວ. ພວກເຂົາຍັງຈະສະໜັບສະໜູນຄວາມພະຍາຍາມໃນການປັບປຸງສະພາບແວດລ້ອມທາງທຸລະກິດ, ລວມເຖິງວິສາຫະກິດກະສິກຳຈຸນລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງນຳອີກ.

**ສ້າງຄວາມເຂັ້ມແຂງໃຫ້ພາກເອກະຊົນ ແລະ ສ້າງສະພາບແວດລ້ອມທາງທຸລະກິດທີ່ເອື້ອອຳນວຍ ເພື່ອດຶງດູດການລົງທຶນຈາກພາກເອກະຊົນ**

- ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ (NCCI) ຈະຊ່ວຍແກ້ໄຂບັນຫາທີ່ກ່ຽວຂ້ອງກັບຄວາມຮູ້ ແລະ ວິທີການໃນການດຳເນີນທຸລະກິດ ແລະ ສະໜັບສະໜູນວິສາຫະກິດໃນການເສີມຂະຫຍາຍທຸລະກິດກະສິກຳຂອງຕົນ.
- NCCI ມີຄວາມຕ້ອງການສ້າງຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ແລະ ສ້າງຕັ້ງສະຫະກອນຂຶ້ນເພື່ອວຽກງານນີ້ ພ້ອມທັງສຸມໃສ່ກຳລັງການຜະລິດພາຍໃນປະເທດ ແລ້ວຈຶ່ງເຊື່ອມໂຍງເຂົ້າສູ່ຕະຫຼາດ.

**ແກ້ໄຂອຸປະສັກອັນສະເພາະທີ່ກີດຂວາງການການພັດທະນາຊີວິດການເປັນຢູ່ທີ່ກອມລວມ ແລະ ສະເໝີພາບ**

- IFAD ໂດຍຜ່ານບັນດາໂຄງການທີ່ກຳລັງດຳເນີນ ແລະ ທີ່ກຳລັງພິຈາລະນາ ຈະທົບທວນຄືນການເຂົ້າເຖິງການບໍລິການເສີມຂະຫຍາຍໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ ແລະ ວາງແຜນ ເພື່ອກຳນົດໂອກາດດ້ານຄວາມຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP) ໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ.

**ສ້າງຄວາມເຂັ້ມແຂງໃຫ້ແກ່ນະໂຍບາຍ ແລະ ຫຼັກປະຕິບັດຕ່າງໆ ເພື່ອໃຫ້ສາມາດຄຳນຶງເຖິງ ແລະ ຕອບສະໜອງຕໍ່ການອັດຊ່ອງຫວ່າງດ້ານບົດບາດຍິງຊາຍ ໂດຍແກ້ໄຂຂໍ້ຈຳກັດອັນສະເພາະທີ່ແມ່ຍິງໃນເຂດຊົນນະບົດຕ້ອງພົບພໍ້**

- IFAD, FAO, ແລະ ກະຊວງກະສິກຳ ແລະ ປ່າໄມ້ ມີພັນທະຕໍ່ບັນຫານີ້ ເນື່ອງພວກເຂົາໄດ້ສືບຕໍ່ໃຫ້ຄວາມສຳຄັນຕໍ່ບົດບາດຍິງຍິງຊາຍ, ໂດຍຮັບປະກັນຄວາມສະເໝີພາບ ແລະ/ຫຼື ການສົ່ງເສີມບົດບາດແມ່ຍິງເຂົ້າໃນມາດຕະການແຊກແຊງ ເພື່ອແກ້ໄຂຊ່ອງຫວ່າງເຫຼົ່ານີ້. ພວກເຂົາຍັງມີພັນທະທີ່ຈະສະແຫວງຫາຄຳເຫັນຈາກແມ່ຍິງ ແລະ ຄົວເຮືອນ ແລະ ສະໜັບສະໜູນໃຫ້ແມ່ຍິງກຸ່ມດັ່ງກ່າວມີໂອກາດໄດ້ເຂົ້າຮ່ວມໃນການຕັດສິນໃຈ.

**ແກ້ໄຂຂໍ້ຈຳກັດທາງດ້ານກົດໝາຍ, ສະຖາບັນ ແລະ ຕະຫຼາດ ເພື່ອໃຫ້ເກີດຄວາມສະເໝີພາບໃນລະບົບສະບຽງອາຫານ**

- ວິທີແກ້ໄຂບັນຫາອັນກອມລວມທີ່ແນໃສ່ຜູ້ທຸກຍາກ ແລະ ອີງໃສ່ທຳມະຊາດ ແລະ ນະໂຍບາຍດ້ານການປ່ຽນແປງຂອງສະພາບດິນຟ້າອາກາດ ເພື່ອປັບປຸງຂີດຄວາມສາມາດຂອງຊຸມຊົນທີ່ທຸກຍາກ ໃຫ້ສາມາດຄຸ້ມຄອງຄວາມສ່ຽງດ້ານສະພາບດິນຟ້າອາກາດທີ່ກ່ຽວພັນກັບການດຳລົງຊີວິດໄດ້.

# ເອກະສານຊ້ອນທ້າຍ 4: ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ

**ນໍາພາໂດຍ:** ກະຊວງກະສິກໍາ ແລະ ປ່າໄມ້ (**MAF**) ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MoLSW), ອົງການອາຫານ ແລະ ການກະເສດ ແຫ່ງ ສປຊ (**FAO**), ອົງການ ສປຊ ເພື່ອສິ່ງແວດລ້ອມ (**UNEP**),

**ໜ່ວຍງານ ແລະ ກົມກອງຮ່ວມມື**: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (**MoLSW**), ກະຊວງສາທາລະນະສຸກ (**MoH**), ອົງການອາຫານໂລກ (**WFP**), ກອງທຶນສາກົນເພື່ອການພັດທະນາກະສິກໍາ (**IFAD**), ອົງການ ສປຊ ນເພື່ອຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ (**UNDRR**), ອົງການສະຫະປະຊາຊາດເພື່ອການພັດທະນາ (**UNDP**), ອົງການ ສປຊ ດ້ານເຄຫະສະຖານ (**UN-HABITAT**),

### ໂອກາດ ແລະ ສິ່ງທ້າທາຍອັນໃຫຍ່ຫຼວງ (ທີ່ ສປປ ລາວ ກໍາລັງປະເຊີນຢູ່) ທີ່ກ່ຽວຂ້ອງກັບ 'ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ'

- ສປປ ລາວ ໄດ້ຮັບຜົນເສຍຫາຍຢ່າງໃຫຍ່ຫຼວງຈາກຄວາມບໍ່ໝັ້ນຄົງດ້ານສະບຽງອາຫານທີ່ຊໍ້າເຮື້ອ ແລະ ຮຸນແຮງ. ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານທີ່ແຜ່ລາມ ໂດຍສົມທົບກັບພາວະການຂາດສານອາຫານທີ່ຮຸນແຮງ ແລະ ຊໍ້າເຮື້ອໃນລະດັບສູງ ໄດ້ກີດຂວາງການພັດທະນາທາງສັງຄົມ, ມະນຸດ, ແລະ ເສດຖະກິດ ແລະ ປະກອບສ່ວນຢ່າງໃຫຍ່ຫຼວງເຮັດໃຫ້ເກີດຄວາມທຸກຍາກ.
- ຫຼາຍກວ່າ 95 ສ່ວນຮ້ອຍຂອງລະບົບການກະສິກ□າແມ່ນມີຄວາມອ່ອນໄຫວຕໍ່ໄພອັນຕະລາຍທີ່ກ່ຽວຂ້ອງກັບອາກາດ ແລະ ສະພາບດິນຟ້າອາກາດ ໃນຂະນະທີ່ພື້ນທີ່ສ່ວນໃຫຍ່ຂອງປະເທດກໍ່ຍັງຄົງເຕັມໄປດ້ວຍລະເບີດບໍ່ທັນແຕກ. ໃນຈໍານວນໄພອັນຕະລາຍເຫຼົ່ານີ້, ສາມຢ່າງທີ່ມີຜົນກະທົບສູງສຸດຕໍ່ການກະສິກໍາ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານແມ່ນໄພນໍ້າຖ້ວມ, ໄພແຫ້ງແລ້ງ ແລະ ລົມພະຍຸ, ເຊິ່ງມັກຈະກໍໃຫ້ເກີດໄພອັນຕະລາຍຕື່ມອີກເຊັ່ນ: ດິນເຈື່ອນ, ໄຟປ່າ ແລະ ໄຟໄໝ້ຊຸມຊົນ, ການແຜ່ລາມຂອງສັດຕູພືດ ຫຼື ໜູ ແລະ ການແຜ່ລະບາດຂອງພະຍາດສັດ. ໄພພິບັດເຫຼົ່ານີ້ແມ່ນທະວີຄວາມຮຸນແຮງຂຶ້ນຍ້ອນການເຊື່ອມໂຊມຂອງຊັບພະຍາກອນທໍາມະຊາດ, ການສູນເສຍດ້ານຊີວະນາໆພັນ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ.
- **ການປ່ຽນແປງຂອງສະພາບດິນຟ້າອາກາດແມ່ນບັນຫາດ້ານມະນຸດສະທໍາ ແລະ ບັນຫາດ້ານການພັດທະນາ** – ບໍ່ແມ່ນພຽງແຕ່ເປັນບັນຫາດ້ານສິ່ງແວດລ້ອມເທົ່ານັ້ນ. ນອກຈາກນັ້ນ, ການປ່ຽນແປງຂອງສະພາບດິນຟ້າອາກາດ ຍັງແມ່ນໜຶ່ງໃນໂຕຂັບເຄື່ອນຫຼັກຂອງບັນຫາຄວາມອຶດຫິວທົ່ວໂລກ. ອຸນຫະພູມທີ່ເພີ່ມຂຶ້ນໄດ້ສົ່ງຜົນກະທົບທີ່ຮ້າຍແຮງຕໍ່ການຜະລິດກະສິກໍາໃນ ສປປ ລາວ. ປະຊາຊົນທີ່ບໍ່ໄດ້ຮັບຄວາມໝັ້ນຄົງດ້ານສະບຽງອາຫານກໍາລັງໄດ້ຮັບຜົນກະທົບຈາກສະພາບດິນຟ້າອາກາດທີ່ຮຸນແຮງ, ເຊັ່ນ: ໄພແຫ້ງແລ້ງ ແລະ ໄພນໍ້າຖ້ວມ, ຕະຫຼອດຈົນເຖິງຄວາມກົດດັນອື່ນໆ, ເຊັ່ນ: ການລະບາດຂອງສັດຕູພືດ ແລະ ການເສື່ອມໂຊມຂອງສະພາບດິນ. ການປ່ຽນແປງຂອງສະພາບດິນຟ້າອາກາດກໍາລັງສົ່ງຜົນກະທົບຕໍ່ການຜະລິດສະບຽງອາຫານ ແລະ ພືດທີ່ມີໂພຊະນາການ. ສະຖານະການນີ້ຈະຍິ່ງຮ້າຍແຮງຂຶ້ນ ເມື່ອອຸນຫະພູມເພີ່ມຂຶ້ນ ແລະ ຮຸນແຮງຍິ່ງຂຶ້ນ, ແລະ ການຄາດຄະເນ ຝົນມີຄວາມຫຍຸ້ງຍາກຍິ່ງຂຶ້ນ.'
- ການນໍາໃຊ້ aflatoxins ພ້ອມທັງຢາປາບສັດຕູພືດ ແລະ ປຸ໋ຍກໍ່ແມ່ນສິ່ງທ້າທາຍ ຍ້ອນວ່າບັນດາສານເຄມີເຫຼົ່ານີ້ມັກຈະຖືກນໍາເຂົ້າມາແບບບໍ່ມີສະຫຼາກສິນຄ້າ, ຫຼື ສະຫຼາກທີ່ຂຽນເປັນພາສາອື່ນໆ ແລະ ດັ່ງນັ້ນ, ຜູ້ນໍາໃຊ້ໂດຍທົ່ວໄປຈຶ່ງຍັງຂາດຄວາມເຂົ້າໃຈທີ່ກ່ຽວຂ້ອງກັບການນໍາໃຊ້ຜະລິດຕະພັນເຫຼົ່ານີ້ຢ່າງປອດໄພ.
- ເຖິງວ່າຈະຂາດຫຼັກຖານຢັ້ງຢືນ, ແຕ່ການປະມົງ, ການລ້ຽງສັດນໍ້າ ແລະ ການລ້ຽງສັດກໍ່ໄດ້ຮັບຜົນກະທົບເຊັ່ນດຽວກັນ ເມື່ອສົມທຽບໃສ່ກັບການປູກພືດ. ໄພນໍ້າຖ້ວມໃນປີ 2018 ໄດ້ສ້າງຄວາມເສຍຫາຍຕໍ່ການປະມົງ ໂດຍໄດ້ພັດເອົາພັນປາ ແລະ ພັນໄມ້ໃຫ້ໄຫຼໄປຕາມນໍ້າ ແລະ ທັງຍັງສ້າງຄວາມເສຍຫາຍຕໍ່ລາຍໄດ້ຈາກການຂາຍປາທີ່ຫຼຸດລົງທີ່ມີມູນຄ່າປະມານ 38.3 ຕື້ກີບ. ການຄິດໄລ່ ໂດຍອີງໃສ່ການຄາດຄະເນອັດຕາການຕາຍທີ່ເພີ່ມຂຶ້ນປະມານ 2% ຂອງສັດທີ່ໄດ້ຮັບຜົນກະທົບຈາກນໍ້າຖ້ວມຄາດວ່າມີມູນຄ່າຄວາມເສຍຫາຍຢູ່ປະມານ 16 ຕື້ກີບ. [12].

[12] https://www.gfdrr.org/en/publication/post-disaster-needs-assessment-2018-floods-lao-pdr

- ຜົນກະທົບ ແລະ ຄວາມກົດດັນທາງສັງຄົມຕໍ່ລະບົບສະບຽງອາຫານ ທີ່ລວມມີຄວາມໝັ້ນຄົງດ້ານສະບຽງອາຫານໃນຄົວເຮືອນ, ຍຸດທະສາດການຮັບມືທີ່ບໍ່ມີປະສິດທິພາບ ທີ່ສົ່ງຜົນກະທົບຕໍ່ໂພສະນາການ ແລະ ການເຂົ້າເຖິງການບໍລິການ, ບັນຫາໜີ້ສິນຄົວເຮືອນທີ່ເພີ່ມຂຶ້ນ ແລະ ຜົນກະທົບທາງລົບຕໍ່ຄວາມປອງດອງໃນຊຸມຊົນ ແລະ ຊົນເຜົ່າຕ່າງໆ.
- ການແຜ່ລະບາດຂອງ ພະຍາດໂຄວິດ-19 ໄເຮັດໃຫ້ອັດຕາການຫວ່າງງານເພີ່ມສູງຂຶ້ນ ແລະ ການສົ່ງເງິນຫຼຸດລົງ, ພ້ອມທັງຍັງກີດຂວາງຕ່ອງໂສ້ການສະໜອງ ສົ່ງຜົນໃຫ້ລາຄາອາຫານໃນທ້ອງຖິ່ນສູງຂຶ້ນ ແລະ ຄາດຄະເນວ່າຈະເຮັດໃຫ້ຫຼາຍກວ່າ 200,000 ຄົນຕົກຢູ່ໃນສະພາບຄວາມທຸກຍາກ. ການແຜ່ລະບາດດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຄວາມສໍາຄັນຂອງການຜະລິດທ້ອງຖິ່ນ ແລະ ລະບົບສະບຽງອາຫານພາຍໃນປະເທດ. ສິ່ງທີສໍາຄັນເຊັ່ນດຽວກັນແມ່ນການຫຼຸດຜ່ອນຜົນກະທົບຕໍ່ການຄ້າໃນທ້ອງຖິ່ນ ແລະ ສາກົນໃຫ້ໄດ້ຫຼາຍທີ່ສຸດ.ລະບົບການຜະລິດສະບຽງອາຫານແມ່ນຢູ່ໃນລະດັບການກຸ້ມກິນເທົ່ານັ້ນເຊິ່ງມີກໍາລັງການຜະລິດທີ່ຕໍ່າ ແລະ ຍັງມີຄວາມອ່ອນໄຫວສູງຕໍ່ໄພຖກຄາມດ້ານສະພາບອາກາດ ແລະ ການເຊື່ອມໂຊມຂອງດິນ.
- ເຂດເນີນສູງ ແລະ ເຂດພູດອຍຕ້ອງປະເຊີນກັບໄພຂົ່ມຂູ່ຈາກການຖາງປ່າເຮັດໄຮ່, ການຕັດໄມ້ທໍາລາຍປ່າສໍາລັບໂຄງການໃຫຍ່, ການຕັດໄມ້ ແລະ ການທໍາລາຍດິນ ແລະ ຄວາມຊຸດໂຊມຂອງປ່າໄມ້ທີ່ເກີດຈາກການປ່ຽນແປງຂອງສະພາບດິນຟ້າອາກາດ.
- ຍ້ອນ ລາວ ມີການເອື່ອຍອີງສູງຕໍ່ຊັບພະຍາກອນທໍາມະຊາດໃນການປູກຝັງ, ການຜະລິດໄມ້, ໄຟຟ້າພະລັງງານນ□້າ ແລະ ບໍ່ແຮ່, ສປປ ລາວ ຈຶ່ງມີຄວາມອ່ອນໄຫວສູງຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.
- ຄວາມຫຼາກຫຼາຍໃນລະດັບສູງຂອງລະບົບການຈັດຫາອາຫານໃຫ້ແກ່ປະຊາຊົນໃນເຂດຊົນນະບົດ, ລວມທັງການກະສິກໍາແບບປະສົມປະສານ (ການປູກເຂົ້າ, ການລ້ຽງສັດ, ການປູກຜັກ) ການເກັບເຄື່ອງປ່າຂອງດົງ, ສັດນໍ້າພັນຕ່າງໆ, ແມງໄມ້ ແລະ ອື່ນໆ.
- ການເຄື່ອນໄຫວໃນເສດຖະກິດນອກລະບົບໃນລະດັບສູງ ທີ່ລວມມີແຮງງານຕາມລະດູການ, ວິສາຫະກິດຈຸນລະພາກ, ການຄ້າຂາຍຍ່ອຍ, ການກູ້ຢືມນອກລະບົບ ແລະ ອື່ນໆ.
- ແຫຼ່ງທຶນທາງສັງຄົມແບບດັ້ງເດີມໃນລະດັບສູງທີ່ກ່ຽວຂ້ອງກັບຄອບຄົວເສີມ ແລະ ກຸ່ມຊົນເຜົ່າຕ່າງໆ, ເຊິ່ງຊ່ວຍສະໜອງເຄືອຂ່າຍການສະໜັບສະໜູນ.
- ປະມານ 75% ຂອງຊາວກະສິກອນທີ່ລ້ຽງສັດແມ່ນເຮັດເພື່ອກຸ້ມຕົນເອງ ແລະ ໃນລະດັບນ້ອຍເທົ່ານັ້ນ ໂດຍນ□າໃຊ້ເຕັກນິກເກົ່າແລະ ໃໝ່ປະສົມປະສານກັນ.
- ການເຝົ້າລະວັງ, ການຕອບໂຕ້, ການຄວບຄຸມ ແລະ ການບໍລິການທີ່ກ່ຽວຂ້ອງກັບການປິ່ນປົວສັດແມ່ນມີຈໍາກັດ, ສ່ວນໜຶ່ງແມ່ນຍ້ອນຂາດຊັບພະຍາກອນມະນຸດ.

**ໂອກາດ**:

- ລັດຖະບານແຫ່ງ ສປປ ລາວ ແລະ ໂດຍສະເພາະ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ຮັບຮູ້ເຖິງຄວາມຈໍາເປັນໃນການຫຼຸດຜ່ອນຄວາມສ່ຽງທີ່ສໍາຄັນ ເພື່ອຖ່ວງດຶງຜົນກະທົບທີ່ເກີດຈາກໄພອັນຕະລາຍ ແລະ ໄພພິບັດຕ່າງໆ. ແບບແຜນອັນຫ້າວຫັນ, ທີ່ໂຮມເອົາ ການຄຸ້ມຄອງຄວາມສ່ຽງໄພພິບັດ (DRM) ແລະ ການປັບໂຕຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍສຸມໃສ່ມາດຕະການຫຼຸດຜ່ອນຄວາມສ່ຽງ, ທີ່ຕິດພັນກັບການຫຼຸດຜ່ອນຄວາມທຸກຍາກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງ ແມ່ນບູລິມະສິດທີ່ໄດ້ຮັບການຍອມຮັບ ເພື່ອການພັດທະນາກະສິກໍາແບບຍືນຍົງ ແລະ ລະບົບສະບຽງອາຫານທີ່ມີຄວາມທົນທານ.
- MSD ແມ່ນໂອກາດໃນການສ້າງລະບົບສະບຽງອາຫານທີ່ມີຄວາມທົນທານ, ສາມາດຕອບສະໜອງຕໍ່ຜົນກະທົບ, ມີຄວາມສະເໝີພາບ, ກວມລວມ, ມີຄຸນຄ່າດ້ານໂພຊະນາການ ແລະ ມີປະສິດທິພາບ ຍ້ອນວ່າລະບົບດັ່ງກ່າວມີຄວາມສໍາຄັນຕໍ່ຄວາມສາມາດຂອງຊຸມຊົນໃນ ສປປ ລາວ ເພື່ອຕ້ານທານ ແລະ ຟື້ນຟູຄືນຈາກສິ່ງທ້າທາຍຕ່າງໆດ້ານສະພາບດິນຟ້າອາກາດ, ໂລກລະບາດ, ແລະ ວິກິດທາງດ້ານເສດຖະກິດ, ເຊິ່ງກໍ່ໃຫ້ເກີດໄພອຶດຫິວ.
- ສປປ ລາວ ມີຊັບພະຍາກອນນໍ້າທີ່ອຸດົມສົມບູນ, ເພື່ອສະໜອງເຂົ້າໃນຂະແໜງການກະສິກໍາ ແລະ ພະລັງງານໄຟຟ້ານໍ້າຕົກ, ແລະ ທັງຍັງເປັນຊັບສິນທໍາມະຊາດທີ່ສໍາຄັນ ທີ່ສາມາດດຶງດູດການລົງທຶນຈາກຕ່າງປະເທດໄດ້.
- ປະເທດລາວກໍາລັງສຸມໃສ່ການລົງທຶນເຂົ້າໃນມາດຕະການຫຼຸດຜ່ອນຄວາມສ່ຽງ ລວມທັງເຊື່ອມສານວຽກງານການຄາດຄະເນ ແລະ ຂໍ້ມູນຂ່າວສານ ແລະ ການບໍລິການດ້ານສະພາບດິນຟ້າອາກາດ ພ້ອມທັງຜະລິດຕະພັນປະກັນໄພ/ເງິນກູ້ສໍາລັບຊາວກະສິກອນ.
- ສປປ ລາວ ເປັນປະທານຮ່ວມຂອງໜ່ວຍງານວິຊາການພາຍໃຕ້ ຄະນະກໍາມະການຄຸ້ມຄອງໄພພິບັດອາຊຽນ ທີ່ເຄື່ອນໄຫວເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ທັງຍັງເປັນສະມາຊິກທີ່ຫ້າວຫັນຂອງ ເຄືອຂ່າຍອາຊຽນວ່າດ້ວຍການສົ່ງເສີມການກະສິກໍາທີ່ມີຄວາມທົນທານຕໍ່ສະພາບດິນຟ້າອາກາດ.
- ຜົນຜະລິດດ້ານສັດລ້ຽງແມ່ນມີຈໍາກັດຫຼາຍຖ້າສົມທຽບໃສ່ຄວາມຕ້ອງການອັນສູງຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ. ນັກລົງທຶນກໍ່ກໍາລັງໃຫ້ຄວາມສົນໃຈໃນຂະແໜງການກະສິກໍາ, ໂດຍແນໃສ່ລົງທຶນເຂົ້າໃນທຸລະກິດອາຫານຫຼາຍຂຶ້ນ. ໃນເຂດຊົນນະບົດ, ບ້ານສ່ວນໃຫຍ່, ຖ້າບໍ່ແມ່ນທັງໝົດ, ມີທ່າແຮງໃນການລ້ຽງສັດປີກຫຼາຍກວ່າ ເພາະມັນງ່າຍ ແລະ ເປັນແຫຼ່ງອາຫານທີ່ດີ ເພື່ອຮັບປະກັນໃຫ້ໄດ້ຮັບໂພຊະນາການ/ທາດໂປຼຕີນທີ່ພຽງພໍ.

### ຫຼັກປະຕິບັດ ແລະ ນະໂຍບາຍທີ່ມີຜົນກະທົບຫຼາຍທີ່ສຸດຕໍ່ການບັນລຸ "ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ" (ໃນ ສປປ ລາວ)

- ຍຸດທະສາດການພັດທະນາກະສິກໍາຮອດປີ 2025 ແລະ ວິໄສທັດຮອດປີ 2030 ແມ່ນຍຸດທະສາດຫຼັກຂອງ ກະຊວງກະສິກ□າ ແລະ ປ່າໄມ້, ທີ່ໄດ້ຖືກຮັບຮອງເອົາໃນວັນທີ 20 ກຸມພາ 2015. ຍຸດທະສາດນີ້ແນໃສ່: ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ; ຜະລິດສິນຄ້າກະສິກໍາທີ່ສາມາດແຂ່ງຂັນໄດ້; ພັດທະນາກະສິກໍາທີ່ສະອາດ, ປອດໄພ ແລະ ຍືນຍົງ; ແລະ ຫັນໄປສູ່ເສດຖະກິດກະສິກໍາແບບທັນສະໄໝທີ່ມີຄວາມທົນທານ ແລະ ມີປະສິດທິພາບ ເທື່ອລະກ້າວ, ພ້ອມດ້ວຍການພັດທະນາຊົນນະບົດທີ່ປະກອບສ່ວນເຂົ້າໃນການສະໜັບສະໜູນພື້ນຖານເສດຖະກິດແຫ່ງຊາດ.

- **NSEDP ຄັ້ງທີ 9** ກໍ່ຈະຊ່ວຍແກ້ໄຂບັນຫາດ້ານລະບົບສະບຽງອາຫານ ທີ່ລວມມີຄວາມໝັ້ນຄົງດ້ານສະບຽງອາຫານ, ການກະສິກຳແບບຍືນຍົງ, ການຜະລິດ ແລະ ປຸງແຕ່ງອາຫານ ໂດຍສະເພາະພາຍໃຕ້ວຽກຈຸດສຸມທີ 3 ກ່ຽວກັບຄວາມເປັນຢູ່ທີ່ດີ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ລາຍຮັບ ແລະ ພາຍໃຕ້ວຽກຕຸດສຸມທີ 4 ກ່ຽວກັບການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ທີ່ຕິດພັນກັບການຮັບປະກັນລະບົບສະບຽງອາຫານທີ່ຍືນຍົງ
- **ຍຸດທະສາດການຂະຫຍາຍໂຕສີຂຽວແຫ່ງຊາດສຳລັບ ສປປ ລາວ ຮອດປີ 2030** ໄດ້ຖືເອົາການກະສິກຳເປັນຊ່ອງທາງຫຼັກ ເພື່ອຮັບປະກັນຄວາໝັ້ນຄົງດ້ານສະບຽງອາຫານໃນ ສປປ ລາວ ແລະ ປະກອບມີການສົ່ງເສີມ ແລະ ການພັດທະນາ: ອຸດສາຫະ ກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ.
- **ແຜນງານດ້ານຄວາມຫຼາກຫຼາຍທາງຊີວະນາໆພັນການກະເສດແຫ່ງ ສປປ ລາວ (2015-2025) ແລະ ແຜນວຽກໄລຍະທີ** II ໄດ້ລະບຸການເຄື່ອນໄຫວໃຫ້ແກ່ 6 ລະບົບການຜະລິດກະສິກຳທີ່ຕິດພັນກັບທຳມະຊາດໃນ ສປປ ລາວ, ເຊິ່ງແຕ່ລະລະບົບກໍ່ມີລັກສະນະດ້ານຄວາມຫຼາກຫຼາຍທາງຊີວະນາໆພັນການກະເສດທີ່ແຕກຕ່າງກັນ.
- **ແຜນວຽກວ່າດ້ວຍການຫຼຸດຜ່ອນ ແລະ ຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນຂະແໜງການກະສິກຳ 2014-2018** ໄດ້ລະບຸບຸລິມະສິດ ແລະ ກົນໄກການເຮັດວຽກ ເພື່ອປັບປຸງການຫຼຸດຜ່ອນຄວາມສ່ຽງໃນຂະແໜງການກະສິກຳ, ສັດລ້ຽງ, ປ່າໄມ້ ແລະ ການປະມົງ ຕາມທີ່ໄດ້ລະບຸ ແລະ ຈັດລຽງບຸລິມະສິດໄວ້ ໂດຍບັນດາກົມ ແລະ ຄູ່ຮ່ວມງານດ້ານວິຊາການໃນໄລຍະດຳເນີນການປຶກສາຫາລື.
- **ແຜນວຽກແຫ່ງຊາດວ່າດ້ວຍການຫຼຸດຜ່ອນ ແລະ ຄຸ້ມຄອງຄວາມສ່ຽງຈາກໄພພິບັດ 2021-2030 ກໍ່**ໄດ້ລະບຸບຸລິມະສິດ ແລະ ແບບແຜນທີ່ສຳຄັນໃນການເຮັດວຽກກັບຄູ່ຮ່ວມງານຕ່າງໆ ເພື່ອຊ່ວຍຫຼຸດຜ່ອນຄວາມສ່ຽງ ໂດຍແນໃສ່ປະຊາກອນທີ່ມີຄວາມອ່ອນໄຫວຫຼາຍທີ່ສຸດ, ເພື່ອສ້າງຄວາມທົນທານ ແລະ ເພີ່ມລາຍຮັບໃຫ້ແກ່ພວກເຂົາ.
- ອາຊຽນ ໄດ້ກຳນົດ ແລະ ຈັດຕັ້ງປະຕິບັດຕາມ **ຂອບວຽກ AIFS,** ແລະ ອີກ 2 ແຜນວຽກຍຸດທະສາດກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານໃນປີ 2009-2013 ແລະ 2015-2020, ທີ່ໄດ້ສຸມໃສ່ບັນດາມາດຕະການຍຸດທະສາດ ບົນພື້ນຖານຂອງພັນທະ ແລະ ຄວາມເປັນເຈົ້າການທີ່ເຂັ້ມແຂງຂອງບັນດາສະມາຊິກອາຊຽນທັງໝົດ. ເຊິ່ງເປົ້າໝາຍຂອງ ຂອບວຽກ AIFS ແມ່ນເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານໃນໄລຍະຍາວ ແລະປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນໃນ ອາຊຽນ. ພາຍໃຕ້ **ຂໍ້ຕົກລົງອາຊຽນວ່າດ້ວຍແຜນງານການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ສຸກເສີນ (AADMER)**, ວຽກງານດ້ານ DRR ແລະ CCA ທີ່ມີຄວາມກວມລວມ ແລະ ຄຳນຶງເຖິງບົດບາດຍິງຊາຍ ແມ່ນໄດ້ຖືກເນັ້ນໜັກ ເພື່ອບັນລຸວິໄສທັດໃນການສ້າງ ປະຊາຄົມອາຊຽນ ທີ່ມີຄວາມທົນທານ.
- **ການປະກອບອັນເດັດດ່ຽວໃນລະດັບຊາດ**ຂອງ ສປປ ລາວ ແມ່ນສຸມໃສ່ 8 ຂົງເຂດບູລິມະສິດ ທີ່ລວມມີການກະສິກ□າ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ; ການປ່ຽນແປງດ້ານການນຳໃຊ້ປ່າໄມ້ ແລະ ທີ່ດິນ; ຊັບພະຍາກອນນ້ຳ.
- **ແຜນວຽກ ແລະ ຍຸດທະສາດແຫ່ງຊາດວ່າດ້ວຍຊີວະນາໆພັນແຫ່ງຊາດ 2016 - 2025.** ໄດ້ແກ້ໄຂບັນຫາດ້ານຊີວະນາໆພັນ ທີ່ເປັນສິ່ງສະໜັບສະໜູນໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ. **ໃນດ້ານການປະຕິບັດໂຕຈິງ**, **ຈຳເປັນຈະຕ້ອງໄດ້ເສີມຂະຫຍາຍການກະສິກຳທີ່ມີຄວາມຍືນຍົງ ແລະ ທັນສະໄໝ ສາມາດຮັບມືກັບສະພາບດິນຟ້າອາກາດໄດ້.**
- ມີຄວາມຈຳເປັນຕ້ອງໄດ້ທີຍຸດທະສາດ ແລະ ລະບຽບການຕ່າງໆ - ທັງໃນດ້ານເອກະສານ ແລະ ການປະຕິບັດໂຕຈິງ - ທີ່ສົ່ງເສີມແບບແຜນທີ່ມີຄວາມກວມລວມກວ່າເກົ່າເຂົ້າໃນການພັດທະນາຊົນນະບົດ, ທີ່ບໍ່ສົ່ງເສີມບັນດາໂຄງການປູກຝັງພືດຊະນິດດຽວ ແລະ ໂຄງການທີ່ເປັນຕົ້ນແບບອື່ນໆ, ເພື່ອຫຼີກລ້ຽງການຕັ້ງຖິ່ນຖານຄືນໃໝ່ເພີ່ມເຕີມ ແລະ ຫັນມາຍົກສູງຄວາມໝັ້ນຄົງດ້ານສິດໃນການຄອບຄອງທີ່ດິນແທນ, ເຊິ່ງຈະເປັນການຍົກສູງສຽງຂອງປະຊາຊົນໃນເຂດຊົນນະບົດເຂົ້າໃນຂະບວນການຕັດສິນໃຈຕ່າງໆ, ແລະ ທັງຍັງເປັນການຮັບຮູ້ເຖິງບົດບາດສຳຄັນຂອງແຮງງານເຄື່ອນຍ້າຍໃນເສດຖະກິດຄອບຄົວ. ແລະ ສິ່ງທີ່ສຳຄັນແມ່ນພວກເຮົາຕ້ອງການນະໂຍບາຍທີ່ຊ່ວຍວັດແທກຄວາມຄືບໜ້າກ່ຽວກັບໂອກາດດ້ານວຽກເຮັດງານທຳ ແລະ ການສ້າງລາຍໄດ້ໃຫ້ປະຊາຊົນຊົນໃນນະບົດ ແລະ ອື່ນໆ, ບໍ່ພຽງແຕ່ເນັ້ນໜັກໃສ່ປະລິມານການຜະລິດ ແລະ ການສົ່ງອອກເທົ່ານັ້ນ.
- ພູມສັນຖານທີ່ມີຄວາມຫຼາກຫຼາຍດ້ານການໃຊ້ສອຍ ແລະ ຄວາມຫຼາກຫຼາຍດ້ານການດຳລົງຊີວິດແມ່ນອົງປະກອບທີ່ສຳຄັນດ້ານຄວາມອາດສາມາດໃນການປັບຕົວ ເຊິ່ງຊ່ວຍໃຫ້ຊຸມຊົນໃນເຂດຊົນນະບົດສາມາດຮັບມືກັບຜົນກະທົບຈາກພາຍນອກໄດ້. ໃນຂະນະທີ່ຂະແໜງການກະສິກຳພວມພັດທະນາໄປນັ້ນ, ເຊິ່ງກໍ່ຕ້ອງປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ລາຍໄດ້ໄປພ້ອມໆກັນ, ອົງປະກອບເຫຼົ່ານີ້ຕ້ອງໄດ້ຮັບການປົກປ້ອງ ເພື່ອໃຫ້ເປັນພື້ນຖານໃນການສ້າງຄວາມທົນທານໃຫ້ແກ່ລະບົບສະບຽງອາຫານ. ປະເດັນບໍ່ແມ່ນພຽງແຕ່ວ່າຈະສ້າງຄວາມທົນທານຄືແນວໃດ, ແຕ່ຍັງລວມເຖິງວ່າຈະຮັກສາຄວາມທົນທານທີ່ມີຢູ່ແລ້ວນັ້ນໄວ້ຄືແນວໃດ.
- ການສະໜອງທຶນໃນເຂດຊົນນະບົດບໍ່ແມ່ນສິ່ງໃໝ່ສຳລັບປະເທດລາວ, ແຕ່ມັນຈຳເປັນຕ້ອງໄດ້ມີການປະຕິຮູບເພີ່ມເຕີມ ເພື່ອເສີມຂະຫຍາຍການເຂົ້າເຖິງກຸ່ມທີ່ມີຄວາມອ່ອນໄຫວ. ການປະຕິຮູບອາດປະກອບມີການເຮັດໃຫ້ຊາວກະສິກອນສາມາດເຂົ້າເຖິງແຫຼ່ງທຶນໄດ້ງ່າຍຂຶ້ນ ບວກກັບການສະໜັບສະໜູນເຂົ້າໃນການພັດທະນາແຜນການດຳເນີນທຸລະກິດ ແລະ ການຄຸ້ມຄອງການເງິນ, ລວມທັງການເຂົ້າເຖິງຕະຫຼາດ/ການຄ້າທີ່ຍຸຕິທຳ, ປອດໄພ ແລະ ມີການປົກປ້ອງ.
- ຊາວກະສິກອນສ່ວນຫຼາຍແມ່ນມີຄວາມສ່ຽງໃນການຮັບມືກັບຄວາມບໍ່ແນ່ນອນ. ບາງຄັ້ງຜະລິດຕະພັນກະສິກຳກໍ່ມີເກີນຄວາມຕ້ອງການ ຫຼື ບາງຄັ້ງກໍ່ຕ່ຳກວ່າຄວາມຕ້ອງການຍ້ອນສະພາວະການຂາດແຄນເນື່ອງຈາກເຫດການໄພພິບັດ, ການແຜ່ລະບາດຂອງສັດຕູພືດ, ຫຼື ພະຍາດຕ່າງໆ. ເພື່ອຊ່ວຍຫຼຸດຜ່ອນຄວາມສ່ຽງໃຫ້ໄດ້ໜ້ອຍທີ່ສຸດ, ຈຶ່ງຈຳເປັນຕ້ອງໄດ້ມີນະໂຍບາຍ. ລັດຖະບານລາວ ອາດພິຈາລະນາອອກນະໂຍບາຍຄ້ຳປະກັນໃຫ້ແກ່ຊາວກະສິກອນ, ຢ່າງໜ້ອຍແມ່ນຜູ້ທີ່ມີຄວາມສ່ຽງຫຼາຍທີ່ສຸດ.
- ນອກຈາກນັ້ນ, ລັດຖະບານອາດຈະເພີ່ມທະວີການບັງຄັບໃຊ້/ການຈັດຕັ້ງປະຕິບັດນະໂຍບາຍ ເພື່ອສ້າງຜົນກະທົບທີ່ດີຂຶ້ນຕໍ່ຊາວກະສິກອນ ຫຼື ນັກລົງທຶນ, ເພື່ອຊ່ວຍໃຫ້ພວກເຂົາສາມາດນຳເຂົ້າວັດຖຸດິບ, ເຕັກໂນໂລຊີ ແລະ ເຄື່ອງຈັກໃນອັດຕາອາກອນຕ່ຳ, ຫຼື ຍົກເວັ້ນອາກອນ.

### ການເຮັດວຽກຮ່ວມກັນອັນໃດທີ່ 'ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ' ໄດ້ສ້າງຫຍັງຂຶ້ນ ລະຫວ່າງອົງປະກອບ ແລະ ເສັ້ນທາງຂອງລະບົບສະບຽງອາຫານ?

ຄວາມທົນທານແມ່ນຄຸນລັກສະນະເສີມ ແລະ ກວມລວມທີ່ສຳຄັນຂອງລະບົບສະບຽງອາຫານທີ່ຍືນຍົງ, ໂດຍພິຈາລະນາຈາກຄວາມສ່ຽງອັນຫຼາກຫຼາຍຕໍ່ລະບົບ. ຜົນກະທົບ, ບໍ່ພຽງແຕ່ຂະໜາດໃຫຍ່ ແຕ່ຍັງລວມເຖິງຂະໜາດນ້ອຍ ແລະ ເກີດໃໝ່ຊ້ຳເລື້ອຍໆ, ສາມາດສົ່ງຜົນກະທົບຕໍ່ຫຼາຍໆອົງປະກອບຂອງ

ລະບົບສະບຽງອາຫານ, ເຮັດໃຫ້ເກີດການສູນເສຍດ້ານກຳລັງການຜະລິດ, ຄວາມວຸ້ນວາຍໃນຕະຫຼາດ, ການຜັນຜວນຂອງລາຄາທີ່ເພີ່ມຂຶ້ນ, ການເຊື່ອມໂຊມຂອງຊັບພະຍາກອນທຳມະຊາດ ແລະ ຄວາມບໍ່ໝັ້ນຄົງຂອງລະບົບໂດຍລວມ ເຊິ່ງມີແນວໂນ້ມທີ່ຈະສົ່ງຜົນກະທົບຕໍ່ຜູ້ທີ່ມີຄວາມອ່ອນໄຫວ, ມີຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ແລະ ຂາດໂພຊະນາການຫຼາຍທີ່ສຸດ. ສະນັ້ນ, ນະໂຍບາຍ, ເຕັກໂນໂລຊີ ແລະ ການຮ່ວມມື ທີ່ຊ່ວຍຍົກສູງຄວາມອາດສາມາດຂອງລະບົບສະບຽງອາຫານໃນການຄາດຄະເນ, ປ້ອງກັນ, ຫຼຸດຜ່ອນ ແລະ ຄຸ້ມຄອງຄວາມສ່ຽງຕ່າງໆຢ່າງມີປະສິດທິພາບ ແລະ ສ້າງຄືນໃໝ່ໃຫ້ດີກວ່າເກົ່າດ້ານການຟື້ນຟູຄືນຈາກຜົນກະທົບຕ່າງໆ ຈຶ່ງມີຄວາມຈຳເປັນ ເພື່ອສົ່ງເສີມລະບົບສະບຽງອາຫານໃຫ້ມີຄວາມຍືນຍົງຍິ່ງຂຶ້ນ. ຂັ້ນຕອນໃນການສ້າງຄວາມທົນທານສາມາດຖືກນຳໃຊ້ໄດ້ໃນຫຼາຍລະດັບ ແລະ ຈຳເປັນຕ້ອງໄດ້ມີມາດຕະການອັນຮອບດ້ານທີ່ກ່ຽວຂ້ອງກັບການປະເມີນຄວາມສ່ຽງ, ການປົກຄອງ, DRR ແລະ CCA ທີ່ອີງໃສ່ລະບົບນິເວດ, ແບບແຜນທີ່ມີຄວາມກວມລວມ ແລະ ຄຳນຶງເຖິງບົດບາດຍິງຊາຍ, ການປົກປ້ອງສັງຄົມທີ່ຄຳນຶງເຖິງໂພສະນາການ ແລະ ຄວາມສາມາດໃນການຕອບໂຕ້ຕໍ່ຜົນກະທົບ ແລະ ອື່ນໆ[13].

ການສ້າງຄວາມທົນທານເປັນສິ່ງຈຳເປັນໃນທຸກອົງປະກອບຂອງລະບົບສະບຽງອາຫານ (ສິ່ງແວດລ້ອມ, ຄົນ, ວັດຖຸດິບ, ຂັ້ນຕອນຕ່າງໆ, ໂຄງສ້າງພື້ນຖານ ແລະ ສະຖາບັນ) ແລະ ທຸກກິດຈະກຳ (ຈາກການຜະລິດ, ການແປຮູບ, ການແຈກຢາຍໄປຈົນເຖິງການກະກຽມ ແລະ ການບໍລິໂພກອາຫານ ແລະ ການຄຸ້ມຄອງສິ່ງເສດເຫຼືອ) ໂດຍຄຳນຶງເຖິງການເຊື່ອມໂຍງກັນຂອງອົງປະກອບເຫຼົ່ານີ້ ແລະ ວິທີທີ່ອົງປະກອບດັ່ງກ່າວຈະສາມາດບັນລຸຜົນໄດ້ຮັບດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມໄດ້ ດ້ວຍການຫຼຸດຜ່ອນຄວາມທຸກຍາກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສະຖານະດ້ານໂພສະນາການທີ່ໄດ້ຮັບການປັບປຸງດີຂຶ້ນໃນຂັ້ນສູນກາງ. ການຖືເອົາວຽກງານການສ້າງຄວາມທົນທານເປັນພາກສ່ວນສຳຄັນຂອງລະບົບສະບຽງອາຫານຍັງຊ່ວຍສະໜອງໂອກາດໃນການເຮັດວຽກຮ່ວມກັນຂອງອົງປະກອບຕ່າງໆ, ເຊັ່ນ: ລະຫວ່າງການຜະລິດ, ຕ່ອງໂສ້ການສະໜອງ, ການເຂົ້າເຖິງສະບຽງອາຫານ ແລະ ພຶດຕິກຳດ້ານການບໍລິໂພກ. ການເຮັດວຽກຮ່ວມກັນທີ່ສຳຄັນ ອັນເປັນຜົນມາຈາກຄວາມທົນທານທີ່ເພີ່ມຂຶ້ນ ແລະ ຄວາມອ່ອນໄຫວທີ່ຫຼຸດລົງໃນລະບົບສະບຽງອາຫານປະກອບມີ:

- ຄວາມກວມລວມ. ການເຄື່ອນໄຫວທີ່ຮັບປະກັນໃຫ້ "ພວກເຮົາພ້ອມກັນກ້າວໄປ" ໂດຍຮັບປະກັນໃຫ້ກຸ່ມທີ່ມີຄວາມອ່ອນໄຫວຫຼາຍທີ່ສຸດມີສ່ວນຮ່ວມເຂົ້າໃນລະບົບສະບຽງອາຫານ ແລະ ໂດຍຮັບປະກັນວ່າສະມາຊິກທຸກຄົນໃນສັງຄົມມີໂອກາດເຂົ້າເຖິງຊັບພະຍາກອນ, ການບໍລິການ, ຂໍ້ມູນຂ່າວສານ, ອາຫານ ແລະ ໂອກາດດ້ານຊີວິດການເປັນຢູ່ທີ່ໄດ້ຢ່າງເທົ່າທຽມກັນ; ບົດບາດຍິງຊາຍ. ແມ່ຍິງມີບົດບາດສຳຄັນ ແລະ ທັງຍັງເປັນສ່ວນສຳຄັນຂອງຂະແໜງການກະສິກຳໃນ ສປປ ລາວ, ທີ່ກວມເອົາຫຼາຍກວ່າ 50 ສ່ວນຮ້ອຍຂອງກຳລັງແຮງງານໃນຂະແໜງການດັ່ງກ່າວ. ແມ່ຍິງຕ້ອງໄດ້ປະສົບກັບອຸປະສັກສຳຄັນ ແລະ ຕໍ່ເນື່ອງໃນການມີສ່ວນຮ່ວມຢ່າງເຕັມທີ່ໃນລະບົບສະບຽງອາຫານ ທີ່ກ່ຽວຂ້ອງກັບສະຖາບັນດ້ານການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຊັບພະຍາກອນ ແລະ ຕຳແໜ່ງຜູ້ນຳ. ໂອກາດໃນການດຳລົງຊີວິດ ແລະ ສະພາບແວດລ້ອມທີ່ດີຂຶ້ນ. ມາດຕະການແຊກແຊງດ້ານສະພາບອາກາດທີ່ທັນສະໄໝອາດຊ່ວຍສ້າງລາຍຮັບເພີ່ມຕື່ມໃຫ້ແກ່ຜູ້ເຄື່ອນໄຫວພາຍໃຕ້ຕ່ອງໂສ້ມູນຄ່າ ພ້ອມທັງຍັງຊ່ວຍຍົກສູງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ຄົວເຮືອນໄດ້; ສ້າງຄວາມທົນທານຕໍ່ການຜັນຜວນຂອງຕະຫຼາດ; ແລະ ປົກປ້ອງລະບົບນິເວດ ໂດຍຜ່ານການປົກປັກຮັກສາຊີວະນາໆພັນ, ຫຼຸດຜ່ອນສະພາວະດິນເຈື່ອນ, ແລະ ເພີ່ມທະວີການກັກເກັບອາຍກາກບອນໃນດິນ.

### ຜົນໄດ້ຜົນເສຍທີ່ເປັນໄປໄດ້ທີ່ກ່ຽວຂ້ອງກັບ 'ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ'

ການສ້າງຄວາມທົນທານໃນລະບົບສະບຽງອາຫານຕ້ອງໄດ້ຄຳນຶງເຖິງການເຮັດວຽກຮ່ວມກັນ ແແລະ ຜົນໄດ້ຜົນເສຍ ລະຫວ່າງຜົນກະທົບທາງເສດຖະກິດ (ເຊັ່ນ: ລາຍໄດ້, ກຳໄລ, ອາກອນ ແລະ ການສະໜອງອາຫານ), ຜົນກະທົບທາງສັງຄົມ (ເຊັ່ນ: ຄວາມເທົ່າທຽມລະຫວ່າງຍິງຊາຍ, ໂພຊະນາການ, ແລະ ສະຫວັດດີພາບຂອງສັດ), ແລະ ຜົນກະທົບທາງສິ່ງແວດລ້ອມ (ເຊັ່ນ: ການອະນຸລັກລະບົບນິເວດ, ຊີວະນາໆພັນ, ດິນ ແລະ ນ້ຳ).ຍົກຕົວຢ່າງ, ບາງໂຄງການພັດທະນາຕ່ອງໂສ້ມູນຄ່າອາດສະໜອງຜົນປະໂຫຍດທາງເສດຖະກິດ, ເຊັ່ນ: ຜົນກຳໄລທີ່ດີ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຄູ່ຮ່ວມງານໃດໜຶ່ງທີ່ກ່ຽວຂ້ອງໃນລະບົບສະບຽງອາຫານ, ແຕ່ກໍ່ຍັງສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ເຊັ່ນ: ການປ່ຽນແປງດ້ານການນຳໃຊ້ທີ່ດິນ ທີ່ເກີດຈາກການຫັນປ່ຽນພື້ນທີ່ປ່າໃຫ້ກາຍເປັນດິນປູກຝັງ. ບາງມາດຕະການແຊກແຊງ - ຖ້າພວກເຂົາອີງໃສ່ລະບົບການປູກພືດຊະນິດດຽວ - ອາດມີສິງຜົນດີທາງດ້ານເສດຖະກິດໃຫ້ແກ່ຄູ່ຮ່ວມງານໃດໜຶ່ງທີ່ກ່ຽວຂ້ອງ ແຕ່ກໍ່ອາດສ້າງຄວາມເສຍຫາຍຕໍ່ຊີວະນາໆພັນ ແລະ ເຮັດໃຫ້ລະບົບດັ່ງກ່າວມີຄວາມສ່ຽງສູງຂຶ້ນຕໍ່ການປ່ຽນແປງສະພາບດິນຟ້າອາກາດ. ມາດຕະການແຊກແຊງອື່ນໆອາດສົ່ງຜົນກະທົບທາງລົບຕໍ່ສັງຄົມ, ເຊັ່ນ: ການຫຼຸດລົງຂອງໂພຊະນາການ, ຖ້າພວກເຂົາສົ່ງເສີມອາຫານທີ່ອຸດົມສົມບູນດ້ວຍແຄໂລລີ ແຕ່ມີໂພຊະນາການຕໍ່າ, ອາຫານທີ່ມີການແປຮູບສູງ ຫຼາຍກວ່າອາຫານສົດ ຫຼື ອາຫານທີ່ບໍ່ມີສານກັນບູດ. ໃນຂະນະດຽວກັນ, ມມາດຕະການແຊກແຊງດ້ານຕ່ອງໂສ້ມູນຄ່າທີ່ໃຫ້ຄວາມສຳຄັນແຕ່ອົງປະກອບດ້ານສິ່ງແວດລ້ອມພຽງຢ່າງດຽວ, ເຊັ່ນ: ການຫຼຸດຜ່ອນການເຜົາໄໝ້ອາຍພິດກາກບອນ ໂດຍຜ່ານການຫຼຸດຜ່ອນການນຳໃຊ້ປຸ໋ຍ ຫຼື ການນຳສະເໜີເຕັກໂນໂລຊີໃໝ່, ອາດນຳໄປສູ່ຜົນກະທົບທາງລົບຕໍ່ເສດຖະກິດ ດ້ານຜົນກຳໄລທີ່ຫຼຸດລົງ ແລະ ຄວາມເປັນໄປໄດ້ໃນການສູນເສຍວຽກເຮັດງານທຳ ຖ້າບໍ່ມີການຄຸ້ມຄອງຢ່າງເໝາະສົມ ຫຼື ມີປະສິດທິພາບ.. ການສ້າງລະບົບສະບຽງອາຫານທີ່ທົນທານ ແລະ ຍືນຍົງຍັງຈຳເປັນຕ້ອງໄດ້ຄຳນຶງເຖິງການເຮັດວຽກຮ່ວມກັນ ແລະ ການຊັ່ງຊາຜົນໄດ້ຜົນເສຍກັບຂະແໜງການອື່ນໆ, ເຊັ່ນ: ການຫັນເປັນຕົວເມືອງ, ການຂົນສົ່ງ ແລະ ອື່ນໆ. ການປະເມີນຄວາມອ່ອນໄຫວ ແລະ ຄວາມສ່ຽງ, ທີ່ເປັນເງື່ອນໄຂຈຳເປັນໃນການສ້າງຄວາມທົນທານ, ຈະຊ່ວຍໃຫ້ສາມາດລະບຸໂຕເລືອກດ້ານການຫຼຸດຜ່ອນ ແລະ ປັບໂຕຕໍ່ຄວາມສ່ຽງທີ່ເປັນໄປໄດ້ ແລະ ມີປະສິດທິພາບ ພ້ອມດ້ວຍການພິຈາລະນາການເຮັດວຽກຮ່ວມກັນ ແລະ ຜົນໄດ້ຜົນເສຍເຫຼົ່ານີ້ຢ່າງສົມເຫດສົມຜົນ.

### ເສັ້ນທາງສຳລັບ ສປປ ລາວ ໃນການຮັບປະກັນ 'ການສ້າງຄວາມທົນທານຕໍ່ຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ'.

- ຈຳເປັນຕ້ອງໄດ້ເສີມຂະຫຍາຍການກະສິກຳທີ່ມີຄວາມຍືນຍົງ ແລະ ທັນສະໄໝ ເພື່ອຮັບມືກັບສະພາບດິນຟ້າອາກາດ ລວມທັງຜ່ານບັນດາມາດຕະການທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້.

[13] http://www.fao.org/3/nb842en/nb842en.pdf

- ກະກຽມ **ແຜນວຽກແຫ່ງຊາດວ່າດ້ວຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການປັບໂຕຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດໃນຂະແໜງກະສິກຳ ຄັ້ງໃໝ່**, ໂດຍອີງໃສ່ປະສົບການຈາກແຜນລ່າສຸດທີ່ດຳເນີນໃນປີ 2014-2018.
- ດຳເນີນ ການປະເມີນຄວາມອ່ອນໄຫວ ແລະ ຄວາມສ່ຽງ (VRA) ຢ່າງຮອບດ້ານໃຫ້ແກ່ຂະແໜງການກະສິກຳ (ລວມເຖິງຜົນລະປູກ, ການລ້ຽງສັດ, ການປະມົງ ແລະ ປ່າໄມ້) ແລະ ການດຳລົງຊີວິດແບບເພິ່ງພາອາໄສ ເພື່ອເປັນແນວທາງໃນການວາງແຜນສ້າງຄວາມທົນທານໃນອົງປະກອບ ແລະ ກິດຈະກຳຂອງລະບົບສະບຽງອາຫານ.
- ສະໜັບສະໜູນ**ຂີດຂາດຂອງຂະແໜງການກະສິກຳ ແລະ ແບບແຜນສ້າງຄວາມທົນທານໃຫ້ແກ່ລະບົບສະບຽງອາຫານພາຍໃຕ້ວາລະແຫ່ງຊາດວ່າດ້ວຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການປ່ຽນແປງສະພາບດິນຟ້າອາກາດ** ຂອງ ສປປ ລາວ, ໃຫ້ຄວາມສຳຄັນຕໍ່ບັນດາມາດຕະການລວມສູນຂະແໜງການພາຍໃນ ແລະ ຮູບແບບການຫັນປ່ຽນຈາກການຕອບໂຕ້ຕໍ່ໄພພິບັດໄປສູ່ແບບແຜນການປ້ອງກັນ ແລະ ຄຸ້ມຄອງຄວາມສ່ຽງແທນ.
- ໃຫ້ການສະໜັບສະໜູນພາຍໃນ ອາຊຽນ ສຳລັບ **ຂອບວຽກຄວາມໝັ້ນຄົງດ້ານສະບຽງອາຫານອັນຮອບດ້ານຂອງອາຊຽນ (AIFS) ແລະ** ແຜນຍຸດທະສາດການດຳເນີນງານກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານໃນພາກພື້ນອາຊຽນ **(SPA-FS) ໂດຍສອດຄ່ອງກັບ ວິໄສທັດ ອາຊຽນຮອດປີ 2025 ແລະ ເປົ້າໝາຍການພັດທະນາແບບຍືນຍົງ.**
- ສະໜັບສະໜູນການສ້າງລະບົບສະບຽງອາຫານທີ່ມີຄວາມທົນທານ ແລະ ວຽກງານຮ່ວມມືຫຼາຍຂະແໜງການພາຍໃຕ້ **ຂໍ້ຕົກລົງຂອງອາຊຽນວ່າດ້ວຍການຄຸ້ມຄອງໄພພິບັດ ແລະ ແຜນງານການຕອບສະໜອງຕໍ່ສະຖານະການສຸກເສີນ ແລະ ຂອບວຽກອື່ນໆທີ່ກ່ຽວຂ້ອງ, ເຊັ່ນ: ຖະແຫຼງການອາຊຽນວ່າດ້ວຍການປັບໂຕຕໍ່ໄພແຫ້ງແລ້ງ.**
- ສປປ ລາວ ອາດພິຈາລະນາເຂົ້າຮ່ວມລະບົບເວທີສົ່ງເສີມການປູກເຂົ້າແບບຍືນຍົງຜ່ານ ກະຊວງກະສິກຳ ແລະ ປ່າໄມ້ ແລະ / ຫຼື ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MoNRE) ໃນຖານະຂອງສະມາຊິກລັດຖະບານ, ເຂົ້າຮ່ວມເຄືອຂ່າຍລະດັບໂລກທີ່ມີສະມາຊິກຫຼາຍກວ່າ 100 ສະຖາບັນຈາກເຄືອຂ່າຍຄູ່ຮ່ວມງານທັງໝົດ. ເວທີສົ່ງເສີມການປູກເຂົ້າແບບຍືນຍົງ ແມ່ນກຸ່ມພັນທະມິດຂອງຄູ່ຮ່ວມງານຈາກທົ່ວໂລກ ເພື່ອສົ່ງເສີມປະສິດທິພາບຂອງການນຳໃຊ້ຊັບພະຍາກອນ ແລະ ການສ້າງຄວາມທົນທານຕໍ່ການປ່ຽນແປງສະພາບດິນຟ້າອາກາດໃນລະບົບເຂົ້າ – ທັງໃນລະດັບປູກຝັງ ແລະ ຕ່ອງໂສ້ມູນຄ່າ. ເປົ້າໝາຍຄື ກ) ປັບປຸງການດຳລົງຊີວິດຂອງຜູ້ຜະລິດຂະໜາດນ້ອຍໃນປະເທດທີ່ກຳລັງພັດທະນາ; ຂ) ຫຼຸດຜ່ອນການນຳໃຊ້ນ້ຳຈືດ ແລະ ການສ້າງອາຍພິດກາກບອນຈາກການຜະລິດເຂົ້າ; ແລະ ຄ) ສະສະໜອງທີ່ເຂົ້າປູກຢ່າງມີຄວາມຮັບຜິດຊອບຕໍ່ຕະຫຼາດໂລກ.
- ຜັນຂະຫຍາຍວິທີໃນການຫຼຸດຜ່ອນຄວາມສ່ຽງ ທີ່ລວມມີຂໍ້ມູນ ແລະ ການບໍລິການດ້ານສະພາບດິນຟ້າອາກາດ, ການເຄື່ອນໄຫວທີ່ຄາດຄະເນໄວ້ ແລະ ກົນໄກການການສະໜອງທຶນແບບໃໝ່, ເຊັ່ນ: ປະກັນໄພ/ການກູ້ຢືມ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ສະໜອງ ໂດຍຊຸກຍູ້ການລົງທຶນໃນຕ່ອງໂສ້ມູນຄ່າ ໂດຍຜ່ານບັນດາຕະຫຼາດທີ່ມີຄວາມໝັ້ນຄົງ
- ສະໜັບສະໜູນຊາວກະສິກອນຂະໜາດນ້ອຍ: ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຄົມຊາວກະສິກອນ, ເຊື່ອມໂຍງຊາວກະສິກອນເຂົ້າສູ່ຕະຫຼາດ, ແກ້ໄຂຄວາມບໍ່ເທົ່າທຽມກັນໃນການເຂົ້າເຖິງຊັບພະຍາກອນ ແລະ ຄວາມຮູ້, ເຊື່ອມໂຍງເຂົ້າກັບມາດຕະການແຊກແຊງເສີມຕ່າງໆ (ການປົກປ້ອງທາງສັງຄົມ, ໂພຊະນາການ ແລະ ການສະໜອງອາຫານໃນໂຮງຮຽນ) ແລະ ໃຫ້ຄວາມສຳຄັນແກ່ກຸ່ມຄົນທີ່ມີຄວາມອ່ອນໄຫວທີ່ສຸດ.
- ມີຄວາມຈຳເປັນຕ້ອງປັບປຸງຄວາມເຂົ້າໃຈຕໍ່ຄວາມອ່ອນໄຫວ ແລະ ຄວາມສ່ຽງທີ່ກ່ຽວພັນກັບລະບົບສະບຽງອາຫານ ແລະ ການນຳໃຊ້ຄວາມເຂົ້າໃຈດັ່ງກ່າວເຂົ້າໃນການກຳນົດນະໂຍບາຍ. ວຽກງານນີ້ສາມາດປະຕິບັດໄດ້ໂດຍ (ກ) ປັບປຸງການຄຸ້ມຄອງຂໍ້ມູນທີ່ກ່ຽວຂ້ອງກັບຄວາມສ່ຽງ, ລວມເຖິງການດຳເນີນການຄົ້ນຄວ້າ ເພື່ອລະບຸປັດໄຈທີ່ເອື້ອອຳນວຍ ແລະ ປັດໄຈຢຸດຢັ້ງ ທີ່ສົ່ງຜົນກະທົບຕໍ່ລະບົບສະບຽງອາຫານ ເຊິ່ງເປັນຜົນມາຈາກໄພພິບັດທຳມະຊາດ ຫຼື ການເຄື່ອນໄຫວຂອງມະນຸດ/ໂຄງການພັດທະນາ, ລວມທັງປັດໄຈຕ່າງໆທີ່ສົ່ງຜົນກະທົບຕໍ່ກຸ່ມຄົນທີ່ມີຄວາມອ່ອນໄຫວທີ່ສຸດ; (ຂ) ການລະບຸ ແລະ ຫຼຸດຜ່ອນຄວາມສ່ຽງໃນນະໂຍບາຍ ແລະ ຍຸດທະສາດ ທີ່ພາຍຫຼັງອາດຖືກຈັດຕັ້ງປະຕິບັດເປັນແຜນງານ ແລະ ໂຄງການ; (ຄ) ການສ້າງຂີດຄວາມສາມາດໃຫ້ກັບຊຸມຊົນໃນທ້ອງຖິ່ນກ່ຽວກັບຄວາມສ່ຽງ ແລະ ຄວາມອ່ອນໄຫວທີ່ສອດຄ່ອງກັບການດຳລົງຊີວິດ ແລະ ລະບົບສະບຽງອາຫານຂອງພວກເຂົາ ເພື່ອໃຫ້ພວກເຂົາມີຄວາມພ້ອມໃນການຮັບມືກັບວິກິດການ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ.
- ເພື່ອຊ່ວຍຊາວກະສິກອນລາວໃນການຮັບມືກັບຄວາມສ່ຽງ, ຜົນກະທົບ ແລະ ຄວາມກົດດັນຕ່າງໆ, ຈຳເປັນທີ່ຕ້ອງໄດ້ປັບປຸງທັງ 'ລະບົບພະຍາກອນອາກາດ' ແລະ 'ລະບົບເຕືອນໄພລ່ວງໜ້າ' ໂດຍຜ່ານການສະໜອງຂໍ້ມູນທີ່ເປັນປະໂຫຍດໃຫ້ແກ່ພວກເຂົາ.
- ມີຄວາມຈຳເປັນທີ່ຕ້ອງໄດ້ສຸມໃສ່ການຄົ້ນຄວ້າ ແລະ ພັດທະນາເມັດພືດ ແລະ ສາຍພັນທີ່ມີຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດພາຍໃຕ້ສະພາບການໃດໜຶ່ງ.
- ການຮັບປະກັນລະບົບສະບຽງອາຫານທີ່ຍືນຍົງຈຳເປັນຕ້ອງໄດ້ໃຫ້ຄູ່ຮ່ວມງານ/ສະຖາບັນຕ່າງໆເຂົ້າມາມີສ່ວນຮ່ວມນຳ. ສະນັ້ນ, ຂະແໜງການທັງໝົດ – ພາກລັດ, ເອກະຊົນ, CSO ແລະ ຊຸມຊົນ – ຕ້ອງລວມຕົວກັນ ແລະ ຮ່ວມມືກັນ.
- ການສົ່ງເສີມ SME ໃນຂະແໜງການກະສິກຳ, ແລະ ຫາກເປັນໄປໄດ້ໃຫ້ສ້າງຮູບແບບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP).
- ໃນ ສປປ ລາວ, ເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າມີຄວາມທົນທານຍິ່ງຂຶ້ນ ພວກເຮົາບໍ່ພຽງແຕ່ຕ້ອງການນະໂຍບາຍທີ່ແນ່ໃສ່ຕ່ອງໂສ້ມູນຄ່າເທົ່ານັ້ນ, ແຕ່ຍັງຕ້ອງມີມາດຕະການ ຫຼື ນະໂຍບາຍທີ່ສາມາດສະໜັບສະນູນການປ່ຽນແປງໃນສະພາບແວດລ້ອມດ້ານສະບຽງອາຫານ, ເຊັ່ນວ່າການສະໜັບສະໜູນຕະຫຼາດທ້ອງຖິ່ນ ແລະ ຕະຫຼາດອາຫານອິນຊີ.

## ຖະແຫຼງການສະແດງເຈດຈຳນົງ ແລະ ພັນທະຈາກກຸ່ມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.

- UNEP, ໃນຖານະທີ່ເປັນຄູ່ຮ່ວມຈັດຕັ້ງ ເວທີສົ່ງເສີມການປູກເຂົ້າແບບຍືນຍົງ, ມີພັນທະໃນການສະໜອງລາຍງານໃຫ້ແກ່ ລັດຖະບານ ແລະ ບັນດາຄູ່ຮ່ວມງານອື່ນໆ ກ່ຽວກັບເວທີດັ່ງກ່າວ ແລະ ອຳນວຍຄວາມສະດວກການເຂົ້າເປັນສະມາຊິກຂອງ ສປປ ລາວ ແລະ ການມີສ່ວນຮ່ວມໃນເວທີດັ່ງກ່າວ.
- FAO ໃນຖານະທີ່ເປັນໜ່ວຍງານນຳພາດ້ານການປ່ຽນແປງລະບົບສະບຽງອາຫານ ແລະ ປພຍ 2 ຈະ 1) ສົ່ງເສີມ**ການຫັນປ່ຽນໄປສູ່ລະບົບສະບຽງອາຫານທີ່ຍືນຍົງ ແລະ ມີຄວາມທົນທານ**ໃນ ສປປ ລາວ ໂດຍສອດຄ່ອງກັບບຸລິມະສິດຂອງ FAO ໃນທົ່ວໂລກ ແລະ ໃນພາກພື້ນ

ອາຊີ ແລະ ປາຊີຟິກ; 2) ສະໜັບສະໜູນການພັດທະນາ **ແຜນວຽກແຫ່ງຊາດວ່າດ້ວຍການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ການປັບໂຕຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດໃນຂະແໜງການກະສິກຳ ຄັ້ງໃໝ່**; 3) **ສ້າງຂີດຄວາມສາມາດສຳລັບ VRA, ການປະເມີນຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການວາງແຜນໄລຍະຍາວ** ເພື່ອສ້າງຂະແໜງການກະສິກຳທີ່ມີຄວາມສາມາດໃນການປັບໂຕ ແລະ 4) ສ້າງຄວາມເຂັ້ມແຂງໃຫ້ແກ່ຂີດຄວາມສາມາດແຫ່ງຊາດໃນການອອກແບບ, **ເຂົ້າເຖິງສະພາບດິນຟ້າອາກາດ ແລະ ຈັດຕັ້ງປະຕິບັດແຜນລິເລີ່ມດ້ານການສ້າງລະບົບອາຫານທີ່ມີຄວາມທົນທານ.**

- WFP ໃນຖານະທີ່ເປັນໜ່ວຍງານຄູ່ຮ່ວມ ໄດ້ມີເປົ້າໝາຍທີ່ຈະໃຫ້ການຊ່ວຍເຫຼືອ[14] ແລະ ການສະໜັບສະໜູນດ້ານວິຊາການໃຫ້ແກ່ຊຸມຊົນ ແລະ ໜ່ວຍງານລັດຖະບານທີ່ເປັນເປົ້າໝາຍ ເພື່ອສ້າງຄວາມທົນທານໃຫ້ແກ່ພວກເຂົາຕໍ່ກັບສະພາບດິນຟ້າອາກາດ ແລະ ຜົນກະທົບອື່ນໆ ໂດຍຜ່ານຂີດຄວາມສາມາດທີ່ໄດ້ຮັບການປັບປຸງໃນການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ແລະ ສະພາບດິນຟ້າອາກາດ ແລະ ການປົກປ້ອງທາງສັງຄົມ.
- ສະຖາບັນສຶກສາຂອງລາວສາມາດມີບົດບາດສຳຄັນໃນການສ້າງຂີດຄວາມສາມາດຂອງຊັບພະຍາກອນມະນຸດ ເພື່ອສົ່ງເສີມລະບົບສະບຽງອາຫານທີ່ຍືນຍົງໃນປະເທດ. ບົດຄົ້ນຄວ້າ, ນະວັດຕະກຳ ແລະ ການບໍລິການຂອງພວກເຂົາອາດຊ່ວຍປັບປຸງການສ້າງນະໂຍບາຍໄດ້.
- CSO ແລະ ບໍລິສັດເອກະຊົນ ສາມາດມີບົດບາດສຳຄັນໃນການຊ່ວຍສ້າງຄວາມທົນທານ ແລະ ປັບປຸງລະບົບສະບຽງອາຫານໃນປະເທດ ໂດຍຜ່ານການຝຶກອົບຮົມ, ການເຮັດວຽກ ແລະ ການສະໜັບສະໜູນຊາວກະສິກອນ, ການໃຫ້ຄຳແນະນຳ ແລະ ຄວາມຮູ້ດ້ານວິຊາການແກ່ພວກເຂົາ, ແລະ ຊຸກຍູ້ໃຫ້ພວກເຂົາມີສ່ວນຮ່ວມເຂົ້າໃນຕະຫຼາດທ້ອງຖິ່ນ ແລະ ພາກພື້ນ ໂດຍຜ່ານຕ່ອງໂສ້ມູນຄ່າ.

[14] ຈາກບົດຮ່າງຂອງ WFP CSP 2022-2026

# ເອກະສານອ້າງອີງ


- ທະນາຄານພັດທະນາອາຊີ (ADB) (2018) ການປະເມີນຜົນ, ຍຸດທະສາດ ແລະ ແຜນງານດ້ານການກະສິກຳ, ຊັບພະຍາກອນທຳມະຊາດ, ແລະ ການພັດທະນາຊົນນະບົດ: ສປປ ລາວ, ທັນວາ 2018.
- ບົວປາວ ລ. (2016) ບົດທົບທວນຄືນດ້ານຍຸດທະສາດກ່ຽວກັບຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການໃນ ສປປ ລາວ, ຮັບຮອງໂດຍອົງການອາຫານໂລກ (WFP), ກໍລະກົດ 2016.
- Comrie-Thomson L et al. ສຳລັບ ອົງການສຸພະນິມິດ (2020) ການສ້າງຄວາມເຂົ້າໃຈຕໍ່ການບໍລິໂພກ ແລະ ການສະໜອງອາຫານ ທີ່ສົ່ງຜົນກະທົບຕໍ່ໂພຊະນາການຂອງແມ່ ແລະ ເດັກໃນກຸ່ມຊົນເຜົ່າທາງພາກໃຕ້ຂອງ ສປປ ລາວ, ບົດລາຍງານຈາກ ໂຄງການ AHAN.
- EAT ແລະ UNICEF (2020) ການບໍລິໂພກອາຫານຂອງເດັກ ແລະ ເຍົາວະຊົນ: ບົດລອັກຜົນໄດ້ຮັບທັງໃນປັດຈຸບັນ ແລະ ອະນາຄົດດ້ານສຸຂະພາບຂອງມະນຸດ ແລະ ໂລກ, ບົດລາຍງານກອງປະຊຸມ, Oslo, Norway, ມີນາ 4-6, 2020.
- ອົງການອາຫານ ແລະ ການກະເສດ ແຫ່ງ ສະຫະປະຊາຊາດ (FAO) (2018) ລະບົບສະບຽງອາຫານທີ່ຍືນຍົງ: ແນວຄິດ ແລະ ຂອບວຽກ.
- ກະດານຂ່າວຂອງລະບົບສະບຽງອາຫານ: ສປປ ລາວ. ທີ່ https://foodsystemsdashboard.org/countrydashboard
- GAIN ແລະ UNICEF (2018) ລະບົບສະບຽງອາຫານສຳລັບເດັກ ແລະ ເຍົາວະຊົນ: ການເຮັດວຽກຮ່ວມກັນເພື່ອຄໍ້າປະກັນສະບຽງອາຫານທີ່ມີໂພຊະນາການ, ບົດລາຍງານກອງປະຊຸມ, ຫ້ອງການຄົ້ນຄວ້າຂອງ UNICEF – Innocenti, Florence, Italy 5-7 ພະຈິກ 2018.
- Hawkes C et al. (2020) ລະບົບສະບຽງອາຫານທີ່ສຸມໃສ່ເດັກ: ການປັບປ່ຽນລະບົບສະບຽງອາຫານໄປສູ່ການເນັ້ນໜັກອາຫານທີ່ດີຕໍ່ສຸຂະພາບໃຫ້ແກ່ເດັກ, ຄວາມໝັ້ນຄົງດ້ານອາຫານໂລກ 27 (2020) 100414, https://doi.org/10.1016/j.gfs.2020.100414
- Hoberg YT et al. (2013) ການປັບປຸງໂພຊະນາການ ໂດຍຜ່ານຂະແໜງການກະສິກຳ, ພາກ C ຂອງ ທະນາຄານໂລກ, ການປັບປຸງໂພຊະນາການໂດຍຜ່ານແບບແຜນການຮ່ວມມືກັບຫຼາຍຂະແໜງການ.
- ສະຫະພາບລັດຖະສະພາ (IPU) ແລະ ອົງການອາຫານ ແລະ ການກະເສດ (FAO) (2021) ລະບົບສະບຽງອາຫານ ແລະ ໂພຊະນາການ: ຄູ່ມືສຳລັບສະມາຊິກສະພາ ເລກທີ 32, https://doi.org/10.4060/cb2005en
- Kounnavong S, et al. ພາວະເລືອດຈາງໃນໄວໜຸ່ມ: ການປະເມີນບັນຫາດ້ານສາທາລະນະສຸກໃນ ສປປ ລາວ, ແຜນງານດ້ານສາທາລະນະສຸກໂລກ , 13:sup2, 1786997, 2020. DOI: 10.1080/16549716.2020.1786997.
- Kurtishi S ແລະ Sisouphanthong V (2020) ບົດທົບທວນຄືນຕົ້ນທຶນຂອງການຈັດຕັ້ງປະຕິບັດ ແຜນວຽກ ດ້ານໂພຊະນາການແຫ່ງຊາດ (NPAN) 2016-2020, ບົດລາຍງານທີ່ຖືກກະກຽມໃຫ້ແກ່ EU, UNICEF, ສູນຄົ້ນຄວ້ານະໂຍບາຍການພັດທະນາ (ກະຊວງແຜນການ ແລະ ການລົງທຶນ)
- ສູນສະຖິຕິແຫ່ງຊາດ (LSB) (2018) ການສຳຫຼວດດັດຊະນີໝາຍສັງຄົມລາວຄັ້ງທີ II 2017 (LSIS 2017), LSB ແລະ UNICEF
- ຊ່ອງທາງສະໜອງຂໍ້ມູນດ້ານໂພຊະນາການແຫ່ງຊາດ (NIPN) (2020) ຂໍ້ມູນດ້ານໂພຊະນາການແຫ່ງຊາດ, ສປປ ລາວ.
- ຄະນະກຳມະການໂພຊະນາການແຫ່ງຊາດ (2021, ຮ່າງ) ແຜນວຽກດ້ານໂພຊະນາການແຫ່ງຊາດ (NPAN) 2021-2025.
- Ratsavong, K., van Elsacker, T., Doungvichit, D. *et al.* ບົດບາດຍິງຊາຍມີອິດທິພົນຕໍ່ການບໍລິໂພກອາຫານ ແລະ ສະຖານະດ້ານໂພຊະນາການ ຫຼື ບໍ່? ຮູບແບບການບໍລິໂພກອາຫານໃນ ສປປ ລາວ: ປະເທດກຳລັງພັດທະນາ *Nutr J* **19,** 31 (2020). https://doi.org/10.1186/s12937-020-00545-9
- ອົງການອາຫານໂລກ (WFP) (2020) ການປະເມີນຄວາມໝັ້ນຄົງດ້ານອາຫານ ແລະ ການກະສິກຳ ໃນ ສປປ ລາວ, ບົດລາຍງານທີ່ຖືກຕີພິມຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້ (MAF) ແລະ ອົງການອາຫານ ແລະ ການກະເສດ (FAO), ພຶດສະພາ 2020.

